ປະເພດເອກະສານ: ເຜີຍແຜ່ທົ່ວໄປ

ເອກະສານນີ້ແມ່ນສະບັບແປບໍ່ເປັນທາງການຈາກຄູ່ມືແນະນຳຂອງທະນາຄານໂລກ, ໃນກໍລະນີທີ່ມີຄວາມຂັດແຍ້ງກັນ, ແມ່ນໃຫ້ຍຶດຖືຕາມຄູ່ມືແນະນຳສະບັບພາສາອັງກິດທີ່ຈັດພິມໂດຍທະນາຄານໂລກ.

# ຄູ່ມືແນະນຳ

## ການຈັດຊື້-ຈັດຈ້າງ
## ສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ)

## ໂດຍນຳໃຊ້ທຶນກູ້ຢືມ
## ຈາກທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ

## ແລະ

## ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ແລະ ທຶນຊ່ວຍເຫຼືອລ້າ
## ຈາກສະມາຄົມພັດທະນາສາກົນ

## ສຳລັບຜູ້ກູ້ຢືມທຶນຈາກທະນາຄານໂລກ

ມັງກອນ 2011

ດັດແກ້ ກໍລະກົດ 2014

**ສະບັບດັດແກ້ ກໍລະກົດ** 2014

ເນື້ອໃນວັກ 3.18 - **ການຈັດຊື້ ສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ພາຍໃຕ້ທຶນກູ້ຢືມ ຄ້ຳປະກັນ ຈາກທະນາຄານໂລກ** ໄດ້ຖືກດັດແກ້ ໂດຍເພີ້ມເງື່ອນໄຂຂໍ້ຜູກມັດໃນການຊຳລະສະສາງ.

# ສາລະບານ

ໝວດທີ 1. ພາກສະເໜີ ........ 1

1.1 ຈຸດປະສົງ ........ 1

1.2 ສິ່ງທີ່ຄວນເອົາໃຈໃສ່ ........ 2

1.5 ຂອບເຂດການນໍາໃຊ້ ຄູ່ມືແນະນໍາການຈັດຊື້-ຈັດຈ້າງ ........ 3

1.6 ຄວາມຂັດແຍ່ງ ດ້ານຜົນປະໂຫຍດ ........ 3

1.8 ຄຸນລັກສະນະເໝາະສົມ *(Eligibility)* ........ 4

1.11 ການເຊັນສັນຍາລ່ວງໜ້າ ແລະ ການສະໜອງທຶນແບບມີຜົນຍ້ອນຫຼັງ ........ 6

1.12 ການຮ່ວມທຶນ ........ 6

1.13 ການທົບທວນກ່ອນ ແລະ ກວດກາຄືນຕາມຫຼັງ ຂອງທະນາຄານໂລກ ........ 6

1.14 ການຈັດຊື້-ຈັດຈ້າງ ບໍ່ຖືກລະບຽບການ *(Misprocurement)* ........ 6

1.15 ການອ້າງອີງເຖິງທະນາຄານໂລກ ........ 7

1.16 ການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ........ 7

1.18 ແຜນຈັດຊື້-ຈັດຈ້າງ ........ 10

ໝວດທີ 2. ການປະມູນເປີດກ້ວາງສາກົນ ........ 12

ກ. ຫຼັກການລວມ ........ 12

2.1 ການເປີດຫົວເລື່ອງ ........ 12

2.2 ປະເພດ ແລະ ຂະໜາດຂອງສັນຍາ ........ 12

2.6 ການປະມູນແບບສອງຂັ້ນຕອນ *(Two-Stage Bidding)* ........ 13

2.7 ການແຈ້ງການປະມູນ ແລະ ການລົງຂ່າວໂຄສະນາ ........ 14

2.9 ການຄັດເລືອກຄຸນວຸດທິກ່ອນຂອງຜູ້ແຂ່ງຂັນປະມູນ *(Prequalification of Bidders)* ........ 15

ຂ. ເອກະສານເຊີນປະມູນ ........ 16

2.11 ຫຼັກການລວມ ........ 16

2.13 ອາຍຸການຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ ແລະ ໜັງສືຄໍ້າປະກັນການປະມູນ ........ 16

2.15 ພາສານໍາໃຊ້ ........ 17

2.16 ຄວາມກະຈ່າງແຈ້ງຂອງເອກະສານເຊີນປະມູນ ........ 17

2.19 ມາດຕະຖານ ........ 18

2.20 ການໃຊ້ຍີ່ຫໍ້ຂອງສິນຄ້າ ........ 18

2.21 ການສະເໜີລາຄາປະມູນ ........ 19

2.24 ການດັດປັບລາຄາ (Price Adjustment) ........ 20

2.26 ການຂົນສົ່ງ ແລະ ປະກັນໄພ ........ 20

2.28 ຂໍ້ກໍານົດສະກຸນເງິນ ........ 21

2.29 ສະກຸນເງິນໃນການປະມູນ ........ 21

2.31 ການປ່ຽນສະກຸນເງິນ ເພື່ອສົມທຽບລາຄາປະມູນ ....... 22
2.32 ສະກຸນເງິນ ໃນການຊໍາລະ ....... 22
2.34 ເງື່ອນໄຂ ແລະ ຮູບການ ການຊໍາລະ ....... 22
2.37 ເອກະສານຍື່ນປະມູນສະເໜີທາງເລືອກ ....... 23
2.38 ເງື່ອນໄຂຂອງສັນຍາ ....... 23
2.39 ໜັງສືຄໍ້າປະກັນການປະຕິບັດສັນຍາ ແລະ ເງິນຫັກໄວ້ເພື່ອຄໍ້າປະກັນການເປ່ເພ ....... 23
2.41 ເນື້ອໃນມາດຕາກ່ຽວກັບຍ້ອງຍໍ ແລະທົດແທນຄ່າເສັຍຫາຍ ....... 24
2.42 ເຫດສຸດວິໃສ ....... 24
2.43 ກົດໝາຍນໍາໃຊ້ ແລະ ການແກ້ໄຂຂໍ້ຂັດແຍ່ງ ....... 24

ຄ. ການເປີດຊອງປະມູນ, ການປະເມີນຜົນ ແລະ ການມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ....... 25

2.44 ໄລຍະເວລາ ສໍາລັບກະກຽມເອກະສານຍື່ນປະມູນ ....... 25
2.45 ຂັ້ນຕອນ ການເປີດຊອງປະມູນ ....... 25
2.46 ການໃຫ້ຄວາມກະຈ່າງແຈ້ງ ຫຼື ສະເໜີທາງເລືອກຂອງເອກະສານຍື່ນປະມູນ ....... 26
2.47 ການຮັກສາເປັນຄວາມລັບ ....... 26
2.48 ການກວດກາເອກະສານຍື່ນປະມູນ ....... 26
2.49 ການປະເມີນຜົນ ແລະ ສົມທຽບລາຄາປະມູນ ....... 26
2.55 ການໃຫ້ສິດທິພິເສດພາຍໃນປະເທດ ....... 28
2.57 ການຕໍ່ອາຍຸ ຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ ....... 28
2.58 ການກວດກາຄຸນວຸດທິຂອງຜູ້ປະມູນຕາມຫຼັງ *(Postqulaification of Bidders)* ....... 29
2.59 ການມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ....... 29
2.60 ການປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ....... 29
2.61 ການປະຕິເສດ ເອກະສານຍື່ນປະມູນທັງໝົດ ....... 29
2.65 ການຕອບຂໍ້ຊັກຖາມຂອງຜູ້ປະມູນໂດຍຜູ້ກູ້ຢືມໃຫ້ແກ່ ....... 30

ງ. ການປະມູນເປີດກວ້າງສາກົນ ແບບກະທັດລັດ *(Modified ICB)* ....... 31

2.66 ການດໍາເນີນງານ ກ່ຽວຂ້ອງ ກັບແຜນນໍາເຂົ້າ ....... 31
2.68 ການຈັດຊື້ ສິນຄ້າທົ່ວໄປ (ລວມທັງປະເພດສິນຄ້າ ທີ່ນໍາໃຊ້ໄປຜະລິດຕໍ່) *(Commodities)* ....... 31

ໝວດທີ 3. ການຈັດຊື້-ຈັດຈ້າງ ດ້ວຍຮູບການອື່ນໆ ....... 32

3.1 ເນື້ອໃນທົ່ວໄປ ....... 32
3.2 ການປະມູນວົງແຄບສາກົນ ....... 32
3.3 ການປະມູນເປີດກ້ວາງພາຍໃນ ....... 32
3.5 ການສົມທຽບລາຄາ ....... 34
3.6 ສັນຍາກໍານົດຂອບຂ່າຍ ....... 34
3.7 ການເຮັດສັນຍາໂດຍກົງ ....... 35
3.9 ການສະໜອງວັດຖຸພັນ ....... 36

3.10 ການຈັດຊື້-ຈັດຈ້າງ ຈາກອົງກອນແຫ່ງສະຫະປະຊາຊາດ ........ 37
3.11 ອົງກອນຈັດຊື້-ຈັດຈ້າງຕົວແທນ ແລະ ຜູ້ຈັດການ ການກໍ່ສ້າງ ........ 37
3.12 ການບໍລິການ ການກວດກາສິນຄ້າ *(Inspection Services)* ........ 38
3.13 ການຈັດຊື້-ຈັດຈ້າງ ສໍາລັບທຶນກູ້ຢືມ ຜ່ານສະຖາບັນການເງິນພົວພັນ ຫຼື ນິຕິບຸກຄົນ ........ 38
3.14 ການຈັດຊື້-ຈັດຈ້າງ ພາຍໃຕ້ການກະກຽມຮູບແບບຫຸ້ນສ່ວນລັດ ແລະ ເອກະຊົນ ........ 39
3.16 ການຈັດຊື້-ຈັດຈ້າງ ຕາມຫຼັກການຜົນງານ ........ 41
3.18 ການຈັດຊື້-ຈັດຈ້າງ ພາຍໃຕ້ທຶນກູ້ຢືມຄໍ້າປະກັນ ຈາກທະນາຄານໂລກ ........ 41
3.19 ການມີສ່ວນຮ່ວມຂອງຊຸມຊົນ ເຂົ້າໃນການຈັດຊື້-ຈັດຈ້າງ ........ 42
3.20 ການນໍາໃຊ້ລະບົບລວມທົ່ວປະເທດ ........ 42

ເອກະສານຊ້ອນທ້າຍ 1: ການທົບທວນກ່ອນ ແລະ ການກວດກາຕາມຫຼັງຂອງທະນາ ຄານໂລກ ຕໍ່ກັບການຕັດສິນໃຈໃນການຈັດຊື້-ຈັດຈ້າງ ແລະ ການປະກາດມອບສັນຍາ ........ 44

1. ການສ້າງແຜນເວລາຂອງການຈັດຊື້-ຈັດຈ້າງ ........ 44
2. ການທົບທວນກ່ອນ ........ 44
5. ການກວດກາຕາມຫຼັງ *(Post review)* ........ 47
6. ການປ່ຽນຈາກ ການກວດກາຕາມຫຼັງ *(Post review)* ເປັນການທົບທວນກ່ອນ *(Prior review)* ........ 47
7. ການປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ........ 48
8. ຄວາມພະຍາຍາມ ຕໍ່ຫຼັກການພື້ນຖານ ແລະ ນະໂຍບາຍການໃສ່ໂທດຂອງທະນາຄານໂລກ ........ 48

ເອກະສານຊ້ອນທ້າຍ 2: ການໃຫ້ສິດທິພິເສດພາຍໃນປະເທດ ........ 50

1. ສິດທິພິເສດ ສໍາລັບສິນຄ້າຜະລິດພາຍໃນປະເທດ ........ 50
8. ສິດທິພິເສດ ສໍາລັບຜູ້ຮັບເໝົາພາຍໃນປະເທດ ........ 52

ເອກະສານຊ້ອນທ້າຍ 3: ການແນະນໍາທິດທາງ ໃຫ້ຜູ້ປະມູນ ........ 53

1. ຈຸດປະສົງ ........ 53
2. ຄວາມຮັບຜິດຊອບ ຕໍ່ການຈັດຊື້-ຈັດຈ້າງ ........ 53
3. ບົດບາດຂອງທະນາຄານໂລກ ........ 53
5. ຂໍ້ມູນ ສໍາລັບການປະມູນ ........ 54
6. ບົດບາດຂອງຜູ້ປະມູນ ........ 54
10. ການຮັກສາເປັນຄວາມລັບ ........ 55
11. ການດໍາເນີນການຂອງທະນາຄານໂລກ ........ 55
15. ການຕອບຂໍ້ຊັກຖາມຂອງທະນາຄານໂລກໃຫ້ແກ່ຜູ້ປະມູນ ........ 56

# ຕົວຫຍໍ້

| | | |
|---|---|---|
| BOO | ກໍ່ສ້າງ–ເປັນເຈົ້າຂອງ–ດຳເນີນງານ | *Build–Own–Operate* |
| BOOT | ກໍ່ສ້າງ–ເປັນເຈົ້າຂອງ–ດຳເນີນງານ–ໂອນມອບ | *Build–Own–Operate–Transfer* |
| BOT | ກໍ່ສ້າງ–ເປັນເຈົ້າຂອງ–ໂອນມອບ | *Build–Own–Transfer* |
| CDD | ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ | *Community Driven Development* |
| CIF | ມູນຄ່າລວມ, ປະກັນໄພ, ແລະຄ່າຂົນສົ່ງ (ທາງທະເລ) | *Cost, Insurance, and Freight* |
| CIP | ມູນຄ່າລວມ, ປະກັນໄພ, ແລະຄ່າຂົນສົ່ງ (ຊື່ປາຍທາງ) | *Carriage and Insurance Paid (place of destination)* |
| CPT | ຈ່າຍຄ່າຂົນສົ່ງຮອດສະຖານທີ່ (ລະບຸຊື່ປາຍທາງ) | *Carriage Paid To (named place of destination)* |
| DDP | ສົ່ງຮອດສະຖານທີ່, ຈ່າຍຄ່າພາສີ ແລະ ອາກອນ (ມູນຄ່າຮອດສະຖານທີ່ລວມທັງພາສີ | *Delivery Duty Paid* |
| EXW | ລາຄາໂຮງງານ (ສະຖານທີ່ຜະລິດ, ໂຮງງານ ຫຼື ປາກສາງ-ພ້ອມທີ່ຈະລົງຈາກຖ້ານ) | *Ex works, Ex factory, or Off-the-Shelf* |
| FA | ສັນຍາກຳນົດຂອບວຽກ | *Framework Agreement* |
| FCA | ບໍ່ຄິດໄລ່ຄ່າຂົນສົ່ງຮອດສະຖານທີ່ (ລະບຸຊື່ສະຖານທີ່) | *Free Carrier (named place)* |
| FPA | ຂໍ້ຕົກລົງດ້ານຫຼັກການກ່ຽວກັບຄວາມໄວ້ວາງໃຈ | *Fiduciary Principles Accord* |
| GNP | ລວມຍອດຜະລິດຕະພັນແຫ່ງຊາດ | Gross National Product |
| IBRD | ທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ | *International Bank for Reconstruction and Development (World Bank)* |
| ICB | ການປະມູນເປີດກ້ວາງສາກົນ | *International Competitive Bidding* |
| ICC | ສະພາການຄ້າສາກົນ | *International Chamber of Commerce* |
| ICSID | ສູນສາກົນ ເພື່ອການແກ້ໄຂຂໍ້ຂັດແຍ່ງໃນການລົງທຶນ | *International Centre for Settlement of Investment Disputes* |
| IDA | ສະມາຄົມພັດທະນາສາກົນ | *International Development Association* |
| IFC | ອົງການການເງິນສາກົນ, | *International Finnace Corporation* |
| LIB | ການປະມູນວົງແຄບສາກົນ | *Limited International Bidding* |
| MDTF | ກອງທຶນຊ່ວຍເຫຼືອລ້າຈາກຜູ້ໃຫ້ທຶນຫຼາຍຝ່າຍ | *Multi Donor Trust Fund* |
| MIGA | ອົງການຄໍ້າປະກັນການລົງທຶນຫຼາຍຝ່າຍ | *Multilateral Investment Guarantee Agency* |
| NCB | ການປະມູນເປີດກ້ວາງພາຍໃນ | *National Competitive Bidding* |
| NGO | ອົງການບໍ່ສັງກັດລັດຖະບານ | *Nongovernmental Organization* |
| PAD | ເອກະສານສະເໜີໂຄງການ | *Project Appraisal Document* |
| PPA | ເງິນລ່ວງໜ້າ ເພື່ອການກະກຽມໂຄງການ | *Project Preparation Advance* |
| PPP | ຮູບແບບຫຸ້ນສ່ວນລັດ ແລະ ເອກະຊົນ | *Public Private Partnership* |
| PPR | ການກວດກາ ການຈັດຊື້-ຈັດຈ້າງຄືນຕາມຫຼັງ | *Procurement Post Review* |

| | | |
|---|---|---|
| SA | ບັນຊີພິເສດ | *Special Account* |
| SBDs | ຕົວແບບມາດຕະຖານເອກະສານເຊີນປະມູນ | *Standard Bidding Documents* |
| SWAp | ການລວມກຸ່ມຂະແໜງການ | *Sector Wide Approach* |
| UCS | ການນຳໃຊ້ລະບົບດ່ຽວທົ່ວປະເທດ | *Use of Country Systems* |
| UN | ອົງການສະຫະປະຊາຊາ | *United Nations* |
| UNDB | ທຸລະກິດພັດທະນາຂອງອົງການສະຫະປະຊາຊາດ | *United Nations Development Business* |

# ໝວດທີ 1. ພາກສະເໜີ

## 1.1 ຈຸດປະສົງ

ຈຸດປະສົງຂອງຄູ່ມືແນະນຳສະບັບນີ້ ແມ່ນເພື່ອຮັບໃຊ້ໃຫ້ແກ່ໂຄງການທີ່ໄດ້ຮັບການສະໜອງທຶນທັງໝົດ ຫຼື ສ່ວນໃດໜຶ່ງ ໃນຮູບການທຶນກູ້ຢືມ *(Loan)* ຈາກທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການ ພັດທະນາ *(International Bank for Reconstruction and Development—IBRD)*, ທຶນກູ້ຢືມເງື່ອນ ໄຂຜ່ອນຜັນ (ສິນເຊື່ອ) *(Credit)* ຫຼື ທຶນຊ່ວຍເຫຼືອລ້າ *(Grant)* ຈາກສະມາຄົມພັດທະນາສາກົນ[1] *(International Development Association—IDA)*, ເງິນລ່ວງໜ້າເພື່ອການກະກຽມໂຄງການ *(Project Preparation Advance—PPA)*, ເງິນຊ່ວຍເຫຼືອລ້າຈາກ ທະນາຄານໂລກ *(Grant from the Bank)* ຫຼື ກອງທຶນຊ່ວຍເຫຼືອລ້າ *(Trust Fund)* ເຊິ່ງທະນາຄານໂລກ ເປັນຜູ້ບໍລິຫານ ແລະ ເຈົ້າຂອງໂຄງການ[2] ເປັນຜູ້ຈັດຕັ້ງປະຕິບັດ ພາຍໃຕ້ເງື່ອນໄຂນະໂຍບາຍຂອງການຈັດຊື້-ຈັດຈ້າງສິນຄ້າ, ການ ກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຂອງໂຄງການເອງ[3]. ສັນຍາກູ້ຢືມ ໄດ້ກຳນົດສາຍພົວພັນດ້ານນິຕິກຳ ລະຫວ່າງ ຜູ້ກູ້ຢືມ ແລະ ທະນາຄານໂລກ, ສ່ວນຄູ່ມືແນະນຳສະບັບນີ້ ເປັນເອກະສານພື້ນຖານ ຮັບໃຊ້ໃຫ້ແກ່ ການຈັດຊື້-ຈັດຈ້າງສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຂອງໂຄງການ ທີ່ໄດ້ລະບຸໄວ້ໃນສັນຍາ ກູ້ຢືມ. ສິດ ແລະ ພັນທະຂອງຜູ້ກູ້ຢືມ ແລະ ຜູ້ສະໜອງສິນຄ້າ, ຜູ້ຮັບເໝົາກໍ່ສ້າງ ແລະ ຜູ້ສະໜອງການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ແມ່ນຖືເອົາຕາມເງື່ອນໄຂກຳນົດໃນເອກະສານເຊີນປະມູນ[4], ແລະ ສັນຍາ ທີ່ໄດ້ ເຊັນກັນ ລະຫວ່າງຜູ້ກູ້ຢືມ ແລະ ຜູ້ ສະໜອງສິນຄ້າ, ຜູ້ຮັບເໝົາກໍ່ສ້າງ ແລະ ຜູ້ສະໜອງການບໍລິການ (ທີ່ບໍ່ ແມ່ນທີ່ປຶກສາ) ເປັນຂໍ້ຜູກພັນ ແຕ່ບໍ່ໃຫ້ຖືເອົາ

---

1 ເງື່ອນໄຂການຈັດຊື້-ຈັດຈ້າງ ຂອງທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ *(IBRD)* ແລະ ສະມາຄົມພັດທະນາສາກົນ *(IDA)* ແມ່ນຄ້າຍຄືກັນ. ໃນຄູ່ມືແນະນຳສະບັບນີ້, ເມື່ອກ່າວເຖິງ "ທະນາຄານໂລກ" ແມ່ນກວມເອົາທັງ ທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການ ພັດທະນາ *(IBRD)* ແລະ ສະມາຄົມພັດທະນາສາກົນ *(IDA)*. ເມື່ອກ່າວເຖິງ "ທຶນກູ້ຢືມ" ແມ່ນກວມເອົາທຶນກູ້ຢືມ ຈາກທະນາຄານສາກົນ ເພື່ອການຟື້ນຟູ ຄືນໃໝ່ ແລະ ການພັດທະນາ *(IBRD)* ຕະຫຼອດຮອດ ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ແລະ ທຶນຊ່ວຍເຫຼືອລ້າ ຈາກສະມາຄົມ ພັດທະນາສາກົນ *(IDA)*, ເງິນຊ່ວຍເຫຼືອລ້າຈາກທະນາຄານໂລກ, ກອງທຶນຊ່ວຍເຫຼືອລ້າ *(Trust Fund)* ເຊິ່ງທະນາຄານໂລກ ເປັນຜູ້ບໍລິຫານ ແລະ ເຈົ້າຂອງໂຄງການ ເປັນຜູ້ຈັດຕັ້ງປະຕິບັດ ແລະ ເງິນລ່ວງໜ້າເພື່ອການກະກຽມໂຄງການ *(PPA)*. ເມື່ອກ່າວເຖິງ "ສັນຍາກູ້ຢືມ" ແມ່ນກວມເອົາຂໍ້ຕົກລົງ ດ້ານນິຕິກຳ ລະຫວ່າງ ທະນາຄານໂລກ ແລະ ຜູ້ກູ້ຢືມ ແລະ ອາດຈະກວມເອົາ ສັນຍາໂຄງການ ລະຫວ່າງທະນາຄານໂລກ ແລະ ອົງກອນຈັດຕັ້ງ ປະຕິບັດ ໂຄງການນຳອີກ. ເມື່ອກ່າວເຖິງ "ຜູ້ກູ້ຢືມ" ແມ່ນກວມເອົາ ຜູ້ທີ່ໄດ້ຮັບທຶນກູ້ຢືມ, ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ), ທຶນຊ່ວຍເຫຼືອລ້າ ແລະ ເງິນລ່ວງ ໜ້າເພື່ອການກະກຽມໂຄງການ *(PPA)* ເພື່ອຈະຕັ້ງປະຕິບັດໂຄງການ ແລະ ອາດຈະກວມເອົາ ຜູ້ກູ້ຢືມຕໍ່ ຫຼື ອົງກອນຈັດຕັ້ງປະຕິບັດໂຄງການ.

2 ໃນຄວາມໝາຍຂອງສັນຍາສະໜອງທຶນ ຈາກກອງທຶນຊ່ວຍເຫຼືອລ້າ *(Trust Fund)* ເຫຼົ່ານີ້ ເຊິ່ງທະນາຄານໂລກເປັນຜູ້ບໍລິຫານນັ້ນ ຈະບໍ່ຂັດແຍ່ງກັບ ຂໍ້ ກຳນົດເຫຼົ່ານີ້ ນອກຈາກກໍລະນີຍົກເວັ້ນ ເຊິ່ງລວມທັງຂໍ້ຕົກລົງດ້ານຫຼັກການກ່ຽວກັບຄວາມໄວ້ວາງໃຈຂອງອົງກອນແຫ່ງສະຫະປະຊາຊາດ *(UN Fiduciary Principles Accord-FPA)* ຫຼື ກອງທຶນຊ່ວຍເຫຼືອລ້າຈາກຜູ້ໃຫ້ທຶນຫຼາຍຝ່າຍ (Multi Donor Trust Fund-MDTF) ໃນສະພາວະສຸກເສີນ.

3 ໃນຄູ່ມືແນະນຳສະບັບນີ້, ເມື່ອກ່າວເຖິງ "ສິນຄ້າ" ຫຼື "ການກໍ່ສ້າງ" ແມ່ນກວມເອົາທັງການບໍລິການຕິດພັນເຊັ່ນ ການຂົນສົ່ງ, ປະກັນໄພ, ການຕິດຕັ້ງ, ການ ດຳເນີນງານທົດລອງ, ການຝຶກອົບຮົມ ແລະ ການບຳລຸງຮັກສາເບື້ອງຕົ້ນ. "ສິນຄ້າ" ແມ່ນກວມເອົາສິນຄ້າທົ່ວໄປ (ລວມທັງປະເພດ ເພື່ອນຳໄປຜະລິດຕໍ່), ວັດຖຸດິບ, ເຄື່ອງກົນຈັກ, ອຸປະກອນ, ພາຫະນະ ແລະ ໂຮງຊ່າງອຸດສາຫະກຳ. ຂໍ້ກຳນົດຢູ່ໃນຄູ່ມືແນະນຳສະບັບນີ້ ຍັງນຳໃຊ້ກັບການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ເຊິ່ງສາມາດເຫັນໄດ້ເຖິງລັກສະນະກາຍະພາບຂອງກິດຈະກຳດັ່ງກ່າວ ໂດຍຜ່ານການປະມູນ ແລະ ສັນຍາ ບົນພື້ນຖານ ທີ່ສາມາດ ຄິດໄລ່ວັດແທກຜົນໄດ້ຮັບດ້ານກາຍະພາບນັ້ນໄດ້ ແລະ ກຳນົດມາດຕະຖານການປະຕິບັດສັນຍາໄດ້ຢ່າງຈະແຈ້ງ ທັງນຳໃຊ້ໄດ້ຢ່າງສອດຄ່ອງ ເຊັ່ນວ່າ: ການຂຸດເຈາະ,ການຖ່າຍພາບທາງອາກາດ, ການຖ່າຍພາບຜ່ານດາວທຽມ, ການແຕ້ມແຜນທີ່ ແລະ ກິດຈະກຳຄ້າຍຄື. ຄູ່ມືແນະນຳສະບັບນີ້ ຈະບໍ່ນຳໃຊ້ ກັບການບໍລິການທີ່ປຶກສາ ເຊິ່ງນອນໃນ "ຄູ່ມືແນະນຳ ການຄັດເລືອກ ແລະ ການວ່າຈ້າງ ທີ່ປຶກສາ ໂດຍນຳໃຊ້ທຶນກູ້ຢືມ ຈາກທະນາຄານສາກົນ ເພື່ອ ການຟື້ນຟູຄືນໃໝ່ ແລະ ການພັດທະນາ *(IBRD)*, ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ແລະ ທຶນຊ່ວຍເຫຼືອລ້າ ຈາກສະມາຄົມພັດທະນາສາກົນ *(IDA)* ສຳລັບຜູ້ກູ້ຢືມທຶນຈາກທະນາຄານໂລກ (ຕໍ່ໄປນີ້ ຮຽກວ່າ "ຄູ່ມືແນະນຳ ການຄັດເລືອກທີ່ປຶກສາ").

4 ການໃຊ້ຄຳສັບພາສາອັງກິດ *"bid"* ແລະ *"tender"* ຕາມເປົ້າໝາຍຂອງຄູ່ມືແນະນຳສະບັບນີ້ ມີຄວາມໝາຍດຽວກັນ ເຊິ່ງຮຽກວ່າ "ປະມູນ".

ຕາມຄູ່ມືແນະນຳສະບັບນີ້ ຫຼື ສັນຍາກູ້ຢືມກ່ຽວຂ້ອງ. ນອກຈາກ ພາກສ່ວນທີ່ກ່ຽວຂ້ອງກັບສັນຍາກູ້ຢືມນີ້ແລ້ວ, ບໍ່ມີພາກສ່ວນອື່ນໃດ ຈະມີສິດ ຫຼື ຮຽກຮ້ອງຫຍັງ ຕໍ່ ກັບສັນຍາກູ້ຢືມນີ້ໄດ້.

## 1.2 ສິ່ງທີ່ຄວນເອົາໃຈໃສ່

ຜູ້ກູ້ຢືມ[5] ມີໜ້າທີ່ຮັບຜິດຊອບ ໃນການຈັດຕັ້ງປະຕິບັດໂຄງການ ໂດຍກວມເອົາການເຊັນສັນຍາກັບຜູ້ຊະນະການປະມູນ ແລະ ການຄຸ້ມຄອງສັນຍາ. ສ່ວນທະນາຄານໂລກ ພັດມີຄວາມຮັບຜິດຊອບຂອງຕົນ ຕາມ ທີ່ໄດ້ລະບຸໄວ້ໃນວັກໜຶ່ງ ນອນໃນສັນຍາວ່າ: "ຮັບປະກັນໃຫ້ການນຳໃຊ້ເງິນກູ້ ເປັນໄປຕາມຈຸດປະສົງຂອງ ສັນຍາເງິນກູ້ທີ່ສະໜອງໃຫ້ເທົ່ານັ້ນ ໂດຍໃຫ້ເອົາໃຈໃສ່ພິຈາລະນາດ້ານການປະຢັດ (ເສດຖະກິດ) ແລະ ປະສິດທິຜົນ, ປາດສະຈາກ ອິດທິພົນຫລືການພິຈາລະນາດ້ານການເມືອງ ຫຼື ດ້ານອື່ນໆທີ່ບໍ່ກ່ຽວຂ້ອງກັບເສດຖະກິດ[6] ແລະ ໄດ້ວາງຫຼັກການລະອຽດ ເພື່ອຕອບສະໜອງ ຕາມຈຸດປະສົງດັ່ງກ່າວນີ້ໄດ້. ໃນການຈັດຕັ້ງປະຕິບັດໂຄງການຕົວຈິງແມ່ນ ຕ້ອງໄດ້ດຳເນີນການ ຕາມລະບຽບການ ແລະ ຫຼັກການ ໃນ ການຈັດຊື້-ຈັດຈ້າງ ທີ່ຂຶ້ນກັບແຕ່ລະກໍລະນີສະເພາະ ເຊິ່ງໂດຍທົ່ວໄປ ທະນາຄານໂລກ ໄດ້ແນະນຳທິດ ທາງລວມ ທີ່ຄວນເອົາໃຈໃສ່ 4 ປະການ ດ້ວຍກັນດັ່ງນີ້:

(1) ຄວາມຈຳເປັນດ້ານການປະຢັດ (ເສດຖະກິດ) ແລະ ປະສິດທິຜົນ ໃນການຈັດຕັ້ງປະຕິບັດໂຄງການ ລວມທັງການຈັດຊື້ສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ກ່ຽວ ຂ້ອງ.

(2) ຄວາມເອົາໃຈໃສ່ຂອງທະນາຄານໂລກ ຕໍ່ຜູ້ປະມູນ ທີ່ມີຄຸນລັກສະນະເໝາະສົມທັງໝົດຈາກບັນ ດາປະເທດພັດທະນາແລ້ວ ແລະ ກຳລັງພັດທະນາ[7] ໄດ້ຮັບຂໍ້ມູນຂ່າວສານອັນດຽວກັນ ແລະ ໂອກາດເທົ່າທຽມກັນໃນການແຂ່ງຂັນປະມູນ ເພື່ອສະໜອງສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ທະນາຄານໂລກໄດ້ສະໜອງທຶນໃຫ້.

(3) ຄວາມເອົາໃຈໃສ່ຂອງທະນາຄານໂລກ ເພື່ອຊຸກຍູ້ສົ່ງເສີມການພັດທະນາ ຂະແໜງກໍ່ສ້າງ ແລະ ອຸດສາຫະ ກຳປຸງແຕ່ງ ພາຍໃນຂອງປະເທດຂອງຜູ້ກູ້ຢືມເອງ.

(4) ຄວາມສຳຄັນ ດ້ານຄວາມໂປ່ງໃສ ໃນຂັ້ນຕອນການຈັດຊື້-ຈັດຈ້າງ.

1.3 ການແຂ່ງຂັນເປີດກ້ວາງທົ່ວໄປ ເປັນພື້ນຖານຂອງການຈັດຊື້-ຈັດຈ້າງຂອງລັດ ທີ່ມີປະສິດທິຜົນ. ຜູ້ກູ້ຢືມ ຕ້ອງກຳນົດຮູບການ ທີ່ເໝາະສົມທີ່ສຸດ ໃນການຈັດຊື້-ຈັດຈ້າງໃຫ້ສະເພາະແຕ່ລະລາຍການ. ໂດຍທົ່ວໄປ ແລ້ວ, ການປະມູນເປີດກ້ວາງສາກົນ *(International Competitive Bidding—ICB)* ແມ່ນຮູບການ ເໝາະສົມທີ່ສຸດ ໂດຍຜ່ານການຄຸ້ມຄອງບໍລິຫານທີ່ຖືກຕ້ອງ ແລະ ອະນຸຍາດໃຫ້ສິດທິພິເສດ ສຳລັບ ສິນຄ້າຜະລິດພາຍໃນປະເທດ ແລະ ໃນເມື່ອເຫັນວ່າເໝາະສົມ ຕໍ່ກັບຜູ້ຮັບເໝົາພາຍໃນປະເທດ[8] ທີ່ໄດ້ ກຳນົດເງື່ອນໄຂໄວ້ ລ່ວງໜ້າແລ້ວນັ້ນ. ສະນັ້ນ, ທະນາຄານໂລກຈຶ່ງຮຽກຮ້ອງໃຫ້ຜູ້ກູ້ຢືມ ດຳເນີນການຈັດ ຊື້ ສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຜ່ານຮູບການປະມູນເປີດ ກ້ວາງສາກົນ *(ICB)* ເພື່ອໃຫ້ຜູ້ສະໜອງສິນຄ້າ, ຜູ້ສະໜອງການບໍລິການ ແລະ ຜູ້ຮັບເໝົາ ທີ່ໄດ້

---

5 ໃນບາງກໍລະນີ, ຜູ້ກູ້ຢືມ ເຮັດໜ້າທີ່ເໝືອນ ຜູ້ສື່ກາງ ແລະ ອົງກອນອື່ນ ຫຼື ນິຕິບຸກຄົນອື່ນ ເປັນຜູ້ຈັດຕັ້ງປະຕິບັດໂຄງການ. ສະນັ້ນ, ຜູ້ກູ້ຢືມ ທີ່ກ່າວເຖິງໃນຄູ່ມືແນະນຳສະບັບນີ້ ຈຶ່ງກວມເອົາບັນດາອົງກອນ ຫຼື ນິຕິບຸກຄົນເຫຼົ່ານັ້ນ ຕະຫຼອດຮອດ ຜູ້ກູ້ຢືມຕໍ່ ຕາມຂໍ້ຜູກພັນຢືມຕໍ່.

6 ມາດຕາກ່ຽວຂ້ອງ ນອນໃນສັນຍາຂອງທະນາຄານໂລກແມ່ນ ມາດຕາ 3, ວັກ 5 (2) ແລະ ໃນສັນຍາ ຂອງສະມາຄົມພັດທະນາສາກົນ *(IDA)* ແມ່ນມາດຕາ 5, ວັກ 1 (7)

7 ໃຫ້ເບິ່ງ ວັກ 1.8, 1.9 ແລະ 1.10.

8 ຕາມເປົ້າໝາຍຂອງຄູ່ມືແນະນຳສະບັບນີ້, "ຜູ້ຮັບເໝົາ" ໝາຍເຖິງ ບໍລິສັດ ທີ່ສະໜອງການບໍລິການກໍ່ສ້າງເທົ່ານັ້ນ.

ຄຸນລັກສະນະ ເໝາະສົມ[9] ເຂົ້າຮ່ວມປະມູນ. (ຫຼັກການການປະມູນເປີດກ້ວາງສາກົນ *(ICB)* ໄດ້ອະທິບາຍຢູ່ ໝວດທີ (2) ຂອງຄູ່ມືແນະນຳສະບັບນີ້).

1.4 ໃນເມື່ອຫາກເຫັນວ່າ ການປະມູນເປີດກ້ວາງສາກົນ *(ICB)* ບໍ່ແມ່ນຮູບການປະມູນທີ່ເໝາະສົມທີ່ສຸດນັ້ນ ກໍ ອາດນຳໃຊ້ ຮູບການຈັດຊື້-ຈັດຈ້າງອື່ນໄດ້. ໃນການນຳໃຊ້ ຮູບການຈັດຊື້-ຈັດຈ້າງອື່ນເຫຼົ່ານັ້ນ ລວມທັງ ສະຖານະການ ທີ່ຈະນຳໃຊ້ ອາດຈະມີຄວາມເໝາະສົມກວ່າ ເຊິ່ງໄດ້ອະທິບາຍຢູ່ ໝວດທີ (3) ຂອງຄູ່ມື ແນະນຳສະບັບນີ້. ສ່ວນຮູບການຈັດຊື້-ຈັດຈ້າງສະເພາະ ທີ່ອາດຈະຕ້ອງປະຕິບັດ ແມ່ນອີງຕາມເນື້ອໃນ ການຈັດຊື້-ຈັດຈ້າງຂອງແຕ່ລະໂຄງການ ເຊິ່ງໄດ້ລະບຸໄວ້ໃນສັນຍາກູ້ຢືມ. ສ່ວນສັນຍາສະເພາະ ຕາມທຶນທີ່ ສະໜອງໃຫ້ໃນໂຄງການ ແລະ ຮູບການຈັດຊື້-ຈັດຈ້າງ ຕ້ອງໃຫ້ສອດຄ່ອງກັບສັນຍາກູ້ຢືມ ແລະ ນອນໃນ ແຜນຈັດຊື້- ຈັດຈ້າງ ເຊິ່ງໄດ້ກຳນົດໄວ້ ຕາມເນື້ອໃນ ວັກ 1.18 ຂອງຄູ່ມືແນະນຳສະບັບນີ້.

## 1.5ຂອບເຂດການນຳໃຊ້ ຄູ່ມືແນະນຳການຈັດຊື້-ຈັດຈ້າງ

ຫຼັກການພື້ນຖານ, ລະບຽບການ ແລະ ຂັ້ນຕອນຕ່າງໆ ທີ່ໄດ້ກ່າວໄວ້ໃນ ຄູ່ມືແນະນຳສະບັບນີ້ ແມ່ນນຳໃຊ້ ກັບທຸກໆ ສັນຍາຂອງການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ນອນໃນທຶນກູ້ຢືມ[10] ທີ່ທະນາຄານໂລກໄດ້ສະໜອງໃຫ້ທັງໝົດ ຫຼື ສ່ວນໃດໜຶ່ງ. ບັນດາຂໍ້ກຳນົດທີ່ໄດ້ ອະທິບາຍຢູ່ໝວດທີ (1) ນີ້ ຕ້ອງນຳໃຊ້ກັບໝວດອື່ນໆ ທີ່ຢູ່ໃນຄູ່ມືແນະນຳສະບັບນີ້. ສ່ວນການປະມູນຈັດ ຊື້ສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ໃຫ້ສັນຍາຕ່າງໆ ທີ່ບໍ່ນອນໃນ ທຶນກູ້ຢືມ ທີ່ທະນາຄານໂລກ ໄດ້ສະໜອງທຶນໃຫ້ທັງໝົດ ຫຼື ສ່ວນໃດນຶ່ງ ແຕ່ພັດນອນໃນຂອບເຂດຂອງ ໂຄງການຕາມສັນຍາກູ້ຢືມ, ຜູ້ກູ້ຢືມ ອາດຈະນຳໃຊ້ລະບຽບການ ແລະ ຫຼັກການອື່ນໄດ້. ໃນກໍລະນີນີ້, ທະນາຄານໂລກ ຕ້ອງມີຄວາມເພິ່ງພໍໃຈ ຕໍ່ກັບຫຼັກການທີ່ຜູ້ກູ້ຢືມ ໄດ້ນຳໃຊ້ເພື່ອປະຕິບັດໜ້າທີ່ຂອງຕົນໃຫ້ ສຳເລັດ ເຮັດໃຫ້ໂຄງການດຳເນີນໄປຢ່າງຖືກຕ້ອງ ແລະ ມີປະສິດທິຜົນ ທັງຮັບປະກັນໃຫ້ການຈັດຊື້ສິນ ຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ສະໜອງໄດ້ເງື່ອນໄຂ ດັ່ງລຸ່ມນີ້:

(1) ໄດ້ຄຸນນະພາບຕາມຄວາມຕ້ອງການ ແລະ ເໝາະສົມ (ຕົງກັນ) *(Compatible)* ກັບສ່ວນທີ່ເຫຼືອຂອງໂຄງການ.

(2) ສາມາດສົ່ງມອບສິນຄ້າ ຫຼື ສຳເລັດວຽກຮັບເໝົາ ທັນຕາມກຳນົດເວລາ.

(3) ລາຄາສະເໜີກໍສົມເຫດສົມຜົນ, ບໍ່ສົ່ງຜົນກະທົບດ້ານລົບຢ່າງຮ້າຍແຮງ ຕໍ່ສະເຖັຍລະພາບດ້ານ ເສດຖະກິດ ແລະ ການເງິນ ຂອງໂຄງການ.

## 1.6ຄວາມຂັດແຍ່ງດ້ານຜົນປະໂຫຍດ

ນະໂຍບາຍຂອງທະນາຄານໂລກ ຮຽກຮ້ອງໃຫ້ບໍລິສັດ ທີ່ເຂົ້າຮ່ວມຂະບວນການຈັດຊື້-ຈັດຈ້າງຂອງ ໂຄງການ ທີ່ທະນາຄານໂລກ ສະໜອງທຶນນັ້ນ ບໍ່ໃຫ້ມີຄວາມຂັດແຍ່ງດ້ານຜົນປະໂຫຍດ. ຖ້າຫາກພົບເຫັນ ກໍລະນີຕິດພັນກັບຄວາມຂັດແຍ່ງດ້ານຜົນປະໂຫຍດ, ບໍລິສັດນັ້ນ ຈະຖືກຖືວ່າ ຂາດຄຸນລັກສະນະເໝາະ ສົມ ທີ່ຈະມອບສັນຍາໃຫ້.

---

9 ໃຫ້ເບິ່ງ ວັກ 1.8, 1.9 ແລະ 1.10.

10 ນະທີ່ນີ້ ໄດ້ກວມເອົາສັນຍາຕ່າງໆທີ່ອີງກອນຈັດຊື້-ຈັດຈ້າງຕົວແທນ ຫຼື ຜູ້ຈັດການ ການກໍ່ສ້າງ ທີ່ຜູ້ກູ້ຢືມໄດ້ວ່າຈ້າງມາ ຕາມເນື້ອໃນ ວັກ 3.11 ຂອງຄູ່ມືແນະນຳສະບັບນີ້ ເປັນຜູ້ດຳເນີນການຈັດຊື້-ຈັດຈ້າງ. ທະນາຄານໂລກ ອາດຈະຕົກລົງເຫັນດີໃຫ້ນຳໃຊ້ລະບົບການຈັດຊື້-ຈັດຈ້າງຂອງລັດຂອງປະເທດຂອງຜູ້ກູ້ຢືມ ໂດຍອ້າງອີງເຖິງການນຳໃຊ້ລະບົບລວມຂອງປະເທດ *(Use of Country System-UCS)* ຕາມເນື້ອໃນ ວັກ 3.20 ຂອງຄູ່ມື ແນະນຳສະບັບນີ້. ໃນກໍລະນີນີ້, ຫຼັກການການຈັດຊື້-ຈັດຈ້າງ ທີ່ຜູ້ກູ້ຢືມຈະນຳໃຊ້ນັ້ນ ຕ້ອງໄດ້ອະທິບາຍຢູ່ໃນ ສັນຍາກູ້ຢືມ ລະຫວ່າງ ຜູ້ກູ້ຢືມ ແລະ ທະນາຄານໂລກໄວ້ ແລະ ທະນາຄານໂລກ ອາດຈະພິຈາລະນາ ສິ່ງທີ່ກ່ຽວຂ້ອງກັບການນຳໃຊ້ຕາມເນື້ອໃນ ໝວດທີ (1) ແລະ ໝວດອື່ນໆ ນອນໃນຄູ່ມື ແນະນຳສະບັບນີ້ ຢ່າງເຕັມສ່ວນ.

1.7 ບໍລິສັດ ທີ່ຖືກພິຈາລະນາວ່າ ມີການຕິດພັນກັບຄວາມຂັດແຍ່ງດ້ານຜົນປະໂຫຍດ ໃນຂະບວນການຈັດ ຊື້-ຈັດຈ້າງ ຈະຕົກຢູ່ໃນກໍລະນີລຸ່ມນີ້:

(1) ບໍລິສັດ ທີ່ສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ມີສ່ວນ ພົວພັນໂດຍກົງກັບ ການບໍລິການທີ່ປຶກສາ ໃນການກະກຽມ ຫຼື ຈັດຕັ້ງປະຕິບັດໂຄງການ ໂດຍຜ່ານ ການສະໜອງ ຫຼື ຮັບການສະໜອງຈາກບໍລິສັດໃນກຸ່ມທີ່ຄຸ້ມຄອງ ໂດຍກົງ ຫຼື ທາງອ້ອມ ຫຼື ການຄຸ້ມ ຄອງລວມຈາກ ບໍລິສັດນັ້ນ. ຂໍ້ກຳນົດດັ່ງກ່າວນີ້ ບໍ່ໄດ້ນຳໃຊ້ກັບບັນດາບໍລິສັດ ທີ່ແຕກຕ່າງກັນ (ທີ່ປຶກສາ, ຜູ້ຮັບເໝົາ ຫຼື ຜູ້ສະໜອງ) ມາຮ່ວມກັນປະຕິບັດພັນທະຂອງຕົນ ໃນນາມ ຂອງຜູ້ຮັບເໝົາ ຕາມສັນຍາໃນຮູບແບບມອບຂໍກຸນແຈ *(Turnkey contract)* ຫຼື ທັງອອກແບບ ແລະ ທັງກໍ່ສ້າງ[11] ໄປພ້ອມໆກັນ *(Design and build contract)*, ຫຼື

(2) ປະເພດບໍລິສັດ ທີ່ຍື່ນຊອງປະມູນ ຫຼາຍກວ່າ ໜຶ່ງຊອງ ເຊິ່ງອາດຈະເປັນບໍລິສັດດຽວ ຫຼື ຮ່ວມທຶນ ຢູ່ອີກຊອງປະມູນອື່ນ, ຍົກເວັ້ນໃນກໍລະນີ ທີ່ອະນຸຍາດໃຫ້ຍື່ນປະມູນສະເໜີທາງເລືອກ, ໃນກໍລະນີນີ້ ຊອງປະມູນທຸກຊອງຂອງຜູ້ຍື່ນປະມູນນັ້ນ ຈະຖືກຖືວ່າບໍ່ຜ່ານການຄັດເລືອກດ້ານຄຸນວຸດທິ. ເຖິງ ຢ່າງໃດກໍຕາມ, ສິ່ງທີ່ກ່າວມານັ້ນບໍ່ໄດ້ຈຳກັດບໍລິສັດ ທີ່ເປັນຜູ້ຮັບເໝົາຕໍ່ ຍື່ນຫຼາຍກວ່າ ໜຶ່ງຊອງ ຍົກເວັ້ນບາງກໍລະນີການປະມູນສະເພາະ ການເຂົ້າຮ່ວມຂອງຜູ້ປະມູນ ໃນນາມຜູ້ຮັບເໝົາຕໍ່ທີ່ ສາມາດຢູ່ອີກຊອງປະມູນໜຶ່ງ ຫາກໄດ້ຮັບອະນຸຍາດຈາກທະນາຄານໂລກ ແລະ ຕົວແບບ ມາດຕະຖານເອກະສານເຊີນປະມູນ *(Standard Bidding Documents—SBDs)* ຂອງທະນາ ຄານໂລກ ທີ່ອະນຸຍາດໃຫ້ນຳໃຊ້ ສະເພາະ ການປະມູນດັ່ງກ່າວ, ຫຼື

(3) ບໍລິສັດ (ລວມທັງບຸກຄະລາກອນ)ທີ່ມີສາຍພົວພັນດ້ານທຸລະກິດ ແລະ ຄອບຄົວແບບໃກ້ຊິດກັບພະນັກງານວິຊາການຂອງ ຜູ້ກູ້ຢືມ (ຫຼື ອົງກອນຈັດຕັ້ງປະຕິບັດໂຄງການ ຫຼື ຜູ້ທີ່ໄດ້ຮັບທຶນກູ້ຢືມສ່ວນໃດນຶ່ງ) ເຊິ່ງຕົກຢູ່ໃນກໍລະນີລຸ່ມນີ້:

1. ເປັນຜູ້ເຄີຍມີສ່ວນກ່ຽວຂ້ອງ ໂດຍທາງກົງ ຫຼື ທາງອ້ອມ ໃນການກະກຽມເອກະສານເຊີນປະມູນ ຫຼື ເປັນຜູ້ວາງມາດຕະຖານເງື່ອນໄຂຂອງສັນຍາ ແລະ/ຫຼື ເຂົ້າຮ່ວມຂະບວນການປະເມີນຜົນ ການປະມູນຂອງສັນຍານັ້ນໆ, ຫຼື
2. ຈະເປັນຜູ້ທີ່ມີສ່ວນກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາສັນຍາ ນອກຈາກກໍລະນີຄວາມຂັດແຍ່ງດ້ານຜົນປະໂຫຍດ ໄດ້ຮັບການແກ້ໄຂ ເປັນທີ່ຮັບຮອງຂອງທະນາຄານໂລກ ຕະຫຼອດໄລຍະດຳເນີນ ຂະບວນການຈັດຊື້-ຈັດຈ້າງ ແລະ ການປະຕິບັດສັນຍາ, ຫຼື

(4) ບໍລິສັດ ທີ່ບໍ່ຜ່ານ ເງື່ອນໄຂສະຖານະພາບ ຄວາມຂັດແຍ່ງດ້ານຜົນປະໂຫຍດ ທີ່ໄດ້ລະບຸໄວ້ ໃນຕົວແບບມາດຕະຖານເອກະສານເຊີນປະມູນ *(SBDs)* ທີ່ກ່ຽວຂ້ອງກັບຂະບວນ ການຈັດຊື້-ຈັດຈ້າງສະເພາະ.

## 1.8 ຄຸນລັກສະນະເໝາະສົມ *(Eligibility)*

ເພື່ອຊຸກຍູ້ໃຫ້ມີການແຂ່ງຂັນ, ທະນາຄານໂລກ ອະນຸຍາດໃຫ້ ບໍລິສັດ ຫຼື ບຸກຄົນ ຈາກທຸກໆປະເທດ ສາມາດເຂົ້າຮ່ວມການປະມູນ ເພື່ອສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນ ທີ່ປຶກສາ) ຂອງໂຄງການທະນາຄານໂລກ ສະໜອງທຶນໃຫ້ໄດ້. ບໍ່ວ່າເງື່ອນໄຂເຂົ້າຮ່ວມໃດໆກໍຕາມ ລ້ວນຈະຈຳກັດ ຢູ່ໃນລະດັບທີ່ມີຄວາມຈຳເປັນ ເພື່ອຮັບປະກັນ ດ້ານຄຸນວຸດທິຂອງບໍລິສັດ ທີ່ຈະສາມາດ ປະຕິບັດສັນຍາໃຫ້ສຳເລັດໄດ້[12].

---

11 ໃຫ້ເບິ່ງ ວັກ 2.4.

12 ທະນາຄານໂລກ ອະນຸຍາດໃຫ້ ບໍລິສັດ ຫຼື ບຸກຄົນ ຈາກປະເທດໄຕ້ຫວັນ, ສ.ປ. ຈີນ ເຂົ້າຮ່ວມການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຂອງໂຄງການທະນາຄານໂລກ ສະໜອງທຶນໃຫ້.

1.9 ສະເພາະສັນຍາ ນອນໃນທຶນກູ້ຢືມ ທີ່ທະນາຄານໂລກ ໄດ້ສະໜອງທຶນໃຫ້ທັງໝົດ ຫຼື ສ່ວນໃດໜຶ່ງນັ້ນ, ທະນາຄານໂລກ ບໍ່ອະນຸຍາດໃຫ້ ຜູ້ຈັດຊື້ ປະຕິເສດ ບໍລິສັດໃນການເຂົ້າຮ່ວມຂະບວນການຈັດຊື້-ຈັດຈ້າງ ຫຼື ບໍລິສັດທີ່ຖືກສະເໜີເປັນຜູ້ຊະນະການປະມູນ ໂດຍໃຫ້ເຫດຜົນອ້າງອີງທີ່ບໍ່ກ່ຽວຂ້ອງກັບກໍລະນີລຸ່ມນີ້:

(1) ຄວາມສາມາດຂອງບໍລິສັດ ແລະ ຊັບພະຍາກອນ ເພື່ອປະຕິບັດສັນຍາໃຫ້ສຳເລັດ.

(2) ສາຖານະພາບດ້ານຄວາມຂັດແຍ່ງດ້ານຜົນປະໂຫຍດ ຕາມເນື້ອໃນ ວັກ 1.6 ແລະ 1.7 ຂ້າງເທິງ,

1.10 ໂດຍຍົກເວັ້ນ ເນື້ອໃນ ວັກ 1.8 ແລະ 1.9 ທີ່ກ່າວມາຂ້າງເທິງ ຈະມີເງື່ອນໄຂດັ່ງລຸ່ມນີ້:

(1) ບໍລິສັດຢູ່ໃນປະເທດໃດໜຶ່ງ ຫຼື ສິນຄ້າທີ່ຜະລິດຢູ່ໃນປະເທດໃດຫນຶ່ງ ອາດຈະຖືກຕັດອອກ ຖ້າຫາກວ່າ:

1. ອີງຕາມກົດໝາຍ ຫຼື ຂໍ້ກຳນົດກົດລະບຽບ ຂອງປະເທດຜູ້ຈັດຊື້ ໄດ້ຫ້າມພົວພັນການຄ້າກັບ ປະເທດນັ້ນໆ ດ້ວຍເງື່ອນໄຂທີ່ທະນາຄານໂລກ ມີຄວາມເພິ່ງພໍໃຈວ່າ ການຕັດອອກດັ່ງກ່າວ ບໍ່ສົ່ງຜົນກະທົບເຖິງການແຂ່ງຂັນເພື່ອສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິ ການ (ທີ່ບໍ່ແມ່ນທີ່ປຶກສາ).

2. ເພື່ອໃຫ້ສອດຄ່ອງກັບມະຕິຂອງສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດ (ພາກທີ 7 ຂອງ ກົດບັດສະຫະປະຊາຊາດ), ປະເທດຜູ້ກູ້ຢືມ ຫ້າມນຳເຂົ້າສິນຄ້າໃດນຶ່ງ ຈາກປະເທດໃດນຶ່ງ ຫຼື ຊຳລະເງິນໃຫ້ບຸກຄົນ ຫຼື ນິຕິບຸກຄົນສະເພາະ ຢູ່ໃນປະເທດນັ້ນໆ. ໃນເມື່ອປະເທດຜູ້ກູ້ຢືມ ຫາກໄດ້ຫ້າມຊຳລະເງິນໃຫ້ບໍລິສັດສະເພາະ ຫຼື ຄ່າສິນຄ້າສະເພາະນັ້ນໆ ຕາມມະຕິທີ່ກ່າວ ມານັ້ນ, ບໍລິສັດດັ່ງກ່າວ ອາດຈະຖືກຕັດຊື່ອອກ.

(2) ລັດວິສາຫະກິດ ຫຼື ສະຖາບັນຕ່າງໆທີ່ຂຶ້ນກັບລັດຖະບານ ຂອງປະເທດຜູ້ກູ້ຢືມ ອາດເຂົ້າຮ່ວມການປະມູນ ຢູ່ໃນປະເທດຂອງຜູ້ກູ້ຢືມເອງໄດ້ ຖ້າສາມາດຢັ້ງຢືນໄດ້ວ່າ:

1. ມີຄວາມເປັນເອກະລາດ ທາງດ້ານກົດໝາຍ ແລະ ດ້ານການເງິນ.

2. ດຳເນີນກິດຈະການທຸລະກິດ ພາຍໃຕ້ກົດໝາຍການຄ້າ (ກົດໝາຍວິສາຫະກິດ).

3. ບໍ່ເປັນອົງກອນທີ່ຂຶ້ນກັບຜູ້ກູ້ຢືມ ຫຼື ຜູ້ກູ້ຢືມຕໍ່[13].

(3) ບໍລິສັດ ທີ່ຖືກທະນາຄານໂລກ ໃສ່ໂທດ ໂດຍສອດຄ່ອງກັບ ເນື້ອໃນ ວັກຍ່ອຍ 1.16 (4) ຂອງຄູ່ມື ແນະນຳສະບັບນີ້ ຫຼື ນະໂຍບາຍ ແລະ ຂະບວນການໃສ່ໂທດ ເພື່ອຕ້ານການສໍ້ລາດບັງຫຼວງ ຂອງ ກຸ່ມທະນາຄານໂລກ[14] ຖືວ່າຂາດຄຸນລັກສະນະເໝາະສົມ ທີ່ຈະໄດ້ຮັບສັນຍາ ທີ່ທະນາຄານໂລກ ສະໜອງທຶນ ຫຼື ໄດ້ຮັບຜົນປະໂຫຍດດ້ານການເງິນ ຫຼື ດ້ານອື່ນ ຈາກສັນຍາທີ່ທະນາຄານໂລກ ສະໜອງທຶນ ໃນໄລຍະເວລາ ທີ່ທະນາຄານໂລກ ໄດ້ກຳນົດໄວ້.

---

13 ນອກຈາກໜ່ວຍງານສະໜອງວັດຖຸພັນ ຕາມເນື້ອໃນ ວັກ 3.9 ແລ້ວ. ເພື່ອຕອບສະໜອງໃຫ້ໄດ້ ຄຸນລັກສະນະເໝາະສົມ, ລັດວິສາຫະກິດ ຫຼື ສະຖາບັນຕ້ອງຢັ້ງຢືນສະຖານະພາບຂອງຕົນເອງໃຫ້ທະນາຄານໂລກຊາບ ລວມທັງກົດລະບຽບຂອງວິສາຫະກິດ ແລະ ຂໍ້ມູນອື່ນໆ ທີ່ທະນາຄານໂລກ ອາດຈະຮ້ອງຂໍມາ ປະກອບມີ: (1) ຖານະນິຕິບຸກຄົນທາງດ້ານກົດໝາຍ ທີ່ແຍກຕົວອອກຈາກ ລັດຖະບານ. (2) ບໍ່ເຄີຍໄດ້ຮັບການຖົມຊຸມ ຫຼື ການສະໜັບສະໜູນດ້ານງົບປະມານ. (3) ດຳເນີນກິດຈະການ ພາຍໃຕ້ຮູບການວິສາຫະກິດການຄ້າ ແລະ ບໍ່ມີພັນທະສົ່ງສ່ວນເກີນໃຫ້ລັດຖະບານ, ມີສິດ ແລະ ຄວາມຮັບຜິດຊອບຕໍ່ໜີ້ສິນ, ມີສິດກູ້ຢືມ ແລະ ຮັບຜິດຊອບຕໍ່ການຊຳລະໜີ້ສິນຄືນ ແລະ ສາມາດແຈ້ງລົ້ມລະລາຍໄດ້. (4) ບໍ່ມີຂໍ້ຜູກມັດ ໃນການພົວພັນເພື່ອໄດ້ຮັບສັນຍາຈາກກົມກອງ ຫຼື ອົງກອນຂອງລັດຖະບານ ພາຍໃຕ້ລະບຽບກົດໝາຍຕ່າງໆທີ່ນຳໃຊ້ ເຊິ່ງເປັນການລາຍງານ ຫຼື ອົງກອນຄຸ້ມຄອງຂອງວິສາຫະກິດ ຫຼື ອົງກອນ ທີ່ມີຄວາມສາມາດໃຊ້ສິດ ຫຼື ຄວບຄຸມ ວິສາຫະກິດ ຫຼື ສະຖາບັນ.

14 ຕາມເປົ້າໝາຍຂອງວັກຍ່ອຍນີ້, ນະໂຍບາຍທີ່ກ່ຽວຂ້ອງກັບການຕ້ານການສໍ້ລາດບັງຫລວງ ຂອງກຸ່ມທະນາຄານໂລກ ໄດ້ລະບຸໄວ້ຢູ່ໃນ ຄູ່ມືແນະນຳ "ການປ້ອງກັນ ແລະ ຕ້ານການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ໃນບັນດາໂຄງການ ທີ່ໄດ້ຮັບການສະໜອງທຶນກູ້ຢືມ ຈາກທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ ແລະ ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ແລະ ທຶນຊ່ວຍເຫຼືອລ້າ ຈາກສະມາຄົມພັດທະນາສາກົນ" *(Guidelines On Preventing and Combating Fraud and Corruption in Projects financed by IBRD Loans and IDA Credits and Grants)* ແລະ ຢູ່ໃນຄູ່ມືແນະນຳ "ການຕ້ານການສໍ້ລາດບັງຫຼວງ ສຳລັບການຄ້ຳປະກັນໂອນເງິນ ຂອງອົງການການເງິນສາກົນ, ອົງການຄ້ຳປະກັນ ການລົງທຶນ ຫຼາຍຝ່າຍ ແລະ ທະນາຄານໂລກ"*(Anti-Corruption Guidelines for International Finance Corporation-IFC, Multilateral Investment Guarantee Agency-MIGA, and World Bank Guarantee Transactions*). ຂະບວນການໃສ່ໂທດຂອງທະນາຄານໂລກ ໄດ້ເຜີຍແຜ່ ສູ່ສາທາລະນະຜ່ານ ເວັບໄຊ ພາຍນອກຂອງທະນາຄານໂລກເອງ.

## 1.11 ການເຊັນສັນຍາລ່ວງໜ້າ ແລະ ການສະໜອງທຶນແບບມີຜົນຍ້ອນຫຼັງ

ຜູ້ກູ້ຢືມ ອາດສາມາດດຳເນີນບາງຂັ້ນຕອນລິເລີ່ມການຈັດຊື້-ຈັດຈ້າງ ກ່ອນການເຊັນສັນຍາກູ້ຢືມກ່ຽວຂ້ອງ ກັບທະນາຄານໂລກໄດ້. ໃນກໍລະນີນີ້, ຫຼັກການ ການຈັດຊື້-ຈັດຈ້າງ ລວມທັງການລົງຂ່າວປະມູນ ຕ້ອງໃຫ້ ສອດຄ່ອງກັບ ຄູ່ມືແນະນຳສະບັບນີ້ ເພື່ອວ່າ ຫຼັງຈາກນັ້ນ ສັນຍາທີ່ໄດ້ ຈຶ່ງຈະມີເງື່ອນໄຂຄົບຖ້ວນ ກັບການ ສະໜອງທຶນຈາກທະນາຄານໂລກ ແລະ ທະນາຄານໂລກເອງ ຕ້ອງກວດກາຂັ້ນຕອນຕ່າງໆ ທີ່ຜູ້ກູ້ຢືມ ໄດ້ ນຳໃຊ້. ຜູ້ກູ້ຢືມ ຮັບປະກັນ ການເຊັນສັນຍາລ່ວງໜ້າ *(Advance contracting)* ດ້ວຍຄວາມສ່ຽງຂອງຕົນ ເອງແລະ ຂໍ້ຕົກລົງໃນພາກປະຕິບັດຂອງທະນາຄານໂລກ ທີ່ຕິດພັນກັບຫຼັກການ, ການປະກອບ ເອກະ ສານສັນຍາ ຫຼື ການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ບໍ່ໄດ້ເປັນເງື່ອນໄຂໃຫ້ ທະນາຄານ ໂລກ ຮັບປະກັນໃຫ້ການກູ້ຢືມແກ່ໂຄງການ. ຖ້າຫາກສັນຍາໄດ້ເຊັນກັນແລ້ວ, ທະນາຄານໂລກຈະຊຳລະ ທົດແທນຄືນໃຫ້ຜູ້ກູ້ຢືມ ຕາມສັນຍາທີ່ໄດ້ເຊັນ ກ່ອນການເຊັນສັນຍາກູ້ຢືມກັບທະນາຄານໂລກ ເຊິ່ງຖື ວ່າເປັນການສະໜອງທຶນແບບມີຜົນຍ້ອນຫຼັງ (*Retroactive financing*) ແລະ ໄດ້ອະນຸຍາດໃຫ້ ພາຍໃນ ຂອບເຂດຈຳກັດ ທີ່ໄດ້ລະບຸໄວ້ໃນສັນຍາກູ້ຢືມເທົ່ານັ້ນ.

## 1.12 ການຮ່ວມທຶນ

ບໍ່ວ່າບໍລິສັດໃດກໍຕາມ ອາດຈະເຂົ້າຮ່ວມປະມູນແບບເອກະລາດ (ແບບດ່ຽວ) ຫຼື ຮ່ວມທຶນ ກັບບໍລິສັດພາຍໃນ ແລະ/ຫຼື ບໍລິສັດຕ່າງປະເທດ. ການຮ່ວມທຶນ ອາດຈະຖືເປັນໄລຍະຍາວ (ມີຄວາມເປັນເອກະລາດຕາມແຕ່ລະການປະມູນ) ຫຼື ສະເພາະການປະມູນໃດນຶ່ງ. ໃນການຮ່ວມທຶນນັ້ນ ຕ້ອງໄດ້ແຕ່ງຕັ້ງບໍລິສັດໃດນຶ່ງໃນກຸ່ມ ເປັນຜູ້ຕາງໜ້າ ແລະ ສະມາຊິກຂອງຜູ້ຮ່ວມທຶນທຸກບໍລິສັດ ຕ້ອງເຊັນສັນຍາ ແລະ ຮ່ວມກັນຮັບຜິດ ຊອບ ຕໍ່ສັນຍາທັງໝົດ ຕາມພັນທະຂອງຜູ້ຮ່ວມທຶນແຕ່ລະບໍລິສັດ. ທະນາຄານໂລກ ບໍ່ໄດ້ຮັບຮອງເອົາເງື່ອນໄຂຂອງການປະມູນ ຫຼື ການເຊັນສັນຍາ ທີ່ຮຽກຮ້ອງໃຫ້ມີການຮ່ວມທຶນແບບບັງຄັບ ຫຼື ຮູບແບບການລວມຕົວແບບບັງຄັບອື່ນໆ ລະຫວ່າງບໍລິສັດດ້ວຍກັນ.

## 1.13 ການທົບທວນກ່ອນ ແລະ ກວດກາຄືນຕາມຫຼັງ ຂອງທະນາຄານໂລກ

ທະນາຄານໂລກ ຈະທົບທວນກ່ອນ ແລະ ກວດກາຕາມຫຼັງ ກ່ຽວກັບຫຼັກການ ການຈັດຊື້-ຈັດຈ້າງຂອງ ຜູ້ກູ້ຢືມ, ເອກະສານເຊີນປະມູນ, ການປະເມີນຜົນການປະມູນ, ການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ແລະ ສັນຍາຕ່າງໆ ເພື່ອຮັບປະກັນໃຫ້ ຂະບວນການຈັດຊື້-ຈັດຈ້າງ ທີ່ໄດ້ດຳເນີນນັ້ນ ຕ້ອງສອດຄ່ອງກັບ ຫຼັກການທີ່ໄດ້ຕົກລົງເຫັນດີນຳກັນແລ້ວ. ຫຼັກການການທົບທວນກ່ອນ ແລະ ກວດກາຕາມຫຼັງ ຈະໄດ້ອະທິບາຍ ຢູ່ເອກະສານຊ້ອນທ້າຍ 1. ຢູ່ໃນແຜນຈັດຊື້- ຈັດຈ້າງ ທີ່ໄດ້ຮັບອະນຸມັດຈາກ ທະນາຄານໂລກ[15] ແລ້ວນັ້ນ ຕ້ອງໄດ້ລະບຸ ຮູບການທົບທວນ ຫຼື ກວດກາຕາມຫຼັງ ເຊິ່ງຂຶ້ນກັບປະເພດ ຂອງການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ທະນາຄານໂລກ ໄດ້ສະໜອງທຶນໃຫ້ທັງໝົດ ຫຼື ສ່ວນໃດໜຶ່ງ.

## 1.14 ການຈັດຊື້-ຈັດຈ້າງບໍ່ຖືກລະບຽບການ *(Misprocurement)*

ທະນາຄານໂລກ ຈະບໍ່ສະໜອງທຶນ ຕໍ່ກັບລາຍຈ່າຍສຳລັບສັນຍາ ສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ເມື່ອທະນາຄານໂລກໄດ້ໃຫ້ຂໍ້ສະຫຼຸບກ່ຽວກັບສັນຍາດັ່ງກ່າວ ເມື່ອຕົກໃນກໍລະນີລຸ່ມນີ້:

(1) ສັນຍາທີ່ໄດ້ມອບໃຫ້ຜູ້ຊະນະການປະມູນນັ້ນ ບໍ່ສອດຄ່ອງກັບເງື່ອນໄຂສັນຍາກູ້ຢືມ ທີ່ໄດ້ຕົກລົງເຫັນດີນຳກັນ ແລະ ສະແດງຢ່າງລະອຽດ ໃນແຜນຈັດຊື້-ຈັດຈ້າງ ທີ່ທະນາຄານໂລກໄດ້ໃຫ້ການຮັບ ຮອງແລ້ວ.

(2) ບໍ່ສາມາດມອບສັນຍາໃຫ້ຜູ້ປະມູນ ທີ່ໄດ້ຖືວ່າ ເປັນຜູ້ຊະນະການປະມູນ ອັນເນື່ອງມາຈາກພຶດຕິກຳຈິງໃຈແກ່ຍາວ ຫຼື ການກະທຳອື່ນ ຂອງຜູ້ກູ້ຢືມ ທີ່ມີລັກສະນະຫຼ້າຊ້າໂດຍບໍ່ມີເຫດຜົນອັນຄວນ, ເຮັດໃຫ້ຜູ້ຊະນະການ

[15] ໃຫ້ເບິ່ງ ວັກ 1.18.

ປະມູນ ອາດບໍ່ສົນໃຈທີ່ຈະປະຕິບັດສັນຍາອີກຕໍ່ໄປ ຫຼື ມີຄວາມຜິດພາດ ການປະຕິເສດເອກະສານຍື່ນປະມູນບໍ່ຖືກຕາມຫລັກການຂອງເງິນກູ້.

(3) ການເຂົ້າມີສ່ວນກ່ຽວຂ້ອງຂອງຜູ້ຕາງໜ້າຂອງຜູ້ກູ້ຢືມ ຫຼື ຜູ້ໄດ້ຮັບທຶນກູ້ຢືມ ສ່ວນໃດໜຶ່ງ ໃນການ ສໍ້ໂກງ ແລະ ການສໍ້ລາດບັງຫຼວງ ຕາມເນື້ອໃນ ວັກ 1.16 (3). ໃນກໍລະນີນີ້, ບໍ່ວ່າຈະເປັນ ການທົບທວນກ່ອນ ຫຼື ການກວດກາຕາມຫຼັງ ກໍຕາມ, ທະນາຄານໂລກ ຈະປະກາດວ່າ ເປັນ ການຈັດຊື້-ຈັດຈ້າງບໍ່ຖືກລະບຽບການ ແລະ ທັງເປັນນະໂຍບາຍຂອງທະນາຄານໂລກ ທີ່ຍົກເລີກ ຮ່ວງເງິນກູ້ຢືມ ທີ່ໄດ້ຈັດສັນໃຫ້ສະເພາະໃຫ້ແກ່ການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ໄດ້ດໍາເນີນ ການຈັດຊື້-ຈັດຈ້າງບໍ່ຖືກລະບຽບການດັ່ງກ່າວນັ້ນ. ນອກຈາກນັ້ນ, ທະນາຄານໂລກ ອາດຈະດໍາເນີນການ ຕໍ່ຂໍ້ບົກຜ່ອງອື່ນ ທີ່ນອນໃນສັນຍາກູ້ຢືມ.ເຖິງແມ່ນວ່າສັນຍານັ້ນໆໄດ້ຖືກເຊັນ ພາຍຫຼັງທີ່ທະນາຄານໂລກ ໄດ້ໃຫ້ການຮັບຮອງແລ້ວນັ້ນ, ຖ້າຫາກໄດ້ ຂໍ້ສະຫຼຸບວ່າ ການໃຫ້ການຮັບຮອງທີ່ໄດ້ອອກໃຫ້ນັ້ນ ພັດຢູ່ບົນພື້ນຖານຂໍ້ມູນ ທີ່ຜູ້ກູ້ຢືມ ສະໜອງໃຫ້ນັ້ນ ບໍ່ຄົບຖ້ວນ, ບໍ່ຊັດເຈນ ຫຼື ບິດເບືອນ (ເຮັດໃຫ້ເຂົ້າໃຈຜິດ) ຫຼື ໄດ້ມີການດັດແກ້ເງື່ອນໄຂ ຂອງສັນຍາ ເປັນສ່ວນໃຫຍ່ ໂດຍທະນາຄານໂລກບໍ່ໄດ້ໃຫ້ການຮັບຮອງ, ທະນາຄານ ໂລກ ອາດຈະຍັງປະກາດ ເປັນການຈັດຊື້-ຈັດຈ້າງບໍ່ຖືກລະບຽບການ ໂດຍນໍາໃຊ້ນະໂຍບາຍ ຂອງຕົນ ຢ່າງເຕັມ ສ່ວນ.

## 1.15 ການອ້າງອີງເຖິງທະນາຄານໂລກ

ໃນເອກະສານການຈັດຊື້-ຈັດຈ້າງ ທີ່ຈະອ້າງອີງເຖິງທະນາຄານໂລກ, ຜູ້ກູ້ຢືມ ຕ້ອງນໍາໃຊ້ ເນື້ອຄວາມ[16] ດັ່ງຕໍ່ໄປນີ້: *"[ຊື່ຂອງຜູ້ກູ້ຢືມ]* ໄດ້ຮັບ *[ຫຼື ນໍາໃຊ້]* [ທຶນກູ້ຢືມ] ຈາກ [ທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ *[IBRD]* (ທະນາຄານໂລກ)" ເປັນຈໍານວນເງິນທຽບເທົ່າກັບ------ໂດລາສະຫະລັດ ເພື່ອຮັບໃຊ້ເຂົ້າໃນ *[ຊື່ໂຄງການ]* ແລະ ມີຈຸດປະສົງ ນໍາໃຊ້ສ່ວນນຶ່ງຂອງ [ທຶນກູ້ຢືມ] ນີ້ ເຂົ້າໃນການຊໍາລະ ລາຍຈ່າຍ ທີ່ຖືກຕ້ອງ ຕາມສັນຍາສະບັບນີ້. ທະນາຄານໂລກ ຈະດໍາເນີນການຊໍາລະ ໂດຍອີງຕາມການສະເໜີຂອງ *[ຊື່ຂອງຜູ້ກູ້ຢືມ ຫຼື ຜູ້ຖືກແຕ່ງຕັ້ງ]* ແລະ ການຕົກລົງເຫັນດີຂອງທະນາຄານໂລກພາຍໃຕ້ ເງື່ອນໄຂຂອງສັນຍາ [ກູ້ຢືມ]. ໃນສັນຍາ [ກູ້ຢືມ] ໄດ້ຫ້າມຖອນເງິນອອກຈາກບັນຊີເງິນ [ກູ້ຢືມ] ເພື່ອຈຸດປະສົງການຊໍາລະໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ຊໍາລະຄ່າສິນຄ້ານໍາເຂົ້າ ເຊິ່ງການຊໍາລະຫຼືການນໍາເຂົ້າ ດັ່ງກ່າວ ເປັນທີ່ຮູ້ຈັກຂອງທະນາຄານໂລກວ່າ ເປັນການຕ້ອງຫ້າມຕາມມະຕິຂອງສະພາຄວາມໝັ້ນຄົງ ແຫ່ງສະຫະປະຊາຊາດ *(United Nations Security Council)*, ພາກທີ 7 ຂອງກົດບັດສະຫະປະຊາຊາດ[17]. ນອກຈາກ *[ຊື່ຜູ້ກູ້ຢືມ]* ແລ້ວ, ບໍ່ມີພາກສ່ວນອື່ນໃດ ຈະມີສິດ ຫຼື ສະເໜີຖອນ ເງິນຮ່ວງ ໃດຮ່ວງໜຶ່ງ ຂອງ ສັນຍາ [ກູ້ຢືມ] ນີ້ໄດ້"[18].

## 1.16 ການສໍ້ໂກງ ແລະ ການສໍ້ລາດບັງຫຼວງ

ນະໂຍບາຍຂອງທະນາຄານໂລກ ແມ່ນຮຽກຮ້ອງໃຫ້ ຜູ້ກູ້ຢືມ (ລວມທັງຜູ້ໄດ້ຮັບປະໂຫຍດຈາກທຶນກູ້ຢືມ ຂອງທະນາຄານໂລກ) ກໍຄື ຜູ້ປະມູນ, ຜູ້ສະໜອງສິນຄ້າ, ຜູ້ຮັບເໝົາ ແລະ ຕົວແທນຂອງເຂົາເຈົ້າ (ທີ່ອອກຊື່ ຫຼື ບໍ່ອອກຊື່), ຜູ້ຮັບເໝົາຕໍ່, ທີ່ປຶກສາຮັບຊ່ວງຕໍ່, ຜູ້ສະໜອງການບໍລິການ ຫຼື ສິນຄ້າ ແລະ ບຸກຄົນອື່ນໆ ໃຫ້ມີມາດຕະຖານຈັນຍາ

---

16 ໃຫ້ປັບປຸງຕາມຄວາມເໝາະສົມ ໃນກໍລະນີ ເປັນທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ຈາກສະມາຄົມພັດທະນາສາກົນ *(International Development Association)* ຫຼື ທຶນຊ່ວຍເຫຼືອລ້າ *(Grant)* ຫຼື ທຶນຊ່ວຍເຫຼືອລ້າ *(Trust Fund)*.

17 ເງື່ອນໄຂທົ່ວໄປທີ່ນໍາໃຊ້ ໃນສັນຍາກູ້ຢືມ ແລະ ການຄໍ້າປະກັນ ຈາກທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ *(IBRD)* ຕາມເນື້ອໃນ ມາດຕາ 5, ໝວດ 5.01 ແລະ ເງື່ອນໄຂທົ່ວໄປທີ່ນໍາໃຊ້ ໃນສັນຍາທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ເພື່ອການພັດທະນາ *(Development Credit Agreements)* ຈາກສະມາຄົມພັດທະນາສາກົນ *(IDA)* ຕາມເນື້ອໃນ ມາດຕາ 5, ໝວດ 5.01

18 ໃຫ້ປ່ຽນແທນເນື້ອຄວາມ "ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) *(Credit)*", "ສະມາຄົມພັດທະນາສາກົນ *(IDA)*" ແລະ "ສັນຍາທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) *(Credit Agreement)*" ຕາມຄວາມເໝາະສົມ.

ບັນສູງສຸດ ໃນໄລຍະດຳເນີນການຈັດຊື້-ຈັດຈ້າງ ແລະ ການປະຕິບັດ ສັນຍາຕ່າງໆ ທີ່ທະນາຄານໂລກໄດ້ສະໜອງທຶນໃຫ້[19]. ອີງຕາມນະໂຍບາຍດັ່ງກ່າວ, ທະນາຄານໂລກ ໄດ້ ກຳນົດໄວ້ດັ່ງນີ້:

(1) ອີງຕາມເປົ້າໝາຍຂອງຂໍ້ກຳນົດສະບັບນີ້ ຈຶ່ງໄດ້ກຳນົດຄວາມໝາຍຂອງຄຳສັບເຫຼົ່ານີ້ໄວ້ດັ່ງນີ້:

1. "ພຶດຕິກຳສໍ້ລາດບັງຫຼວງ" ໝາຍເຖິງ ການສະເໜີ, ເອົາໃຫ້, ຮັບເອົາ ຫຼື ຮຽກເອົາ ສິ່ງທີ່ມີຄູນຄ່າໃດໜຶ່ງ ໂດຍທາງກົງ ຫຼື ທາງອ້ອມ ເຊິ່ງສົ່ງຜົນກະທົບໃຫ້ ອີກຝ່າຍໜຶ່ງ[20] ກະທຳຜິດ.
2. "ພຶດຕິກຳສໍ້ໂກງ" ໝາຍເຖິງ ການກະທຳ ຫຼື ຄວາມບົກຜ່ອງ ລວມທັງການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ໂດຍເຈດຕະນາ ຫຼື ດ້ວຍຄວາມເລີ້ນເລີ້ ຫຼື ພະຍາຍາມບິດເບືອນ ເພື່ອຝ່າຍຕົນເອງ[21] ໄດ້ມາຜົນປະໂຫຍດດ້ານການເງິນ ຫຼື ດ້ານອື່ນ ຫຼື ຫຼີກລ້ຽງພັນທະຂອງຕົນ.
3. "ພຶດຕິກຳສົມຮູ້ຮວ່ມຄິດ" ແມ່ນການວາງແຜນລ່ວງໜ້າລະຫວ່າງ ສອງຫຼືຫຼາຍຝ່າຍ (ຝ່າຍອື່ນໆ)[22] ເພື່ອໄດ້ມາສິ່ງຕາມຈຸດປະສົງທີ່ບໍ່ຖືກຕ້ອງ ລວມທັງການສົ່ງຜົນກະທົບໃຫ້ ອີກຝ່າຍນຶ່ງກະທຳຜິດ.
4. "ພຶດຕິກຳບີບບັງຄັບ" ແມ່ນການສ້າງຄວາມເສັຍຫາຍ ຫຼື ການນາບຂູ່ວ່າ ຈະສ້າງ ຄວາມເສັຍຫາຍ, ນາບຂູ່ ໂດຍທາງກົງ ຫຼື ທາງອ້ອມ ຕໍ່ຝ່າຍໜຶ່ງ ຫຼື ກຳມະສິດຂອງຝ່າຍນັ້ນ ເພື່ອສົ່ງຜົນກະທົບໃຫ້ ຝ່າຍໜຶ່ງ[23] ກະທຳຜິດ.
5. "ພຶດຕິກຳກີດກັ້ນ" ແມ່ນໝາຍເຖິງການກະທຳລຸ່ມນີ້:
   (ກ) ມີເຈດຕະນາ ໃນການທຳລາຍ, ການປອມແປງ, ການປ່ຽນແທນ ຫຼື ການຊຸກເຊື່ອງ ວັດຖຸ ຫຼັກຖານດ້ານວັດຖຸພັນ (ເອກະສານ) ສຳລັບການສອບສວນ ຫຼື ສ້າງບົດລາຍງານເທັດໃຫ້ ຜູ້ສອບສວນ ເພື່ອກີດກັ້ນການສອບສວນຂອງທະນາຄານໂລກ ທີ່ຕິດພັນກັບພຶດຕິກຳ ສໍ້ລາດບັງຫຼວງ, ສໍ້ໂກງ, ສົມຮູ້ຮ່ວມຄິດ ຫຼື ບີບບັງຄັບ; ແລະ/ຫຼື ການນາບຂູ່, ການປັ່ນປວນ ຫຼື ບໍ່ລົດລະຄວາມພະຍາຍາມ ເພື່ອປ້ອງກັນ ບໍ່ໃຫ້ຝ່າຍໃດນຶ່ງ ເປີດເຜີຍສິ່ງທີ່ຮູ້ເຫັນ ກ່ຽວຂ້ອງກັບການສອບສວນ ຫຼື ຕິດຕາມການສອບສວນນັ້ນໆ.
   (ຂ) ການກະທຳ ໂດຍເຈດຕະນາ ທີ່ກີດກັ້ນສິດໃນການດຳເນີນການກວດກາຂອງທະນາຄານ ໂລກ ແລະ ການກວດສອບ ດ້ານວັດຖຸພັນ ທີ່ໄດ້ລະບຸໄວ້ ຕາມເນື້ອໃນ ວັກ 1.16 (5) ຂ້າງລຸ່ມນີ້.

(2) ຈະປະຕິເສດການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ, ຖ້າຫາກພິຈາລະນາເຫັນວ່າ ຜູ້ຊະນະການປະມູນທີ່ສະເໜີ ຫຼື ບຸກຄະລາກອນຂອງເຂົາເຈົ້າ ຫຼື ຕົວແທນຂອງເຂົາເຈົ້າ ຫຼື ທີ່ປຶກສາຮັບວຽກຕໍ່, ຜູ້ຮັບເໝົາຕໍ່, ຜູ້ສະໜອງການບໍລິການ, ຜູ້ສະໜອງສິນຄ້າ ແລະ/ຫຼື ພະນັກງານ
ຂອງເຂົາເຈົ້ານັ້ນ ຫາກມີສ່ວນກ່ຽວຂ້ອງໂດຍທາງກົງ ຫຼື ທາງອ້ອມ ກັບພຶດຕິກຳສໍ້ລາດບັງຫຼວງ, ສໍ້ໂກງ, ສົມຮູ້ຮ່ວມຄິດ, ບີບບັງຄັບ ຫຼື ກີດກັ້ນ ເພື່ອແຂ່ງຂັນໃຫ້ໄດ້ຮັບສັນຍານັ້ນມາ.

---

19 ນະທີ່ນີ້ ຫມາຍເຖິງ ທຸກການກະທຳ ທີ່ສົ່ງຜົນກະທົບເຮັດໃຫ້ຂັ້ນຕອນການຈັດຊື້-ຈັດຈ້າງ ຫຼື ການປະຕິບັດສັນຍາ ໄດ້ມາໃນສິ່ງທີ່ບໍ່ສົມຄວນ, ບໍ່ຖືກຕ້ອງ.

20 ຕາມເປົ້າໝາຍຂອງວັກຍ່ອຍນີ້, *"ອີກຝ່າຍໜຶ່ງ"* ໝາຍເຖິງ ພະນັກງານ ທີ່ເຮັດໜ້າທີ່ຕິດພັນກັບຂະບວນການຈັດຊື້-ຈັດຈ້າງ ຫຼື ການປະຕິບັດສັນຍາ. ນະທີ່ນີ້ *"ພະນັກງານ"* ຍັງກວມເອົາ ພະນັກງານທະນາຄານໂລກເອງ ແລະ ພະນັກງານຂອງອົງກອນດຳເນີນການ ຫຼື ກວດກາ ການຕັດສິນວຽກຈັດຊື້- ຈັດຈ້າງນຳອີກ.

21 ຕາມເປົ້າໝາຍຂອງວັກຍ່ອຍນີ້, *"ຝ່າຍຕົນເອງ"* ໝາຍເຖິງ ພະນັກງານ; ຄຳສັບ *"ຜົນປະໂຫຍດ"* ແລະ *"ພັນທະ"* ແມ່ນຕິດພັນກັບຂະບວນການຈັດຊື້- ຈັດຈ້າງ ຫຼື ການປະຕິບັດສັນຍາ ແລະ *"ການກະທຳ ຫຼື ຄວາມບົກຜ່ອງ"* ທີ່ມີເຈດຕະນາສົ່ງຜົນກະທົບໃຫ້ ຂະບວນການຈັດຊື້-ຈັດຈ້າງ ແລະ ການປະຕິບັດສັນຍາ ບໍ່ຖືກຕ້ອງ.

22 ຕາມເປົ້າໝາຍຂອງວັກຍ່ອຍນີ້, *"ຝ່າຍອື່ນໆ"* ໝາຍເຖິງ ຜູ້ເຂົ້າຮ່ວມໃນຂະບວນການຈັດຊື້-ຈັດຈ້າງ (ລວມທັງພະນັກງານ) ທີ່ຕົນເອງໄດ້ພະຍາຍາມ ຫຼື ຜ່ານຜູ້ອື່ນ ຫຼື ນິຕິບຸກຄົນອື່ນທີ່ບໍ່ໄດ້ເຂົ້າຮ່ວມໃນຂະບານການຈັດຊື້ ຫຼື ການຄັດເລືອກ ເພື່ອສ້າງໃຫ້ມີການແຂ່ງຂັນ ຫຼື ສ້າງລາຄາປະມູນປອມ, ທີ່ບໍ່ມີລັກສະນະແຂ່ງຂັນ ຫຼື ແລກປ່ຽນລາຄາປະມູນ ທີ່ມີລັກສະນະສ່ວນຕົວເຊິ່ງກັນ ແລະ ກັນ ຫຼື ວາງເງື່ອນໄຂໃຫ້ກັນ.

23 ຕາມເປົ້າໝາຍຂອງວັກຍ່ອຍນີ້, *"ຝ່າຍນຶ່ງ"* ໝາຍເຖິງ ຜູ້ເຂົ້າຮ່ວມໃນຂະບວນການຈັດຊື້-ຈັດຈ້າງ ຫຼື ການປະຕິບັດສັນຍາ.

(3) ຈະປະກາດວ່າ ເປັນການຈັດຊື້-ຈັດຈ້າງ ບໍ່ຖືກລະບຽບການ ແລະ ຍົກເລີກຮ່ວງເງິນກູ້ຢືມ ທີ່ໄດ້ ຈັດສັນໃຫ້ສະເພາະສັນຍານັ້ນ ຖ້າຫາກພິຈາລະນາເຫັນວ່າ ຜູ້ຕາງໜ້າຂອງຜູ້ກູ້ຢືມ ຫຼື ຜູ້ໄດ້ຮັບ ປະໂຫຍດ ຈາກທຶນກູ້ຢືມນັ້ນ ຫາກມີສ່ວນກ່ຽວຂ້ອງ ກັບພຶດຕິກຳສໍ້ລາດບັງຫຼວງ, ສໍ້ໂກງ, ສົມຮູ້ຮ່ວມຄິດ, ບີບບັງຄັບ ຫຼື ກີດກັ້ນ ໃນເວລາດຳເນີນການຈັດຊື້-ຈັດຈ້າງ ຫຼື ການປະຕິບັດສັນຍາ ແລະ ຜູ້ກູ້ຢືມເອງ ກໍບໍ່ມີມາດຕະການ ທີ່ເໝາະສົມ ແລະ ທັນການ ເປັນທີ່ເພິ່ງພໍໃຈຂອງທະນາຄານໂລກ ຫຼັງເກີດມີພຶດຕິກຳດັ່ງກ່າວນັ້ນຂຶ້ນ ລວມທັງຂາດການແຈ້ງໃຫ້ທະນາຄານໂລກຊາບ ຢ່າງທັນການ ເມື່ອຮູ້ເຫັນວ່າມີພຶດຕິກຳດັ່ງກ່າວນັ້ນເກີດຂຶ້ນ.

(4) ຈະໃສ່ໂທດບໍລິສັດ ຫຼື ບຸກຄົນ ໄດ້ທຸກເວລາ ໂດຍສອດຄ່ອງກັບຂະບວນການໃສ່ໂທດ ຂອງ ທະນາຄານໂລກ[24] ລວມທັງການປະກາດສູ່ສາທາລະນະວ່າ ເປັນບໍລິສັດ ຫຼື ບຸກຄົນ ທີ່ຂາດຄຸນລັກສະນະເໝາະສົມ ຢ່າງບໍ່ມີກຳນົດ ຫຼື ໃນຊ່ວງໄລຍະເວລາໃດໜຶ່ງທີ່ກຳນົດໄວ້ວ່າ:

1. ບໍ່ໄດ້ຮັບສັນຍາ ທີ່ທະນາຄານໂລກ ສະໜອງທຶນໃຫ້.
2. ບໍ່ຖືກແຕ່ງຕັ້ງໃຫ້ເປັນ ຜູ້ຮັບເໝົາຕໍ່, ທີ່ປຶກສາ, ຜູ້ສະໜອງສິນຄ້າ ຫຼື ຜູ້ສະໜອງການບໍລິການ[25] ຈາກບໍລິສັດອື່ນ ເຊິ່ງໄດ້ຄຸນລັກສະນະເໝາະສົມ ທີ່ໄດ້ຮັບສັນຍາ ທີ່ທະນາຄານໂລກ ສະໜອງທຶນໃຫ້.

(5) ມາດຕາຕ່າງໆ ທີ່ຜູ້ປະມູນ, ຜູ້ສະໜອງສິນຄ້າ ແລະ ຜູ້ຮັບເໝົາ ລວມທັງຜູ້ສະໜອງສິນຄ້າຕໍ່ ແລະ ຜູ້ຮັບເໝົາຕໍ່, ຕົວແທນຂອງເຂົາເຈົ້າ, ບຸກຄະລາກອນ, ທີ່ປຶກສາ, ຜູ້ສະໜອງການບໍລິການ ຫຼື ຜູ້ສະໜອງສິນຄ້າ ທີ່ໄດ້ບັນຈຸເຂົ້າໃນເອກະສານເຊີນປະມູນ ແລະ ເອກະສານສັນຍາ ທີ່ທະນາຄານໂລກໄດ້ສະໜອງເງິນກູ້ຢືມໃຫ້ນັ້ນ ຕ້ອງອະນຸຍາດໃຫ້ ທະນາຄານໂລກ ກວດກາບັນຊີ, ສຳນວນ ເອກະສານ ແລະ ເອກະສານອື່ນໆທັງໝົດ ທີ່ຕິດພັນກັບການຍື່ນຊອງປະມູນ ແລະ ການປະຕິບັດສັນຍາ ແລະ ມີພ້ອມເພື່ອຈະໃຫ້ນັກກວດສອບບັນຊີ ທີ່ໄດ້ຮັບການແຕ່ງຕັ້ງຈາກທະນາຄານໂລກ ດຳເນີນການກວດສອບໄດ້.

(6) ເມື່ອຜູ້ກູ້ຢືມ ດຳເນີນການຈັດຊື້ສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຈາກອົງກອນ ແຫ່ງອົງການການສະຫະປະຊາຊາດ (ສປຊ) ໂດຍກົງ ແລະ ສອດຄ່ອງກັບ ເນື້ອໃນ ວັກ 3.10 ຂອງຄູ່ມືແນະນຳສະບັບນີ້ ໂດຍຖືເອົາສັນຍາທີ່ໄດ້ເຊັນກັນ ລະຫວ່າງ ຜູ້ກູ້ຢືມ ແລະ ອົງກອນແຫ່ງ ສປຊ ເປັນພື້ນຖານ. ຂໍ້ກຳນົດ ການໃສ່ໂທດ ຖານການສໍ້ໂກງ ແລະ ການສໍ້ລາດ ບັງຫຼວງ ຕາມເນື້ອໃນ ວັກ 1.16 ຂ້າງເທິງຍັງຕ້ອງນຳໃຊ້ຢ່າງເຕັມສ່ວນ ຕໍ່ກັບ ຜູ້ສະໜອງສິນຄ້າ, ຜູ້ຮັບເໝົາ, ຜູ້ສະໜອງການບໍລິການ, ທີ່ປຶກສາ, ຜູ້ຮັບເໝົາຕໍ່ ຫຼື ທີ່ປຶກສາຮັບຊ່ວງຕໍ່ ແລະ ພະນັກງານຂອງເຂົາເຈົ້າ ທີ່ໄດ້ເຊັນສັນຍາກັບອົງກອນ ແຫ່ງ ສປຊ ນຳອີກ. ໂດຍຍົກເວັ້ນ ກໍລະນີທີ່ກ່າວມາຂ້າງເທິງ, ເນື້ອໃນ ວັກ 1.16 (4) ແລະ (5) ຈະບໍ່ນຳໃຊ້ກັບອົງກອນ ແຫ່ງ ສປຊ ແລະ ພະນັກງານຂອງເຂົາເຈົ້າ ແລະ ເນື້ອໃນວັກ 1.16 (5) ຈະບໍ່ນຳໃຊ້ກັບສັນຍາ ລະຫວ່າງ ອົງກອນ ແຫ່ງ ສປຊ ແລະ ຜູ້ສະໜອງສິນຄ້າ ແລະ ຜູ້ສະໜອງການບໍລິການຂອງ ເຂົາເຈົ້າ. ໃນກໍລະນີນີ້, ອົງກອນແຫ່ງ ສປຊ ຈະນຳໃຊ້ ຫຼັກການ ແລະ ລະບຽບການ ຂອງເຂົາເຈົ້າ ເອງ ເພື່ອສອບສວນ ເມື່ອຖືກກ່າວຫາວ່າ ເປັນການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ທະນາຄານໂລກ ແລະ ອົງກອນແຫ່ງ ສປຊ ອາດ

---

24 ບໍລິສັດ ຫຼື ວິສາຫະກິດສ່ວນບຸກຄົນ ອາດຈະຖືກປະກາດວ່າ ຂາດຄຸນລັກສະນະເໝາະສົມ ທີ່ຈະໄດ້ຮັບສັນຍາ ທີ່ທະນາຄານໂລກສະໜອງທຶນໃຫ້ ໂດຍຂຶ້ນກັບກໍລະນີລຸ່ມນີ້: (1) ສຳເລັດການພິຈາລະນາການໃສ່ໂທດຂອງທະນາຄານໂລກ ຕາມຂະບວນການໃສ່ໂທດ ລວມທັງການຂ້າມຂາດ ຕາມທີ່ໄດ້ຕົກລົງເຫັນດີກັບສະຖາບັນການເງິນສາກົນອື່ນໆ ລວມທັງ ທະນາຄານພັດທະນາຫຼາຍຝ່າຍ ໂດຍຜ່ານຂະບວນການໃສ່ໂທດຖານການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ດ້ານບໍລິຫານການຈັດຊື້-ຈັດຈ້າງຂອງກຸ່ມທະນາຄານໂລກ ແລະ (2) ຜົນຂອງການຢຸດຊົ່ວຄາວ ຫຼື ການຢຸດຊົ່ວຄາວກ່ອນກຳນົດ ໃນເວລາທີ່ຂະບວນການໃສ່ໂທດຍັງດຳເນີນຢູ່. ໃຫ້ເບິ່ງເນື້ອໃນໝາຍເຫດດ້ານລຸ່ມ ເລກທີ 14 ແລະ ເນື້ອໃນ ວັກ 8, ເອກະສານຊ້ອນທ້າຍ 1 ຂອງຄູ່ມືແນະນຳສະບັບນີ້.

25 ເປັນຜູ້ທີ່ຖືກແຕ່ງຕັ້ງ ໃຫ້ເປັນຜູ້ຮັບເໝົາຕໍ່, ທີ່ປຶກສາ, ຜູ້ຜະລິດ ຫຼື ຜູ້ສະໜອງສິນຄ້າ, ຫຼື ຜູ້ສະໜອງການບໍລິການ (ໄດ້ນຳໃຊ້ ຊື່ທີ່ແຕກຕ່າງກັນ ຂຶ້ນກັບເອກະສານເຊີນປະມູນສະເພາະ) ແມ່ນຜູ້ທີ່ຕົກໃນນຶ່ງໃນກໍລະນີລຸ່ມນີ້: (1) ຜູ້ປະມູນ ໄດ້ເອົາເຂົ້າໃນການກວດກາຄູນວຸດທິກ່ອນການປະມູນ ຫຼື ການປະມູນ ໂດຍໄດ້ນຳເອົາປະສົບການສະເພາະດ້ານ ແລະ ສຳຄັນ ລວມທັງ ຄວາມຮູ້ເຮັດຮູ້ທຳ (Know-how) ເພື່ອໃຫ້ຜູ້ປະມູນຜ່ານຄຸນວຸດທິ ທີ່ຕ້ອງການສຳລັບການປະມູນສະເພາະດັ່ງກ່າວ ຫຼື (2) ໄດ້ຮັບການແຕ່ງຕັ້ງ ຈາກຜູ້ກູ້ຢືມ.

ຕົກລົງເຫັນດີນຳກັນ ລວມທັງ ພັນທະຂອງຕົນ ໃນການແຈ້ງໃຫ້ທະນາຄານໂລກຊາບ ກ່ຽວກັບການຕັດສິນໃຈ ແລະ ການດຳເນີນການ ໃນແຕ່ລະໄລຍະ. ທະນາຄານໂລກສະຫງວນສິດ ໃນການແຈ້ງໃຫ້ ຜູ້ກູ້ຢືມຊາບເຖິງ ມາດຕະການນຳໃຊ້ເຊັ່ນ ການຢຸດວຽກຊົ່ວຄາວ ຫຼື ການຍົກເລີກສັນຍາ. ອົງກອນແຫ່ງ ສປຊ ຕ້ອງທົບທວນເບິ່ງ ບັນຊີລາຍຊື່ຂອງບໍລິສັດ ແລະ ບຸກຄົນ ຂອງທະນາຄານໂລກ ທີ່ໄດ້ໃຫ້ຢຸດວຽກຊົ່ວຄາວ ຫຼື ຫ້າມດຳເນີນການ. ໃນກໍລະນີ ທີ່ອົງກອນ ແຫ່ງ ສປຊ ໄດ້ເຊັນສັນຍາ ຫຼື ສັ່ງຊື້ສິນຄ້າ ກັບບໍລິສັດ ຫຼື ບຸກຄົນ ທີ່ທະນາຄານໂລກ ໃຫ້ຢຸດວຽກຊົ່ວຄາວ ຫຼື ຫ້າມດຳເນີນການນັ້ນ, ທະນາຄານໂລກ ຈະບໍ່ສະໜອງທຶນ ສຳລັບລາຍຈ່າຍທີ່ກ່ຽວຂ້ອງ ແລະ ຈະນຳໃຊ້ ມາດຕະການອື່ນ ທີ່ເຫັນວ່າເໝາະສົມ.

1.17 ຕໍ່ກັບສັນຍາສະເພາະຂອງທະນາຄານໂລກ, ຜູ້ກູ້ຢືມ ອາດຈະນຳໃຊ້ ແບບຟອມປະມູນ ສຳລັບສັນຍາ ທີ່ທະນາຄານໂລກ ສະໜອງທຶນໃຫ້ ແລະ ຮັບປະກັນ ໃຫ້ຜູ້ປະມູນ ຕ້ອງປະຕິບັດ ຫຼັກການແຂ່ງຂັນປະມູນ ແລະ ປະຕິບັດສັນຍາ, ກົດໝາຍວ່າດ້ວຍ ການຕ້ານການສໍ້ໂກງ ແລະ ການສໍ້ລາດບັງຫຼວງຂອງປະເທດຕົນ (ລວມທັງການໃຫ້ ແລະ ຮັບສິນບົນ) ເຊິ່ງໄດ້ລະບຸໄວ້ໃນ ເອກະສານເຊີນປະມູນ[26]. ທະນາຄານໂລກ ຈະຮັບຮອງເອົາການນຳໃຊ້ ວິທີການດຳເນີນການດັ່ງກ່າວ ຕາມການສະເໜີຂອງປະເທດ ຜູ້ກູ້ຢືມ ເຊິ່ງເປັນທີ່ເພິ່ງພໍໃຈຂອງທະນາຄານໂລກ.

## 1.18 ແຜນຈັດຊື້-ຈັດຈ້າງ

ການສ້າງແຜນຈັດຊື້-ຈັດຈ້າງຂອງໂຄງການທີ່ໃກ້ຄຽງກັບຕົວຈິງ[27] ແມ່ນສິ່ງສຳຄັນຕັດສິນຜົນສຳເລັດໃນ ການຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດໂຄງການ. ຜູ້ກູ້ຢືມ ຕ້ອງສ້າງແຜນຈັດຊື້-ຈັດຈ້າງເບື້ອງຕົ້ນ ແຕ່ຕ້ອງກວມເອົາຂອບເຂດຂອງໂຄງການທັງໝົດ ເຊິ່ງເປັນສ່ວນໜຶ່ງ ຂອງການກະກຽມໂຄງການ. ຜູ້ກູ້ຢືມຕ້ອງສ້າງແຜນຈັດຊື້-ຈັດຈ້າງລະອຽດ ແລະ ກວມລວມ, ຢ່າງໜ້ອຍສຸດ, ໂດຍສັງລວມເອົາ ທຸກໆສັນຍາ ທີ່ຈະປະຕິບັດ ແລະ ເກີດຂຶ້ນໃນໄລຍະເວລາ 18 (ສິບແປດ) ເດືອນທຳອິດ ຂອງການຈັດ ຕັ້ງປະຕິບັດໂຄງການ. ແຜນດັ່ງກ່າວນີ້ ຢ່າງຊ້າສຸດ ກໍຕ້ອງສຳເລັດ ແລະ ປະກອບເຂົ້າໃນສັນຍາກັບທະນາຄານໂລກ ໃນເວລາເຈລະຈາສັນຍາກູ້ຢືມ. ຈາກນັ້ນ, ຜູ້ກູ້ຢືມ ຕ້ອງປັບປຸງ (ຄວາມຄືບໜ້າ) ແຜນຈັດຊື້-ຈັດຈ້າງ ຢ່າງໜ້ອຍ ເປັນແຕ່ລະປີ ຕະຫຼອດອາຍຸການຂອງໂຄງການ ໂດຍສັງລວມເອົາສັນຍາທີ່ໄດ້ມອບໃຫ້ແກ່ ຜູ້ຊະນະການປະມູນ ກ່ອນໜ້ານີ້ແລ້ວ ແລະ ສັນຍາທີ່ຈະຈັດຊື້-ຈັດຈ້າງ ໃນໄລຍະ 12 (ສິບສອງ) ເດືອນຕໍ່ໜ້າ. ແຜນຈັດຊື້-ຈັດຈ້າງທັງໝົດ ແລະ ສະບັບທີ່ຜ່ານການປັບປຸງ (ຄວາມຄືບໜ້າ) ຫຼື ດັດແກ້ ຕ້ອງໄດ້ຜ່ານການກວດກາ[28] ແລະ ຮັບຮອງຈາກທະນາຄານໂລກກ່ອນການຈັດຕັ້ງປະຕິບັດ. ຫຼັງການເຈລະຈາສັນຍາກູ້ຢືມແລ້ວ,

---

26 ຕົວຢ່າງ ກ່ຽວກັບການຮັບປະກັນອາດຈະກ່າວໄວ້ດັ່ງນີ້: "ພວກຂ້າພະເຈົ້າຮັບປະກັນວ່າ ໃນການແຂ່ງຂັນປະມູນ (ແລະ ຖ້າສັນຍາຖືກມອບໃຫ້ພວກຂ້າພະເຈົ້າປະຕິບັດ) ສັນຍາດັ່ງກ່າວ, ພວກຂ້າພະເຈົ້າ ຈະປະຕິບັດຕາມກົດໝາຍວ່າດ້ວຍ ການຕ້ານການສໍ້ໂກງ ແລະ ການສໍ້ລາດບັງຫຼວງຕ່າງໆ ທີ່ມີຜົນບັງຄັບໃຊ້ຂອງປະເທດຂອງ [ຜູ້ຈັດຊື້] [ເຈົ້າຂອງໂຄງການ] ຢ່າງເຄັ່ງຄັດ ເຊິ່ງ [ຜູ້ຈັດຊື້] [ເຈົ້າຂອງໂຄງການ] ໄດ້ລະບຸບັນດາກົດໝາຍດັ່ງກ່າວ ໄວ້ໃນເອກະສານເຊີນປະມູນຂອງສັນຍາສະບັບນີ້".

27 ແຜນຈັດຊື້-ຈັດຈ້າງ ລວມທັງສະບັບຜ່ານການປັບປຸງ (ຄວາມຄືບໜ້າ) ຢ່າງໜ້ອຍ ຕ້ອງປະກອບດ້ວຍ: (1) ລາຍການສິນຄ້າ, ໜ້າວຽກຮັບເໝົາກໍ່ສ້າງ ແລະ ໜ້າວຽກການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ໂດຍຫຍໍ້ ທີ່ຈະປະຕິບັດ ແລະ ເກີດຂຶ້ນໃນໄລຍະເວລາໃດໜຶ່ງທີ່ໄດ້ກຳນົດໄວ້. ( 2) ຮູບການປະມູນທີ່ສະເໜີ ຕາມທີ່ສັນຍາກູ້ຢືມອະນຸຍາດໃຫ້. (3) ຂໍ້ກຳນົດ ການໃຫ້ສິດທິພິເສດພາຍໃນປະເທດ ຕາມເນື້ອໃນ ວັກ 2.55. (4) ຮູບການທົບທວນກ່ອນ ແລະ ກວດກາຕາມຫລັງຂອງທະນາຄານໂລກ ແລະ ວົງເງິນ. (5) ກຳນົດເວລາ ສຳລັບກິດຈະກຳການຈັດຊື້-ຈັດຈ້າງສຳຄັນ. ສຳລັບສັນຍາທີ່ມີມູນຄ່າໜ້ອຍຫຼາຍໆສັນຍາ ແລະ ສັນຍາຄ້າຍຄືກັນ ອາດຈະລວມເຂົ້າກັນ. ສຳລັບໂຄງການ ຫຼື ອົງປະກອບຂອງໂຄງການ ເຊິ່ງມີລັກສະນະຕ້ອງການການຂັບເຄື່ອນເຊັ່ນວ່າ: ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ *(CDD)*, ການລວມກຸ່ມຂະແໜງການ *(Sector Wide Approaches-SWAps)* ແລະ ອື່ນໆ ເຊິ່ງບໍ່ສາມາດກຳນົດສັນຍາສະເພາະ ແລະ ເວລາລ່ວງໜ້າໄດ້ນັ້ນ ຫາກຕ້ອງການນຳໃຊ້ຮ່າງແຜນຈັດຊື້-ຈັດຈ້າງ ທີ່ເໝາະສົມນັ້ນ ຈະຕ້ອງໄດ້ຮັບການຕົກລົງເຫັນດີກັບທະນາຄານໂລກ ໃນການຕິດຕາມ ແລະ ຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງເສັຍກ່ອນ. ໃນກໍລະນີ ທີ່ໂຄງການ ໄດ້ລວມເອົາການຈັດຈ້າງ ທີ່ປຶກສາ, ຕ້ອງລວມເອົາຮູບການຄັດເລືອກທີ່ປຶກສາ ຕາມຄູ່ມືແນະນຳ ການຄັດເລືອກ ແລະ ການວ່າຈ້າງທີ່ປຶກສາ ໂດຍນຳໃຊ້ທຶນກູ້ຢືມຈາກທະນາຄານສາກົນ ເພື່ອການຟື້ນຟູຄືນໃໝ່ ແລະ ການພັດທະນາ *(IBRD)* ແລະ ທຶນກູ້ຢືມເງື່ອນໄຂຜ່ອນຜັນ (ສິນເຊື່ອ) ແລະ ທຶນຊ່ວຍເຫຼືອລ້າ ຈາກສະມາຄົມພັດທະນາສາກົນ *(IDA)* ສຳລັບຜູ້ກູ້ຢືມທຶນຈາກທະນາຄານໂລກ ເຂົ້າໃນແຜນຈັດຊື້-ຈັດຈ້າງນຳອີກ.

28 ໃຫ້ເບິ່ງ ເອກະສານຊ້ອນທ້າຍ (1).

ທະນາຄານໂລກ ຕ້ອງກະກຽມນຳເອົາ ແຜນຈັດຊື້-ຈັດຈ້າງ ເບື້ອງຕົ້ນ ທີ່ໄດ້ຕົກລົງເຫັນດີນຳກັນ ແລະ ສະບັບທີ່ຜ່ານການປັບປຸງ (ຄວາມຄືບໜ້າ) ຄັ້ງຕໍ່ໆມາ ພາຍຫຼັງທີ່ທະນາຄານໂລກໃຫ້ການຮັບຮອງເອົາແລ້ວນັ້ນ ລົງຂ່າວຕາມ ເວັບໄຊ ຂອງຕົນ (ທີ່ຄົນພາຍນອກສາມາດເຂົ້າເບິ່ງໄດ້).

# ໝວດທີ 2. ການປະມູນເປີດກວ້າງສາກົນ

## ກ. ຫຼັກການລວມ

### 2.1 ການເປີດຫົວເລື່ອງ

ຈຸດປະສົງຂອງການປະມູນເປີດກ້ວາງສາກົນ *(International Competitive Bidding—ICB)*, ທີ່ໄດ້ອະທິບາຍຢູ່ໃນຄູ່ມືແນະນຳສະບັບນີ້ ແມ່ນເອື້ອອຳນວຍໃຫ້ຜູ້ແຂ່ງຂັນປະມູນ ທີ່ມີຄຸນລັກສະນະເໝາະ ສົມ[29] ໄດ້ຮັບແຈ້ງການປະມູນ ທີ່ຄົບຖ້ວນ ແລະ ທັນຕາມກຳນົດເວລາ ຕາມຄວາມຕ້ອງການ ຂອງ ຜູ້ກູ້ຢືມ ທັງໃຫ້ຜູ້ແຂ່ງຂັນປະມູນ ມີໂອກາດທີ່ເທົ່າທຽມກັນ ເພື່ອຍື່ນປະມູນ ການຈັດຊື້ສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ).

### 2.2 ປະເພດ ແລະ ຂະໜາດຂອງສັນຍາ

ຢູ່ໃນເອກະສານເຊີນປະມູນ ຕ້ອງໄດ້ອະທິບາຍຈະແຈ້ງ ກ່ຽວກັບປະເພດສັນຍາທີ່ຈະນຳໃຊ້, ຂໍ້ກຳນົດ ແລະ ເງື່ອນໄຂ ທີ່ສະເໜີປະກອບເຂົ້າໃນສັນຍານັ້ນໆ ຕາມຄວາມເໝາະສົມ. ປະເພດສັນຍາທີ່ນຳໃຊ້ ໂດຍລວມແລ້ວ ໄດ້ກຳນົດການຊຳລະ ບົນພື້ນຖານ ແບບມອບເໝົາ, ຄິດໄລ່ຕາມລາຄາຫົວໜ່ວຍ, ຄິດໄລ່ ຕາມຄ່າໃຊ້ຈ່າຍທົດແທນຄືນ ລວມທັງເງິນຄ່າຕົວ (ຄ່າແຮງງານ) *(Fee)* ຫຼື ແບບປະສົມປະສານກັນ. ສຳລັບສັນຍາປະເພດຄິດໄລ່ຕາມຄ່າໃຊ້ຈ່າຍທົດແທນຄືນນັ້ນ, ທະນາຄານໂລກ ໄດ້ຮັບຮອງເອົາ ເປັນກໍລະນີພິເສດ ເຊັ່ນວ່າ: ມີສະພາບຄວາມສ່ຽງສູງ ຫຼື ບໍ່ສາມາດກຳນົດມູນຄ່າຊັດເຈນລ່ວງໜ້າໄດ້. ສັນຍາປະເພດນີ້ ຕ້ອງບັນຈຸເອົາ ສິ່ງຈູງໃຈ ທີ່ເໝາະສົມ ເພື່ອສາມາດຈຳກັດມູນຄ່າຂອງສັນຍາໄດ້.

2.3 ຂະໜາດ ແລະ ຂອບເຂດຂອງແຕ່ລະສັນຍາ ຈະຂຶ້ນກັບລະດັບຄວາມສຳຄັນ, ຈຸດພິເສດ ແລະ ທີ່ຕັ້ງຂອງໂຄງການ. ສຳລັບໂຄງການ ທີ່ຕ້ອງການ ການສະໜອງສິນຄ້າ ແລະ ການຮັບເໝົາກໍ່ສ້າງ ທີ່ມີຄວາມຫຼາກຫຼາຍແຕກຕ່າງກັນນັ້ນ, ໂດຍທົ່ວໄປ ແມ່ນໄດ້ແຍກ ແລະ ມອບເປັນແຕ່ລະສັນຍາຍ່ອຍ ສຳລັບການສະໜອງ ແລະ/ຫຼື ການຕິດຕັ້ງລາຍການອຸປະກອນແຕກຕ່າງກັນ ແລະ ໂຮງຊ່າງ[30] ແລະ ການຮັບເໝົາກໍ່ສ້າງ.

2.4 ໃນບາງກໍລະນີຂອງສັນຍາສະເພາະເຊັ່ນ: ໂຮງໄຟຟ້າ ແລະ ໂຮງຊ່າງອຸດສາຫະກຳຂະໜາດໃຫຍ່ແລະ ປະກອບສິ່ງອຳນວຍຄວາມສະດວກຕ່າງໆ, ທະນາຄານໂລກ ອາດຈະຮັບຮອງ ຫຼື ຕ້ອງການປະເພດສັນຍາ ແບບເບດເສດ *(Single responsibility contract)* ເຊິ່ງໃນນັ້ນ ພັດປະກອບມີຫຼາຍໆ ລາຍການຍ່ອຍ ແລະ ວຽກກໍ່ສ້າງ ລວມເຂົ້າເປັນສັນຍາພູດດຽວກັນ[31]. ສັນຍາແບບຜູ້ດຽວຮັບຜິດຊອບລວມ ອາດຈະເປັນສັນຍາ ແບບມອບຂໍກຸນແຈ ເຊິ່ງນິຕິ ບຸກຄົນນັ້ນຮັບຜິດຊອບ ສະໜອງໂຮງຊ່າງອຸດສະຫະກຳ ຫຼື ປະກອບສິ່ງອຳນວຍຄວາມສະດວກຄົບຊຸດ ແລະ ພ້ອມທີ່ຈະດຳເນີນ

---

29 ໃຫ້ເບິ່ງ ວັກ 1.8, 1.9 ແລະ 1.10.

30 ຕາມເປົ້າໝາຍຂອງຄູ່ມືແນະນຳສະບັບນີ້ "ໂຮງຊ່າງ" ໝາຍເຖິງ ສະຖານທີ່ ຄືກັນກັບສະຖານທີ່ຜະລິດຍ່ອຍ.

31 ຕາມແບບເບດເສດ ໄດ້ກວມເອົາໂຮງຊ່າງຕ່າງໆ, ອຸປະກອນ, ເຄື່ອງກົນຈັກ, ວັດສະດຸ ຫຼື ສ່ວນໃດນຶ່ງ , ລວມທັງ ກິດຈະກຳການຈັດຊື້-ຈັດຈ້າງທັງໝົດ, ການສະໜອງ ແລະ ການປະກອບ ແລະ/ຫຼື ການຕິດຕັ້ງອຸປະກອນ, ການກໍ່ສ້າງສິ່ງອຳນວຍຄວາມສະດວກຄົບຊຸດ ຫຼື ລົງເລິກວຽກສະເພາະ ປະກອບເຂົ້າໃນສິ່ງອຳນວຍຄວາມສະດວກນັ້ນ.ສັນຍາປະເພດນີ້ ອາດຖືເປັນສັນຍາການສະໜອງ ແລະ ການຕິດຕັ້ງ ເຊິ່ງ ຜູ້ກູ້ຢືມ ເປັນຜູ້ກະກຽມ ແລະ ຍັງມີຄວາມຮັບຜິດຊອບ ວຽກງານວິສາວະກຳ ແລະ ການອອກແບບເບື້ອງຕົ້ນ ແລະ ລະອຽດ ຫຼື ອີກດ້ານນຶ່ງ ອາດຖືເປັນສັນຍາອອກແບບ, ສະໜອງ ແລະ ຕິດຕັ້ງ ເຊິ່ງຜູ້ຮັບເໝົາ ເປັນຜູ້ກະກຽມ ແລະ ຍັງຮັບຜິດຊອບທາງດ້ານວິສາວະກຳ ແລະ ການອອກແບບນຳອີກ.

ງານໄດ້(ແບບ “ມອບຂໍກຸນແຈ”)[32]. ການມອບສັນຍາ ທີ່ກ່ຽວຂ້ອງກັບການກໍ່ສ້າງ, ການຕິດຕັ້ງ ຫຼື ປະກອບ ແລະ ການບໍລິການທີ່ຕິດພັນ ໃຫ້ຜູ້ຮັບເໝົານັ້ນ ອາດພາຍໃຕ້ ປະເພດສັນຍາຄຸ້ມຄອງ *(Management contract)*[33].

2.5 ສຳລັບໂຄງການ (ທີ່ປະກອບມີຫຼາຍໂຄງການຍ່ອຍ) ທີ່ມີລາຍການອຸປະກອນ ຫຼື ການຕິດຕັ້ງ ທີ່ຄ້າຍຄືກັນ, ແຕ່ລາຍການອຸປະກອນ ຫຼື ວຽກຮັບເໝົາພັດແຍກກັນ ກໍອາດຈະເຊີນຮ່ວມປະມູນ ຕາມຫຼັກການສັນຍາແຍກ ຮຽກວ່າສັນຍາດ່ຽວ/ເປັນພູດ *(Slice - Individual contract)* ຫຼື ກຸ່ມສັນຍາທີ່ ຄ້າຍຄືກັນ ຮຽກວ່າ ສັນຍາລວມ/ກຸ່ມພູດ *(Package Group of similar contracts)* ເຊິ່ງຈະດຶງດູດເອົາ ຄວາມສົນໃຈ ຈາກທັງບໍລິສັດຂະໜາດນ້ອຍ ແລະ ຂະໜາດໃຫຍ່ໄດ້ ແລະ ສ້າງເງື່ອນໄຂໃຫ້ເຂົາເຈົ້າ ມີສິດເລືອກ ເພື່ອຍື່ນຊອງປະມູນ ອາດຈະເປັນສັນຍາດ່ຽວ (ເປັນພູດ) ຫຼື ກຸ່ມສັນຍາທີ່ຄ້າຍຄືກັນ ເປັນ ສັນຍາລວມ (ກຸ່ມພູດ). ສຳລັບການກຳນົດມື້ປິດຮັບ ການຍື່ນຊອງປະມູນ ທຸກປະເພດ ບໍ່ວ່າເປັນພູດ ຫຼື ກຸ່ມພູດ ຕ້ອງຖືເອົາມື້ດຽວກັນ ລວມທັງມື້ເປີດຊອງປະມູນ ແລະ ຕໍ່ມາກໍດຳເນີນການປະເມີນຜົນໃນເວລາດຽວກັນ ເພື່ອກຳນົດໄດ້ວ່າ ລາຄາສະເໜີໃນການປະມູນ ທັງພູດ ແລະ ກຸ່ມພູດ ເປັນລາຄາປະເມີນຕ່ຳສຸດ ຂອງຜູ້ກູ້ຢືມ[34].

## 2.6 ການປະມູນແບບສອງຂັ້ນຕອນ *(Two-Stage Bidding)*

ໃນກໍລະນີຂອງສັນຍາ ທີ່ມີລັກສະນະສະເພາະລຸ່ມນີ້:

(1) ສັນຍາແບບເບດເສດ ເພື່ອປະກອບສິ່ງອຳນວຍຄວາມສະດວກຄົບຊຸດຂະໜາດໃຫຍ່ (ລວມທັງ ແບບມອບຂໍກຸນແຈ) ສຳລັບການອອກແບບ, ສະໜອງ ແລະ ຕິດຕັ້ງ ຫຼື ສັນຍາແບບເບດເສດ ສຳລັບການສະໜອງ ແລະ ການຕິດຕັ້ງ ສິ່ງອຳນວຍຄວາມສະດວກ ຫຼື ໂຮງຊ່າງ.

(2) ສັນຍາວຽກກໍ່ສ້າງ ທີ່ມີລັກສະນະຄົບຊຸດ ແລະ ພິເສດສະເພາະ.

(3) ສັນຍາວຽກຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີການສື່ສານ ແບບຄົບຊຸດ ຕິດພັນກັບນຳໃຊ້ເຕັກໂນໂລຊີ ທີ່ກ້າວໜ້າ ຢ່າງໄວວາ.

ຕໍ່ກັບກໍລະນີທີ່ກ່າວມາຂ້າງເທິງນີ້, ໃນພາກປະຕິບັດ ກໍອາດຈະບໍ່ຈຳເປັນຕ້ອງກະກຽມມາດຕະຖານເຕັກນິກ ຄົບຖ້ວນສົມບູນລ່ວງໜ້າ. ອີງຕາມຈຸດພິເສດທີ່ມີລັກສະນະຄົບຊຸດຂອງສັນຍາປະເພດນີ້ ແລະ ເພື່ອຫຼີກລ້ຽງ ການປ່ຽນແປງມາດຕະຖານເຕັກນິກຂອງຜູ້ກູ້ຢືມ, ທະນາຄານໂລກ ຈຶ່ງຮຽກຮ້ອງໃຫ້ນຳໃຊ້ ຮູບການ ການປະມູນແບບສອງຂັ້ນຕອນ ຄື: ໃນຂັ້ນຕອນທຳອິດ ສະເໜີໃຫ້ຍື່ນ ຊອງປະມູນສະເໜີດ້ານເຕັກນິກ ທີ່ຍັງບໍ່ທັນໃສ່ລາຄາ ບົນພື້ນຖານ ການອອກແບບເບື້ອງຕົ້ນ ຕາມແນວຄວາມຄິດ ຫຼື ຕາມມາດຕະຖານ ການດຳເນີນງານທີ່ຕ້ອງການ ຕະຫຼອດຮອດ ການໃຫ້ຄວາມກະຈ່າງແຈ້ງດ້ານວິຊາການດ້ານການຄ້າ (ທຸລະກິດ) ແລະ ການດັດປັບ. ສ່ວນຂັ້ນຕອນທີສອງ ແມ່ນປັບປຸງ

---

32 ສັນຍາ ແບບມອບຂໍກຸນແຈ ເປັນສັນຍາທີ່ຜູ້ດຽວຮັບຜິດຊອບລວມ ບົນພື້ນຖານລາຄາແບບ “ມອບເໝົາ” ເຊິ່ງຊຳລະຕາມກຳນົດເວລາຂອງໜ້າວຽກທີ່ສຳເລັດຕາມສັນຍາ. ຕາມທຳມະດາ, ສັນຍາປະເພດນີ້ ນຳໃຊ້ກັບການອອກແບບເທົ່ານັ້ນ ເຊັ່ນວ່າ ການປ່ຽນແປງຕົ້ນຕໍຂອງໂຄງການວິສາວະກຳທີ່ເຈົ້າຂອງໂຄງການ ສະໜອງໃຫ້.

33 ໃນການກໍ່ສ້າງ, ໂດຍປົກກະຕິແລ້ວ, ຜູ້ຮັບເໝົາດ້ານການຄຸ້ມຄອງ ບໍ່ໄດ້ປະຕິບັດວຽກງານໂດຍກົງ ແຕ່ເຮັດສັນຍາ ແລະ ຄຸ້ມຄອງສັນຍາກັບ ຜູ້ຮັບເໝົາອື່ນ ແຕ່ຕົນເອງ ພັດມີຄວາມຮັບຜິດຊອບຢ່າງເຕັມສວ່ນ ແລະ ຄວາມສ່ຽງດ້ານລາຄາ, ຄຸນນະພາບ ແລະ ກຳນົດເວລາ. ໃນທາງກົງກັນຂ້າມຜູ້ຈັດການ ການກໍ່ສ້າງ ພັດເປັນ ທີ່ປຶກສາ ຫຼື ຕົວແທນ ຂອງຜູ້ກູ້ຢືມ ທີ່ບໍ່ຮັບຜິດຊອບຕໍ່ຄວາມສ່ຽງ. ໃນກໍລະນີ ທີ່ທະນາຄານໂລກສະໜອງທຶນໃຫ້., ຜູ້ຈັດການການກໍ່ສ້າງ ຕ້ອງໄດ້ຜ່ານການຄັດເລືອກ ຕາມເນື້ອໃນ ວັກ 3.11 ຂອງຄູ່ມືແນະນຳ ການຄັດເລືອກທີ່ປຶກສາ.

34 ໃຫ້ເບິ່ງ ວັກ 2.49 ຫາ 2.54 ກ່ຽວກັບ ຫຼັກການປະເມີນຜົນການປະມູນ.

ເອກະສານເຊີນປະມູນ [35] ໃຫ້ສຳເລັດສົມບູນ ກ່ອນການສະເໜີໃຫ້ຍື່ນຊອງປະມູນ ດ້ານເຕັກນິກ ສະບັບປັບປຸງສຸດທ້າຍ ໂດຍໃສ່ລາຄາສະເໜີປະມູນເຂົ້ານຳ.

## 2.7 ການແຈ້ງການປະມູນ ແລະ ການລົງຂ່າວໂຄສະນາ

ການແຈ້ງການປະມູນ ເພື່ອໃຫ້ໂອກາດຍື່ນປະມູນທັນຕາມກຳນົດເວລາ ເປັນສິ່ງຈຳເປັນ ສຳລັບການປະມູນ ທີ່ມີລັກສະນະແຂ່ງຂັນ. ຜູ້ກູ້ຢືມ ຕ້ອງກະກຽມເນື້ອໃນ ແຈ້ງການປະມູນຈັດຊື້-ຈັດຈ້າງທົ່ວໄປ *(General Procurement Notice)* ໃຫ້ທະນາຄານໂລກ. ຈາກນັ້ນ, ທະນາຄານໂລກ ກໍກະກຽມລົງຂ່າວໂຄສະນາ ຜ່ານ ເວັບໄຊ *(Website)* ທຸລະກິດພັດທະນາຂອງອົງການສະຫະປະຊາຊາດ *(United Nations Development Business—UNDB online)* ແລະ ເວັບໄຊ ຂອງທະນາຄານໂລກ[36]. ສຳລັບເນື້ອໃນແຈ້ງການປະມູນຈັດຊື້-ຈັດຈ້າງທົ່ວໄປ ຕ້ອງປະກອບມີຂໍ້ມູນຂອງຜູ້ກູ້ຢືມ (ຫຼື ຜູ້ທີ່ຈະຂໍການກູ້ຢືມ), ມູນຄ່າ ແລະ ເປົ້າໝາຍນຳໃຊ້ຂອງເງິນກູ້ຢືມ, ຂອບເຂດຂອງການຈັດຊື້-ຈັດຈ້າງ ທີ່ສະແດງໃຫ້ເຫັນ ແຜນຈັດຊື້-ຈັດຈ້າງ ແລະ ຊື່, ໂທລະສັບ (ຫຼື ໂທລະສານ) ແລະ ທີ່ຢູ່ຂອງອົງກອນຮັບຜິດຊອບ ການຈັດຊື້-
ຈັດຈ້າງຂອງຜູ້ກູ້ຢືມ ແລະ ທີ່ຢູ່ທາງເອເລັກໂຕຣນິກ ທີ່ນຳໃຊ້ຢ່າງກ້ວາງ ເຊິ່ງທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າຫາໄດ້ ໂດຍບໍ່ເສັຍຄ່າ, ຫຼື ເວັບໄຊ ທີ່ຈະລົງຂ່າວແຈ້ງການປະມູນຈັດຊື້-ຈັດຈ້າງສະເພາະ *(Specific Procurement Notice)*. ຖ້າຫາກຮູ້ໄດ້ ກຳນົດມື້ ທີ່ພ້ອມຈະອອກ ເອກະສານການຄັດເລືອກຄຸນວຸດທິກ່ອນການປະມູນ *(Prequalification)* ຫຼື ເອກະສານເຊີນປະມູນ ກໍຄວນລະບຸໄວ້ລ່ວງໜ້າ. ເພື່ອໃນກໍລະນີທີ່ອາດຈະເກີດຂຶ້ນເຊັ່ນ: ເອກະສານການຄັດເລືອກ ຄຸນວຸດທິກ່ອນການປະມູນ ຫຼື ເອກະສານເຊີນປະມູນທີ່ກ່ຽວຂ້ອງ ບໍ່ສາມາດອອກແຈ້ງການສູ່ສາທາລະນະ ກ່ອນມື້ທີ່ຈະລົງຂ່າວໂຄສະນາ
ແຈ້ງການປະມູນຈັດຊື້-ຈັດຈ້າງທົ່ວໄປໄດ້.

2.8 ເພື່ອກໍລະນີທີ່ອາດຈະເກີດຂຶ້ນເຊັ່ນ, ການເຊີນເຂົ້າຮ່ວມຄັດເລືອກ ຄຸນວຸດທິກ່ອນການປະມູນ *(Prequalification)* ຫຼື ການເຊີນເຂົ້າຮ່ວມປະມູນຕ້ອງລົງຂ່າວໂຄສະນາແຈ້ງການປະມູນຈັດຊື້-ຈັດຈ້າງ ສະເພາະ ຜ່ານໜັງສືພິມ ທີ່ແຈກຢາຍໃນຂອບເຂດທົ່ວປະເທດຂອງຜູ້ກູ້ຢືມ ໜຶ່ງປະເພດ ເປັນຢ່າງໜ້ອຍ ຫຼື ຈົດໝາຍເຫດທາງລັດຖະການ ຫຼື ຜ່ານທາງເວັບໄຊ ຫຼື ເອເລັກໂຕຣນິກ ທີ່ນຳໃຊ້ ຢ່າງກວ້າງຂວາງ ເຊິ່ງທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າຫາໄດ້ ໂດຍບໍ່ເສັຍຄ່າ ທີ່ເປັນພາສາອັງກິດ, ຝຣັ່ງ ຫຼື ແອັສປາຍ ຫຼືແລ້ວແຕ່ ຜູ້ກູ້ຢືມ ເລືອກເອົາ ຫຼື ເປັນພາສາປະຈຳຊາດ ຕາມເນື້ອໃນ ວັກ 2.15. ການເຊີນເຂົ້າຮ່ວມປະມູນ ດັ່ງກ່າວນີ້ ຍັງຕ້ອງລົງຂ່າວໂຄສະນາຜ່ານ ເວັບໄຊ *(UNDB online)* ນຳອີກ. ການແຈ້ງຂ່າວການປະມູນນັ້ນ ຕ້ອງເອື້ອອຳນວຍໃຫ້ຜູ້ແຂ່ງຂັນປະມູນ ມີກຳນົດໄລຍະເວລາພຽງພໍ ເພື່ອສາມາດເກັບກຳ ເອກະສານການຄັດເລືອກຄຸນວຸດທິກ່ອນການປະມູນ ຫຼື ເອກະສານເຊີນປະມູນ ເພື່ອກະກຽມ ແລະ ສາມາດຍື່ນຊອງປະມູນໄດ້[37]. ອີງຕາມເນື້ອໃນທີ່ຜູ້ກູ້ຢືມໄດ້ກະກຽມ ແລະ ໄດ້ສົ່ງໃຫ້ຕົນນັ້ນ, ທະນາຄານ ໂລກ ຈະກະກຽມລົງຂ່າວໂຄສະນາແຈ້ງການ ປະມູນຈັດຊື້-ຈັດຈ້າງສະເພາະທັງໝົດ ໂດຍຜ່ານ ເວັບໄຊຂອງຕົນ

---

35 ໃນການປັບປຸງເອກະສານປະມູນ ຢູ່ຂັ້ນຕອນທີສອງນັ້ນ, ສຳລັບຂໍ້ມູນ ໃນຊອງປະມູນເຕັກນິກຂອງຜູ້ປະມູນສະເໜີມານັ້ນ, ຜູ້ກູ້ຢືມ ຕ້ອງຮັກສາເປັນຄວາມລັບ ໂດຍສອດຄ່ອງກັບ ຫຼັກການຄວາມໂປ່ງໃສ ແລະ ລິຂະສິດຊັບສິນທາງປັນຍາ.

36 ທຸລະກິດພັດທະນາຂອງອົງການສະຫະປະຊາຊາດ *(UNDB online)* ແມ່ນ ເວັບໄຊ ໂຄສະນາຂອງອົງການ ສປຊ. ຂໍ້ມູນເພື່ອຈ່ອງພົວພັນໄດ້ຕາມທີ່ຢູ່ລຸ່ມນີ້: *Development Business, United Nations, GCPO Box 5850, New York, NY 101635850, USA* (website: www.devbusiness.com; email: dbsubscribe@un.org) ແລະ.ເວັບໄຊ ຂອງທະນາຄານໂລກແມ່ນ: www.worldbank.org

37 ໃຫ້ເບິ່ງ ວັກ 2.44

## 2.9 ການຄັດເລືອກຄຸນວຸດທິກ່ອນຂອງຜູ້ແຂ່ງຂັນປະມູນ *(Prequalification of Bidders)*

ໂດຍປົກກະຕິແລ້ວ, ການຄັດເລືອກຄຸນວຸດທິກ່ອນການປະມູນ ມີຄວາມຈຳເປັນ ສຳລັບວຽກຮັບເໝົາ ຂະໜາດໃຫ່ຍ ແລະ ຄົບຊຸດ, ຫຼື ກໍລະນີທີ່ຕ້ອງໃຊ້ຈ່າຍສູງໃນການກະກຽມເອກະສານປະມູນລະອຽດ ເຊິ່ງບໍ່ເປັນການຊຸກຍູ້ໃຫ້ມີການແຂ່ງຂັນ ເຊັ່ນວ່າ: ການສະໜອງອຸປະກອນທີ່ອອກແບບຕາມຄວາມຕ້ອງການ, ໂຮງຊ່າງອຸດສາຫະກຳ, ການບໍລິການລົງເລິກສະເພາະດ້ານ, ບາງປະເພດການບໍລິການຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີຄົບຊຸດ ແລະ ສັນຍາແບບເບດເສດ (ລວມທັງແບບມອບຂໍກຸນແຈ), ສັນຍາທັງອອກແບບ ແລະ ທັງກໍ່ສ້າງ ໄປພ້ອມໆກັນ, ຫຼື ປະເພດສັນຍາຄຸ້ມຄອງ ທັງຮັບປະກັນ ເຊີນແຕ່ບໍລິສັດ ທີ່ມີຄວາມສາມາດ ແລະ ຊັບພະຍາກອນພຽງພໍເທົ່ານັ້ນ ເຂົ້າຮ່ວມການປະມູນ. ການຄັດເລືອກຄຸນວຸດທິກ່ອນ ການປະມູນ ຕ້ອງອີງໃສ່ຄວາມສາມາດ ແລະຊັບພະຍາກອນຂອງຜູ້ແຂ່ງຂັນປະມູນ ທີ່ມີຄຸນລັກສະ ນະເໝາະສົມ ຢ່າງຂາດຕົວ ເພື່ອສາມາດປະຕິບັດສັນຍາສະເພາະໃຫ້ສຳເລັດ ເປັນທີ່ເພິ່ງພໍໃຈ ໂດຍຄຳນຶງເຖິງຈຸດປະສົງ ແລະ ປັດໃຈຕ່າງໆທີ່ສາມາດປະເມີນໄດ້ ເຊິ່ງປະກອບດ້ວຍ:

(1) ປະສົບການທົ່ວໄປ ແລະ ປະສົບການສະເພາະ ທີ່ກ່ຽວຂ້ອງ, ຜົນງານ ແລະ ຜົນສຳເລັດ ຂອງການປະຕິບັດສັນຍາໂຄງການທີ່ຄ້າຍຄືກັນ ໃນໄລຍະຜ່ານມາເປັນທີ່ເພິ່ງພໍໃຈ ແລະ ສຳເລັດ ຕາມໄລຍະ ເວລາທີ່ກຳນົດໄວ້.

(2) ຖານະດ້ານການເງິນ ແລະ ຕາມແຕ່ກໍລະນີ ທີ່ກ່ຽວຂ້ອງ.

(3) ຄວາມສາມາດຂອງການກໍ່ສ້າງ ແລະ/ຫຼື ໂຮງຊ່າງ ຮັບໃຊ້ການຜະລິດອື່ນໆ.

2.10 ການເຊີນເຂົ້າຮ່ວມເພື່ອຄັດເລືອກຄຸນວຸດທິກ່ອນການປະມູນ ສຳລັບສັນຍາດ່ຽວ (ສັນຍາສະເພາະ) ຫຼື ສັນຍາລວມ (ກຸ່ມສັນຍາທີ່ຄ້າຍຄືກັນ) ຕ້ອງຜ່ານການລົງຂ່າວໂຄສະນາ ແລະ ແຈ້ງການປະມູນ ເຊິ່ງໄດ້ອະທິບາຍ ຕາມເນື້ອໃນ ວັກ 2.7 ແລະ 2.8 ຂ້າງເທິງ. ຜູ້ກູ້ຢືມ ຕ້ອງໄດ້ສົ່ງ ຂອບເຂດຂອງສັນຍາ ແລະ ເງື່ອນໄຂດ້ານຄຸນວຸດທິທີ່ຕ້ອງການ ຢ່າງຈະແຈ້ງ ໃຫ້ບໍລິສັດທີ່ຕອບຮັບເຊີນເຂົ້າຮ່ວມການ ຄັດເລືອກ. ຜູ້ກູ້ຢືມ ຕ້ອງນຳໃຊ້ ເອກະສານຕົວແບບມາດ ຕະຖານການຄັດເລືອກຄຸນວຸດທິກ່ອນການ ປະມູນ (Standard Prequalification Document) ຂອງທະນາ ຄານໂລກ ໂດຍອາດຈະດັດແກ້ໜ້ອຍ ທີ່ສຸດເທົ່າທີ່ຈຳເປັນ ເຊິ່ງທະນາຄານໂລກຮັບຮອງເອົາໄດ້. ບໍລິສັດ ສະໝັກ ເຂົ້າຮ່ວມການຄັດເລືອກທັງໝົດເຫຼົ່ານີ້ ຫາກຜ່ານ ບັນທັດຖານທີ່ໄດ້ວາງໄວ້ ຈະໄດ້ອະນຸຍາດໃຫ້ເຂົ້າຮ່ວມ ການປະ ມູນ. ຜູ້ກູ້ຢືມຕ້ອງແຈ້ງຜົນການ ຄັດເລືອກ ຄຸນວຸດທິກ່ອນການປະມູນ ໃຫ້ທຸກໆບໍລິສັດຊາບ. ພາຍຫຼັງສຳເລັດ ການຄັດເລືອກຄຸນວຸດທິກ່ອນ ການປະມູນ ຕ້ອງກະກຽມເອກະສານເຊີນປະມູນ ເພື່ອພ້ອມທີ່ຈະສະໜອງ ໃຫ້ຜູ້ແຂ່ງຂັນປະມູນທີ່ຜ່ານ ການຄັດເລືອກຄຸນວຸດທິກ່ອນການປະມູນດັ່ງກ່າວ. ການຄັດເລືອກຄຸນ ວຸດທິກ່ອນການປະມູນ ສຳລັບສັນຍາລວມແລ້ວ ການມອບສັນຍາໃຫ້ ອາດຈະແມ່ນໃນເວລາດຽວກັນ ຫຼື ໃນໄລຍະເວລາທີ່ກຳນົດ, ຈຳກັດຈຳນວນ ຫຼື ມູນຄ່າສັນຍາລວມ ໃຫ້ຜູ້ປະມູນໃດໜຶ່ງ ບົນພື້ນຖານ ຄວາມສາມາດດ້ານວິຊາການ ແລະ ຊັບພະຍາກອນ ດ້ານການເງິນຂອງຜູ້ປະມູນເອງ ທີ່ສາມາດຕອບສະໜອງບັນທັດຖານດ້ານ ຄຸນວຸດທິ ສຳລັບສັນຍາລວມນັ້ນໄດ້. ຖ້າຫາກໄລຍະເວລາ ລະຫວ່າງການສະຫຼຸບບັນຊີລາຍຊື່ ບໍລິສັດ ທີ່ຜ່ານການຄັດເລືອກຄຸນວຸດທິກ່ອນການປະມູນຈາກຜູ້ກູ້ຢືມ ແລະ ການອອກບັດເຊີນເຂົ້າຮ່ວມປະມູນ ຫາກເກີນກວ່າ ສິບສອງ (12) ເດືອນ, ທະນາຄານໂລກອາດຈະແນະນຳໃຫ້ຈັດ ຂະບວນການຄັດເລືອກ ຄຸນວຸດທິກ່ອນການປະມູນຄືນໃໝ່ ໂດຍຜ່ານ ການລົງຂ່າວໂຄສະນາຄືນໃໝ່. ການກວດກາຂໍ້ມູນ ຂອງ ບໍລິສັດທີ່ຜ່ານການຄັດເລືອກຄຸນວຸດທິກ່ອນການປະມູນ ລວມທັງ ຂໍ້ຜູກພັນຂອງເຂົາເຈົ້າ ສາມາດດຳເນີນການໄດ້ ໃນເວລາທີ່ມອບສັນຍາ ຄຽງຄູ່ກັບການກວດກາ ຄວາມສາມາດດ້ານບຸກຄະລາກອນ ແລະ ອຸປະກອນຂອງເຂົາເຈົ້າ. ຜູ້ກູ້ຢືມ ສາມາດປະຕິເສດການມອບສັນຍາໃຫ້ຜູ້ປະມູນໄດ້ ພາຍຫຼັງ ພິຈາລະ ນາແລ້ວຫາກເຫັນວ່າ ຜູ້ຊະນະການປະມູນດັ່ງກ່າວນັ້ນ ບໍ່ສາມາດຕອບສະໜອງ ໄດ້ຕາມບັນທັດຖານ ຄວາມສາມາດດ້ານວິຊາການ ແລະ ຊັບພະຍາກອນດ້ານການເງິນ ເພື່ອປະຕິບັດສັນຍາໃຫ້ສຳເລັດຜົນໄດ້ ອີກຕໍ່ໄປ. ໃນກໍລະນີທີ່ບໍ່ມີຈັກບໍລິສັດເລີຍ ທີ່ຜ່ານການຄັດເລືອກຄຸນວຸດທິກ່ອນການປະມູນ ຫຼື ມີຈຳນວນໜ້ອຍ ເຊິ່ງເປັນເຫດໃຫ້ມີ ລັກສະນະຂາດການແຂ່ງຂັນ. ຜູ້ກູ້ຢືມ ອາດຈະອອກໜັງສືເຊີນ ເຂົ້າຮ່ວມ ການຄັດເລືອກຄຸນວຸດທິກ່ອນການປະມູນ ສະບັບປັບປຸງຄືນໃໝ່ ພາຍຫຼັງທີ່ທະນາຄານໂລກໄດ້ຮັບຮອງເອົາ.

## ຂ. ເອກະສານເຊີນປະມູນ

### 2.11 ຫຼັກການລວມ

ເອກະສານເຊີນປະມູນ *(Bidding documents)* ຕ້ອງປະກອບດ້ວຍຂໍ້ມູນທີ່ຈຳເປັນຕ່າງໆ ເພື່ອ ເອື້ອອຳນວຍໃຫ້ຜູ້ແຂ່ງຂັນປະມູນ ສາມາດກະກຽມເອກະສານຍື່ນປະມູນ ເພື່ອການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ)ຂອງຕົນ. ເຖິງແມ່ນວ່າ ລາຍລະອຽດ ແລະ ລະດັບຄວາມ ສະຫຼັບສັບຊ້ອນຂອງເອກະສານ ເຫຼົ່ານີ້ ອາດຈະປ່ຽນແປງໄປຕາມຂະໜາດ ແລະ ຈຸດພິເສດຂອງພູດສັນຍາ ແລະ ສັນຍາຂອງການປະມູນ ທີ່ວາງແຜນໄວ້ກໍຕາມ ແຕ່ໂດຍທົ່ວໄປຈະປະກອບດ້ວຍ: ໜັງສືເຊີນເຂົ້າຮ່ວມປະມູນ; ຄຳແນະນຳສຳລັບຜູ້ປະມູນ ແລະ ຂໍ້ມູນສຳລັບການປະມູນ; ແບບຟອມ ຫຼື ໜັງສືປະມູນ; ແບບຟອມສັນຍາ; ເງື່ອນໄຂຂອງສັນຍາ ລວມເອົາທັງ ເງື່ອນໄຂທົ່ວໄປ ແລະ ເງື່ອນໄຂ ສະເພາະ; ມາດຕະຖານເຕັກນິກ ແລະ ແຜ່ນແຕ້ມ (ແຜນຜັງກໍ່ສ້າງ); ຂໍ້ມູນດ້ານເຕັກນິກກ່ຽວຂ້ອງ (ລວມທັງສະພາບທຳມະຊາດ ດ້ານທໍລະນີສາດ ແລະ ສິ່ງແວດລ້ອມ); ບັນຊີລາຍຊື່ສິນຄ້າ ຫຼື ລາຍການ ບໍລິມາດວຽກ; ກຳນົດເວລາສົ່ງມອບ ຫຼື ສຳເລັດວຽກ; ເອກະສານຊ້ອນທ້າຍທີ່ຈຳເປັນເຊັ່ນ: ຮ່າງໜັງສື ຄ້ຳປະກັນຕ່າງໆ. ຫຼັກການພື້ນຖານຂອງການປະເມີນຜົນ ການປະມູນ ແລະ ການຄັດເລືອກເອົາລາຄາ ປະເມີນຕ່ຳສຸດ ຕ້ອງລະບຸໄວ້ຢ່າງຈະແຈ້ງ ຢູ່ໃນໝວດ ຄຳແນະນຳສຳລັບຜູ້ປະມູນ ແລະ/ຫຼື ມາດຕະຖານ ເຕັກນິກ. ຖ້າຫາກໄດ້ເກັບ ຄ່າເອກະສານເຊີນປະມູນ, ລາຄາກໍຕ້ອງສົມເຫດສົມຜົນ ເຊິ່ງລວມເອົາສະເພາະແຕ່ຄ່າຕີພິມ, ຄ່າພິມເອກະສານ ຫຼື ພິມເອເລັກໂຕຣນິກ ແລະ ຄ່າຈັດສົ່ງໃຫ້ຜູ້ແຂ່ງຂັນປະມູນ ແຕ່ການວາງລາຄາກໍບໍ່ຄວນສູງເກີນໄປ ຈົນບໍ່ເປັນການຊຸກຍູ້ ໃຫ້ຜູ້ປະມູນ ທີ່ມີຄຸນວຸດທິນັ້ນເຂົ້າຮ່ວມການ ປະມູນ. ສະເພາະເອກະສານເຊີນປະມູນ ສຳລັບການກໍ່ສ້າງ ອາດຈະສະແດງໃຫ້ເຫັນ ມູນຄ່າສັນຍາ ຄາດຄະເນທັງໝົດ, ແຕ່ບໍ່ຕ້ອງ ສະແດງໃຫ້ເຫັນມູນຄ່າຄາດຄະເນລະອຽດຂອງຜູ້ກູ້ຢືມເຊັ່ນ: ລາຄາຍ່ອຍ ຕາມລາຍການບໍລິມາດວຽກ. ຜູ້ກູ້ຢືມ ອາດຈະນຳໃຊ້ລະບົບເອເລັກໂຕຣນິກ ເພື່ອແຈກຢາຍ ເອກະສານເຊີນປະມູນ ດ້ວຍເງື່ອນໄຂທີ່ທະນາຄານໂລກ ຫາກເພິ່ງພໍໃຈຕໍ່ຄວາມເໝາະສົມ ຂອງລະບົບ ທີ່ນຳໃຊ້. ຖ້າຫາກແຈກຢາຍເອກະສານເຊີນປະມູນ ຜ່ານທາງເອເລັກໂຕຣນິກ, ລະບົບເອເລັກໂຕຣນິກເອງ ກໍຕ້ອງ ຮັບປະກັນວ່າ ເອກະສານເຊີນປະມູນນັ້ນ ບໍ່ສາມາດດັດແປງໄດ້ ແລະ ບໍ່ຈຳກັດການເຂົ້າເຖິງ (ອ່ານໄດ້) ຂອງຜູ້ປະມູນ. ສ່ວນການແນະນຳ ສະເພາະບາງໝວດທີ່ສຳຄັນ ນອນໃນເອກະສານເຊີນປະມູນ ຈະໄດ້ກ່າວໃນວັກຕໍ່ໄປລຸ່ມນີ້.

2.12 ຜູ້ກູ້ຢືມ ຕ້ອງນຳໃຊ້ ຕົວແບບມາດຕະຖານເອກະສານເຊີນປະມູນ *(SBDs)* ທີ່ເໝາະສົມ ຂອງ ທະນາຄານໂລກປະກອບໃຫ້. ໂດຍອະນຸຍາດໃຫ້ປ່ຽນແປງໜ້ອຍທີ່ສຸດ ເທົ່າທີ່ຈຳເປັນ ເພື່ອບົ່ງບອກເຖິງ ສະພາບ ແລະ ເງື່ອນໄຂສະເພາະຂອງໂຄງການ ເຊິ່ງທະນາຄານໂລກຮັບຮອງເອົາໄດ້. ບໍ່ວ່າການປ່ຽນແປງ ໃດໆກໍຕາມ ອະນຸຍາດໃຫ້ປ່ຽນສະເພາະແຕ່ເນື້ອໃນທີ່ນອນໃນ ໝວດຂໍ້ມູນສຳລັບການປະມູນ ຫຼື ສັນຍາ ຫຼື ເງື່ອນໄຂສະເພາະຂອງສັນຍາ ແຕ່ບໍ່ອະນຸຍາດໃຫ້ປ່ຽນແປງ ຄຳສັບມາດຕະຖານ ທີ່ນຳໃຊ້ຢູ່ໃນຕົວແບບ ມາດຕະຖານເອກະສານເຊີນປະມູນ *(SBDs)* ຂອງທະນາຄານໂລກ. ໃນກໍລະນີທີ່ຍັງບໍ່ທັນມີ ຕົວແບບ ມາດຕະຖານເອກະສານເຊີນປະມູນ *(SBDs)* ເພື່ອໃຫ້ນຳໃຊ້ນັ້ນ, ຜູ້ກູ້ຢືມຕ້ອງນຳໃຊ້ ຕົວແບບມາດຕະຖານເງື່ອນໄຂ ແລະ ແບບຟອມຂອງສັນຍາ ເປັນທີ່ຮັບຮູ້ຂອງສາກົນ ເຊິ່ງທະນາຄານໂລກ ຮັບຮອງເອົາໄດ້.

### 2.13 ອາຍຸການຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ ແລະ ໜັງສືຄ້ຳປະກັນການປະມູນ

ຜູ້ປະມູນ ຕ້ອງໄດ້ຍື່ນຊອງປະມູນ ເຊິ່ງມີອາຍຸຜົນໃຊ້ໄດ້ ຕາມໄລຍະເວລາ ທີ່ໄດ້ກຳນົດໄວ້ ຢູ່ໃນເອກະສານເຊີນປະ ມູນ ເຊິ່ງຕ້ອງມີໄລຍະເວລາພຽງພໍ ເພື່ອເອື້ອອຳນວຍໃຫ້ ຜູ້ກູ້ຢືມ ສາມາດດຳເນີນການສົມທຽບ ແລະ ປະເມີນຜົນການປະມູນໃຫ້ສຳເລັດ ແລະ ຂັ້ນຕອນທີ່ຈຳເປັນຕ່າງໆ ໃນການສະເໜີຂໍອະນຸມັດ ພາຍໃນ ອົງກອນຂອງຜູ້ກູ້ຢືມເອງ ແລະ ການຮັບຮອງຈາກທະນາຄານໂລກ ເພື່ອສະເໜີມອບສັນຍາ (ຖ້າຈຳເປັນ ຕາມທີ່ກຳນົດໄວ້ໃນແຜນຈັດຊື້-ຈັດຈ້າງ) ເພື່ອສາມາດມອບສັນຍາໃຫ້ຜູ້ຊະການປະມູນ ພາຍໃນ ໄລຍະເວລາທີ່ກຳນົດນັ້ນໄດ້.

2.14 ຜູ້ກູ້ຢືມ ມີສິດຮຽກຮ້ອງໃຫ້ປະກອບ ໜັງສືຄ້ຳປະກັນການປະມູນ. ຖ້າຫາກໃຫ້ປະກອບມາ, ໜັງສືຄ້ຳປະກັນ ການປະມູນ ຕ້ອງລະບຸຈຳນວນ ແລະ ຕາມຮູບແບບ ທີ່ໄດ້ກຳນົດໄວ້ ຢູ່ໃນເອກະສານເຊີນປະມູນ[38] ແລະ ຍັງສືບຕໍ່ມີຜົນໃຊ້ໄດ້ ໃນໄລຍະເວລາທີ່ພຽງພໍ (ໂດຍທົ່ວໄປ ສີ່ (4) ສັບປະດາ ຕໍ່ຈາກອາຍຸການຜົນໃຊ້ໄດ້ ຂອງເອກະສານປະມູນ ໝົດອາຍຸ) ເພື່ອເອື້ອອຳນວຍໃຫ້ ຜູ້ກູ້ຢືມ ມີໄລຍະເວລາທີ່ສົມເຫດສົມຜົນ ເພື່ອສາມາດຮັບເອົາ ໜັງສືຄ້ຳປະກັນດັ່ງກ່າວນັ້ນໄດ້ ຖ້າຈຳເປັນ. ພາຍຫຼັງທີ່ໄດ້ເຊັນສັນຍາກັບຜູ້ຊະນະ ການປະມູນ ແລ້ວ ຕ້ອງໄດ້ສົ່ງ ໜັງສືຄ້ຳປະກັນການປະມູນ ໃຫ້ຜູ້ທີ່ບໍ່ຊະນະການປະມູນຄືນ. ຕໍ່ກັບໜັງ ສືຄ້ຳປະກັນ ການປະມູນ, ຜູ້ກູ້ຢືມ ອາດຈະໃຫ້ ຜູ້ປະມູນ ເຊັນຮັບຮອງວ່າ: ຖ້າເຂົາເຈົ້າຖອນ ຫຼື ດັດແກ້ ເນື້ອໃນ ຊອງປະມູນ ໃນໄລຍະມີຜົນໃຊ້ໄດ້ຂອງການປະມູນ ຫຼື ບໍ່ເຊັນສັນຍາ ພາຍຫຼັງທີ່ໄດ້ຮັບ ການຕົກລົງເພື່ອ ມອບສັນຍາ ຫຼື ບໍ່ຍື່ນໜັງສືຄ້ຳປະກັນການປະຕິບັດສັນຍາ, ຜູ້ປະມູນ ຈະຖືກຢຸດວຽກຊົ່ວຄາວ ແລະ ຖືວ່າເປັນຜູ້ປະມູນ ທີ່ຂາດຄຸນລັກສະນະເໝາະສົມ ທີ່ຈະຖືກເຊີນເຂົ້າຮ່ວມປະມູນ ບໍ່ວ່າສັນຍາໃດໆຂອງອົງກອນນັ້ນໆ ຕາມໄລຍະເວລາທີ່ໄດ້ລະບຸໄວ້ ຢູ່ໃນເອກະສານເຊີນປະມູນ.

## 2.15 ພາສານຳໃຊ້

ໃນການກະກຽມ ເອກະສານການຄັດເລືອກຄຸນວຸດທິກ່ອນການປະມູນ ແລະ ເອກະສານເຊີນປະມູນ, ຜູ້ກູ້ຢືມ ຕ້ອງເລືອກເອົາ ຫນຶ່ງໃນພາສາດັ່ງລຸ່ມນີ້ ເຊັ່ນ: ພາສາອັງກິດ, ຝຣັ່ງ ຫຼື ແອັສປາຍ. ນອກຈາກນຶ່ງໃນພາສາທີ່ກ່າວມາຂ້າງເທິງນັ້ນແລ້ວ, ຜູ້ກູ້ຢືມ ຍັງມີທາງເລືອກ ເພື່ອແປເອກະສານເຫຼົ່ານີ້ ເປັນສະບັບພາສາ ອື່ນ ອາດຈະເປັນ:

(1) ພາສາປະຈຳຊາດ ຂອງປະເທດຜູ້ກູ້ຢືມ, ຫຼື

(2) ພາສາ ທີ່ນຳໃຊ້ຢ່າງກ້ວາງຂວາງ ສຳລັບການພົວພັນດ້ານການຄ້າ ໃນທົ່ວປະເທດຂອງຜູ້ກູ້ຢືມ

ເຊິ່ງທັງສອງລັກສະນະພາສາຕໍ່ໄປນີ້ ຮຽກວ່າ "ພາສາປະຈຳຊາດ"[39]. ເພື່ອໃນກໍລະນີທີ່ອາດຈະເກີດຂຶ້ນ, ຖ້າເອກະສານເຫຼົ່ານີ້ຫາກໄດ້ພິມອອກເປັນສອງພາສາ, ບໍລິສັດມີສິດເລືອກເອົາ ຫນຶ່ງໃນສອງພາສານັ້ນ ເພື່ອປະກອບເອກະສານການຄັດເລືອກຄຸນວຸດທິກ່ອນການປະມູນ ຫຼື ເອກະສານຍື່ນປະມູນ. ສັນຍາທີ່ໄດ້ເຊັນກັນກັບຜູ້ຊະນະການປະມູນ ຕ້ອງນຳໃຊ້ພາສາ ທີ່ຜູ້ປະມູນ ໄດ້ນຳໃຊ້ເວລາຍື່ນຊອງປະມູນ ເຊິ່ງເປັນພາສາ ທີ່ໃຊ້ຄຸ້ມຄອງສັນຍາ ລະຫວ່າງ ຜູ້ກູ້ຢືມ ແລະ ຜູ້ປະມູນ. ຖ້າສັນຍາທີ່ໄດ້ເຊັນກັນ ຫາກເປັນພາສາປະຈຳຊາດ, ຜູ້ກູ້ຢືມ ຕ້ອງປະກອບ ສັນຍາສະບັບແປ ເປັນພາສາອັງກິດ, ຝຣັ່ງ ຫຼື ແອັສປາຍ ທີ່ຖືກຕ້ອງ ຊັດເຈນ ຄູ່ກັບສັນຍາສະບັບຕົ້ນ ໃຫ້ທະນາຄານໂລກ ໂດຍສອດຄ່ອງກັບເອກະສານຊ້ອນທ້າຍ (1) ແລະ ຜູ້ປະມູນເອງ ຈະບໍ່ຖືກຂໍຮ້ອງ ຫຼື ໄດ້ຮັບອະນຸຍາດໃຫ້ເຊັນສັນຍາ ຫຼາຍກວ່າຫນຶ່ງພາສາ.

## 2.16 ຄວາມກະຈ່າງແຈ້ງຂອງເອກະສານເຊີນປະມູນ

ເນື້ອໃນເອກະສານເຊີນປະມູນ ຕ້ອງຈະແຈ້ງ ເພື່ອອະນຸຍາດ ແລະ ຊຸກຍູ້ໃຫ້ມີການແຂ່ງຂັນສາກົນ ທັງຕ້ອງ ລະບຸໃຫ້ຈະແຈ້ງ ແລະ ຊັດເຈນ ກ່ຽວກັບໜ້າວຽກຮັບເໝົາທີ່ຈະດຳເນີນ, ສະຖານທີ່ດຳເນີນວຽກ, ສິນຄ້າ ທີ່ຈະສະໜອງ,

---

38 ຮູບແບບ ຂອງໜັງສືຄ້ຳປະກັນການປະມູນ ຕ້ອງໃຫ້ສອດຄ່ອງກັບ ຕົວແບບມາດຕະຖານເອກະສານສັນຍາ ເຊິ່ງແມ່ນທະນາຄານ ຫຼື ສະຖາບັນການເງິນທີ່ມີຊື່ສຽງ ເປັນຜູ້ອອກໃຫ້ ເຊັ່ນວ່າ: ບໍລິສັດປະກັນໄພ, ຫຼື ບໍລິສັດຫຼັກຊັບ ຫຼື ບໍລິສັດສິນເຊື່ອ ທີ່ຜູ້ກູ້ຢືມ ໄດ້ເລືອກເອົາ. ຖ້າຫາກແມ່ນສະຖາບັນການເງິນທີ່ຕັ້ງຢູ່ນອກປະທດຜູ້ກູ້ຢືມ ເປັນຜູ້ອອກໜັງສືຄ້ຳປະກັນໃຫ້, ສະຖາບັນດັ່ງກ່າວ ຕ້ອງມີ ສະຖາບັນການເງິນຕົວແທນ ທີ່ຕັ້ງຢູ່ພາຍໃນປະເທດຂອງຜູ້ກູ້ຢືມ ເພື່ອເຫດຜົນສາມາດບັງຄັບໃຊ້ໄດ້. ຜູ້ປະມູນ ໄດ້ຮັບອະນຸຍາດ ໃຫ້ຍື່ນໜັງສືຄ້ຳປະກັນ ໂດຍກົງ ເຊິ່ງແມ່ນທະນາຄານທີ່ຕົນເລືອກ ຢູ່ປະເທດທີ່ໄດ້ຄຸນລັກສະນະເໝາະສົມ ເປັນຜູ້ອອກໃຫ້.

39 ທະນາຄານໂລກ ຕ້ອງເພິ່ງພໍໃຈ ກັບພາສາທີ່ນຳໃຊ້. ຜູ້ກູ້ຢືມ ຕ້ອງຮັບຜິດຊອບຢ່າງເຕັມສ່ວນ ຕໍ່ກັບຄວາມຖືກຕ້ອງໃນການແປຈາກເອກະສານ ສະບັບທີ່ເປັນພາສາປະຈຳຊາດ. ໃນກໍລະນີມີຄວາມໝາຍບໍ່ຕົງກັນ ຂອງເອກະສານສະບັບພາສາອັງກິດ, ຝຣັ່ງ ຫຼື ແອັສປາຍ ແມ່ນໃຫ້ຖືເອົາສຳນວນຂອງສະບັບລ້າສຸດ ເປັນບ່ອນອ້າງອີງ. ຖ້າຜູ້ກູ້ຢືມ ຫາກມີ ພາສາປະຈຳຊາດ ຫຼາຍກວ່າຫນຶ່ງພາສາ ແລະ ກົດໝາຍແຫ່ງຊາດ ບັງຄັບໃຫ້ອອກ ເປັນພາສາປະຈຳຊາດທຸກໆພາສາ ຢ່າງເປັນທາງການ, ຜູ້ກູ້ຢືມ ຕ້ອງໃຊ້ພາສາປະຈຳຊາດ ພາສາດຽວ ປະກອບເຂົ້າໃນເອກະສານການຄັດເລືອກຄຸນວຸດທິ ກ່ອນການປະມູນ ແລະ ເອກະສານເຊີນປະມູນ ແລະ ອາດຈະອອກ ສະບັບພາສາແປ ເປັນພາສາອື່ນໆນຳ.

ສະຖານທີ່ສົ່ງມອບ ຫຼື ຕິດຕັ້ງ, ກຳນົດເວລາສົ່ງມອບ ຫຼື ສຳເລັດວຽກ, ເງື່ອນໄຂການໃຊ້ງານຂອງສິນຄ້າໄດ້ຕ່ຳສຸດ ແລະ ເງື່ອນໄຂການຮັບປະກັນ ແລະ ບຳລຸງຮັກສາ ຕະຫຼອດຮອດ ຂໍ້ກຳນົດ ແລະ ເງື່ອນໄຂອື່ນໆ ທີ່ຕິດພັນ. ນອກຈາກນັ້ນ, ຖ້າຈຳເປັນ ກໍຕ້ອງກຳນົດ ການທົດລອງ, ມາດຕະຖານ ແລະ ວິທີການ ເພື່ອວ່າຈ້າງໃຫ້ຕັດສິນຄວາມຖືກຕ້ອງກັບມາດຕະຖານເຕັກນິກຂອງອຸປະກອນທີ່ສົ່ງມອບ, ຫຼື ວຽກຮັບເໝົາ ທີ່ໄດ້ປະຕິບັດ ນອນຢູ່ໃນເອກະສານເຊີນປະມູນນຳອີກ. ແຜ່ນແຕ້ມ ຕ້ອງໃຫ້ສອດຄ່ອງກັບເນື້ອໃນມາດຕະຖານເຕັກນິກ ແລະ ການຈັດບຸລິມະສິດຄວາມສຳຄັນ ຂອງທັງສອງລາຍການນີ້ ກໍຕ້ອງໄດ້ກຳນົດໄວ້ເຊັ່ນດຽວກັນ.

2.17 ນອກຈາກປັດໃຈດ້ານລາຄາແລ້ວ, ເອກະສານເຊີນປະມູນ ຕ້ອງໄດ້ລະບຸປັດໃຈອື່ນໆທັງໝົດ ທີ່ນຳມາພິຈາລະນາໃນການປະເມີນຜົນການປະມູນ ແລະ ວິທີການຄິດໄລ່ເປັນບໍລິມາດ ຫຼື ປະເມີນຜົນ ຕໍ່ກັບປັດໃຈດັ່ງກ່າວຄືແນວໃດ. ຖ້າການປະມູນ ຫາກໄດ້ອະນຸຍາດໃຫ້ສະເໜີທາງເລືອກໃນການອອກແບບ, ການນຳໃຊ້ວັດສະດຸ, ການກຳນົດເວລາສຳເລັດ, ເງື່ອນໄຂການຊຳລະ ແລະ ອື່ນໆ ກໍຕ້ອງໄດ້ອະທິບາຍເງື່ອນໄຂທີ່ຮັບຮອງເອົາການສະເໜີທາງເລືອກດັ່ງກ່າວ ແລະ ວິທີການການປະເມີນຜົນ ໃຫ້ຈະແຈ້ງອີກດ້ວຍ.

2.18 ຜູ້ແຂ່ງຂັນປະມູນທຸກຄົນ ຕ້ອງໄດ້ຮັບຂໍ້ມູນອັນດຽວກັນ ແລະ ຕ້ອງຮັບປະກັນ ການໃຫ້ໂອກາດເທົ່າທຽມກັນ ເພື່ອຮັບຂໍ້ມູນເພີ່ມເຕີມ ທັນຕາມກຳນົດເວລາ. ຜູ້ກູ້ຢືມ ຕ້ອງສ້າງເງື່ອນໄຂທີ່ເອື້ອອຳນວຍ ແລະ ອະນຸຍາດ ໃຫ້ຜູ້ແຂ່ງຂັນປະມູນເຂົ້າຢ້ຽມສະໜາມກໍ່ສ້າງຂອງໂຄງການໄດ້. ສຳລັບສັນຍາ ການກໍ່ສ້າງ ຫຼື ການສະ ໜອງສິນຄ້າ ທີ່ຄົບຊຸດ ໂດຍສະເພາະ ແມ່ນການປັບປຸງວຽກກໍ່ສ້າງ ຫຼື ການປັບປຸງວຽກອຸປະກອນ ທີ່ມີຢູ່ເດີມແລ້ວນັ້ນ ກໍຄວນຈັດກອງປະຊຸມ ກ່ອນການຍື່ນຊອງປະມູນ ເພື່ອໃຫ້ຜູ້ຕາງໜ້າຂອງຜູ້ກູ້ຢືມ ສາມາດໃຫ້ຄວາມກະຈ່າງແຈ້ງ ແກ່ຜູ້ປະມູນ (ອາດຈະພົບກັນໂດຍກົງ ຫຼື ຜ່ານທາງເອເລັກໂຕຣນິກ). ບົດບັນທຶກກອງປະຊຸມ ຕ້ອງໄດ້ສົ່ງໃຫ້ ຜູ້ປະມູນທຸກບໍລິສັດທີ່ກ່ຽວຂ້ອງ ແລະ ສຳເນົາສົ່ງໃຫ້ທະນາຄານໂລກ (ເປັນເອກະສານ ຫຼື ສົ່ງທາງເອເລັກໂຕຣນິກ). ເນື້ອໃນດັດແກ້ໃນເອກະສານເຊີນປະມູນ ລວມທັງຂໍ້ມູນເພີ່ມເຕີມ, ການໃຫ້ຄວາມກະຈ່າງແຈ້ງ, ການກວດແກ້ຄວາມຜິດພາດຄືນ ຕ້ອງສົ່ງໃຫ້ ຜູ້ທີ່ໄດ້ຮັບເອກະ ສານເຊີນ ປະມູນ ໃນໄລຍະຕົ້ນ ແຕ່ລະຄົນ ແລະ ຜູ້ປະມູນທຸກບໍລິສັດ ເພື່ອຊາບ ກ່ອນກຳນົດມື້ປິດຮັບຊອງປະມູນ ເພື່ອເອື້ອອຳນວຍໃຫ້ ຜູ້ປະມູນ ສາມາດດຳເນີນການຢ່າງເໝາະສົມ. ການດັດແກ້ເອກະສານເຊີນປະມູນ ຕ້ອງນຳໃຊ້ໃນຮູບແບບເປັນເອກະສານເພີ່ມເຕີມ *(Addendum).* ກຳນົດມື້ປິດຮັບຊອງປະມູນ ອາດຈະຕໍ່ໄດ້ ຖ້າເຫັນວ່າຈຳເປັນ. ສຳເນົາເອກະສານເພີ່ມເຕີມດັ່ງກ່າວ ຕ້ອງໄດ້ສົ່ງໃຫ້ທະນາຄານໂລກ (ເປັນເອກະສານຈິງ ຫຼື ສົ່ງທາງເອເລັກໂຕຣນິກ) ເພື່ອພິຈາລະນາອອກໜັງສືຮັບຮອງເອົາກໍລະນີນອນໃນ ການທົບທວນກ່ອນ.

## 2.19 ມາດຕະຖານ

ມາດຕະຖານ *(Standards)* ແລະ ຂໍ້ກຳນົດດ້ານເຕັກນິກ *(Technical Specifications)* ທີ່ກຳນົດຢູ່ໃນເອກະສານເຊີນປະມູນ ຕ້ອງມີລັກສະນະສົ່ງເສີມໃຫ້ມີການແຂ່ງຂັນຢ່າງກ້ວາງຂວາງ ເທົ່າທີ່ເປັນໄປໄດ້ ແຕ່ຕ້ອງຮັບປະກັນ ການດຳເນີນງານທີ່ສຳຄັນ ຫຼື ຄວາມຕ້ອງການ ຂອງການສະໜອງສິນຄ້າ, ການຮັບເໝົາ ຕາມແຜນຈັດຊື້-ຈັດຈ້າງ. ຜູ້ປະມູນຕ້ອງກຳນົດ ມາດຕະຖານ ເຕັກນິກ ທີ່ສາກົນຮັບຮອງ ໃນວົງກ້ວາງ ເທົ່າທີ່ເປັນໄປໄດ້ ເຊັ່ນວ່າ: ອຸປະກອນ ຫຼື ວັດສະດຸ ຫຼື ຝີມື ຕ້ອງໃຫ້ສອດຄ່ອງກັບມາດຕະຖານຂອງອົງການ ມາດຕະຖານສາກົນ *(International Standard Organization—ISO)* ປະກາດໃຊ້. ໃນກໍລະນີທີ່ຍັງບໍ່ທັນມີມາດຕະຖານສາກົນ ເພື່ອນຳໃຊ້ ຫຼື ບໍ່ ເໝາະສົມນັ້ນ ກໍອາດຈະລະບຸໃຫ້ນຳໃຊ້ມາດຕະຖານແຫ່ງຊາດ. ໃນທຸກໆກໍລະນີ ຕ້ອງໄດ້ລະບຸໃນເອກະສານເຊີນປະມູນວ່າ: ອຸປະກອນ, ວັດສະດຸ ຫຼື ຝີມື ຕ້ອງຕອບສະໜອງໄດ້ຕາມມາດຕະຖານອື່ນ ແລະ ຮັບປະກັນວ່າ ມີຄວາມທຽບເທົ່າພື້ນຖານ ກໍສາມາດຮັບຮອງເອົາໄດ້ເຊັ່ນດຽວກັນ.

## 2.20 ການໃຊ້ຍີ່ຫໍ້ຂອງສິນຄ້າ

ການວາງມາດຕະຖານເຕັກນິກ ຕ້ອງຢູ່ບົນພື້ນຖານຂອງຄຸນລັກສະນະກ່ຽວຂ້ອງດ້ານເຕັກນິກ ແລະ/ຫຼື ເງື່ອນໄຂການໃຊ້ງານ ເຊິ່ງຕ້ອງຫຼີກລ້ຽງການກ່າວເຖິງ ຍີ່ຫໍ້, ນ້ຳເບີກາຕາລັອກ ຫຼື ລັກສະນະຄ້າຍຄືກັນຂອງສິນຄ້າ. ຖ້າເຫັນວ່າຈຳ

ເປັນ ທີ່ຈະຕ້ອງກ່າວເຖິງ ຍີ່ຫໍ້ ຫຼື ນຳເບີກາຕາລັອກ ຂອງຜູ້ຜະລິດສະເພາະ ເພື່ອໃຫ້ຄວາມກະຈ່າງແຈ້ງຂອງມາດຕະຖານທີ່ຍັງບໍ່ທັນຄົບຖ້ວນສົມບູນ ຕ້ອງໃຊ້ຄຳສັບ "ຫຼືທຽບເທົ່າ" ຕື່ມ ໃສ່ຕອນທ້າຍ. ການວາງມາດຕະຖານ ຕ້ອງອະນຸຍາດ ໃຫ້ສະເໜີສິນຄ້າ ທີ່ມີຄຸນລັກສະນະຄ້າຍຄື ເຊິ່ງຮັບຮອງເອົາໄດ້ ແລະ ຢ່າງໜ້ອຍ ກໍແມ່ນເງື່ອນໄຂການໃຊ້ງານຂອງສິນຄ້າ ກໍທຽບເທົ່າກັບ ມາດຕະຖານ ທີ່ໄດ້ກຳນົດໄວ້. ສຳລັບສິນຄ້າພິເສດສະເພາະ ເຊິ່ງຕ້ອງໄດ້ລະບຸຍີ່ຫໍ້ ທີ່ບໍ່ມີຍີ່ຫໍ້ອື່ນທຽບເທົ່າ ໂດຍສະເພາະ ສິນຄ້າປະເພດລະບົບເຕັກໂນໂລຊີຂໍ້ມູນຂ່າວສານນັ້ນ ຕ້ອງປະກອບເອກະສານໃຫ້ທະນາຄານໂລກເພື່ອ ທົບທວນ ແລະຮັບຮອງເອົາ ກ່ອນການອອກເອກະສານເຊີນປະມູນ ເຊັ່ນ: ເອກະສານ ຊີ້ແຈງເຫດຜົນກວມລວມ ລວມທັງ ເຫດຜົນພື້ນຖານໃນຄວາມເໝາະສົມ (ຕົງກັນ) *(Compatiblibity)* ກັບລະບົບເດີມ ແລະ ການລົງທຶນກ່ອນໜ້ານີ້ ເຂົ້າໃນລາຍການທີ່ກ່າວເຖິງຍີ່ຫໍ້ນີ້.

## 2.21 ການສະເໜີລາຄາປະມູນ

ການປະມູນສຳລັບສິນຄ້າທຸກປະເພດ ທີ່ຜະລິດຢູ່ຕ່າງປະເທດ ແລະ ນຳເຂົ້າມາພາຍໃນປະເທດ ຕ້ອງໃຫ້ສະໜີບົນພື້ນຖານລາຄາ *(Carriage and Insurance Paid—CIP)*[40] *(place of destination)* ເຊິ່ງ ກວມເອົາ "ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ" (ຊື່ປາຍທາງ). ການປະມູນ ສຳລັບສິນຄ້າ ທີ່ນຳເຂົ້າມາກ່ອນແລ້ວ ບົນພື້ນຖານລາຄາ *(CIP)* ນັ້ນ ຕ້ອງແຍກມູນຄ່າຕົວຈິງ ສຳລັບການເສັຍພາສີນຳເຂົ້າ ແລະ ອາກອນ ເຊິ່ງໄດ້ຈ່າຍໄປແລ້ວອອກຕ່າງຫາກ. ສ່ວນການປະມູນສຳລັບສິນຄ້າ ທີ່ຜະລິດຢູ່ພາຍໃນປະເທດຜູ້ກູ້ຢືມເອງຕ້ອງໃຫ້ສະເໜີບົນພື້ນຖານລາຄາ *(Ex works, Ex factory, or Off-the-Shelf —EXW)*[41] ເຊິ່ງເປັນລາຄາໂຮງງານ (ສະຖານທີ່ຜະລິດ, ໂຮງງານ ຫຼື ປາກສາງ-ພ້ອມທີ່ຈະລົງຈາກຖ້ານ) ລວມທັງ ຄ່າຂົນສົ່ງພາຍໃນປະເທດ ແລະ ປະກັນໄພ ຮອດປາຍທາງ. ຜູ້ປະມູນ ຕ້ອງໄດ້ຮັບອະນຸຍາດໃຫ້ຈັດສົ່ງຜ່ານມະຫາສະໝຸດ ແລະ ການຈັດສົ່ງປະເພດອື່ນໆ ລວມທັງປະກັນໄພກ່ຽວຂ້ອງ ຈາກແຫຼ່ງທີ່ມີຄຸນລັກສະນະເໝາະສົມ[42]. ໃນກໍລະນີ ສັນຍາສະໜອງສິນຄ້າ ທີ່ຕິດພັນກັບການຕິດຕັ້ງ, ການດຳເນີນງານທົດລອງ ແລະ ການບໍລິການອື່ນໆຄ້າຍຄື ເຊິ່ງຕ້ອງການໃຫ້ ຜູ້ປະມູນດຳເນີນການນັ້ນ, ຜູ້ປະມູນຕ້ອງໄດ້ສະເໜີຄ່າ ບໍລິການເຫຼົ່ານີ້ ເຂົ້າໃນເອກະສານຍື່ນປະມູນຕື່ມອີກ.

2.22 ໃນກໍລະນີ ສັນຍາແບບເບດເສດ (ລວມທັງແບບມອບຂໍກຸນແຈ), ຜູ້ປະມູນ ຕ້ອງໄດ້ສະເໜີຄ່າຕິດຕັ້ງສິ່ງອຳນວຍ ຄວາມສະດວກ ຫຼື ໂຮງຊ່າງຢູ່ສະໜາມ ລວມທັງມູນຄ່າສະໜອງອຸປະກອນ, ຄ່າຂົນສົ່ງທາງທະເລ ແລະ ພາຍໃນປະເທດ ລວມທັງປະກັນໄພ, ຄ່າຕິດຕັ້ງ, ຄ່າດຳເນີນງານທົດລອງ ຕະຫຼອດຮອດ ຄ່າຕ່າງໆທີ່ຕິດພັນກັບການຮັບເໝົາກໍ່ສ້າງ ແລະ ບໍລິການອື່ນໆທັງໝົດ ທີ່ນອນໃນຂອບເຂດຂອງສັນຍາ ເຊັ່ນ: ການອອກແບບ, ການບຳລຸງຮັກສາ, ການດຳເນີນ

---

40 ໂດຍອ້າງອີງເຖິງຄຳນິຍາມຂອງຄຳສັບເງື່ອນໄຂການຄ້າສາກົນທີ່ນຳໃຊ້ປະຈຸບັນ (Incoterms 2010) , ຫຼື ໄດ້ປັບປຸງເປັນແຕ່ລະໄລຍະ ເຊິ່ງແມ່ນສະພາການຄ້າສາກົນ *(International Chamber of Commerce- ICC)*, 38 Cours Albert 1er, 75008, Paris, France ເປັນຜູ້ຈັດພິມຈຳໜ່າຍ. ຄຳສັບ ລາຄາ *(CIP)* ທີ່ກວມເອົາ "ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ" (ລະບຸຊື່ປາຍທາງ) ນີ້ຈະນຳໃຊ້ກັບທຸກຮູບແບບການຂົນສົ່ງ ລວມທັງການຂົນສົ່ງ ຫຼາຍຮູບແບບ. ຄຳສັບ ລາຄາ *(CIP)* ນີ້ ໝາຍເຖິງ ຍັງບໍ່ທັນໄດ້ຊຳລະຄ່າພາສີນຳເຂົ້າ ແລະ ອາກອນຕ່າງໆ ເຊິ່ງຕົກເປັນພາລະຂອງຜູ້ກູ້ຢືມ ຮັບຜິດຊອບ ຕໍ່ກັບສິນຄ້າ ທີ່ໄດ້ນຳເຂົ້າມາກ່ອນແລ້ວ ຫຼື ຈະນຳເຂົ້າ. ຕໍ່ກັບສິນຄ້າ ທີ່ໄດ້ນຳເຂົ້າມາກ່ອນແລ້ວ, ລາຄາ *(CIP)* ທີ່ສະເໜີປະມູນ ຕ້ອງແຍກໃຫ້ເຫັນລາຄານຳເຂົ້າເດີມຂອງສິນຄ້າ ທີ່ໄດ້ແຈ້ງເສັຍພາສີ ແລະ ຕ້ອງກວມເອົາຄ່າພາສີທີ່ຈະຕ້ອງເກັບຄືນ ຫຼື ລາຄາທີ່ວາງສູງກວ່າ ຂອງຕົວແທນຜູ້ຊື້ພາຍໃນ ຫຼື ຜູ້ຕາງໜ້າ ແລະ ຄ່າໃຊ້ຈ່າຍພາຍໃນອື່ນໆທັງໝົດ ຍົກເວັ້ນ ຄ່າພາສີນຳເຂົ້າ ແລະ ອາກອນຕ່າງໆ ເຊິ່ງຕົກເປັນພາລະຂອງຜູ້ຊື້.

41 ລາຄາ *(EXW)* ເຊິ່ງເປັນລາຄາໂຮງງານ ຕ້ອງປະກອບດ້ວຍ ຄ່າພາສີ, ອາກອນການຂາຍ ແລະ ອາກອນອື່ນໆທັງໝົດທີ່ໄດ້ຊຳລະແລ້ວ ຫຼືໄດ້ຊຳລະໃຫ້ສິ້ນສ່ວນປະກອບ ແລະ ວັດຖຸດິບ ຮັບໃຊ້ການຜະລິດ ຫຼື ປະກອບເປັນອຸປະກອນ ທີ່ສະເໜີຢູ່ໃນຊອງປະມູນ. ສິນຄ້າ (Manufactued goods) ລວມທັງສິນຄ້າ ທີ່ນຳໃຊ້ມາປະກອບ (assembled goods).

42 ໃຫ້ເບິ່ງ ວັກ 1.8, 1.9 ແລະ 1.10.

ງານ ແລະ ອື່ນໆ. ຖ້າຫາກບໍ່ໄດ້ລະບຸໄວ້ ເປັນຢ່າງອື່ນ ຢູ່ໃນເອກະສານເຊີນປະມູນ, ສັນຍາແບບມອບຂໍກຸນແຈຕ້ອງໄດ້ ລວມເອົາ ຄ່າອາກອນ, ຄ່າພາສີ ແລະ ຄ່າທຳນຽມອື່ນໆທັງໝົດ[43] ເຂົ້ານຳ.

2.23 ສຳລັບວຽກຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ), ຜູ້ປະມູນ ຕ້ອງໄດ້ສະເໜີລາຄາ ຫົວໜ່ວຍ ຫຼື ລາຄາມອບເໝົາ ເພື່ອປະຕິບັດວຽກງານຮັບເໝົາ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ), ຂອງຕົນ ແລະ ລາຄາເຫຼົ່ານີ້ ຕ້ອງກວມເອົາ ຄ່າພາສີ, ຄ່າອາກອນ ແລະ ຄ່າທຳນຽມອື່ນໆທັງໝົດເຂົ້ານຳ. ຜູ້ປະມູນ ຕ້ອງໄດ້ຮັບອະນຸຍາດ ໃຫ້ນຳ ເອົາສິ່ງນຳເຂົ້າ*(Iinputs)* ທັງໝົດ ຈາກແຫຼ່ງທີ່ມີຄຸນລັກສະນະ ເໝາະສົມ (ຍົກເວັ້ນແຮງງານທີ່ຂາດຝີມື) ເພື່ອ ໃຫ້ເຂົາເຈົ້າອາດຈະສະໜີລາຄາປະມູນ ທີ່ມີການແຂ່ງຂັນ ຫຼາຍທີ່ສຸດ.

## 2.24 ການດັດປັບລາຄາ (Price Adjustment)

ເອກະສານເຊີນປະມູນ ຕ້ອງໄດ້ກຳນົດໄວ້ດັ່ງນີ້:

(1) ລາຄາສະເໜີປະມູນ ເປັນລາຄາຕາຍຕົວ ຫຼື

(2) ລາຄາ ທີ່ສາມາດດັດປັບໄດ້ ຕາມການປ່ຽນແປງ ໃນໂຄງປະກອບລາຄາຕົ້ນຕໍ ໃນສັນຍາ (ປັບຂຶ້ນ ຫຼື ລົງ) ເຊັ່ນ: ຄ່າແຮງງານ, ອຸປະກອນ, ວັດສະດຸ ແລະ ນ້ຳມັນເຊື້ອໄຟ.

ໂດຍປົກກະຕິແລ້ວ, ຂໍ້ກຳນົດໃນການດັດປັບລາຄາ ບໍ່ມີຄວາມຈຳເປັນ ສຳລັບສັນຍາແບບກະທັດລັດ ທີ່ກ່ຽວຂ້ອງກັບ ການສະໜອງສິນຄ້າ ຫຼື ການຮັບເໝົາວຽກ ທີ່ສຳເລັດ ພາຍໃນ 18 (ສິບແປດ) ເດືອນ ແຕ່ຕ້ອງນຳໃຊ້ກັບສັນຍາ ທີ່ຫຼາຍ ກວ່າ 18 (ສິບແປດ) ເດືອນ. ໃນກໍລະນີ ທີ່ຄາດຄະເນໄດ້ວ່າ ອັດຕາເງິນເຟີ້ ຢູ່ພາຍໃນປະເທດ ຫຼື ຕ່າງປະເທດ ຈະສູງ ຂຶ້ນ ໃນອະນາຄົດ, ກໍອາດຈະກຳນົດ ການດັດປັບລາຄາ ທີ່ຄ້າຍຄື ຢູ່ໃນເອກະສານຍື່ນປະມູນ ຂອງສັນຍາທີ່ມີອາຍຸການ ຕ່ຳກວ່າ 18 (ສິບແປດ) ເດືອນໄດ້. ເຖິງຢ່າງໃດ ກໍຕາມ, ໃນພາກປະຕິບັດ,ໂດຍທົ່ວໄປແລ້ວ, ເຮົາຈະໄດ້ລາ ຄາອຸປະກອນບາງປະເພດເຊິ່ງເປັນລາຄາ ຕາຍຕົວຂອງບໍລິສັດເອງ ແລະ ບໍ່ໄດ້ຂຶ້ນກັບກຳນົດເວລາສົ່ງມອບ, ເມື່ອຕົກ ໃນກໍລະນີນີ້ ການດັດປັບລາຄາ ກໍບໍ່ຈຳເປັນ.

2.25 ການດັດປັບລາຄາ ຕ້ອງນຳໃຊ້ສູດຄິດໄລ່ ທີ່ໄດ້ກຳນົດໄວ້ (ຫຼື ສູດຄິດໄລ່ຕ່າງໆ) ໂດຍແຕກລາຄາລວມ ອອກເປັນໂຄງ ສ້າງລາຄາຍ່ອຍ ແລະ ດັດປັບຕາມດັດສະນີ ຂອງໂຄງສ້າງລາຄາຍ່ອຍແຕ່ລະອັນ. ສູດ ການຄິດໄລ່ (ຫຼື ສູດຄິດໄລ່ ຕ່າງໆ) ແລະ ພື້ນຖານ ຂໍ້ມູນນຳໃຊ້ ຕ້ອງໄດ້ກຳນົດຈະແຈ້ງ ຢູ່ໃນເອກະສານ ເຊີນປະມູນ. ຖ້າສະກຸນເງິນທີ່ໃຊ້ ເພື່ອ ການຊຳລະ ຫາກແຕກຕ່າງຈາກແຫຼ່ງຂໍ້ມູນ ແລະ ດັດສະນີກ່ຽວພັນ ກໍຕ້ອງນຳໃຊ້ສຳປະສິດກວດແກ້ ເຂົ້າໃນສູດຄິດໄລ່ ເພື່ອຫຼີກລ້ຽງ ການດັດປັບທີ່ບໍ່ຖືກຕ້ອງ. ຍົກເວັ້ນໃນ ກໍລະນີພິເສດ ທີ່ອາດຈະປະກອບວິທີການດັດປັບລາຄາ ຢູ່ໃນ ເອກະສານເຊີນປະມູນແລ້ວ ບົນພື້ນຖານ ເອກະສານ ທີ່ນຳໃຊ້ເປັນຫຼັກຖານໄດ້ (ລວມທັງໃບແຈ້ງລາຄາ/ໃບຮຽກເກັບ ເງິນຕົວຈິງ) ທີ່ຜູ້ສະໜອງສິນຄ້າ ຫຼື ຜູ້ຮັບເໝົາ ປະກອບໃຫ້.

## 2.26 ການຂົນສົ່ງ ແລະ ປະກັນໄພ

ເອກະສານເຊີນປະມູນ ຕ້ອງອະນຸຍາດໃຫ້ ຜູ້ສະໜອງສິນຄ້າ ແລະ ຜູ້ຮັບເໝົາ ຈັດການ ການຂົນສົ່ງ ແລະ ປະກັນໄພ ຈາກແຫຼ່ງທີ່ມີຄຸນລັກສະນະເໝາະສົມໃດກໍໄດ້. ເອກະສານເຊີນປະມູນ ຕ້ອງກຳນົດ ປະເພດ ແລະ ເງື່ອນໄຂປະກັນໄພ ທີ່ຜູ້ປະມູນ ຕ້ອງສະໜອງໃຫ້. ຕາມທຳມະດາ ຕ້ອງໄດ້ປະກອບ ແບບຟອມທີ່ ກຳນົດ ລາຍການຄວາມສ່ຽງທັງໝົດໃຫ້ຢູ່ ໃນທຸກໆສັນຍາ. ສ່ວນການທົດແທນຄ່າເສັຍຫາຍ ສຳລັບ ປະກັນ ໄພການຂົນສົ່ງ ສຳລັບສັນຍາສະໜອງສິນຄ້າ ແລະ ສັນຍາແບບເບດເສດນັ້ນ, ຕ້ອງກວມຢ່າງໜ້ອຍ 110 (ໜຶ່ງຮ້ອຍສິບ) ສ່ວນຮ້ອຍ ບົນພື້ນຖານລາຄາ *(CIP)* ຂອງ ລາຄາສິນຄ້ານຳເຂົ້າຕາມສະກຸນເງິນ ໃນສັນຍາ ຫຼື ສະກຸນເງິນທີ່ສາມາດແລກປ່ຽນ ເພື່ອສາມາດປ່ຽນແທນ ສິນຄ້າ

---

43 ສຳລັບສິນຄ້າ ທີ່ນຳໃຊ້ໃນສັນຍາແບບມອບຂໍກຸນແຈ ອາດຈະກຳນົດເອົາບົນພື້ນຖານລາຄາ (*Delivery Duty Paid-DDP (named place of destination)* ທີ່ກວມເອົາ "ສົ່ງຮອດສະຖານທີ່, ຈ່າຍຄ່າພາສີ ແລະ ອາກອນ" (ລະບຸຊື່ປາຍທາງ) ແລະ ຜູ້ປະມູນເອງ ຄວນຈະ ເລືອກເອົາຮູບແບບ ລາຄາທີ່ດີທີ່ສຸດ ລະຫວ່າງ ສິນຄ້ານຳເຂົ້າ ຫຼື ສິນຄ້າ ຜະລິດຢູ່ພາຍໃນປະເທດ ເພື່ອປະກອບເຂົ້າເອກະສານຍື່ນປະມູນຂອງເຂົາເຈົ້າ.

ທີ່ເສຍຫາຍ ຫຼື ເປ່ເພ ໄດ້ຢ່າງທັນການ. ສໍາລັບໂຄງການກໍ່ສ້າງ ຫຼື ການສະໜອງສິນຄ້າ ແລະ ຕິດຕັ້ງຂະໜາດໃຫຍ່ທີ່ປະກອບມີຜູ້ຮັບເໝົາ ຢູ່ສະໜາມ ຫຼື ຜູ້ສະໜອງສິນຄ້າ ຫຼາຍໆບໍລິສັດນັ້ນ, ຜູ້ກູ້ຢືມ ອາດຈະເຮັດ "ການລວບລວມ" *(Wrap-up)* ຫຼື ດໍາເນີນການປະກັນໄພທັງໝົດໃຫ້ໂຄງການ. ໃນກໍລະນີນີ້, ຜູ້ກູ້ຢືມ ຕ້ອງດໍາເນີນການຈັດຫາ ຜູ້ສະໜອງປະກັນໄພ ທີ່ມີລັກສະນະແຂ່ງຂັນ ຕາມຂະບວນການຈັດຫາທີ່ທະນາຄານໂລກຮັບຮອງເອົາໄດ້ ຖ້າຫາກທະນາຄານໂລກ ເປັນຜູ້ສະໜອງທຶນ ສໍາລັບຄ່າປະກັນໄພໃຫ້.

2.27 ຍົກເວັ້ນໃນກໍລະນີ ທີ່ຜູ້ກູ້ຢືມ ຫາກບໍ່ຕ້ອງການປະກັນໄພຜ່ານສັນຍາ ແລະ ຕ້ອງການດໍາເນີນການເອງ ຫຼື ສະຫງວນວຽກງານການຂົນສົ່ງ ແລະ ປະກັນໄພ ໃຫ້ບໍລິສັດແຫ່ງຊາດ ຫຼື ແຫຼ່ງທີ່ໄດ້ຮັບມອບໝາຍ ດໍາເນີນການໃຫ້ ກໍຕ້ອງປະກອບຫຼັກຖານ ເປັນທີ່ເພິ່ງພໍໃຈ ໃຫ້ທະນາຄານໂລກເຊັ່ນ:

(1) ຊັບພະຍາກອນ ທີ່ມີຄວາມພ້ອມຊໍາລະ ຄ່າເສຍຫາຍ ເພື່ອປ່ຽນແທນສິນຄ້າ ທີ່ເສຍຫາຍ ຫຼື ເປ່ເພໄດ້ຢ່າງທັນການ ຕາມສະກຸນເງິນ ທີ່ສາມາດແລກປ່ຽນ ໃນບັນດາສະກຸນເງິນທີ່ໃຊ້ຊໍາລະໃນສັນຍາ, ແລະ

(2) ກວມເອົາຄວາມສ່ຽງຕ່າງໆ ທີ່ເໝາະສົມ.

ນອກຈາກນັ້ນ, ໃນການນໍາເຂົ້າສິນຄ້າ ທີ່ໄດ້ສະເໜີ ລາຄາ *(CIP)* ເຊິ່ງກວມເອົາ "ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ" (ລະບຸຊື່ປາຍທາງ) ທີ່ໄດ້ລະບຸໄວ້ ຕາມເນື້ອໃນ ວັກ 2.21 ນັ້ນແລ້ວ, ຜູ້ປະມູນ ຕ້ອງສະເໜີລາຄາ *(Free Carrier—FCA) (named place of dispatch)* ເຊິ່ງກວມເອົາ "ບໍ່ຄິດໄລ່ຄ່າຂົນສົ່ງຮອດສະຖານທີ່" (ລະບຸຊື່ສະຖານທີ່) ຫຼື *(Carriage Paid To—CPT) (named place of destination)* ເຊິ່ງກວມເອົາ "ຈ່າຍຄ່າຂົນສົ່ງຮອດສະຖານທີ່" (ລະບຸຊື່ປາຍທາງ)[44] ນໍາອີກ. ການຄັດເລືອກ ເພື່ອໄດ້ລາຄາປະເມີນຕໍ່າສຸດ ຕ້ອງຢູ່ບົນພື້ນຖານ ລາຄາ *(CIP)* ເຊິ່ງກວມເອົາ "ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ" (ລະບຸຊື່ປາຍ ທາງ), ແຕ່ຜູ້ກູ້ຢືມ ອາດຈະເຊັນສັນຍາ ຕາມເງື່ອນໄຂ ລາຄາ *FCA* ຫຼື *CPT* ແລະ ຈັດການຂົນສົ່ງ ແລະ/ຫຼື ປະກັນໄພເອງ. ໃນກໍລະນີນີ້, ການສະໜອງທຶນ ຂອງທະນາຄານໂລກ ກໍຈໍາກັດຢູ່ທີ່ ລາຄາ *FCA* ຫຼື *CPT* ຕາມສັນຍາ.

## 2.28 ຂໍ້ກໍານົດສະກຸນເງິນ

ເອກະສານເຊີນປະມູນ ຕ້ອງໄດ້ກໍານົດ ສະກຸນເງິນດ່ຽວ ຫຼື ຫຼາຍສະກຸນເງິນ ທີ່ຜູ້ປະມູນນໍາໃຊ້ເພື່ອສະເໜີລາຄາປະມູນຂອງເຂົາເຈົ້າ, ຫຼັກການປ່ຽນຈາກຫຼາຍສະກຸນເງິນທີ່ແຕກຕ່າງກັນ ເປັນສະກຸນເງິນດຽວ ເພື່ອ ເປົ້າໝາຍ ໃນການສົມທຽບລາຄາປະມູນ ແລະ ສະກຸນເງິນຕ່າງໆ ທີ່ຈະນໍາໃຊ້ ໃນການຊໍາລະ ຕາມທີ່ລະບຸ ໃນມູນຄ່າຕາມສັນຍາ. ຂໍ້ກໍານົດລຸ່ມນີ້ (ເນື້ອໃນ ວັກ 2.29 ຫາ 2.33) ເພື່ອເປົ້າໝາຍລຸ່ມນີ້:

(1) ຮັບປະກັນ ໃຫ້ຜູ້ປະມູນ ມີໂອກາດ ຫຼຸດຜ່ອນຄວາມສ່ຽງກ່ຽວກັບອັດຕາແລກປ່ຽນລົງ ໃນລະດັບ ຕໍ່າສຸດ ບໍ່ວ່າຈະໃຊ້ ເງິນສະກຸນໃດ ເຂົ້າໃນການປະມູນ ແລະ ການຊໍາລະ ເຊິ່ງສາມາດນໍາໄປສູ່ ການສະເໜີລາຄາປະມູນດີທີ່ສຸດໄດ້.

(2) ສ້າງໂອກາດແກ່ຜູ້ປະມູນ ຢູ່ປະເທດທີ່ມີສະກຸນເງິນທີ່ອ່ອນຄ່າ ມີສິດເລືອກໃນການໃຊ້ສະກຸນເງິນ ທີ່ແຂງຄ່າກ່ວາ ເປັນພື້ນຖານໃຫ້ແກ່ ລາຄາສະເໜີປະມູນຂອງເຂົາເຈົ້າ ມີຄວາມໜັກແໜ້ນກ່ວາ.

(3) ຮັບປະກັນ ຄວາມຍຸດຕິທໍາ ແລະຄວາມໂປ່ງໃສ ໃນຂະບວນການປະເມີນຜົນການປະມູນ.

## 2.29 ສະກຸນເງິນໃນການປະມູນ

ເອກະສານເຊີນປະມູນ ຕ້ອງໄດ້ກໍານົດໃຫ້ ຜູ້ປະມູນ ອາດຈະສະເໜີລາຄາປະມູນຕາມສະກຸນເງິນໃດກໍໄດ້. ຖ້າຜູ້ປະມູນ ຫາກຕ້ອງການສະເໜີລາຄາປະມູນ ເປັນຈໍານວນເງິນ ທີ່ມມີສະກຸນເງິນຕາຕ່າງປະເທດຫຼາຍໆສະກຸນເງິນທີ່ແຕກຕ່າງກັນ ກໍສາມາດເຮັດໄດ້ ດ້ວຍເງື່ອນໄຂ ທີ່ບໍ່ເກີນ 3 (ສາມ) ສະກຸນເງິນຕາຕ່າງປະເທດ. ຍິ່ງໄປກວ່ານັ້ນ, ຜູ້ກູ້

---

44 ຕາມຄໍາສັບເງື່ອນໄຂການຄ້າສາກົນ (Incoterms 2010) , ຄໍາສັບ *(FCA)* ທີ່ກວມເອົາ "ບໍ່ຄິດໄລ່ຄ່າຂົນສົ່ງຮອດສະຖານທີ່" (ລະບຸຊື່ສະຖານທີ່) ແລະ ຄໍາສັບ *(CPT)* ທີ່ກວມເອົາ "ຈ່າຍຄ່າຂົນສົ່ງຮອດສະຖານທີ່" (ລະບຸຊື່ປາຍທາງ).

ຢືມ ອາດຈະຕ້ອງການໃຫ້ຜູ້ປະມູນ ກໍານົດສັດສ່ວນຂອງຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຢູ່ກັບທ້ອງຖິ່ນ ຕາມສະກຸນເງິນ[45] ຂອງປະເທດຜູ້ກູ້ຢືມ ປະກອບຢູ່ໃນລາຄາປະມູນໄດ້ອີກດ້ວຍ.

2.30 ຢູ່ໃນເອກະສານເຊີນປະມູນ ສໍາລັບການກໍ່ສ້າງ, ຜູ້ກູ້ຢືມ ອາດຈະຕ້ອງການ ໃຫ້ຜູ້ປະມູນ ກໍານົດລາຄາ ປະມູນ ເປັນສະກຸນເງິນພາຍໃນ (ທ້ອງຖິ່ນ) ທັງໝົດ ຄູ່ກັນກັບຄວາມຕ້ອງການການຊໍາລະ ເປັນສະກຸນ ເງິນຕາຕ່າງປະເທດ ໄດ້ຮອດ 3 (ສາມ) ສະກຸນເງິນ ສໍາລັບຄ່າໃຊ້ຈ່າຍຄາດຄະເນ ທີ່ເກີດຂຶ້ນຢູ່ນອກປະເທດຂອງປະເທດຜູ້ກູ້ຢືມ ຄິດໄລ່ເປັນສ່ວນຮ້ອຍ ຂອງລາຄາປະມູນລວມ ແລະ ອັດຕາແລກປ່ຽນ ທີ່ນໍາໃຊ້ ປະກອບເຂົ້າໃນການຄິດໄລ່ນີ້.

## 2.31 ການປ່ຽນສະກຸນເງິນ ເພື່ອສົມທຽບລາຄາປະມູນ

ລາຄາປະມູນ ແມ່ນລວມຍອດຂອງການຊໍາລະທັງໝົດ ຕາມສະກຸນເງິນແຕກຕ່າງກັນ ຕາມຜູ້ປະມູນ ໄດ້ ສະເໜີມາ. ເພື່ອເປົ້າໝາຍໃນການສົມທຽບລາຄາ, ລາຄາປະມູນ ຕ້ອງປ່ຽນເປັນເງິນສະກຸນດຽວ ຕາມທີ່ ຜູ້ກູ້ຢືມ ເລືອກເອົາ (ສະກຸນເງິນພາຍໃນ (ທ້ອງຖິ່ນ) ຫຼື ປ່ຽນເປັນສະກຸນເງິນຕາຕ່າງປະເທດທັງໝົດ) ແລະ ກໍານົດໄວ້ ຢູ່ໃນເອກະສານເຊີນປະມູນ. ຜູ້ກູ້ຢືມ ຕ້ອງປ່ຽນສະກຸນເງິນເຫຼົ່ານັ້ນ ຕາມອັດຕາແລກປ່ຽນ (ອັດຕາຂາຍ) ທີ່ໄດ້ຈາກແຫຼ່ງອ້າງອີງທາງການ ເຊັ່ນວ່າ: (ທະນາຄານກາງ) ຫຼື ທະນາຄານການຄ້າ (ທຸລະກິດ) ຫຼື ອ້າງອີງຕາມໜັງສືພິມ ເຜີຍແຜ່ລະດັບສາກົນທີ່ມີການພົວພັນດ້ານການຄ້າຄ້າຍຄືກັນໂດຍຖືເອົາຕາມວັນທີ ທີ່ໄດ້ກໍານົດລ່ວງໜ້າ ເຊິ່ງແຫຼ່ງອ້າງອີງ ແລະ ວັນທີ ທີ່ໄດ້ລະບຸໄວ້ ຢູ່ໃນເອກະສານ ເຊີນປະມູນ (ບໍ່ເກີນກ່ວາ 4 (ສີ່) ສັບປະດາ) ກ່ອນມື້ປິດຮັບຊອງປະມູນ ຫຼື ບໍ່ຊ້າກວ່າມື້ ມີຜົນໃຊ້ໄດ້ເດີມ ຂອງເອກະ ສານຍື່ນປະມູນ ໝົດອາຍຸ.

## 2.32 ສະກຸນເງິນ ໃນການຊໍາລະ

ການຊໍາລະ ຕາມມູນຄ່າສັນຍາ ຕ້ອງນໍາໃຊ້ສະກຸນເງິນດ່ຽວ ຫຼື ຫຼາຍສະກຸນເງິນ ດັ່ງທີ່ໄດ້ລະບຸໄວ້ໃນເອກະສານຍື່ນປະມູນ ຂອງຜູ້ທີ່ຊະນະການປະມູນ ຕາມເນື້ອໃນ ວັກ 2.29.

2.33 ເມື່ອໄດ້ກໍານົດລາຄາປະມູນ ຕ້ອງເປັນສະກຸນເງິນພາຍໃນ (ທ້ອງຖິ່ນ), ແຕ່ຜູ້ປະມູນ ຫາກສະເໜີຂໍຊໍາລະເປັນສະກຸນເງິນຕາຕ່າງປະເທດ ຄິດເປັນສ່ວນຮ້ອຍຂອງລາຄາປະມູນລວມ, ໃນການຊໍາລະ ຕ້ອງຖືເອົາຕາມອັດຕາແລກປ່ຽນ ນອນໃນເອກະສານຍື່ນປະມູນ ທັງນີ້ ກໍເພື່ອຮັບປະກັນໄດ້ເຖິງຄູນຄ່າ ຂອງສັດສ່ວນ ທີ່ເປັນສະກຸນເງິນຕາຕ່າງປະເທດ ຍັງຖືກຮັກສາໄວ້ຄືເກົ່າ ປາດສະຈາກການໄດ້ປຽບ ຫຼື ເສັຍປຽບ (ຫຼຸບທຶນ ຫຼື ກໍາໄລ) ອັນເນື່ອງມາຈາກຜົນຂອງອັດຕາແລກປ່ຽນນີ້.

## 2.34 ເງື່ອນໄຂ ແລະ ຮູບການ ການຊໍາລະ

ເງື່ອນໄຂການຊໍາລະ ຕ້ອງໃຫ້ສອດຄ່ອງກັບຫຼັກການການຄ້າສາກົນທີ່ປະຕິບັດກັນໂດຍທົ່ວໄປ ໃນການຊໍາລະຄ່າສິນຄ້າ, ຄ່າຮັບເໝົາ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ).

(1) ສໍາລັບສັນຍາສະໜອງສິນຄ້າ ຕ້ອງໄດ້ຊໍາລະເຕັມຈໍານວນ ຕາມການສະເໜີຊໍາລະ ພາຍຫຼັງ ການສົ່ງມອບ ແລະ ກວດກາສໍາເລັດລົງ ຍົກເວັ້ນໃນກໍລະນີ ຂອງສັນຍາ ທີ່ຕິດພັນກັບ ການຕິດຕັ້ງ ແລະ ການດໍາເນີນງານທົດລອງ ທີ່ອາດຈະຊໍາລະເປັນສັດສ່ວນ ພາຍຫຼັງທີ່ຜູ້ສະໜອງສິນຄ້າ ໄດ້ສໍາເລັດການປະຕິບັດພັນທະຂອງຕົນຕາມສັນຍາ. ຕາມທໍາມະດາ, ທະນາຄານໂລກ ໄດ້ຊຸກຍູ້ໃຫ້ນໍາໃຊ້ໜັງສືຄໍ້າປະກັນສິນເຊື່ອ *(letter of credit)* ເພື່ອຮັບປະກັນ ຄວາມວ່ອງໄວໃນການຊໍາລະໃຫ້ແກ່ຜູ້ສະໜອງສິນຄ້າ. ສ່ວນສັນຍາ ກ່ຽວກັບການສະໜອງອຸປະກອນ ແລະ ການປະ ກອບໂຮງຊ່າງ, ສ່ວນໃຫຍ່ແລ້ວ, ຕ້ອງກໍານົດໃຫ້ມີການຊໍາລະລ່ວງໜ້າ ທີ່ເໝາະສົມ. ສະເພາະ ສັນຍາ ທີ່ມີໄລຍະຍາວ ກໍອາດຊໍາລະຕາມຄວາມຄືບໜ້າຂອງວຽກງານ ຕະຫຼອດໄລຍະເວລາຂອງການຜະລິດ ຫຼື ການປະກອບນັ້ນໆ

---

45 ຕໍ່ໄປນີ້ ຮຽກວ່າ *"ສະກຸນເງິນ ທ້ອງຖິ່ນ"*

(2) ສຳລັບສັນຍາວຽກການກໍ່ສ້າງ ຕ້ອງໄດ້ກຳນົດ ເງິນລ່ວງໜ້າ ເພື່ອການເຄື່ອນຍ້າຍ ຕາມກໍລະນີທີ່ເໝາະສົມ, ເງິນລ່ວງໜ້າ ສຳລັບອຸປະກອນ ແລະ ວັດສະດຸຂອງຜູ້ຮັບເໝົາ, ການຊຳລະຕາມ ຄວາມຄືບໜ້າປົກກະຕິ ແລະ ເງິນຫັກໄວ້ເພື່ອຄ້ຳປະກັນການເປ່ເພ ທີ່ມີຈຳນວນເໝາະສົມ ກໍຕ້ອງສົ່ງຄືນໃຫ້ຜູ້ຮັບເໝົາ ພາຍຫຼັງທີ່ໄດ້ສຳເລັດການປະຕິບັດພັນທະຂອງຕົນຕາມສັນຍາ.

2.35 ບໍ່ວ່າກໍລະນີໃດໆ ຂອງການຊຳລະເງິນລ່ວງໜ້າ ເພື່ອການເຄື່ອນຍ້າຍ*(Mobilization)* ແລະ ລາຍຈ່າຍອື່ນໆທີ່ຄ້າຍຄື ພາຍຫຼັງທີ່ໄດ້ເຊັນສັນຍາສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ ບໍ່ແມ່ນທີ່ປຶກສາ) ນັ້ນຕ້ອງຕິດພັນກັບມູນຄ່າຄາດຄະເນຂອງລາຍຈ່າຍເຫຼົ່ານີ້ ເຊິ່ງໄດ້ລະບຸໄວ້ໃນ ເອກະ ສານເຊີນປະມູນ. ຈຳນວນເງິນ ແລະ ກຳນົດເວລາການຊຳລະຂອງເງິນລ່ວງໜ້າອື່ນໆ ເຊັ່ນ: ວັດສະດຸກໍ່ສ້າງ ທີ່ໄດ້ສົ່ງຮອດສະໜາມກໍ່ສ້າງນັ້ນ ກໍຕ້ອງໄດ້ລະບຸໄວ້ເຊັ່ນດຽວກັນ. ເອກະສານເຊີນປະມູນ ຍັງຕ້ອງໄດ້ກຳ ນົດໃຫ້ຈະແຈ້ງ ກ່ຽວກັບ ປະເພດຂອງເງິນລ່ວງໜ້າທີ່ຈະຊຳລະແຕ່ຕ້ອງການ ການຄ້ຳປະກັນເງິນຈ່າຍລ່ວງໜ້ານຳອີກ.

2.36 ເອກະສານເຊີນປະມູນ ຕ້ອງໄດ້ລະບຸ ຂໍ້ສະເໜີເງື່ອນໄຂ ແລະ ຮູບການ ການຊຳລະໄວ້ ແລະໄດ້ອະນຸຍາດ ໃຫ້ສະເໜີທາງເລືອກຂອງເງື່ອນໄຂ ແລະ ຮູບການ ການຊຳລະອື່ນ ຫຼື ບໍ່. ແຕ່ຖ້າເມື່ອ ອະນຸຍາດໃຫ້ມີ ເງື່ອນໄຂດັ່ງກ່າວ ກໍຈະກະທົບເຖິງການປະເມີນຜົນການປະມູນ ແນວໃດ.

## 2.37 ເອກະສານຍື່ນປະມູນສະເໜີທາງເລືອກ

ເອກະສານເຊີນປະມູນ ຕ້ອງກຳນົດໃຫ້ຈະແຈ້ງວ່າ ເວລາໃດ ທີ່ອະນຸຍາດໃຫ້ຜູ້ປະມູນ ຍື່ນຊອງປະມູນສະເໜີທາງເລືອກ, ຄວນຍື່ນດ້ວຍວິທີໃດ, ຄວນສະເໜີລາຄາປະມູນແບບໃດ ແລະ ພື້ນຖານຂອງ ການປະເມີນຜົນການປະມູນຂອງເອກະສານຍື່ນປະມູນສະເໜີທາງເລືອກ.

## 2.38 ເງື່ອນໄຂຂອງສັນຍາ

ເອກະສານສັນຍາ ຕ້ອງກຳນົດຄວາມໝາຍໃຫ້ຈະແຈ້ງ ກ່ຽວກັບຂອບເຂດວຽກຮັບເໝົາ ທີ່ຈະຕ້ອງປະຕິບັດ, ສິນຄ້າ ທີ່ຈະຕ້ອງສະໜອງ, ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຈະຕ້ອງສະໜອງ, ສິດ ແລະ ພັນທະຂອງ ຜູ້ກູ້ຢືມ ແລະ ຜູ້ສະໜອງ ຫຼື ຜູ້ຮັບເໝົາ. ຖ້າຜູ້ກູ້ຢືມ ຫາກໄດ້ວ່າຈ້າງວິຊາການເຊັ່ນວ່າ ວິສາວະກອນ, ສະຖາປານິກ ຫຼື ຜູ້ຈັດການ ການກໍ່ສ້າງ ເພື່ອເຮັດໜ້າທີ່ຕິດຕາມ ແລະ ຄຸ້ມຄອງສັນຍາ ກໍຕ້ອງໄດ້ກຳນົດ ສິດ ແລະ ໜ້າທີ່ ຂອງເຂົາເຈົ້າໃຫ້ຈະແຈ້ງເຊັ່ນດຽວກັນ. ນອກຈາກ ເງື່ອນໄຂທົ່ວໄປຂອງສັນຍາແລ້ວ ຍັງປະກອບມີ ເງື່ອນໄຂສະເພາະ ຂອງການຈັດຊື້ສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ສະເພາະ ທີ່ຈະດຳເນີນການຈັດຊື້-ຈັດຈ້າງລວມທັງທີ່ຕັ້ງຂອງໂຄງການ ປະກອບເຂົ້າ ນຳອີກດ້ວຍ. ສຳລັບເງື່ອນໄຂຂອງສັນຍາ ຕ້ອງມີການຈັດວາງຄວາມສົມດູນ ລະຫວ່າງ ຄວາມສ່ຽງ ແລະ ຄວາມຮັບຜິດຊອບ ທາງດ້ານກົດໝາຍ.

## 2.39 ໜັງສືຄ້ຳປະກັນການປະຕິບັດສັນຍາ ແລະ ເງິນຫັກໄວ້ເພື່ອຄ້ຳປະກັນການເປ່ເພ

ສຳລັບສັນຍາວຽກຮັບເໝົາກໍ່ສ້າງ ແລະ ສັນຍາແບບເບດເສດ ປະກອບມີ ການຄ້ຳປະກັນ ຕາມຈຳນວນເງິນ ທີ່ພຽງພໍ ທີ່ຈະປົກປ້ອງຜູ້ກູ້ຢືມ ໃນກໍລະນີ ທີ່ຜູ້ຮັບເໝົາ ບໍ່ປະຕິບັດຕາມສັນຍາ. ຜູ້ກູ້ຢືມ ຕ້ອງສະໜອງ ແບບຟອມຂອງໜັງສືຄ້ຳປະກັນນີ້ ແລະ ຈຳນວນເງິນ ຕາມທີ່ໄດ້ລະບຸໄວ້ ຢູ່ໃນເອກະສານເຊີນປະມູນ[46]. ຈຳນວນເງິນຄ້ຳປະກັນ ອາດຈະ

---

46 ຮູບແບບ ຂອງໜັງສືຄ້ຳປະກັນການປະຕິບັດສັນຍາ ຕ້ອງໃຫ້ສອດຄ່ອງກັບ ຕົວແບບມາດຕະຖານເອກະສານເຊີນປະມູນ *(SBDs)* ເຊິ່ງແມ່ນທະນາຄານ ຫຼື ສະຖາບັນການເງິນ ທີ່ມີຊື່ສຽງ ເປັນຜູ້ອອກໃຫ້ ເຊັ່ນວ່າ: ບໍລິສັດປະກັນໄພ, ຫຼື ບໍລິສັດຫຼັກຊັບ ຫຼື ບໍລິສັດສິນເຊື່ອ ທີ່ຜູ້ກູ້ຢືມ ໄດ້ເລືອກເອົາ. ຖ້າຫາກແມ່ນສະຖາບັນການເງິນ ທີ່ຕັ້ງຢູ່ນອກປະເທດຜູ້ກູ້ຢືມ ເປັນຜູ້ອອກໜັງສືຄ້ຳປະກັນໃຫ້, ສະຖາບັນດັ່ງກ່າວ ຕ້ອງມີ ສະຖາບັນການເງິນຕົວແທນ ທີ່ຕັ້ງຢູ່ພາຍໃນປະເທດຂອງຜູ້ກູ້ຢືມ ເພື່ອເຮດຜົນສາມາດບັງຄັບໃຊ້ໄດ້. ຜູ້ປະມູນ ໄດ້ຮັບອະນຸຍາດ ໃຫ້ຍື່ນໜັງສືຄ້ຳປະກັນ ໂດຍກົງ ເຊິ່ງແມ່ນທະນາຄານ ທີ່ຕົນເລືອກຢູ່ປະເທດ ທີ່ມີຄຸນລັກສະນະເໝາະສົມ ເປັນຜູ້ອອກໃຫ້.

ປ່ຽນແປງໄປຕາມປະເພດຂອງການຄໍ້າປະກັນ, ຈຸດພິເສດ ແລະ ລະດັບ ຄວາມສຳຄັນ ຂອງວຽກກໍ່ສ້າງ ຫຼື ປະກອບສິ່ງອຳນວຍຄວາມສະດວກຕ່າງໆ. ສ່ວນໜຶ່ງຂອງ ການຄໍ້າປະກັນນີ້ ຕ້ອງໄດ້ຕໍ່ກຳນົດໄລຍະເວລາໃຫ້ພຽງພໍ ນັບຈາກ ມື້ສຳເລັດວຽກກໍ່ສ້າງ ຫຼື ປະກອບ ສິ່ງອຳນວຍ ຄວາມສະດວກຕ່າງໆ ໂດຍກວມເອົາໄລຍະຄໍ້າປະກັນການເປ່ເພ ຫຼື ການບຳລຸງຮັກສາ ຈົນກວ່າຜູ້ກູ້ຢືມ ຮັບຮອງເອົາໃນຂັ້ນສຸດທ້າຍ. ສຳລັບສັນຍາວຽກການກໍ່ສ້າງ ອາດຈະຄິດເປັນ ສ່ວນຮ້ອຍຂອງ ເງິນຫັກໄວ້ເພື່ອຄໍ້າປະກັນການເປ່ເພ ຂອງການຊຳລະ ທີ່ເກີດຂຶ້ນ ໃນແຕ່ລະຄັ້ງ ຈົນກ່ວາຈະຮັບຮອງເອົາ ໃນຂັ້ນສຸດທ້າຍ. ຜູ້ຮັບເໝົາ ອາດຈະໄດ້ຮັບອະນຸຍາດ ໃຫ້ປ່ຽນແທນ ເງິນຫັກໄວ້ເພື່ອຄໍ້າປະກັນການເປ່ເພ ດ້ວຍຈຳນວນທຽບເທົ່າກັນກັບ ເງິນຄໍ້າປະກັນ ຕາມຮູບແບບ ຂອງໜັງສືຄໍ້າປະກັນ ຂອງທະນາຄານໂລກ ກຳນົດໄວ້ ຫຼື ການຄໍ້າປະກັນ ຫຼັງການຮັບຮອງເອົາເປັນການຊົ່ວຄາວ.

2.40 ສຳລັບສັນຍາສະໜອງສິນຄ້າ, ຄວາມຕ້ອງການໃຫ້ມີ ໜັງສືຄໍ້າປະກັນການປະຕິບັດສັນຍາ ແມ່ນຂຶ້ນຢູ່ກັບ ສະພາບຂອງຕະຫຼາດ ແລະ ການປະຕິບັດທົ່ວໄປດ້ານການຄ້າ ຕໍ່ກັບສະເພາະສິນຄ້າປະເພດນັ້ນໆ. ຜູ້ສະໜອງສິນຄ້າ ຫຼື ຜູ້ຜະລິດສິນຄ້າ ອາດຈະປະກອບ ການຄໍ້າປະກັນ ຕາມຈຳນວນເງິນ ທີ່ເໝາະສົມ ແລະ ສົມເຫດສົມຜົນ ເພື່ອປ້ອງກັນໃນກໍລະນີທີ່ ບໍ່ປະຕິບັດຕາມສັນຍາ. ຖ້າເຫັນວ່າຈຳເປັນ, ການຄໍ້າປະກັນ ຕ້ອງກວມໄປຮອດ ການຮັບປະກັນໃນການປະຕິບັດພັນທະ ແລະ ບໍ່ວ່າການຕິດຕັ້ງ ຫຼື ການດຳເນີນງານທົດລອງໃດໆ ໂດຍສອດຄ່ອງກັບ ຕົວແບບມາດຕະຖານເອກະສານເຊີນປະມູນ *(SDBs)* ທີ່ນຳໃຊ້ອີກດ້ວຍ.

## 2.41 ເນື້ອໃນມາດຕາກ່ຽວກັບຍ້ອງຍໍ ແລະທົດແທນຄ່າເສັຍຫາຍ

ຢູ່ໃນເງື່ອນໄຂຂອງສັນຍາ ຕ້ອງປະກອບມີ ຂໍ້ກຳນົດກ່ຽວກັບການຄໍ້າປະກັນຄວາມເສັຍຫາຍ ຫຼື ຂໍ້ກຳນົດຄ້າຍຄືຕາມຈຳນວນເງິນທີ່ເໝາະສົມ ເພື່ອໃນກໍລະນີທີ່ເກີດຕວາມຫຼ້າຊ້າ ໃນການສົ່ງມອບສິນຄ້າ, ກຳນົດເວລາສຳເລັດວຽກ, ຫຼື ຄວາມບົກຜ່ອງໃນການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ບໍ່ໄດ້ຕາມຄວາມຕ້ອງການ ເປັນເຫດໃຫ້ ຜູ້ກູ້ຢືມ ເກີດມີລາຍຈ່າຍເພີ່ມ, ຫຼື ສູນເສັຍ ລາຍຮັບ, ຫຼື ເສັຍຜົນປະໂຫຍດອື່ນໆ. ຂໍ້ກຳນົດ ອາດຈະວາງເງິນລາງວັນ *(bonus)* ໃຫ້ຜູ້ສະໜອງສິນຄ້າ ຫຼື ຜູ້ຮັບເໝົາ ທີ່ສຳເລັດວຽກຮັບເໝົາ ຫຼື ການສົ່ງມອບສິນຄ້າ ກ່ອນກຳນົດເວລາ ທີ່ໄດ້ລະບຸໄວ້ໃນສັນຍາ ໃນກໍລະນີທີ່ ວຽກທີ່ສຳເລັດ ຫຼື ການສົ່ງມອບ ກ່ອນເວລາ ໄດ້ນຳຜົນປະໂຫຍດມາໃຫ້ແກ່ຜູ້ກູ້ຢືມ.

## 2.42 ເຫດສຸດວິໃສ

ເງື່ອນໄຂຂອງສັນຍາ ຕ້ອງກຳນົດວ່າ ຄວາມບົກຜ່ອງຂອງທັງສອງຝ່າຍ (ຜູ້ກູ້ຢືມ ແລະ ຜູ້ສະໜອງສິນຄ້າ ຫຼື ຜູ້ຮັບເໝົາກໍ່ສ້າງ ຫຼື ຜູ້ສະໜອງການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ)) ໃນການປະຕິບັດພັນທະຂອງຕົນ ຕາມສັນຍາ ຈະບໍ່ພິຈາລະນາວ່າ ເປັນການຜິດສັນຍາ ຖ້າຄວາມບົກຜ່ອງດັ່ງກ່າວ ເປັນຜົນພວງຈາກ ເຫດການ ທີ່ເປັນເຫດສຸດວິໃສ ເຊິ່ງໄດ້ກຳນົດຄວາມໝາຍໄວ້ ໃນເງື່ອນໄຂຂອງສັນຍາ.

## 2.43 ກົດໝາຍນຳໃຊ້ ແລະ ການແກ້ໄຂຂໍ້ຂັດແຍ່ງ

ເງື່ອນໄຂຂອງສັນຍາ ຕ້ອງບັນຈຸເອົາ ຂໍ້ກຳນົດກ່ຽວຂ້ອງກັບ ກົດໝາຍນຳໃຊ້ ແລະ ເວທີການແກ້ໄຂ ຂໍ້ຂັດແຍ່ງ. ໃນພາກປະຕິບັດ, ການໄກ່ເກັ່ຍການຄ້າສາກົນ ເປັນໃຈກາງຂອງການໄກ່ເກັ່ຍ ແກ້ໄຂຂໍ້ຂັດແຍ່ງທີ່ມີຜົນດີ ຖ້າທຽບໃສ່ຮູບການແກ້ໄຂຂໍ້ຂັດແຍ່ງອື່ນໆ. ສະນັ້ນ, ທະນາຄານໂລກ ຈຶ່ງໄດ້ຮຽກຮ້ອງ ໃຫ້ຜູ້ກູ້ຢືມ ນຳໃຊ້ຮູບການຕັດສິນປະເພດນີ້ປະກອບເຂົ້າໃນສັນຍາ ການຈັດຊື້ ສິນຄ້າ,ການຮັບເໝົາກໍ່ສ້າງ ແລະການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຍົກເວັ້ນໃນກໍລະນີ ທີ່ທະນາຄານໂລກ ໄດ້ຕົກລົງເຫັນດີ ເປັນການສະເພາະ ທີ່ສະລະເງື່ອນໄຂດັ່ງກ່າວ ດ້ວຍເຫດຜົນທີ່ມີຫຼັກຖານຢັ້ງຢືນໄດ້ ເຊັ່ນວ່າ: ມີບັນດາລະບຽບການລະດັບຊາດ ແລະ ຂະບວນການໄກ່ເກັ່ຍ ທີ່ທຽບເທົ່າກັນ ຫຼື ສັນຍາໄດ້ມອບໃຫ້ ຜູ້ປະມູນ ຢູ່ປະເທດຂອງ ຜູ້ກູ້ຢືມເອງ. ທະນາຄານໂລກເອງ ກໍບໍ່ຕ້ອງຖືກແຕ່ງຕັ້ງໃຫ້ເປັນຜູ້ຕັດສິນ

ໄກ່ເກ່ຍ *(arbitrator)* ຫຼື ຖືກຂໍຮ້ອງເພື່ອໃຫ້ແຕ່ງຕັ້ງຜູ້ຕັດສິນໄກ່ເກ່ຍ[47]. ໃນກໍລະນີສັນຍາການກໍ່ສ້າງ, ສັນຍາສະໜອງອຸປະກອນ ແລະ ຕິດຕັ້ງ ແລະ ສັນຍາແບບຜູ້ດຽວຮັບຜິດຊອບລວມ (ລວມທັງແບບມອບຂໍກຸນແຈ), ຂໍ້ກຳນົດກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ຕ້ອງປະກອບມີກົນໄກການໄກ່ເກ່ຍ ເຊັ່ນວ່າ: ການສ້າງຕັ້ງ ສະພາຕັດສິນຂໍ້ຂັດແຍ່ງ ຫຼື ການແຕ່ງຕັ້ງຜູ້ຕັດສິນ *(prejudicator)* ເພື່ອຊຸກຍູ້ໃຫ້ການແກ້ໄຂຂໍ້ຂັດແຍ່ງໄດ້ຮັບການປະຕິບັດໄວຂຶ້ນ.

## ຄ. ການເປີດຊອງປະມູນ, ການປະເມີນຜົນ ແລະ ການມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ

### 2.44 ໄລຍະເວລາສຳລັບກະກຽມເອກະສານຍື່ນປະມູນ

ໄລຍະເວລາອະນຸຍາດໃຫ້ ເພື່ອກະກຽມ ແລະ ຍື່ນຊອງປະມູນ ຕ້ອງໄດ້ກຳນົດໄວ້ ໂດຍພິຈາລະນະເຖິງ ສະຖານະການສະເພາະຂອງໂຄງການ, ລະດັບຄວາມສຳຄັນ ແລະ ຄວາມສະຫຼັບສັບຊ້ອນຂອງສັນຍາ. ໂດຍທົ່ວໄປ, ຕໍ່ກັບການປະມູນເປີດກ້ວາງສາກົນ *(ICB)* ກໍບໍ່ຫຼຸດ 6 (ຫົກ) ສັບປະດາ ນັບຈາກມື້ອອກ ໜັງສືເຊີນເຂົ້າຮ່ວມປະມູນ ຫຼື ມື້ທີ່ປະກອບເອກະສານເຊີນປະມູນສຳເລັດ (ຄວາມພ້ອມຂອງເອກະສານ) ແລ້ວແຕ່ມື້ໃດ ມາຮອດລຸນ. ສຳລັບວຽກການກໍ່ສ້າງ ຂະໜາດໃຫຍ່ ຫຼື ປະກອບມີລາຍການອຸປະກອນ ທີ່ສະຫຼັບສັບຊ້ອນກ່ຽວຂ້ອງນັ້ນ, ໂດຍທົ່ວໄປ, ໄລຍະເວລານີ້ບໍ່ຫລຸດ 12 (ສິບສອງ) ເດືອນເພື່ອເອື້ອອຳ ນວຍໃຫ້ຜູ້ແຂ່ງຂັນປະມູນ ສາມາດດຳເນີນການກວດສອບກ່ອນການຍື່ນຊອງປະມູນ. ໃນກໍລະນີນີ້, ຜູ້ກູ້ຢືມ ຕ້ອງຊຸກຍູ້ ໃຫ້ຈັດກອງປະຊຸມກ່ອນການປະມູນ ແລະຈັດການລົງຢ້ຽມສະໜາມ. ຜູ້ປະມູນ ໄດ້ຮັບ ອະນຸຍາດໃຫ້ຍື່ນຊອງປະມູນ ຜ່ານທາງໄປສະນີ ຫຼື ຍື່ນດ້ວຍຕົນເອງ. ຜູ້ກູ້ຢືມ ອາດຈະນຳໃຊ້ລະບົບເອເລັກ ໂຕຣນິກ ເພື່ອອະນຸຍາດ ໃຫ້ຜູ້ປະມູນ ຍື່ນຊອງປະມູນ ຜ່ານທາງ ເອເລັກໂຕຣນິກ ຖ້າຫາກທະນາຄານໂລກ ເພິ່ງພໍໃຈກັບລະບົບທີ່ມີພຽງພໍ ລວມທັງຄວາມປອດໄພຂອງລະບົບ, ຮັກສາໄດ້ຄວາມຊື່ສັດ, ການຮັກສາເປັນຄວາມລັບ ແລະ ຄວາມຖືກຕ້ອງ ຂອງເອກະສານຍື່ນປະມູນ ແລະ ໃຊ້ລະບົບລາຍເຊັນເອເລັກໂຕຣນິກ ຫຼື ທຽບເທົ່າ ເພື່ອຮັກສາໄດ້ຂໍ້ຜູກມັດຂອງຜູ້ປະມູນ ແລະ ເອກະສານຍື່ນປະມູນຂອງຕົນ. ກຳນົດມື້ປິດຮັບ ແລະ ສະຖານທີ່ຮັບຊອງປະມູນຕ້ອງລະບຸໄວ້ຢູ່ໃນໜັງສືເຊີນເຂົ້າຮ່ວມປະມູນ.

### 2.45 ຂັ້ນຕອນການເປີດຊອງປະມູນ

ເວລາເປີດຊອງປະມູນ ຕ້ອງເປັນເວລາດຽວກັນກັບເວລາຂອງມື້ປິດຮັບຊອງປະມູນ ຫຼື ຖັດຈາກເວລານັ້ນ[48] ລວມທັງສະຖານທີ່ເປີດຊອງປະມູນ ກໍຕ້ອງໄດ້ແຈ້ງຢູ່ໃນ ໜັງສືເຊີນເຂົ້າຮ່ວມປະມູນ. ຜູ້ກູ້ຢືມ ຕ້ອງເປີດ ຊອງປະມູນ ທຸກໆຊອງທີ່ໄດ້ຮັບ ຕາມກຳນົດເວລາປິດຮັບຊອງປະມູນ ຢູ່ສະຖານທີ່ສະເພາະ ເຊິ່ງໄດ້ ກຳນົດໄວ້ ຢູ່ໃນເອກະສານເຊີນປະມູນໂດຍບໍ່ຕ້ອງຄຳນຶງເຖິງຈຳນວນຊອງປະມູນທີ່ໄດ້ຮັບ ຕາມກຳນົດ ເວລາປິດຮັບ. ໃນເວລາດຳເນີນການເປີດຊອງປະມູນ, ຜູ້ກູ້ຢືມ ບໍ່ຕ້ອງປຶກສາຫາລືກັນ ກ່ຽວກັບຊອງປະມູນ ບໍ່ວ່າຊອງປະມູນໃດ ທີ່ຄວນຮັບ ຫຼື ຊອງປະມູນໃດ ທີ່ຄວນປະຕິເສດ. ຊອງປະມູນ ຕ້ອງໄດ້ເປີດຕໍ່ໜ້າ ສາທາລະນະ; ຜູ້ປະມູນ ຫຼື ຜູ້ຕາງໜ້າຂອງເຂົາເຈົ້າ ຕ້ອງໄດ້ຮັບອະນຸຍາດ ໃຫ້ເຂົ້າຮ່ວມ (ອາດມາດ້ວຍ ຕົນເອງ ຫຼື ຜ່ານທາງເອເລັກໂຕຣນິກເມື່ອນຳໃຊ້ການປະມູນທາງເອເລັກໂຕຣນິກ). ຊື່ຜູ້ປະມູນ ແລະ ລາຄາ ສະເໜີປະມູນ ຂອງຊອງປະມູນແຕ່ລະຊອງ, ແລະ ເອກະສານຍື່ນປະມູນ ທາງເລືອກ (ຖ້າມີການສະເໜີ ແລະ ອະນຸຍາດ) ຕ້ອງໄດ້ອ່ານອອກສຽງ (ແລະປ້ອນຂໍ້ມູນລົງຂ່າວ ເມື່ອນຳໃຊ້ການປະມູນທາງເອເລັກໂຕຣນິກ) ແລະ ບັນທຶກໄວ້ ເມື່ອໄດ້ເປີດຊອງ. ສຳເນົາການບັນທຶກນີ້ ຕ້ອງໄດ້ສົ່ງໃຫ້ ທະນາຄານໂລກ ແລະ ຜູ້ປະມູນທຸກຄົນ ທີ່ໄດ້ຍື່ນຊອງປະມູນ ຕາມກຳນົດເວລາທັນທີ ສຳລັບຊອງປະມູນ ທີ່ໄດ້ຮັບ ຊ້າກ່ວາກຳ ນົດເວລາ

---

47 ເຖິງຢ່າງໃດກໍຕາມ, ເປັນທີ່ເຂົ້າໃຈວ່າ ເຈົ້າໜ້າທີ່ ຂອງສູນສາກົນ ເພື່ອການແກ້ໄຂຂໍ້ຂັດແຍ່ງໃນການລົງທຶນ (*International Centre for Settlement of Investment Disputes-ICSID)* ຄົງຍັງມີສິດ ທີ່ແຕ່ງຕັ້ງຜູ້ຕັດສິນໄກ່ເກ່ຍ ໂດຍອາໄສອຳນາດຂອງເຂົາເຈົ້າ ໃນນາມເຈົ້າໜ້າທີ່ຂອງສູນນີ້.

48 ເພື່ອໃຫ້ມີເວລາພຽງພໍ ທີ່ຈະນຳຊອງປະມູນ ໄປເຖິງສະຖານທີ່ ເພື່ອປະກາດຕໍ່ສາທາລະນະວ່າ ດຳເນີນການເປີດຊອງປະມູນ.

ເຊິ່ງໄດ້ລະບຸໄວ້ ຕະຫຼອດຮອດ ຊອງປະມູນທີ່ບໍ່ໄດ້ເປີດ ແລະ ບໍ່ໄດ້ອ່ານອອກສຽງ ໃນເວລາດຳເນີນການເປີດຊອງປະມູນ ຈະບໍ່ໄດ້ນຳມາພິຈາລະນາ.

## 2.46 ການໃຫ້ຄວາມກະຈ່າງແຈ້ງ ຫຼື ສະເໜີທາງເລືອກຂອງເອກະສານຍື່ນປະມູນ

ຍົກເວັ້ນໃນກໍລະນີ ທີ່ໄດ້ລະບຸໄວ້ ຕາມເນື້ອໃນ ວັກ 2.63 ແລະ 2.64 ຂອງຄູ່ມືແນະນຳສະບັບນີ້, ຜູ້ປະມູນ ຈະບໍ່ຖືກຂໍຮ້ອງ ຫຼື ໄດ້ຮັບອະນຸຍາດ ໃຫ້ແກ້ໄຂດັດແປງ ເອກະສານຍື່ນປະມູນຂອງເຂົາເຈົ້າ ລວມທັງ ການເພີ່ມ ຫຼື ຫຼຸດລາຄາສະເໜີປະມູນດ້ວຍຄວາມສະໝັກໃຈໃດໆ ຫຼັງມື້ປິດຮັບຊອງປະມູນ. ຜູ້ກູ້ຢືມ ສາມາດຂໍຄວາມກະຈ່າງແຈ້ງທີ່ຕ້ອງການ ຈາກຜູ້ປະມູນໄດ້ ເພື່ອດຳເນີນການປະເມີນຜົນ ແຕ່ບໍ່ສາມາດ ຂໍຮ້ອງ ຫຼື ອະນຸຍາດໃຫ້ຜູ້ປະມູນ ປ່ຽນແປງທາດແທ້ ຫຼື ລາຄາປະມູນຂອງເຂົາເຈົ້າໄດ້ ພາຍຫຼັງເປີດ ຊອງປະ ມູນແລ້ວ. ການສະເໜີຂໍ ຄວາມກະຈ່າງແຈ້ງຈາກຜູ້ກູ້ຢືມ ແລະ ການໃຫ້ຄຳຕອບ ຈາກຜູ້ປະມູນ ຕ້ອງເປັນລາຍລະອັກສອນ, ເປັນເອກະສານ ຫຼື ຜ່ານລະບົບເອເລັກໂຕຣນິກ ເປັນທີ່ເພິ່ງພໍໃຈຂອງທະນາ ຄານໂລກ[49].

## 2.47 ການຮັກສາເປັນຄວາມລັບ

ພາຍຫຼັງທີ່ໄດ້ເປີດຊອງປະມູນຕໍ່ໜ້າສາທາລະນະແລ້ວ, ບັນດາຂໍ້ມູນ ທີ່ພົວພັນເຖິງການພິຈາລະນາ, ການ ໃຫ້ຄວາມກະຈ່າງແຈ້ງ ແລະ ການປະເມີນຜົນການປະມູນ ແລະ ການສະເໜີມອບສັນຍາໃຫ້ແກ່ຜູ້ ຊະນະການປະມູນ ຈະບໍ່ສາມາດ ເປີດເຜີຍຕໍ່ຜູ້ປະມູນ ຫຼື ບຸກຄົນອື່ນໆ ທີ່ບໍ່ມີສ່ວນກ່ຽວຂ້ອງກັບ ຂະບວນການ ປະມູນ ຈົນກ່ວາຈະໄດ້ປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ.

## 2.48 ການກວດກາເອກະສານຍື່ນປະມູນ

ຜູ້ກູ້ຢືມ ຕ້ອງກວດກາເອກະສານຍື່ນປະມູນ ເພື່ອຮູ້ໄດ້ຂໍ້ມູນລຸ່ມນີ້:

(1) ຕອບສະໜອງໄດ້ຄຸນລັກສະນະເໝາະສົມ ທີ່ໄດ້ລະບຸໄວ້ ຕາມເນື້ອໃນ ວັກ 1.8, 1.9 ແລະ 1.10 ຂອງຄູ່ມືແນະນຳບໍ່.

(2) ໄດ້ລົງລາຍເຊັນຖືກຕ້ອງບໍ່.

(3) ໄດ້ຄັດໜັງສືຄ້ຳປະກັນທີ່ຕ້ອງການ ຫຼື ໜັງສືແຈ້ງຕ່າງໆ ທີ່ຕ້ອງການ ເຊິ່ງໄດ້ລົງລາຍເຊັນແລ້ວ ທີ່ໄດ້ລະບຸໄວ້ຕາມເນື້ອໃນວັກ 2.14 ຂອງຄູ່ມືແນະນຳບໍ່.

(4) ເປັນເອກະສານຍື່ນປະມູນ ທີ່ຕອບສະໜອງໄດ້ເງື່ອນໄຂ ຕາມເອກະສານເຊີນປະມູນບໍ່.

(5) ໂດຍທົ່ວໄປແລ້ວ ເອກະສານປະກອບຖືກຕ້ອງກັບຫຼັກການລວມບໍ່.

ຖ້າເອກະສານຍື່ນປະມູນ ລວມທັງ ໜັງສືຄ້ຳປະກັນການປະມູນທີ່ຕ້ອງການ ຫາກບໍ່ຕອບສະໜອງ ໄດ້ເງື່ອນໄຂໂດຍພື້ນຖານເຊັ່ນ ເນື້ອໃນມີການດັດແກ້ຈາກເດີມ, ມີການປ່ຽນແປງ ຂໍ້ກຳນົດ ແລະ ເງື່ອນໄຂ, ມາດຕະຖານນອນໃນເອກະສານເຊີນປະມູນ ຈະບໍ່ນຳມາພິຈາລະນາຕໍ່ໄປອີກ, ສະນັ້ນ, ຜູ້ກູ້ຢືມ ຈະບໍ່ ອະນຸຍາດ ຫຼື ເຊີນຜູ້ປະມູນ ມາເພື່ອກວດແກ້ ຫຼື ຖອນເນື້ອໃນທາດແທ້ ຫຼື ເງື່ອນໄຂຈຳກັດຕ່າງໆ ພາຍຫຼັງໄດ້ເປີດຊອງປະມູນແລ້ວ[50].

## 2.49 ການປະເມີນຜົນ ແລະ ສົມທຽບລາຄາປະມູນ

ເປົ້າໝາຍຂອງການປະເມີນຜົນການປະມູນ ແມ່ນເພື່ອໃຫ້ຜູ້ກູ້ຢືມ ສາມາດກຳນົດລາຄາສະເໜີປະມູນຈາກເອກະສານຍື່ນປະມູນແຕ່ລະຊອງໄດ້ ໂດຍຜ່ານການສົມທຽບລາຄາ ບົນພື້ນຖານທີ່ຖືວ່າເປັນລາຄາຜ່ານການປະເມີນແລ້ວ.

---

49 ໃຫ້ເບິ່ງ ວັກ 2.44.

50 ໃຫ້ເບິ່ງ ວັກ 2.50 ກ່ຽວກັບການກວດແກ້.

ອີງຕາມເນື້ອໃນລະບຸຢູ່ ວັກ 2.58 ໄດ້ມີການປະເມີນຜົນ ລາຄາສະເໜີປະມູນ ທີ່ມີ ລາຄາປະເມີນຕໍ່າສຸດ[51] ບໍ່ໝາຍວ່າ ຈໍາເປັນ ຕ້ອງຖືວ່າ ລາຄາສະເໜີປະມູນຕໍ່າສຸດ ຈະຖືກເລືອກເປັນຜູ້ຊະ ນະການປະມູນ ເພື່ອຈະມອບສັນຍາໃຫ້.

2.50 ລາຄາປະມູນ ທີ່ໄດ້ອ່ານອອກສຽງ ໃນເວລາເປີດຊອງປະມູນນັ້ນ, ບໍ່ວ່າກໍລະນີໃດໆ ຕ້ອງໄດ້ດັດປັບ ກວດແກ້ຄວາມຜິດພາດໃນການຄິດໄລ່ຄືນ. ເພື່ອເປົ້າໝາຍຮັບໃຊ້ໃຫ້ແກ່ການປະເມີນຜົນປະມູນ ຕ້ອງໄດ້ດັດປັບ ສິ່ງທີ່ບໍ່ເປັນທາດແທ້ ຫຼື ເງື່ອນໄຂຈໍາກັດ ທີ່ເປັນຈໍານວນເທົ່ານັ້ນ. ຂໍ້ກໍານົດການດັດປັບລາຄາ ທີ່ນໍາໃຊ້ໃນເວລາຈັດຕັ້ງປະຕິບັດສັນຍາ ບໍ່ໄດ້ນໍາມາພິຈາລະນາ ໃນເວລາດໍາເນີນການປະເມີນຜົນນີ້.

2.51 ການປະເມີນຜົນ ແລະ ສົມທຽບລາຄາປະມູນ ຕ້ອງຖືເອົາຕາມລາຄາ *(CIP)* ເຊິ່ງກວມເອົາ “ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ” (ລະບຸຊື່ປາຍທາງ) ສໍາລັບການສະໜອງສິນຄ້າ ທີ່ນໍາເຂົ້າ[52] ເປັນພື້ນຖານ ແລະ ຖືເອົາຕາມລາຄາ *(EXW)* ເຊິ່ງເປັນລາຄາໂຮງງານ ລວມກັບຄ່າຂົນສົ່ງພາຍໃນປະເທດ ແລະ ປະກັນໄພ ຮອດປາຍທາງ ສໍາລັບສິນຄ້າຜະລິດພາຍໃນປະເທດຂອງຜູ້ກູ້ຢືມ ລວມທັງຄ່າຕິດຕັ້ງ, ຄ່າຝຶກອົບຮົມ, ຄ່າດໍາເນີນງານທົດລອງ ແລະ ຄ່າບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ອື່ນໆຄ້າຍຄື[53] (ຖ້າມີ).

2.52 ນອກຈາກປັດໃຈດ້ານລາຄາ, ເອກະສານເຊີນປະມູນ ຕ້ອງໄດ້ລະບຸ ບັນດາປັດໃຈກ່ຽວຂ້ອງ ເພື່ອນໍາມາພິຈາລະນາໃນການປະເມີນຜົນການປະມູນ ແລະ ວິທີການນໍາໃຊ້ ເພື່ອເປົ້າໝາຍໃນການຕັດສິນໃຫ້ໄດ້ລາ ຄາປະເມີນຕໍ່າສຸດ. ສໍາລັບສິນຄ້າ ແລະ ອຸປະກອນ, ບັນດາປັດໃຈ ທີ່ພົວພັນເຖິງແຜນຊໍາລະ, ກໍານົດເວລາສົ່ງມອບ, ຄ່າດໍາເນີນງານ (ສິ້ນເປືອງ), ສະມັດຕະພາບ ແລະ ຄວາມເໝາະສົມ (ຕົງກັນ) *(Compatibility)* ຂອງອຸປະກອນ, ຄວາມພ້ອມຂອງການບໍລິການ ແລະ ເຄື່ອງອາໄຫຼ່ ແລະ ການຝຶກອົມຮົມທີ່ຕິດພັນ ລວມທັງຜົນປະໂຫຍດດ້ານສິ່ງແວດລ້ອມ ກໍອາດຈະນໍາມາພິຈາລະນາ. ບັນດາ ປັດໃຈ ທີ່ນອກເໜືອຈາກລາຄາ ທີ່ນໍາໃຊ້ເຂົ້າໃນການຕັດສິນເປັນລາຄາປະເມີນຕໍ່າສຸດນັ້ນ ຕ້ອງຕີລາຄາເປັນມູນຄ່າເງິນ ຕາມຂໍ້ກໍານົດ ການປະເມີນຜົນ ຢູ່ໃນເອກະສານເຊີນປະມູນ[54].

2.53 ສໍາລັບສັນຍາການກໍ່ສ້າງ ແລະ ສັນຍາແບບມອບຂໍກຸນແຈ, ຜູ້ຮັບເໝົາ ຮັບພາລະຄ່າພາສີ, ອາກອນ ແລະ ຄ່າທໍານຽມອື່ນໆທັງໝົດ[55], ສະນັ້ນ, ຜູ້ປະມູນເອງ ຕ້ອງນໍາເອົາບັນດາປັດໃຈເຫຼົ່ານີ້ ເພື່ອພິຈາລະນາ ກະກຽມເອກະສານຍື່ນປະມູນ. ການປະເມີນຜົນ ແລະ ສົມທຽບລາຄາປະມູນຕ້ອງຢູ່ບົນພື້ນຖານເຫຼົ່ານັ້ນ. ການປະເມີນຜົນວຽກຮັບເໝົາ ຕ້ອງຕີລາຄາເປັນມູນຄ່າເງິນ ຢ່າງເຄັ່ງຄັດ. ທະນາຄານໂລກ ຈະບໍ່ຮັບຮອງເອົາຫຼັກການທີ່ປະຕິເສດ ໂດຍອັດຕະໂນມັດ ຕໍ່ກັບລາຄາສະເໜີປະມູນ ທີ່ຕໍ່າກວ່າ ຫຼື ສູງກວ່າ ລາຄາຄາດຄະເນທີ່ໄດ້ກໍານົດລ່ວງໜ້າ. ຖ້າຫາກແມ່ນຕົວເວລາ ເປັນປັດໃຈສໍາຄັນ. ຖ້າວຽກທີ່ສໍາເລັດກ່ອນກໍານົດ ຈະມີຄູນຄ່າສໍາລັບຜູ້ກູ້ຢືມ ເຊິ່ງອາດນໍາມາພິຈາລະນາ

---

51 ໃຫ້ເບິ່ງ ວັກ 2.52.

52 ຜູ້ກູ້ຢືມ ອາດຈະຂໍລາຄາບົນນັ້ນຖານ *(Cost, Insurance, and Freightນ-CIF)* ເຊິ່ງກວມເອົາ “ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ” (ລະບຸດ່ານປາຍທາງຜູ້ຈັດຊື້) ແລະ ສົມທຽບລາຄາບົນພື້ນຖານດຽວກັນເທົ່ານັ້ນ,ເມື່ອສິນຄ້າໄດ້ຈັດສົ່ງທາງທະເລ ແລະ ບໍ່ໄດ້ບອນໃນຕູ້ຂົນສົ່ງ. ລາຄາ *(CIF)* ບໍ່ໄດ້ໃຊ້ກັບການຂົນສົ່ງອື່ນ ນອກຈາກການຂົນສົ່ງທາງທະເລ. ໃນກໍລະນີສິນຄ້າປະເພດຜະລິດສໍາເລັດຮູບ, ມັນບໍ່ໜ້າຈະເໝາະສົມ ທີ່ຈະເລືອກໃຊ້ ລາຄາ *(CIF)* ເພາະວ່າ ໂດຍປົກກະຕິ ສິນຄ້າເຫຼົ່ານີ້ ຕ້ອງບອນໃນຕູ້ຂົນສົ່ງ. ແຕ່ລາຄາ *(CIP)* ເຊິ່ງກວມເອົາ “ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ” (ລະບຸຊື່ປາຍທາງ) ສາມາດໃຊ້ກັບທຸກປະເພດພາຫະນະການຂົນສົ່ງ ລວມທັງການຂົນສົ່ງຫຼາຍຮູບແບບອີກດ້ວຍ.

53 ປັດໃຈ ທີ່ບໍ່ນໍາມາພິຈາລະນາ ໃນການປະເມີນຜົນການປະມູນ ມີ (1) ຄ່າພາສີ, ອາກອນ ແລະ ທໍານຽມອື່ນໆສໍາລັບສິນຄ້ານໍາເຂົ້າ ທີ່ໄດ້ສະເໜີຕາມລາຄາ CIP (ຈະບໍ່ລວມຄ່າພາສີ, ອາກອນອື່ນໆ. (2) ຄ່າອາກອນ ແລະ ທໍານຽມການຂາຍ ແລະ ອື່ນໆທີ່ຄ້າຍຄື ຕິດພັນກັບການຂາຍແລະຈັດສົ່ງສິນຄ້າ.

54 ກໍລະນີຍົກເວັ້ນສະເພາະ, ເມື່ອບໍ່ສາມາດກໍານົດຄວາມໝາຍລະອຽດຂອງມາດຕະຖານເຕັກນິກໄດ້ ຫຼື ປັດໃຈດ້ານລາຄາ ທີ່ບໍ່ສາມາດຕີມູນຄ່າເປັນເງິນໄດ້ ກໍອາດຈະເກີດຂຶ້ນໃນເວລາດໍາເນີນການຈັດຊື້-ຈັດຈ້າງ ທີ່ສະຫຼັບສັບຊ້ອນ ເຊັ່ນ: ວຽກງານຂໍ້ມູນຂ່າວສານເຕັກໂນໂລຊີ ແລະ ປຶ້ມຕໍາລາຮຽນເປັນຕົ້ນ.

55 ຍົກເວັ້ນໃນກໍລະນີ ທີ່ລະບຸໄວ້ຢ່າງອື່ນ ຢູ່ໃນເອກະສານເຊີນປະມູນ ສໍາລັບສັນຍາແບບມອບຂໍກຸນແຈບາງປະເພດ (ໃຫ້ເບິ່ງ ເນື້ອໃນ ວັກ 2.22).

ເປັນບັດທັດຖານປະກອບເຂົ້າໃນເອກະສານເຊີນປະມູນ ໂດຍເງື່ອນໄຂ ທີ່ໄດ້ກຳນົດຄວາມຍິນຍອມໃຫ້ປັບໃໝ ຖ້າຫາກບໍ່ສາມາດປະຕິບັດໄດ້ຕາມເງື່ອນໄຂຂອງສັນຍາໄດ້.

2.54 ຜູ້ກູ້ຢືມ ຕ້ອງເຮັດບົດລາຍງານການປະເມີນຜົນ ແລະ ສົມທຽບລາຄາປະມູນລະອຽດ ທັງໃຫ້ເຫດຜົນອ້າງອີງສະເພາະກ່ອນການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ. ຜູ້ກູ້ຢືມຕ້ອງປະກອບຂໍ້ມູນ ທີ່ຈຳເປັນທັງໝົດ ເປັນຢ່າງໜ້ອຍເຂົ້າໃນແບບຟອມມາດຕະຖານ ບົດລາຍງານຜົນການປະມູນຂອງທະນາຄານໂລກ ນຳໃຊ້ ຄຽງຄູ່ກັບ ຂໍ້ມູນອື່ນກ່ຽວຂ້ອງ ທີ່ທະນາຄານໂລກເຫັນສົມຄວນ.

## 2.55 ການໃຫ້ສິດທິພິເສດພາຍໃນປະເທດ

ອີງຕາມການຮ້ອງຂໍຂອງຜູ້ກູ້ຢືມ ແລະ ເງື່ອນໄຂລະບຸໄວ້ໃນແຜນຈັດຊື້-ຈັດຈ້າງ ທີ່ໄດ້ຕົກລົງເຫັນດີນຳກັນ ນອນຢູ່ໃນເອກະສານເຊີນປະມູນ ຈຶ່ງໄດ້ວາງ ຂອບເຂດການໃຫ້ສິດທິພິເສດພາຍໃນຂາດຕົວ ເຊິ່ງອາດຈະ ປະກອບເຂົ້າໃນການປະເມີນຜົນການປະມູນ ດັ່ງນີ້:

(1) ປະເພດສິນຄ້າ ທີ່ຜະລິດພາຍໃນປະເທດຂອງຜູ້ກູ້ຢືມ ກັບສິນຄ້າ ທີ່ນຳເຂົ້າຈາກຕ່າງປະເທດ.

(2) ປະເພດວຽກການກໍ່ສ້າງ ຢູ່ພາຍໃນບັນດາປະເທດທີ່ເປັນສະມາຊິກ ເຊິ່ງມີລວມຍອດຜະລິດຕະພັນແຫ່ງຊາດຕໍ່ຫົວຄົນ *(Gross National Product—GNP)*[56] ຫາກຕ່ຳກວ່າວົງເງິນທີ່ກຳນົດ ເມື່ອເວລາສົມທຽບລາຄາສະເໜີປະມູນ ຂອງບໍລິສັດຮັບເໝົາທີ່ມີຄຸນລັກສະນະເໝາະສົມ ພາຍໃນ ປະເທດ ກັບບໍລິສັດຮັບເໝົາຕ່າງປະເທດ.

2.56 ໃນເມື່ອໄດ້ອະນຸຍາດໃຫ້ນຳໃຊ້ສິດທິພິເສດ ຕໍ່ສິນຄ້າຜະລິດພາຍໃນ ແລະ ບໍລິສັດຮັບເໝົາພາຍໃນນັ້ນ, ການປະເມີນຜົນ ແລະ ສົມທຽບລາຄາປະມູນ ແມ່ນໃຫ້ອີງຕາມວິທີການ ແລະ ຂັ້ນຕອນ ທີ່ໄດ້ຊີ້ແຈ້ງໄວ້ ຢູ່ເອກະສານຊ້ອນທ້າຍ (2) ຂອງຄູ່ມືແນະນຳສະບັບນີ້.

## 2.57 ການຕໍ່ອາຍຸຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ

ຜູ້ກູ້ຢືມ ຕ້ອງດຳເນີນການປະເມີນຜົນການປະມູນ ແລະ ການມອບສັນຍາແກ່ຜູ້ຊະນະການປະມູນ ພາຍໃນ ໄລຍະເວລາອາຍຸຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ ໃຫ້ສຳເລັດ ເພື່ອຫຼີກລ້ຽງການຕໍ່ອາຍຸ ຖ້າບໍ່ຈຳເປັນ. ໃນກໍລະນີພິເສດທີ່ຈຳເປັນຕ້ອງໄດ້ຕໍ່ອາຍຸຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ, ຜູ້ກູ້ຢືມ ຕ້ອງສະ ເໜີຫາ ຜູ້ປະມູນທຸກບໍລິສັດ ເປັນລາຍລະອັກສອນ ກ່ອນມື້ໝົດອາຍຸ. ໄລຍະເວລາຂໍຕໍ່ອາຍຸຕ່ຳສຸດ ທີ່ຕ້ອງການ ແມ່ນກວມເອົາໄລຍະເວລາດຳເນີນການການປະເມີນຜົນ, ການຂໍຮັບຮອງທີ່ຈຳເປັນ ແລະ ການມອບ ສັນຍາໃຫ້ແກ່ຜູ້ຊະນະການປະມູນ ໃຫ້ສຳເລັດ. ໃນກໍລະນີສັນຍາລາຄາຕາຍຕົວ, ອາດຈະ ອະນຸຍາດ ໃຫ້ສະໜີຂໍຕໍ່ອາຍຸ ຄັ້ງທີ 2 ຫຼື ຄັ້ງຕໍ່ໆໄປໄດ້ ຖ້າຜູ້ກູ້ຢືມ ຫາກສະໜອງກົນໄກທີ່ເໝາະສົມ ໃນການ ປັບລາຄາ ທີ່ຜູ້ຊະນະການປະມູນສະເໜີມາ ເຊິ່ງນອນໃນຕົວແບບມາດຕະຖານເອກະສານ ເຊີນປະມູນ *(SDBs)* ທີ່ກ່ຽວຂ້ອງຂອງທະນາຄານໂລກ ເພື່ອສະທ້ອນໃຫ້ເຫັນເຖິງ ການເພີ່ມມູນຄ່າຂອງ ສັນຍາ ໃນໄລຍະເວລາຂໍຕໍ່ອາຍຸນັ້ນໆ. ເມື່ອມີການສະໜີຂໍຕໍ່ອາຍຸຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ, ຜູ້ປະມູນ ທຸກບໍລິສັດ ບໍ່ໄດ້ຖືກຂໍຮ້ອງ ຫຼື ໄດ້ຮັບອະນຸຍາດ ໃຫ້ປ່ຽນແປງລາຄາສະເໜີປະມູນ (ພື້ນຖານ) ຫຼື ເງື່ອນໄຂອື່ນໆຂອງເອກະສານຍື່ນປະມູນເຂົາເຈົ້າທີ່ໄດ້ສະເໜີມາ. ຜູ້ປະມູນ ມີສິດ ປະຕິເສດການສະເໜີຂໍຕໍ່ອາຍຸເອກະສານຍື່ນປະມູນ. ຖ້າເອກະສານເຊີນປະມູນ ຫາກໄດ້ລະບຸໃຫ້ປະກອບໜັງສືຄ້ຳປະກັນ ການ ປະມູນ, ຜູ້ປະມູນ ມີສິດ ປະຕິເສດການຕໍ່ອາຍຸ ແຕ່ບໍ່ຖືກຮິບເອົາໜັງສືຄ້ຳປະກັນການປະມູນໄປ ແລະຖືກຖືວ່າໝົດຄຸນວຸດທິໄປ. ສຳລັບຜູ້ປະມູນ ທີ່ມີຄວາມສະໝັກໃຈ ຕໍ່ອາຍຸຜົນໃຊ້ໄດ້ຂອງເອກະສານ ຍື່ນປະ ມູນຂອງເຂົາເຈົ້າ ກໍຕ້ອງສະໜອງ ໜັງສື ຄ້ຳປະກັນການປະມູນ ທີ່ໄດ້ຕໍ່ອາຍຸໃນໄລຍະເວລາທີ່ເໝາະສົມ.

56 ອ້າງອີງເຖິງ ຕົວເລກ ລວມຍອດຜະລິດຕະພັນແຫ່ງຊາດ ທີ່ທະນາຄານໂລກໄດ້ກຳນົດ ໃນແຕ່ລະປີ.

## 2.58 ການກວດກາຄຸນວຸດທິຂອງຜູ້ປະມູນຕາມຫຼັງ *(Postqulaification of Bidders)*

ຖ້າຜູ້ປະມູນຫາກບໍ່ໄດ້ຜ່ານການຄັດເລືອກຄຸນວຸດທິກ່ອນການປະມູນມາກ່ອນ, ຜູ້ກູ້ຢືມ ຕ້ອງກວດກາຄືນວ່າ ສຳລັບຜູ້ປະມູນ ທີ່ໄດ້ສະເໜີລາຄາປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດນັ້ນ ມີຄວາມສາມາດ ແລະ ຊັບພະຍາກອນ ເພື່ອປະຕິບັດສັນຍາ ຢ່າງມີປະສິດທິຜົນ ຕາມທີ່ໄດ້ສະເໜີໃນເອກະສານຍື່ນປະມູນ ຂອງຕົນ ຫຼື ບໍ່. ເອກະສານເຊີນປະມູນ ໄດ້ກຳນົດບັນທັດຖານທີ່ຕ້ອງການໄວ້ແລ້ວ, ແຕ່ຖ້າຜູ້ປະມູນ ຫາກບໍ່ສາມາດຕອບສະໜອງໄດ້ຕາມເງື່ອນໄຂດັ່ງກ່າວ ກໍສາມາດປະຕິເສດໄດ້. ໃນທຳນອງດຽວກັນນີ້, ຜູ້ກູ້ຢືມ ຕ້ອງກວດກາລັກສະນະດຽວກັນ ຕໍ່ຜູ້ປະມູນ ທີ່ໄດ້ສະເໜີລາຄາປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດລຳດັບຖັດໄປ.

## 2.59 ການມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ

ຜູ້ກູ້ຢືມ ຕ້ອງໄດ້ມອບສັນຍາແກ່ຜູ້ຊະນະການປະມູນ ທີ່ຕອບສະໜອງໄດ້ ເງື່ອນໄຂມາດຕະຖານ ດ້ານຄວາມສາ ມາດ ແລະ ຊັບພະຍາກອນ ທີ່ເໝາະສົມ ພາຍໃນໄລຍະເວລາອາຍຸຜົນໃຊ້ໄດ້ຂອງເອກະສານຍື່ນປະມູນ ພາຍຫຼັງທີ່ໄດ້ພິຈາລະນາຜ່ານເງື່ອນໄຂລຸ່ມນີ້:

(1) ຖືວ່າຕອບສະໜອງໄດ້ເງື່ອນໄຂຕົ້ນຕໍພື້ນຖານ ຂອງເອກະສານເຊີນປະມູນ.

(2) ຖືວ່າໄດ້ສະເໜີລາຄາປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດ[57].

ຕາມເງື່ອນໄຂຂອງສັນຍາ, ຜູ້ປະມູນ ຈະບໍ່ຖືກຂໍຮ້ອງໃຫ້ຮັບຜິດຊອບ ຕໍ່ວຽກຮັບເໝົາທີ່ບໍ່ໄດ້ລະບຸໄວ້ ຢູ່ໃນ ເອກະສານເຊີນປະມູນ ຫຼື ໄດ້ຮັບອະນຸຍາດໃຫ້ດັດແກ້ເອກະສານຍື່ນປະມູນເດີມ ເພື່ອຊະນະການປະມູນ.

## 2.60 ການປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ

ຜູ້ກູ້ຢືມ ຕ້ອງຮັບປະກັນວ່າ ການອອກປະກາດ ຜູ້ຊະນະການປະມູນ ຕ້ອງປະຕິບັດຕາມຂັ້ນຕອນ ທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ (1), ວັກ 7.

## 2.61 ການປະຕິເສດ/ເອກະສານຍື່ນປະມູນທັງໝົດ

ໂດຍປົກກະຕິ, ເອກະສານເຊີນປະມູນ ໄດ້ກຳນົດໃຫ້ຜູ້ກູ້ຢືມ ອາດຈະປະຕິເສດເອກະສານຍື່ນປະມູນ ທັງໝົດໄດ້. ການປະຕິເສດເອກະສານຍື່ນປະມູນທັງໝົດ ດຳເນີນການໄດ້ ກໍຕໍ່ເມື່ອພິຈາລະນາເຫັນວ່າ ຂາດການແຂ່ງຂັນ ທີ່ມີປະສິດທິຜົນ, ຫຼື ເງື່ອນໄຂເອກະສານຍື່ນປະມູນທັງໝົດ ບໍ່ສາມາດຕອບສະໜອງໄດ້ເງື່ອນໄຂຕົ້ນຕໍ, ບໍ່ມີຜູ້ປະມູນໃດໄດ້ເງື່ອນໄຂຕາມບັນທັດຖານຄຸນວຸດທິທີ່ກຳນົດໄວ້, ຫຼື ລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດ ຂອງຜູ້ທີ່ຊະນະການປະມູນນັ້ນ ພັດຍັງສູງກ່ວາມູນຄ່າຄາດຄະເນຫຼາຍສຸດ ຫຼື ງົບປະມານທີ່ມີຢູ່ຫຼາຍສົມຄວນ. ການຂາດການແຂ່ງຂັນ ບໍ່ໄດ້ຈຳກັດ ຢູ່ແຕ່ຈຳນວນຂອງ ຜູ້ປະມູນດ້ານ ດຽວ. ເຖິງແມ່ນວ່າ ຈະໄດ້ຮັບພຽງແຕ່ເອກະສານຍື່ນປະມູນສະບັບດຽວ ແຕ່ຜ່ານຂັ້ນຕອນການປະມູນ ກໍຍັງອາດຈະພິຈາລະນາວ່າ ມີຜົນໃຊ້ໄດ້ ຖ້າຫາກໄດ້ລົງຂ່າວໂຄສະນາເປັນທີ່ເພິ່ງພໍໃຈແລ້ວ, ບັນທັດຖານ ດ້ານຄຸນວຸດທິ ກໍບໍ່ໄດ້ເຄັ່ງຄັດຈົນເກີນຄວນ ແລະ ລາຄາກໍສົມເຫດສົມຜົນເມື່ອສົມທຽບກັບ ລາຄາທ້ອງຕະຫຼາດ. ຖ້າຫາກໄດ້ປະຕິເສດເອກະສານຍື່ນປະມູນທັງໝົດ, ຜູ້ກູ້ຢືມ ຕ້ອງໄດ້ທົບທວນຄືນ ເຖິງສາຍເຫດ ແລະ ເຫດຜົນໃນການຕັດສິນປະຕິເສດເອກະສານຍື່ນປະມູນທັງໝົດ ແລະ ປັບປຸງແກ້ໄຂເອກະສານເຊີນປະມູນຄືນໃໝ່ ໃຫ້ເໝາະສົມ[58] ເພື່ອດຳເນີນການເຊີນເຂົ້າຮ່ວມປະມູນຄືນໃໝ່. ສ່ວນບັນທັດຖານດ້ານຄຸນວຸດທິ ອາດຈະປັບປຸງຄືນໃໝ່ໄດ້ ກໍຕໍ່ເມື່ອເຫັນວ່າ ຜ່ານມາມັນສູງຈົນເກີນຄວນເທົ່ານັ້ນ.

---

57 ອ້າງອີງເຖິງ "ຜູ້ປະມູນ ທີ່ຖືກຕີລາຄາວ່າຕ່ຳສຸດ" (Lowest evaluated bidder) ແລະ "ເອກະສານຍື່ນປະມູນທີ່ຖືກຕີລາຄາວ່າຕ່ຳສຸດ" (Lowest evaluated bid) ຕາມລຳດັບ.

58 ການປັບປຸງແກ້ໄຂ ອາດຄະດິດພັນກັບຂອບເຂດ ຫຼື ເງື່ອນໄຂຂອງສັນຍາ, ຫຼື ບັນທັດຖານ ດ້ານຄຸນວຸດທິຕ່ຳສຸດ (ການກວດກາຄຸນວຸດທິຂອງຜູ້ປະມູນຕາມຫຼັງ, postqualification) (ໃນກໍລະນີທີ່ ບໍ່ມີການຄັດເລືອກຄຸນວຸດທິກ່ອນການປະມູນ, prequalification), ຫຼື ການອອກແບບ ແລະ ມາດຕະຖານເຕັກນິກ ແລະ ອື່ນໆ , ຫຼື ລວມເຂົ້າກັນ.

2.62 ຖ້າພິຈາລະນາຫາກເຫັນວ່າ ໃນພາກປະຕິບັດແລ້ວ ການລົງຂ່າວໂຄສະນາຄືນໃໝ່ນັ້ນ ເຫັນບໍ່ສົມຄວນ ຫຼື ການປະຕິເສດເອກະສານຍື່ນປະມູນທັງໝົດ ຍ້ອນບໍ່ສາມາດຕອບສະໜອງໄດ້ເງື່ອນໄຂ ກໍອາດຈະອອກໜັງສືເຊີນເຂົ້າຮ່ວມປະມູນຄືນໃໝ່ ພາຍຫຼັງທີ່ທະນາຄານໂລກຮັບຮອງເອົາ ໂດຍເຊີນເອົາ ທຸກໆບໍລິສັດທີ່ໄດ້ຜ່ານການຄັດເລືອກຄຸນວຸດທິໃນເບື້ອງຕົ້ນມາກ່ອນແລ້ວ, ຫຼື ໃນເມື່ອຫາກບໍ່ມີ ບໍລິສັດທີ່ຜ່ານ ການຄັດເລືອກຄຸນວຸດທິກ່ອນການປະມູນມາກ່ອນ ກໍໃຫ້ເຊີນເອົາທຸກໆບໍລິສັດ ທີ່ໄດ້ຊື້ຊອງປະມູນໃນເບື້ອງຕົ້ນ. ໃນກໍລະນີພິເສດ, ທະນາຄານໂລກ ອາດຈະເຫັນດີ ໃຫ້ເຊີນຄືນ ສະເພາະແຕ່ບໍລິສັດ ທີ່ໄດ້ຍື່ນເອກະສານປະມູນ ໃນຮອບທຳອິດເທົ່ານັ້ນ.

2.63 ການປະຕິເສດ ເອກະສານຍື່ນປະມູນທັງໝົດ ແລະ ດຳເນີນການເຊີນເຂົ້າຮ່ວມປະມູນຄືນໃໝ່ ໂດຍນຳໃຊ້ເອກະສານເຊີນປະມູນ ແລະ ເອກະສານສັນຍາສະບັບເດີມ ເພື່ອເປົ້າໝາຍຕົ້ນຕໍທີ່ຄາດວ່າຈະໄດ້ຮັບ ລາຄາສະເໜີປະມູນທີ່ຕ່ຳກວ່າ ແມ່ນບໍ່ຄວນປະຕິບັດ. ຖ້າລາຄາສະເໜີປະມູນ ທີ່ຕອບສະໜອງໄດ້ເງື່ອນ ໄຂຕົ້ນຕໍ ແລະ ຖືວ່າເປັນລາຄາປະເມີນຕ່ຳສຸດ ຫາກຍັງສູງກວ່າມູນຄ່າຄາດຄະເນຫຼ້າສຸດຫຼາຍສົມຄວນຢູ່, ຜູ້ກູ້ຢືມ ຕ້ອງໄດ້ທົບທວນຄືນ ເຖິງສາຍເຫດເຮັດໃຫ້ເກີດມີລາຄາສູງ ແລະ ພິຈາລະນາ ເພື່ອດຳເນີນການປະມູນຄືນໃໝ່ ເຊິ່ງໄດ້ກ່າວໄວ້ຕາມເນື້ອໃນວັກເທິງແລ້ວ. ອີກທາງເລືອກນຶ່ງ, ແທນທີ່ຈະເປັນການປະມູນຄືນໃໝ່, ຜູ້ກູ້ຢືມ ອາດຈະເຈລະຈາກັບ ຜູ້ປະມູນ ທີ່ໄດ້ສະເໜີລາຄາປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດນັ້ນ ເພື່ອໄດ້ມາສັນຍາ ທີ່ໜ້າເພິ່ງພໍໃຈ ທີ່ໄດ້ຫຼຸດມູນຄ່າສັນຍາລົງໄດ້ໂດຍຜ່ານການຫຼຸດຂອບເຂດໜ້າວຽກ ແລະ/ຫຼື ການຈັດສັນ ຄວາມສ່ຽງ ແລະ ຄວາມຮັບຜິດຊອບ ຄືນໃໝ່. ເຖິງຢ່າງໃດກໍຕາມ, ຖ້າການຫຼຸດຂອບເຂດໜ້າວຽກລົງ ຫຼື ການປັບປຸງແກ້ໄຂເອກະສານສັນຍາ ຫາກຫຼາຍເກີນຄວນ ກໍອາດຈະດຳເນີນການປະມູນຄືນໃໝ່.

2.64 ກ່ອນຈະດຳເນີນການປະຕິເສດເອກະສານຍື່ນປະມູນທັງໝົດ, ການເຊີນເຂົ້າຮ່ວມປະມູນຄືນໃໝ່ ຫຼື ການເຈລະຈາກັບຜູ້ປະມູນ ທີ່ໄດ້ສະເໜີລາຄາປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດນັ້ນ ຕ້ອງໄດ້ຮັບຮອງຈາກທະນາຄານໂລກເສັຍກ່ອນ,

## 2.65 ການຕອບຂໍ້ຊັກຖາມຂອງຜູ້ປະມູນໂດຍຜູ້ກູ້ຢືມໃຫ້ແກ່

ໂດຍອ້າງອີງເຖິງ ການປະກາດຜູ້ຊະນະການປະມູນ ຕາມເນື້ອໃນວັກ 2.60 ແລະໃບຊ້ອນທ້າຍ (1), ວັກ 7. ຜູ້ກູ້ຢືມຕ້ອງໄດ້ກຳນົດໄວ້ວ່າ ບໍ່ວ່າຜູ້ປະມູນໃດກໍຕາມ ຫາກຕ້ອງການສອບຖາມເພື່ອຊາບເຖິງເຫດຜົນ ທີ່ເອກະສານຍື່ນປະມູນຂອງຕົນ ບໍ່ໄດ້ຖືກເລືອກເອົາ ກໍຄວນຈະສະເໜີຂໍຄຳອະທິບາຍຈາກຜູ້ກູ້ຢືມໄດ້. ຜູ້ກູ້ຢືມ ຕ້ອງໃຫ້ຄຳອະທິບາຍເຖິງເຫດຜົນ ທີ່ເອກະສານຍື່ນປະມູນດັ່ງກ່າວ ບໍ່ໄດ້ຖືກເລືອກເອົາ ເປັນ ລາຍລະອັກສອນໂດຍທັນທີ. ແຕ່ຖ້າຜູ້ປະມູນຫາກສະເໜີຈັດກອງປະຊຸມຕອບຄຳຊັກຖາມ, ຄ່າໃຊ້ຈ່າຍທັງໝົດ ໃນການຈັດກອງປະຊຸມດັ່ງກ່າວ ຕ້ອງຕົກເປັນພາລະຂອງຜູ້ປະມູນ.

## ໆ. ການປະມູນເປີດກວ້າງສາກົນ ແບບກະທັດລັດ *(Modified ICB)*

### 2.66 ການດຳເນີນງານ ກ່ຽວຂ້ອງ ກັບແຜນນຳເຂົ້າ[59]

ສຳລັບການກູ້ຢືມ ທີ່ໄດ້ສະໜອງທຶນ ສະເພາະແຜນນຳເຂົ້າ (Program of imports) ເທົ່ານັ້ນ ກໍອາດຈະນຳໃຊ້ຮູບການ ການປະມູນເປີດກ້ວາງສາກົນ *(ICB)* ດ້ວຍການລົງຂ່າວແບບກະທັດລັດ ແລະ ຂໍ້ກຳນົດ ດ້ານສະກຸນເງິນສຳລັບສັນຍາທີ່ມີມູນຄ່າສູງ ເຊິ່ງໄດ້ກຳນົດໄວ້ ຢູ່ໃນສັນຍາກູ້ຢືມ[60].

2.67 ຂໍ້ກຳນົດແບບກະທັດລັດ ນຳໃຊ້ກັບການແຈ້ງການປະມູນ ສຳລັບການຈັດຊື້-ຈັດຈ້າງ ຜ່ານຮູບການ ການປະມູນເປີດກ້ວາງສາກົນ *(ICB)* ບໍ່ຮຽກຮ້ອງໃຫ້ມີການແຈ້ງການປະມູນຈັດຊື້-ຈັດຈ້າງທົ່ວໄປ ພຽງແຕ່ການແຈ້ງການປະມູນຈັດຊື້-ຈັດຈ້າງສະເພາະ ໂດຍລົງຂ່າວໜັງສືພິມ ທີ່ແຈກຢາຍພາຍໃນປະເທດຂອງຜູ້ກູ້ຢືມ ໜຶ່ງປະເພດ ເປັນຢ່າງໜ້ອຍ ຫຼື ຈົດໝາຍເຫດທາງລັດຖະການ ຫຼືຜ່ານ ເວັບໄຊ ຫຼື ເອເລັກໂຕຣນິກ ທີ່ນຳໃຊ້ຢ່າງກ້ວາງຂວາງ ເຊິ່ງທັງພາຍໃນ ແລະ ຕ່າງປະເທດສາມາດເຂົ້າຫາໄດ້ ໂດຍບໍ່ເສັຍຄ່າ ຄຽງຄູ່ກັນກັບ ເວັບໄຊ ທຸລະກິດພັດທະນາຂອງອົງການ ສະຫະປະຊາຊາດ *(UNDB online)* ແລະເວັບໄຊຂອງທະນາ ຄານໂລກ ໂດຍອາດຈະຫຍໍ້ໄລຍະເວລາກະກຽມເອກະສານຍື່ນປະມູນລົງ ໃຫ້ເຫຼືອແຕ່ 4 (ສີ່) ສັບປະດາ. ເອກະສານເຊີນປະມູນ ແລະ ການຊຳລະ ອາດຈະຈຳກັດ ຢູ່ໜຶ່ງ ສະກຸນເງິນ (ສະກຸນເງິນດຽວ) ທີ່ໄດ້ນຳໃຊ້ໃນຂົງເຂດການຄ້າສາກົນຢ່າງກ້ວາງຂວາງ.

### 2.68 ການຈັດຊື້ ສິນຄ້າທົ່ວໄປ (ລວມທັງປະເພດສິນຄ້າ ທີ່ນຳໃຊ້ໄປຜະລິດຕໍ່) *(Commodities)*

ລາຄາທ້ອງຕະຫຼາດ ຕໍ່ກັບສິນຄ້າທົ່ວໄປ (ລວມທັງປະເພດສິນຄ້າ ນຳໃຊ້ໄປຜະລິດຕໍ່) ບາງປະເພດເຊັ່ນວ່າ: ອາຫານປະເພດເມັດ, ອາຫານສັດ, ນໍ້າມັນຄົວກິນ, ນໍ້າມັນເຊື້ອເພີງ, ປຸຍ ແລະ ໂລຫະ ມີການເໜັງຕີງຂຶ້ນລົງ ຕາມສະພາບຄວາມຕ້ອງການ ແລະ ການສະໜອງ ໃນໄລຍະເວລາໃດໜຶ່ງ. ລາຄາສິນຄ້າດັ່ງກ່າວຫຼາຍປະເພດ ກໍໄດ້ຈາກຕະຫຼາດສິນຄ້າທີ່ໄດ້ສ້າງຕັ້ງຂຶ້ນ. ການຈັດຊື້ ແມ່ນໄດ້ເຊັນສັນຍາ ໃຫ້ການສະໜອງເປັນຫຼາຍໆຄັ້ງ ຕາມປະລິມານເປັນສ່ວນໆ ເພື່ອຮັບປະກັນຄວາມໝັ້ນຄົງຂອງການສະໜອງ ແລະ ສັ່ງຊື້ເປັນຫຼາຍໆຄັ້ງ ໃນໄລຍະເວລາໃດໜຶ່ງ ເພື່ອຄວາມໄດ້ປຽບຂອງສະພາບການຕະຫຼາດທີ່ເອື້ອອຳນວຍ ແລະ ເກັບມ້ຽນໃນສາງໜ້ອຍ. ການເຊີນເຂົ້າຮ່ວມປະມູນ ເປັນແຕ່ລະໄລຍະ ແມ່ນອີງຕາມບັນຊີລາຍຊື່ ຂອງ ຜູ້ປະມູນ ທີ່ຜ່ານການຄັດເລືອກກ່ອນການປະມູນ ແລະ ອາດຈະໃຫ້ສະເໜີລາຄາ ທີ່ຕິດພັນກັບລາຄາ ທ້ອງຕະຫຼາດ ໃນເວລາ ຫຼື ກ່ອນການຈັດສົ່ງ. ອາຍຸພົນໃຊ້ໄດ້ຂອງເອກະສານຍື່ນປະມູນຕ້ອງສັ້ນລົງ ເທົ່າທີ່ເປັນໄປໄດ້. ການໃຊ້ສະກຸນເງິນດຽວ ທີ່ໃຊ້ກັນປົກກະຕິໃນການຮຽກລາຄາສິນຄ້າຕາມທ້ອງຕະຫຼາດ ອາດ ຈະນຳໃຊ້ເຂົ້າໃນການປະມູນ ແລະ ຊຳລະສະສາງ. ສະກຸນເງິນ ຕ້ອງກຳນົດ ຢູ່ໃນເອກະສານ ເຊີນປະມູນ. ຢູ່ໃນເອກະສານເຊີນປະມູນ ຕ້ອງອະນຸຍາດໃຫ້ ດຳເນີນການປະມູນ ໂດຍຜ່ານທາງ ໂທລະເລກ ຫຼື ໂທລະສານ ແລະ ຍື່ນຊອງປະມູນ ຜ່ານທາງເອເລັກໂຕຣນິກໄດ້.ໃນກໍລະນີນີ້ ກໍບໍ່ ຈຳເປັນປະກອບໜັງສືຄໍ້າປະກັນການປະມູນ ຫຼື ອາຍຸການພົນໃຊ້ໄດ້ຂອງໜັງສືຄໍ້າປະກັນການປະມູນ ຂອງຜູ້ປະມູນ ທີ່ຜ່ານການຄັດເລືອກຄຸນວຸດທິກ່ອນການປະມູນຄ້າງໄວ້ ກໍບໍ່ຈຳເປັນຕ້ອງຕໍ່ອາຍຸ. ມາດຕະ ຖານເງື່ອນໄຂຂອງສັນຍາ ແລະ ແບບຟອມ ທີ່ສອດຄ່ອງກັບການປະຕິບັດທົ່ວໄປຕາມທ້ອງຕະ ຫຼາດ ກໍຕ້ອງໄດ້ນຳໃຊ້.

---

59 ໃຫ້ເບິ່ງ ວັກ 3.12 ນຳອີກ

60 ຕາມທຳມະດາ, ການຈັດຊື້-ຈັດຈ້າງ ສຳລັບສັນຍາ ທີ່ມີມູນຄ່າໜ້ອຍກ່ວາ ຕ້ອງໃຫ້ສອດຄ່ອງກັບຫຼັກການທີ່ແມ່ນອົງກອນເອກະຊົນ ຫຼື ນິຕິບຸກຄົນ ເປັນຜູ້ດຳເນີນການນຳເຂົ້າ, ຫຼື ປະຕິບັດຕາມຮູບແບບການຄ້າທີ່ໄດ້ຕັ້ງຂຶ້ນ ເຊິ່ງທະນາຄານໂລກຮັບຮອງເອົາໄດ້ ແລະ ໄດ້ອະທິບາຍ ຕາມເນື້ອໃນ ວັກ 3.13.

# ໝວດທີ 3. ການຈັດຊື້-ຈັດຈ້າງ ດ້ວຍຮູບການອື່ນໆ

## 3.1 ເນື້ອໃນທົ່ວໄປ

ໃນໝວດນີ້ ຈະອະທິບາຍເຖິງ ການນຳໃຊ້ຮູບການຈັດຊື້-ຈັດຈ້າງອື່ນໆ ເຊິ່ງນຳໃຊ້ເມື່ອເຫັນວ່າການປະມູນ ເປີດກວ້າງສາກົນ *(ICB)* ບໍ່ເປັນຮູບການປະມູນ ທີ່ປະຢັດ (ເສດຖະກິດ) ແລະ ມີປະສິດທິຜົນທີ່ສຸດ ແລະໃນກໍລະນີທີ່ເຫັນວ່າຮູບການອື່ນໆ ມີຄວາມເໝາະສົມກວ່າ[61] ຫຼື ເມື່ອທະນາຄານໂລກ ໄດ້ຕົກລົງເຫັນດີ ໃຫ້ນຳໃຊ້ ລະບົບການຈັດຊື້-ຈັດຈ້າງແບບເປີດກ້ວາງ ຂອງປະເທດຜູ້ກູ້ຢືມ ຕາມເນື້ອໃນ ວັກ 3.20 ທີ່ນະໂຍບາຍຂອງທະນາຄານໂລກ ທີ່ມີຕໍ່ການໃຫ້ສິດທິພິເສດ ສຳລັບສິນຄ້າຜະລິດພາຍໃນ, ບໍລິສັດຮັບເໝົາພາຍໃນ ແລະ ຜູ້ສະໜອງການບໍລິການ (ທີ່ບໍ່ແມ່ນທີ່ປຶກ ສາ) ພາຍໃນ ບໍ່ສາມາດນຳໃຊ້ກັບຮູບການຈັດຊື້-ຈັດຈ້າງອື່ນໆໄດ້ ນອກຈາກການປະມູນເປີດກ້ວາງສາກົນ *(ICB)*. ສຳລັບເນື້ອໃນ ວັກ 3.2 ຫາ 2.5 ແລະ 3.7 ຈະອະທິບາຍເຖິງຮູບການນຳໃຊ້ທົ່ວໄປ ຂອງການໃຫ້ສິດທິພິເສດພາຍໃນ ທີ່ຫຼຸດລະດັບສິດທິພິເສດ ພາຍໃນປະເທດ ລົງມາຕາມລຳດັບ ແລະວັກທີ່ເຫຼືອ ຈະອະທິບາຍເຖິງຮູບການນຳໃຊ້ສະເພາະ.

## 3.2 ການປະມູນວົງແຄບສາກົນ

ການປະມູນວົງແຄບສາກົນ *(Limited International Bidding—LIB)* ກໍແມ່ນການປະມູນເປີດກວ້າງ ສາກົນ *(ICB)* ພື້ນຖານທີ່ຈຳເປັນ ໂດຍຜ່ານການເຊີນເຂົ້າຮ່ວມປະມູນໂດຍກົງ ປາດສະຈາກການລົງຂ່າວໂຄສະນາແບບເປີດກ້ວາງ. ຮູບການຈັດຈ້າງ-ຈັດຈ້າງນີ້ອາດຈະມີຄວາມເໝາະສົມເມື່ອຕົກໃນກໍລະນີລຸ່ມນີ້:

(1) ຈຳນວນຂອງຜູ້ສະໜອງ ມີຈຳກັດ, ຫຼື

(2) ມີເຫດຜົນສະເພາະອື່ນໆ ທີ່ຕັດສິນໄດ້ວ່າ ບໍ່ສາມາດປະຕິບັດຕາມຂະບວນການ ປະມູນເປີດກ້ວາງສາກົນ *(ICB)* ໄດ້ຢ່າງເຕັມສ່ວນ.

ພາຍໃຕ້ຮູບການປະມູນວົງແຄບສາກົນ *(LIB)*, ຜູ້ກູ້ຢືມ ພະຍາຍາມຈັດຫາບັນຊີລາຍຊື່ຜູ້ສະໜອງ ທີ່ມີເງື່ອນໄຂພຽງພໍ ເພື່ອຮັບປະກັນໃຫ້ໄດ້ລາຄາທີ່ມີລັກສະນະແຂ່ງຂັນ ເຊັ່ນວ່າ: ບັນຊີລາຍຊື່ທີ່ປະກອບມີຜູ້ສະໜອງທຸກບໍລິສັດເມື່ອຫາກຈຳນວນຜູ້ສະໜອງ ພັດມີຈຳນວນຈຳກັດ. ການໃຫ້ສິດທິພິເສດພາຍໃນປະເທດ ແມ່ນບໍ່ສາມາດນຳໃຊ້ເຂົ້າຢູ່ໃນຂະບວນການປະເມີນຜົນການປະມູນ ພາຍໃຕ້ຮູບການປະມູນວົງແຄບ *(LIB)* ນີ້ໄດ້. ນອກຈາກວິທີການລົງຂ່າວໂຄສະ ນາ ແລະ ການໃຫ້ສິດທິພິເສດພາຍໃນແລ້ວ, ຕ້ອງນຳໃຊ້ຫຼັກການອັນດຽວກັນກັບການປະມູນເປີດກ້ວາງສາກົນ *(ICB)* ລວມທັງການປະກາດ ມອບສັນຍາໃຫ້ແກ່ຜູ້ຊະນະ ການປະມູນ ທີ່ລະບຸໄວ້ຕາມເນື້ອໃນ ວັກ 7 ຂອງເອກະສານຊ້ອນທ້າຍ (1).

## 3.3 ການປະມູນເປີດກ້ວາງພາຍໃນ

ການປະມູນເປີດກ້ວາງພາຍໃນ *(National Competitive Bidding—NCB)* ແມ່ນຂະບວນການປະມູນ ທີ່ມີລັກສະນະແຂ່ງຂັນ ແລະ ໂດຍທົ່ວໄປ ຈະນຳໃຊ້ກັບການຈັດຊື້-ຈັດຈ້າງແບບເປີດກ້ວາງ ຂອງປະເທດຜູ້ກູ້ຢືມ ແລະ ອາດຈະເປັນຮູບການເໝາະສົມທີ່ສຸດ ສຳລັບການຈັດຊື້ສິນຄ້າ, ການກໍ່ສ້າງ ແລະ ການບໍລິ ການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ມີຈຸດພິເສດ ຫຼື ຂອບເຂດຂອງສັນຍາ ບໍ່ເປັນການດຶງດູດ ຄວາມສົນໃຈໃນການແຂ່ງຂັນສາກົນ. ເພື່ອຮອງຮັບໃຫ້ແກ່ການນຳໃຊ້ເຂົ້າ ໃນການຈັດຊື້-ຈັດຈ້າງ ທີ່ ທະນາຄານໂລກ ສະໜອງທຶນໃຫ້ນັ້ນ ຕ້ອງໄດ້ນຳເອົາຫຼັກການເຫຼົ່ານີ້ ມາທົບ

---

61 ບໍ່ຄວນແຍກສັນຍາ ເປັນສ່ວນຍ່ອຍລົງໄປອີກ ເພາະມັນຈະມີຄວາມດຶງດູດໜ້ອຍລົງ ຖ້າທຽບໃສ່ຫຼັກການປະມູນ ຕາມຮູບການ ການປະມູເປີດກ້ວາງສາກົນ *(ICB)* ແລະ ຈຳເປັນຕ້ອງສະເໜີຂໍການຮັບຮອງຈາກທະນາຄານໂລກກ່ອນ ໃນກໍລະນີ ທີ່ຕ້ອງການແຍກເປັນສັນຍາຍ່ອຍ.

ທວນ ແລະ ປັບປູງຄືນ[62] ເທົ່າທີ່ຈຳເປັນເພື່ອຮັບປະກັນດ້ານເສດຖະກິດ (ປະຢັດ), ປະສິດທິຜົນ, ຄວາມໂປ່ງໃສ ແລະ ສອດຄ່ອງໃຫ້ກ້ວາງພໍ ກັບຂໍ້ກຳນົດຕ່າງໆ ນອນໃນ ໝວດ (1) ຂອງຄູ່ມືແນະນຳສະບັບນີ້[63]. ການປະມູນເປີດກ້ວາງພາຍໃນ *(NCB)* ອາດຈະເປັນຮູບການຈັດຊື້-ຈັດຈ້າງທີ່ເໝາະສົມທີ່ສຸດ ແລະ ຄາດວ່າບໍ່ໜ້າສົນໃຈສຳລັບບໍລິສັດຕ່າງປະເທດ ເພາະເຫດຜົນລຸ່ມນີ້:

(1) ຂະໜາດ ແລະ ມູນຄ່າຂອງສັນຍາ.

(2) ປະເພດວຽກຮັບເໝົາ ມີລັກສະນະກະແຈກກະຈາຍໄປຕາມພູມສັນຖານ ຫຼື ແກ່ຍາວເວລາ.

(3) ວຽກກໍ່ສ້າງທີ່ໃຊ້ແຮງງານຄົນ ເປັນຕົ້ນຕໍ.

(4) ການສະໜອງສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ມີຢູ່ກັບທ້ອງຖິ່ນ ແລະ ລາຄາ ກໍຕ່ຳກ່ວາ ຖ້າທຽບກັບຕະຫຼາດສາກົນ.

ຮູບການ ການປະມູນເປີດກ້ວາງພາຍໃນ *(NCB)* ອາດຈະນຳໃຊ້ ໃນກໍລະນີ ເພື່ອຄວາມໄດ້ປຽບຈາກການປະມູນສາກົນ *(ICB)* ທີ່ຮຽກຮ້ອງໃຫ້ປະກອບມີເງື່ອນໄຂຄວາມສາມາດດ້ານບໍລິຫານ ແລະ ການເງິນກ່ຽວຂ້ອງ.

3.4 ເນື້ອໃນລົງຂ່າວໂຄສະນາຕ້ອງຄົບຖ້ວນ ແລະ ລົງປະກາດ ຜ່ານໜັງສືພິມ ທີ່ແຈກຢາຍ ຢ່າງກ້ວາງຂວາງ ແລະ ເປັນພາສາປະຈຳຊາດ ທີ່ໄດ້ກຳນົດຄວາມໝາຍໄວ້ ຕາມເນື້ອໃນ ວັກ 2.15, ຫຼື ຈົດໝາຍເຫດທາງລັດຖະການທີ່ແຈກຢາຍຢ່າງກ້ວາງຂວາງ, ຫຼື ຜ່ານທາງ ເວັບໄຊ ຫຼື ເອເລັກໂຕຣນິກ ທີ່ນຳໃຊ້ຢ່າງກ້ວາງ ຂວາງ ເຊິ່ງທັງພາຍໃນ ແລະ ຕ່າງປະເທດສາມາດເຂົ້າຫາໄດ້ ໂດຍບໍ່ເສັຍຄ່າ. ຜູ້ກູ້ຢືມ ອາດຈະນຳ ເອົາສະບັບທີ່ມີເນື້ອໃນສັ້ນກ່ວາ, ຢ່າງໜ້ອຍກໍປະກອບມີຂໍ້ມູນທີ່ກ່ຽວຂ້ອງ ລົງປະກາດຜ່ານ ໜັງສືພິມ ໂດຍ ມີເງື່ອນໄຂວ່າ ເນື້ອໃນລົງຂ່າວທີ່ຄົບຖ້ວນນັ້ນຕ້ອງລົງປະກາດຢູ່ຈົດໝາຍເຫດ ທາງລັດຖະການ ຫຼື ຜ່ານທາງ ເວັບໄຊ ຫຼື ເອເລັກໂຕຣນິກ ທີ່ນຳໃຊ້ຢ່າງກ້ວາງຂວາງ ເຊິ່ງທັງພາຍໃນ ແລະ ຕ່າງປະເທດສາມາດເຂົ້າຫາໄດ້ ໂດຍບໍ່ເສັຍຄ່າ. ການແຈ້ງຂ່າວການປະມູນນັ້ນ ຕ້ອງເອື້ອອຳນວຍໃຫ້ ຜູ້ແຂ່ງຂັນປະມູນ ມີກຳນົດໄລຍະເວລາພຽງພໍ ເພື່ອສາມາດເກັບກຳເອກະສານກ່ຽວຂ້ອງໄດ້. ເອກະສານເຊີນປະມູນອາດຈະ ພິມອອກ ເປັນພາສາປະຈຳຊາດ. ສະກຸນເງິນຂອງປະເທດຜູ້ກູ້ຢືມ ແມ່ນ ສະກຸນເງິນ ທີ່ນຳໃຊ້ໂດຍທົ່ວໄປ ເຂົ້າໃນເປົ້າໝາຍຂອງເອກະສານຍື່ນປະມູນ ແລະ ການຊຳລະ. ນອກຈາກນັ້ນ, ເອກະສານເຊີນປະມູນຍັງຕ້ອງປະກອບມີ ຄຳແນະນຳວິທີການຍື່ນຊອງປະມູນ, ວິທີການກຳນົດລາຄາເພື່ອສະເໜີປະມູນ ແລະ ກຳນົດເວລາ ແລະ ສະຖານທີ່ຍື່ນຊອງປະມູນ. ຄວນໃຫ້ໄລຍະເວລາແກ່ຜູ້ປະມູນ ພຽງພໍ ເພື່ອກະກຽມເອກະສານ ແລະ ຍື່ນຊອງປະມູນ. ຂະບວນການປະມູນ ຕ້ອງສ້າງເງື່ອນໄຂ ໃຫ້ມີ ການແຂ່ງຂັນພຽງພໍ ເພື່ອຮັບປະກັນໃຫ້ໄດ້ຮັບ ລາຄາທີ່ສົມເຫດສົມຜົນ. ວິທີການ ແລະ ເປົ້າໝາຍຂອງ ການປະເມີນຜົນການປະມູນ ແລະ ການມອບສັນຍາ ໃຫ້ແກ່ຜູ້ຊະນະການປະມູນ ຕ້ອງລະບຸໄວ້ຢູ່ໃນ ເອກະສານເຊີນປະມູນ ເພື່ອ ໃຫ້ຜູ້ປະມູນທຸກບໍລິສັດຊາບ ແລະບໍ່ນຳໃຊ້ວິທີການແບບປາດສະຈາກເຫດຜົນ (ແບບງ່າຍດາຍເອົາ ຕາມ ທີ່ມີ). ການສົມທຽບເອກະສານຍື່ນປະມູນທັງໝົດ ແລະ ການມອບສັນຍາໃຫ້ແກ່ ຜູ້ຊະນະການປະມູນ ອາດຈະຢູ່ບົນພື້ນຖານມູນຄ່າລວມທັງໝົດ (ສົ່ງຮອດປາຍ ທາງ)ໂດຍກວມເອົາຄ່າພາສີ ແລະ ຄ່າອາກອນທັງໝົດແລ້ວ. ຂະບວນການປະມູນ ຕ້ອງກວມເອົາການເປີດຊອງປະມູນຕໍ່ໜ້າສາທາລະນະ, ການປະກາດຜົນໄດ້ຮັບຈາກການປະເມີນຜົນການປະມູນ ແລະ ການມອບສັນຍາໃຫ້ ແກ່ຜູ້ຊະນະການປະມູນ ຕາມເນື້ອໃນວັກ 7 ຂອງເອກະສານຊ້ອນທ້າຍ (1). ຜູ້ກູ້ຢືມ ຕ້ອງມີກົນໄກຄັດຄ້ານ ທີ່ມີ ປະສິດທິຜົນ ແລະ ມີເອກະລາດຢູ່ກັບຕົນ ເພື່ອໃຫ້ຜູ້ປະມູນ ສາມາດຄັດຄ້ານ ແລະ ສະແດງຄວາມຄັດຄ້ານ ຂອງເຂົາເຈົ້າ ທັນຕາມກຳນົດ

62 ການປັບປຸງດັ່ງກ່າວ ຕ້ອງສອດຄ່ອງກັບ ສັນຍາກູ້ຢືມ. ຖ້າຜູ້ກູ້ຢືມ ຫາກໄດ້ສະໜີ, ທະນາຄານໂລກ ອາດຈະຕົກລົງເຫັນດີວ່າ ເອກະສານຍື່ນປະມູນພາຍໃຕ້ຮູບການ ການປະມູນເປີດກ້ວາງພາຍໃນ *(NCB)* ບັນຈຸເອົາມາດຕາ ທີ່ກ່າວເຖິງ ຄຸນລັກສະນະບໍ່ເໝາະສົມ ສຳລັບທະນາຄານໂລກ ທີ່ຈະສະໜອງທຶນ ໃຫ້ບໍລິສັດ ຫຼື ບຸກຄົນ ຂອງປະເທດຜູ້ກູ້ຢືມ ດ້ວຍການໃສ່ໂທດ ຂ້ວາມບາດການມອບສັນຍາ ໂດຍອີງການຕຸລາການ ທີ່ເໝາະສົມຂອງປະເທດຜູ້ກູ້ຢືມ ແລະ ອີງຕາມກົດໝາຍທີ່ກ່ຽວຂ້ອງຕ່າງໆ. ໃນເມື່ອທະນາຄານໂລກ ດ້ວຍເງື່ອນໄຂ ທີ່ທະນາຄານໂລກໄດ້ພິຈາລະນາວ່າ ບໍລິສັດ ຫຼື ບຸກຄົນ ໄດ້ກ່ຽວຂ້ອງກັບການສໍ້ໂກງ ແລະ ການສໍ້ລາດບັງຫຼວງ ແລະ ດຳເນີນຕາມຂະບວນການສານກັບບໍລິສັດ ຫຼື ບຸກຄົນ) ຕາມຂັ້ນຕອນທີ່ເໝາະສົມ..

63 ຮູບການປະມູນນີ້ ມີຄວາມແຕກຕ່າງຈາກຮູບການ ຂອງແຜນງານທົດລອງນຳໃຊ້ “ການນຳໃຊ້ລະບົບລວມຂອງປະເທດ“.

ເວລາ. ຖ້າບໍລິສັດຕ່າງປະເທດ ຫາກຕ້ອງການເຂົ້າຮ່ວມ ການປະມູນເປີດກ້ວາງພາຍໃນ *(NCB)* ກໍອະນຸຍາດໃຫ້ ເຂົ້າຮ່ວມປະມູນ ແຕ່ອີງຕາມຂໍ້ກໍານົດ ແລະ ເງື່ອນໄຂຂອງ ການປະມູນເປີດກ້ວາງພາຍໃນ *(NCB)* ທີ່ນໍາໃຊ້ກັບ ບໍລິສັດພາຍໃນ.

## 3.5 ການສົມທຽບລາຄາ

ເມື່ອນໍາໃຊ້ຮູບການ ການຈັດຊື້-ຈັດຈ້າງ ທີ່ມີລັກສະນະແຂ່ງຂັນກ່ວາແຕ່ບໍ່ສາມາດຕອບສະໜອງ ບົນພື້ນ ຖານດ້ານ ລາຄາ ແລະ ປະສິດທິຜົນໄດ້ ກໍນໍາໃຊ້ການສົມທຽບລາຄາ *(Shopping)* ເຊິ່ງກໍແມ່ນ ຮູບການ ການຈັດຊື້-ຈັດຈ້າງ ບົນ ພື້ນຖານການສົມທຽບລາຄາສະເໜີປະມູນ ທີ່ໄດ້ຈາກ ຜູ້ສະໜອງສິນຄ້າ ຫຼາຍໆບໍລິສັດ ຫຼື ຫ້າງຮ້ານ (ກໍລະນີ ເປັນສິນຄ້າ), ຫຼື ຜູ້ຮັບເໝົາ ຫຼາຍໆບໍລິສັດ (ກໍລະນີການກໍ່ສ້າງ), ຫຼື ຜູ້ສະໜອງການບໍລິການຈາກຫຼາຍໆແຫຼ່ງ (ກໍລະນີ ການບໍລິການ ທີ່ບໍ່ແມ່ນທີ່ປຶກສາ) ສະເໜີມາ ເຊິ່ງຕໍ່າສຸດ ແມ່ນຈາກ 3 (ສາມ) ແຫຼ່ງ ເພື່ອຮັບປະກັນ ລັກສະ ນະແຂ່ງຂັນດ້ານລາຄາ ແລະ ກໍເປັນຮູບການ ການຈັດຊື້- ຈັດຈ້າງ ທີ່ເໝາະສົມເຊັ່ນ ການຈັດຊື້ສິນຄ້າ ປະເພດພ້ອມທີ່ ຈະເອົາລົງຈາກຖ້ານ ດ້ວຍຈໍານວນທີ່ຈໍາກັດ ຫຼື ສິນຄ້າປະເພດ ທີ່ໄດ້ວາງມາດຕະຖານເຕັກນິກໃຫ້ ແຕ່ມີມູນຄ່າຕໍ່າ, ຫຼື ປະເພດວຽກຮັບເໝົາ ແບບກະທັດ ລັດ ແຕ່ມີມູນຄ່າຕໍ່າ[64]. ຖ້າຜູ້ກູ້ຢືມ ຫາກບໍ່ໄດ້ຮັບ ໃບສະເໜີລາຄາ ຢ່າງໜ້ອຍຈາກ 3 (ສາມ) ແຫຼ່ງມານັ້ນ ກໍຕ້ອງແຈ້ງເຫດຜົນໃຫ້ ທະນາຄານໂລກຊາບ ລວມທັງການໃຫ້ເຫດຜົນ ທີ່ບໍ່ພິຈາລະນານໍາໃຊ້ ຮູບການ ທີ່ມີ ລັກສະນະແຂ່ງຂັນອື່ນ ເພື່ອຂໍການຮັບຮອງຈາກທະນາຄານໂລກກ່ອນ ທີ່ຈະຈະສືບຕໍ່ດໍາເນີນການ ປະເມີນ ຜົນ ບົນພື້ນຖານຂອງໃບສະເໜີລາຄາທີ່ໄດ້ຮັບແລ້ວເທົ່ານັ້ນ. ເມື່ອອອກໜັງສືເຊີນເຂົ້າຮ່ວມການສົມທຽບ ລາຄາ ຕ້ອງແຈ້ງລາຍການ ແລະ ຈໍານວນຂອງສິນຄ້າ ຫຼື ມາດຕະຖານເຕັກນິກຂອງ ວຽກຮັບເໝົາ ຕະຫຼອດ ຮອດ ກໍານົດເວລາ ແລະ ສະຖານທີ່ສົ່ງມອບ (ຫຼື ກໍານົດມື້ສໍາເລັດວຽກ) ທີ່ຕ້ອງການ. ການຍື່ນໃບສະ ເໜີລາຄາ ອາດຈະ ຍື່ນເປັນຈົດໝາຍ, ຜ່ານໂທລະສານ ຫຼື ທາງເອເລັກໂຕຣນິກ. ສ່ວນການປະເມີນຜົນການສົມທຽບລາຄາ ຕ້ອງ ປະຕິບັດຕາມຫຼັກການດຽວກັນກັບການເປີດຊອງປະມູນ. ເງື່ອນໄຂຂອງການ ຮັບ ຮອງ ເອົາ ລາຄາ ທີ່ໄດ້ສະເໜີມາ ປະກອບເຂົ້າໃນຮູບແບບ ໃບສັ່ງຊື້ ຫຼື ສັງລວມຫຍໍ້ ຢູ່ໃນສັນຍາ.

## 3.6 ສັນຍາກໍານົດຂອບຂ່າຍ

ສັນຍາກໍານົດຂອບຂ່າຍ *(Framework Agreement—FA)* ແມ່ນປະເພດສັນຍາກັບ ຜູ້ສະໜອງສິນຄ້າ, ຜູ້ຮັບ ເໝົາກໍ່ສ້າງ ແລະ ຜູ້ສະໜອງການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ເປັນໄລຍະຍາວເຊິ່ງໄດ້ວາງຂໍ້ກໍານົດ ແລະ ເງື່ອນ ໄຂຂອງການຈັດຊື້-ຈັດຈ້າງສະເພາະ (ການເລື່ອນກໍານົດ) ແລະ ສາມາດດໍາເນີນການໄດ້ ຕະຫຼອດອາຍຸການຂອງ ສັນຍາ. ໂດຍທົ່ວໄປ, ການກໍານົດລາຄາ ຢູ່ໃນສັນຍາກໍານົດຂອບຂ່າຍ ອາດຈະຢູ່ ບົນພື້ນຖານ ຂອງລາຄາທີ່ໄດ້ຕົກ ລົງກັນລ່ວງໜ້າ ຫຼື ລາຄາທີ່ກໍານົດເອົາຕາມໄລຍະເວລາທີ່ເລື່ອນກໍານົດ ໂດຍຜ່ານການແຂ່ງຂັນຫຼືຜ່ານຂັ້ນຕອນການ ອະນຸຍາດໃຫ້ປັບປຸງແກ້ໄຂໂດຍປາດສະຈາກການແຂ່ງຂັນ[65]. ໃນການຈັດຊື້-ຈັດຈ້າງ ສໍາລັບສັນຍາກໍານົດຂອບຂ່າຍ

---

64 ຕາມເປົ້າໝາຍຂອງການສົມທຽບລາຄາ ແລະ ການຈັດຊື້-ຈັດຈ້າງຈາກອົງກອນແຫ່ງສະຫະປະຊາຊາດຕາມເນື້ອໃນ 3.10 (3)ຂອງຄູ່ມືແນະນໍາສະບັບນີ້, ຕາມທໍາມະດາ, ສັນຍາທີ່ມີມູນຄ່າຕໍ່າ ຈະບໍ່ເກີນ 100.000 ໂດລາສະຫະລັດ ສໍາລັບສິນຄ້າພ້ອມທີ່ລົງຈາກຖ້ານ ແລະ ສິນຄ້າທົ່ວໄປ (ລວມທັງປະເພດ ສິນຄ້າ ນໍາໃຊ້ໄປຜະລິດຕໍ່) ແລະ 200.000 ໂດລາສະຫະລັດ ສໍາລັການຈັດຊື້-ຈັດຈ້າງ ການກໍ່ສ້າງແບບກະທັດລັດ. ວົງເງິນທີ່ນໍາໃຊ້ໃຫ້ ແຕ່ລະໂຄງການ ໄດ້ກໍານົດຢູ່ໃນ ແຜນຈັດຊື້-ຈັດຈ້າງ.

65 ຜູ້ກູ້ຢືມ ໄດ້ຮັບຮອງເອົາ ຕົວແບບຂອງສັນຍາກໍານົດຂອບຂ່າຍ ແລະ ກໍຮຽກຊື່ແຕກຕ່າງກັນໄປອີກ. ຕົວແບບ ສາມປະເພດ ທີ່ນິຍົມໃຊ້ກັນຫຼາຍທີ່ສຸດ ແມ່ນອີງໃສ່ ພື້ນຖານລຸ່ມນີ້: ປິດ ຫຼື ເປີດ, ຂັ້ນຕອນນຶ່ງ ຫຼື ສອງຂັ້ນຕອນ, ຮູບການແຂ່ງຂັນ ປະກອບມີ: (1) "ສັນຍາກໍານົດຂອບຂ່າຍປິດ" ແມ່ນອີງໃສ່ ບັນທັດຖານ ລວມທັງການມອບ "ການເລື່ອນກໍານົດ ທີ່ເຊັນກັນກັບ ຜູ້ສະໜອງ/ຜູ້ຮັບເໝົາ ໜຶ່ງ ຫຼື ຫຼາຍບໍລິສັດ ແລະ ບໍ່ອະນຸຍາດໃຫ້ບໍລິສັດໃໝ່ເຂົ້າ ໃນໄລຍະອາຍຸການຂອງສັນຍາ; (2) "ສັນຍາກໍານົດຂອບຂ່າຍປິດ" ແມ່ນຈໍາກັດບໍລິສັດໃໝ່ເຂົ້າ ແຕ່ພັດດໍາເນີນການແບບສອງຂັ້ນຕອນຄື: ຂັ້ນຕອນ ທໍາ ອິດ ແມ່ນຄັດເລືອກ ເອົາຫຼາຍກ່ວາໜຶ່ງ ຜູ້ສະໜອງ/ຜູ້ຮັບເໝົາ, ແລະ ຂັ້ນຕອນທີສອງ ເມື່ອຕັດສິນໃຈ ເລື່ອນກໍານົດ ຜ່ານການແຂ່ງຂັນລະຫວ່າງ ຜູ້ສະໜອງ/ຜູ້ຮັບເໝົາ ທີ່ຜ່ານການຄັດເລືອກ ແລະ ມອບສັນຍາ ແມ່ນອີງໃສ່ ຜູ້ປະມູນລາຄາຕໍ່າສຸດ ບົນພື້ນຖານລາຄາສະເໜີມາ ແລະ ເງື່ອນໄຂການສົ່ງ

ອາດຈະອະນຸຍາດ ໃຫ້ສະເໜີທາງເລືອກ ຜ່ານຮູບ ການ ການສືບທຽບລາຄາ *(Shopping)* ຫຼື ການປະມູນເປີດກ້ວາງພາຍໃນ *(NCB)* ສຳລັບກໍລະນີ ລຸ່ມນີ້:

(1) ປະເພດສິນຄ້າ ທີ່ສາມາດຈັດຊື້ໄດ້ ໂດຍຜ່ານຮູບການ ພ້ອມທີ່ຈະລົງຈາກຖ້ານ ຫຼື ໃຊ້ມາດຕະ ຖານເຕັກນິກລວມ.

(2) ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ກະທັດລັດ ແລະ ມີລັກສະນະບບໍ່ຄືບຊຸດ ແລະ ອາດຈະຕ້ອງການເປັນແຕ່ລະໄລຍະ ເຊິ່ງແມ່ນອີງກອນດຽວກັນ (ຫຼື ຫຼາຍໆອົງກອນ) ຂອງຜູ້ກູ້ຢືມ ເປັນຜູ້ສະໜອງການບໍລິການ.

(3) ສັນຍາຮັບເໝົາ ທີ່ມີມູນຄ່າຕໍ່າ ເຊິ່ງຕ້ອງປະຕິບັດໃນສະພາວະສຸກເສີນ.

ຜູ້ກູ້ຢືມຕ້ອງສະເໜີທາທະນາຄານໂລກ ເພື່ອຂໍການຮັບຮອງ ກ່ຽວກັບສະຖານະການ ແລະ ການອ້າງ ເຫດຜົນໃນການຂໍນຳໃຊ້ ປະເພດສັນຍາກຳນົດຂອບວຽກເຊັ່ນ: ວິທີການສະເພາະ ແລະ ຕົວແບບ ເປັນທີ່ຮັບຮອງ, ຂະບວນການຄັດເລືອກ ແລະ ການມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ, ຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາ. ສັນຍາກຳນົດຂອບວຽກ ບໍ່ໄດ້ຈຳກັດການເຂົ້າຮ່ວມແຂ່ງຂັນຂອງຕ່າງປະເທດ ແຕ່ຄວນຈະຈຳກັດແຕ່ໄລຍະເວລາສູງສຸດແມ່ນ 3 (ສາມ) ປີ. ຂະບວນການຂອງສັນຍາກຳນົດຂອບຂ່າຍທີ່ຜູ້ກູ້ຢືມ ນຳໃຊ້ເຂົ້າໃນໂຄງການ ຕ້ອງເປັນທີ່ຮັບຮອງຈາກທະນາຄານໂລກ ແລະ ຕ້ອງໄດ້ລະບຸໄວ້ ຢູ່ໃນສັນຍາກູ້ຢືມ. ມູນຄ່າລວມສູງສຸດ ຂອງສັນຍາກຳນົດຂອບວຽກທີ່ນຳໃຊ້ຕ້ອງໄດ້ກຳນົດໄວ້ໃນແຜນຈັດຊື້- ຈັດຈ້າງ ໂດຍສອດຄ່ອງກັບຄວາມສ່ຽງນັ້ນໆ ແລະ ບໍ່ໃຫ້ມີກໍລະນີໃດໆ ທີ່ສູງກ່ວາມູນຄ່າລວມສູງສຸດ ຂອງການປະມູນເປີດກວ້າງພາຍໃນ *(NCB)* ທີ່ນຳໃຊ້ ແລະ ຕ້ອງໄດ້ຮັບການຕົກ ລົງກັບ ທະນາຄານໂລກເສັຍກ່ອນ. ສັນຍາກຳນົດຂອບວຽກ ຕ້ອງດຳເນີນການ ຕາມຫຼັກການ ແລະ ຂະບວນການ ຕ່າງໆ ທີ່ໄດ້ແນະນຳ ຜ່ານຮູບການ ການປະມູນເປີດກ້ວາງພາຍໃນ*(NCB)* ຕາມເນື້ອໃນ ວັກ 3.3 ແລະ 3.4 ແຕ່ບໍ່ຈຳກັດຢູ່ພຽງແຕ່ຫຼັກການຂອງການລົງຂ່າວໂຄສະນາ, ຄວາມຍຸດຕິທຳ ແລະ ການແຂ່ງຂັນແບບເປີດ ກ້ວາງ, ກົນໄກການຄັດຄ້ານທີ່ມີປະສິດທິຜົນ ແລະ ມີເອກະລາດ, ແລະ ບັນທັດຖານ ການປະເມີນຜົນ ການປະມູນ ແລະ ການຄັດເລືອກ ທີ່ໂປ່ງໃສ. ການປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ຂອງສັນຍາກຳນົດຂອບຂ່າຍ ຕ້ອງດຳເນີນການ ຕາມຂະບວນການ ທີ່ໄດ້ອະທິບາຍ ຕາມເນື້ອໃນ ວັກ 7 ຂອງເອກະສານຊ້ອນທ້າຍ (1) ນີ້.

## 3.7 ການເຮັດສັນຍາໂດຍກົງ

ການເຮັດສັນຍາໂດຍກົງ *(Direct Contracting)* ແມ່ນການເຮັດສັນຍາ ທີ່ບໍ່ມີການແຂ່ງຂັນ (ຈາກແຫຼ່ງ ດຽວ) ເຊິ່ງອາດຈະເປັນຮູບການທີ່ເໝາະສົມ ຕໍ່ກັບສະຖານະທີ່ຈະກ່າວໃນວັກຕໍ່ໄປນີ້. ໃນທຸກໆກໍລະນີ, ຜູ້ກູ້ຢືມ ຕ້ອງອ້າງອີງເຫດຜົນທີ່ລະອຽດພຽງພໍ ສະເໜີທາທະນາຄານໂລກ ເພື່ອຂໍການທົບທວນ ແລະ ຮັບຮອງເອົາ ລວມທັງເຫດຜົນໃນການເຮັດສັນຍາໂດຍກົງ ແທນທີ່ຈະຜ່ານຂະບວນການຈັດຊື້- ຈັດຈ້າງທີ່ມີລັກສະ ນະແຂ່ງຂັນ ແລະ ພື້ນຖານຂອງການສະເໜີໃຫ້ບໍລິສັດສະເພາະນັ້ນໆ ດຳເນີນການ ຍົກເວັ້ນສັນຍາ ທີ່ໄດ້ກຳນົດວົງເງິນ ບົນພື້ນຖານຄວາມສ່ຽງ ແລະ ຂອບເຂດຂອງໂຄງການ ທີ່ກຳນົດໄວ້ໃນ ແຜນຈັດຊື້-ຈັດ ຈ້າງ ຂ້າງລຸ່ມນີ້.

(1) ສັນຍາການສະໜອງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການສະໜອງການບໍລິການ (ທີ່ບໍ່ແມ່ນ ທີ່ປຶກສາ) ທີ່ໄດ້ມອບໃຫ້ແກ່ຜູ້ຊະນະການປະມູນ ໂດຍສອດຄ່ອງກັບຫຼັກການ ທີ່ທະນາຄານໂລກ ຮັບຮອງເອົາແລ້ວນັ້ນ ອາດຈະສາມາດຕໍ່ສັນຍາ ການສະໜອງສິນຄ້າເພີ່ມ ຫຼື ຂະຫຍາຍການ ບໍລິການການກໍ່ສ້າງ ຫຼື ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ມີຈຸດພິເສດຄ້າຍຄືກັນ. ທະນາຄານ ໂລກ ຈະມີຄວາມເພິ່ງພໍໃຈ ຕໍ່ກັບກໍລະນີດັ່ງກ່າວ ຖ້າຫາກເຫັນວ່າ ເມື່ອສືບຕໍ່ການແຂ່ງຂັນ ກໍຈະບໍ່ມີ ຜົນປະໂຫຍດຫຍັງ ແລະ ລາຄາ ໃນເວລາຕໍ່ສັນຍານັ້ນ ກໍສົມເຫດສົມຜົນ. ຖ້າຫາກໄດ້ພິຈາລະນາ ລ່ວງໜ້າ ກ່ຽວກັບຂໍ້ກຳນົດກ່ຽວກັບການຕໍ່ສັນຍານັ້ນ ກໍຕ້ອງປະກອບເຂົ້າໃນສັນຍາສະບັບເດີມ.

(2) ການທັນເປັນມາດຕະຖານດຽວກັນ ສຳລັບອຸປະກອນ ຫຼື ເຄື່ອງອາໄຫຼ່ ໃຫ້ເໝາະສົມ (ຕົງກັນ) *(Compatible)*

---

ມອບ; (3) "ສັນຍາກຳນົດຂອບຂ່າຍເປີດ ແມ່ນອີງຕາມວິທີການແບບສອງຂັ້ນຕອນ ຕາມຕົວແບບ ທີ່ກ່າວມາຂ້າງເທິງນັ້ນ ແຕ່ປາດສະຈາກຂໍ້ຈຳກັດບໍລິສັດໃໝ່ເຂົ້າຮ່ວມ.

ກັບ ອຸປະກອນເດີມ ທີ່ມີຢູ່ແລ້ວ ກໍອາດຈະເປັນເຫດຜົນໃນການຈັດຊື້ເພີ່ມ ຈາກ ຜູ້ສະໜອງສິນຄ້າເດີມ. ເພື່ອຢັ້ງຢືນເຖິງເຫດຜົນໃນຄວາມຖືກຕ້ອງຂອງການຈັດຊື້ເພີ່ມດັ່ງກ່າວນັ້ນ, ອຸປະກອນເດີມ ຕ້ອງມີຄວາມເໝາະສົມ ແລະ ໂດຍທົ່ວໄປ, ລາຍການໃໝ່ທີ່ຈະຈັດຊື້ ຕ້ອງມີ ຈຳນວນໜ້ອຍກ່ວາຈຳນວນເດີມ, ລາຄາກໍຕ້ອງສົມເຫດສົມຜົນ ໂດຍນຳເອົາຄວາມໄດ້ປຽບຂອງ ອຸປະກອນທີ່ມີຍີ່ຫໍ້ອື່ນ ຫຼື ຈາກແຫຼ່ງອື່ນ ມາພິຈາລະນາ ແລະ ພື້ນຖານຂອງການປະຕິເສດ ທີ່ ທະນາຄານໂລກຮັບຮອງເອົາໄດ້.

(3) ອຸປະກອນທີ່ຕ້ອງການຈັດຊື້ ໄດ້ຈົດທະບຽນລິຂະສິດ ແລະ ສາມາດຫາໄດ້ ຈາກແຫຼ່ງດຽວເທົ່ານັ້ນ.

(4) ການຈັດຊື້ ສິນຄ້າບາງປະເພດສະເພາະ ຈາກຜູ້ສະໜອງສະເພາະ ມີຄວາມຈຳເປັນ ທີ່ຈະໄດ້ຮັບລະບົບການດຳເນີນງານທີ່ຕ້ອງການ ຫຼື ການຮັບປະກັນ ການທຳງານຂອງອຸປະກອນ ຫຼື ໂຮງຊ່າງ ຫຼື ສິ່ງອຳນວຍຄວາມສະດວກນັ້ນໆ.

(5) ໃນກໍລະນີພິເສດທີ່ເກີດຂຶ້ນ, ແຕ່ບໍ່ຈຳກັດຢູ່ແຕ່ສະເພາະສະຖານະການເຫຼົ່ານີ້ ເຊັ່ນ: ການຕອບໂຕ້ກັບໄພທຳມະຊາດ ທີ່ຜູ້ກູ້ຢືມ ໄດ້ປະກາດເປັນສະພາວະສຸກເສີນ ແລະ ທະນາຄານໂລກ ກໍຮັບຮູ້.

(6) ໃນກໍລະນີ ທີ່ສອດຄ່ອງກັບ ກັບຂໍ້ກຳນົດ ຕາມເນື້ອໃນ ວັກ 3.10 ໃນການຈັດຊື້-ຈັດຈ້າງ ຈາກອົງກອນ ແຫ່ງສະຫະປະຊາຊາດ (ອົງກອນ ແຫ່ງ ສປຊ).

3.8 ຫຼັກການ ໃນການປະກາດມອບສັນຍາແກ່ຜູ້ຊະນະການປະມູນ ໄດ້ອະທິບາຍໄວ້ຕາມເນື້ອໃນ ວັກ 7 ຂອງເອກະສານຊ້ອນທ້າຍ (1).

## 3.9 ການສະໜອງວັດຖຸພັນ

ການສະໜອງວັດຖຸພັນ *(Force Account)* ກໍອາດຈະເປັນຮູບການຈັດຊື້-ຈັດຈ້າງ ທີ່ປະຕິບັດກັນໃນສະຖານະການພິເສດເທົ່ານັ້ນເຊັ່ນ: ປະເພດວຽກກໍ່ສ້າງ ແລະ ຕິດຕັ້ງອຸປະກອນ, ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ເຊິ່ງແມ່ນອົງກອນຕ່າງໆ ຂອງລັດຖະບານຂອງຜູ້ກູ້ຢືມ ເປັນຜູ້ດຳເນີນງານ ໂດຍນຳໃຊ້ບຸກຄະລາ ກອນແລະ ອຸປະກອນຂອງຕົນເອງ[66]. ຜູ້ກູ້ຢືມຕ້ອງໄດ້ຕັ້ງມູນຄ່າລວມສູງສຸດ ໃນການນຳໃຊ້ການສະໜອງ ວັດຖຸພັນ ເຊິ່ງທະນາຄານໂລກຮັບຮອງເອົາ ແລະ ກໍນຳໃຊ້ ຫຼັກການຕິດຕາມ ແລະ ກວດກາ ຄຸນນະພາບຢ່າງ ເຄັ່ງຄັດ ແບບດຽວກັນກັບສັນຍາ ທີ່ໄດ້ມອບໃຫ້ພາກສ່ວນທີສາມ. ການຊີ້ແຈ້ງເຫດຜົນ ເພື່ອຂໍນຳໃຊ້ການສະໜອງວັດຖຸພັນ ເຂົ້າດຳເນີນງານ ອາດຈະປະຕິບັດໄດ້ ພາຍຫຼັງທີ່ທະນາຄານໂລກຮັບ ຮອງພາຍໃຕ້ສະຖານະການໃດນຶ່ງ ດັ່ງລຸ່ມນີ້:

(1) ບໍລິມາດວຽກຮັບເໝົາການກໍ່ສ້າງ ແລະ ຕິດຕັ້ງທີ່ກ່ຽວຂ້ອງ ບໍ່ສາມາດກຳນົດລ່ວງໜ້າໄດ້, ຫຼື

(2) ວຽກຮັບເໝົາການກໍ່ສ້າງ ແລະ ຕິດຕັ້ງ ເປັນວຽກຂະໜາດນ້ອຍ ແລະ ກະແຈກກະຈາຍ ຕາມເຂດຫ່າງໄກສອກຫຼີກ ເຊິ່ງບໍລິສັດຮັບເໝົາກໍ່ສ້າງທີ່ມີຄຸນວຸດທິ ມີທ່າວ່າ ບໍ່ສົນໃຈປະມູນດ້ວຍລາຄາ ທີ່ສົມເຫດສົມຜົນ, ຫຼື

(3) ວຽກຮັບເໝົາການກໍ່ສ້າງ ແລະ ຕິດຕັ້ງ ທີ່ຕ້ອງການ ສາມາດດຳເນີນງານໄດ້ ໂດຍບໍ່ກະທົບເຖິງວຽກ ທີ່ກຳລັງດຳເນີນຢູ່, ຫຼື

(4) ຄວາມສ່ຽງ ຕໍ່ການຢຸດສະຫງັກຂອງວຽກ ທີ່ບໍ່ສາມາດຫຼີກລ້ຽງໄດ້ ເປັນພາລະຂອງຜູ້ກູ້ຢືມ ຈະດີກ່ວາ ເປັນພາລະຂອງ ຜູ້ຮັບເໝົາ, ຫຼື

(5) ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ລົງເລິກສະເພາະດ້ານ ເຊັ່ນ:,ການສຳຫຼວດທາງອາກາດ ແລະ ການແຕ້ມແຜນທີ່ ເຊິ່ງຕາມກົດໝາຍ ຫຼື ຂໍ້ກຳນົດກົດລະບຽບ ຂອງປະເທດຜູ້ກູ້ຢືມ ພິຈາລະນາຖືວ່າ ມີການພົວພັນກັບຄວາມໝັ້ນຄົງຂອງຊາດນັ້ນ ແມ່ນໜ່ວຍງານລົງເລິກວິຊາສະເພາະຂອງລັດຖະບານເອງ ເປັນຜູ້ດຳເນີນງານເທົ່ານັ້ນ, ຫຼື

---

66 ໜ່ວຍງານລັດວິສະຫະກິດກໍ່ສ້າງ ແລະ ບໍ່ໄດ້ດຳເນີນການໃນຮູບແບບທີ່ເປັນເອກະລາດດ້ານການຄຸ້ມຄອງ, ກົດໝາຍ ແລະ ການເງິນຕ້ອງຖືວ່າການສະໜອງວັດຖຸພັນ. ອົງກອນພິເສດ ກໍເປັນທີ່ຮູ້ຈັກມີຊື່ "ແຮງງານໂດຍກົງ", "ກຳລັງຂອງອົງກອນ" ຫຼື "ວຽກໂດຍກົງ".

(6) ການສ້ອມແປງຮີບດ່ວນເພື່ອປ້ອງກັນ ບໍ່ໃຫ້ຄວາມເປ່ເພເສັຍຫາຍສືບຕໍ່ເກີດຂຶ້ນ ເຊິ່ງຕ້ອງການແກ້ໄຂຢ່າງທັນການ ຫຼື ວຽກກໍ່ສ້າງ ໃນເຂດທີ່ໄດ້ຮັບຜົນກະທົບຈາກຄວາມຂັດແຍ່ງ ເຊິ່ງບໍລິສັດເອກະຊົນ ອາດຈະບໍ່ໃຫ້ຄວາມສົນໃຈ.

## 3.10 ການຈັດຊື້-ຈັດຈ້າງ ຈາກອົງກອນແຫ່ງສະຫະປະຊາຊາດ

ໃນກໍລະນີ ທີ່ອາດຈະມີສະພາບ ທີ່ອົງກອນ ແຫ່ງ ສປຊ[67] ດຳເນີນການຈັດຊື້-ຈັດຈ້າງໂດຍກົງ ໂດຍນຳໃຊ້ ລະບຽບການຈັດຊື້-ຈັດຈ້າງ ຂອງເຂົາເຈົ້າເອງ ເຊິ່ງອາດຈະເປັນ ຮູບການຈັດຊື້-ຈັດຈ້າງທີ່ ເໝາະສົມທີ່ສຸດ ເຊັ່ນ:

(1) ປະເພດສິນຄ້າ ພ້ອມທີ່ຈະລົງຈາກຖ້ານ ທີ່ມີຈຳນວນໜ້ອຍ ຮັບໃຊ້ຂະແໜງການສຶກສາ ແລະ ສາທາລະນະສຸກຂັ້ນຕົ້ນ.

(2) ປະເພດສິນຄ້າ ທີ່ຮັບໃຊ້ການປິ່ນປົວຄົນ ແລະ ສັດ ລວມທັງຢາກັນພະຍາດ (ວັກຊີນ), ຢາປົວພະ ຍາດ, ອຸປະກອນຮັກສາສຸຂະພາບ ແລະ ຄຸມກຳເນີດ, ອຸປະກອນຊີວະການແພດ ດ້ວຍເງື່ອນໄຂດັ່ງນີ້:

   1 ຜູ້ສະໜອງ ມີຈຳນວນຈຳກັດ.

   2 ອົງກອນ ແຫ່ງ ສປຊ ມີຄຸນວຸດທິ ສະເພາະຕົວ ຫຼື ພິເສດ ທີ່ຈະຈັດຊື້-ຈັດຈ້າງ ສິນຄ້າປະເພດນີ້ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຕິດພັນກັບເຫດການບັງເອີນ (ຖ້າມີ).

   3 ຜູ້ກູ້ຢືມ ນຳໃຊ້ ແບບຟອມມາດຕະຖານສັນຍາ ລະຫວ່າງ ຜູ້ກູ້ຢືມ ແລະ ອົງກອນແຫ່ງ ສປຊ ເພື່ອດຳເນີນການຈັດຊື້ສິນຄ້າ ແລະ ຂໍ້ກຳນົດກ່ຽວກັບການບໍລິການສະເພາະບາງປະເພດ ທີ່ທະນາຄານໂລກ ໄດ້ຕົກລົງເຫັນດີ.

(3) ສັນຍາທີ່ມີມູນຄ່າໜ້ອຍ (ຕາມທີ່ໄດ້ກຳນົດຄວາມໝາຍ ຢູ່ຂໍ້ຄວາມໝາຍເຫດດ້ານລຸ່ມ ເລກທີ 64) ສຳລັບວຽກກໍ່ສ້າງທີ່ມີລັກສະນະກະທັດລັດ ເມື່ອອົງກອນແຫ່ງ ສປຊ ເຮັດໜ້າທີ່ ເປັນຜູ້ຮັບເໝົາ, ຫຼື ວ່າຈ້າງ ຜູ້ຮັບເໝົາຂະໜາດນ້ອຍໂດຍກົງ, ແລະ ແຮງງານທີ່ມີຝີມື ຫຼື ຂາດຝີມື.

(4) ໃນກໍລະນີພິເສດທີ່ເກີດຂຶ້ນ ເຊັ່ນ: ການຕອບໂຕ້ກັບໄພທຳມະຊາດ ທີ່ຜູ້ກູ້ຢືມ ໄດ້ປະກາດ ເປັນສະ ພາວະສຸກເສີນ ແລະ ທະນາຄານໂລກ ກໍຮັບຮູ້.

## 3.11 ອົງກອນຈັດຊື້-ຈັດຈ້າງຕົວແທນ ແລະ ຜູ້ຈັດການ ການກໍ່ສ້າງ

ໃນກໍລະນີທີ່ ຜູ້ກູ້ຢືມ ຫາກຂາດອົງກອນ, ຊັບພະຍາກອນ ແລະ ປະສົບການ ເພື່ອດຳເນີນການ ການ ຈັດຊື້-ຈັດຈ້າງ, ຜູ້ກູ້ຢືມເອງ ອາດຈະຕ້ອງການ (ຫຼື ໄດ້ຖືກຮຽກຮ້ອງຈາກທະນາຄານໂລກ) ເພື່ອວ່າຈ້າງ ຕົວແທນ, ບໍລິສັດ ທີ່ລົງເລິກສະເພາະດ້ານ ເພື່ອດຳເນີນການຈັດຊື້-ຈັດຈ້າງໃຫ້. ຜູ້ຈັດການການກໍ່ສ້າງ ກໍ ອາດຈະຖືກວ່າຈ້າງ ໃນລັກສະນະຄ້າຍຄືກັນ ໂດຍຈ່າຍຄ່າຕົວ (ຄ່າແຮງງານ) ເຊັ່ນວ່າ: ສັນຍາວຽກກໍ່ສ້າງ ທີ່ປະກອບໜ້າວຽກຍ່ອຍທີ່ຫຼາກຫຼາຍ ເຊິ່ງຕິດພັນກັບການກໍ່ສ້າງ, ການສ້ອມແປງ, ການຟື້ນຟູຄືນໃໝ່ ແລະ ການກໍ່ສ້າງ ໃນສະພາວະສຸກເສີນ ແລະ ສະຖານະການຫຼັງການຂັດແຍ່ງ, ຫຼື ໃນກໍລະນີ ທີ່ກ່ຽວຂ້ອງກັບ ສັນຍາຂະໜາດນ້ອຍ ທີ່ມີຈຳນວນຫຼາຍໆສັນຍາ, ຫຼື ຄວາມສາມາດຂອງ ຜູ້ກູ້ຢືມ ມີຈຳກັດ. ອົງກອນຈັດຊື້- ຈັດຈ້າງຕົວແທນ ຫຼື ຜູ້ຈັດການ ການກໍ່ສ້າງຕ້ອງດຳເນີນວຽກງານຈັດຊື້-ຈັດຈ້າງທຸກຢ່າງໃນນາມຂອງຜູ້ກູ້ຢືມ ຕາມຮູບການທີ່ໄດ້ກຳນົດໄວ້ ຢູ່ໃນສັນຍາກູ້ຢືມ ແລະ ສະແດງລະອຽດ ຢູ່ໃນແຜນຈັດຊື້-ຈັດຈ້າງ ເຊິ່ງທະນາ ຄານໂລກໄດ້ຕົກລົງເຫັນດີ ລວມທັງການນຳໃຊ້ ຕົວແບບມາດຕະຖານເອກະສານເຊີນປະມູນ *(SBDs)* ຂອງທະນາຄານໂລກ, ຂະບວນການທົບທວນຄືນ ແລະ ການປະກອບເອກະສານຕ່າງໆ. ໃນກໍລະນີທີ່ ອົງກອນແຫ່ງ ສປຊ ເຮັດໜ້າທີ່ເປັນ ອົງກອນຈັດຊື້-ຈັດຈ້າງຕົວແທນ ກໍໃຫ້ນຳໃຊ້ ຂະບວນ ການ

---

67 ອົງກອນແຫ່ງ ສປຊ ອ້າງອີງເຖິງ ອົງກອນທີ່ຂຶ້ນກັບ ອົງການສະຫະປະຊາຊາດ, ອົງກອນ ລົງເລິກວິຊາສະເພາະ ແລະ ຫ້ອງການປະຈຳພາກພື້ນ (ເຊັ່ນ: ອົງກອນ *PanAmerican Health Organization-PAHO),* ກອງທຶນ ແລະ ໂຄງການຕ່າງໆ. ຜູ້ກູ້ຢືມ ຕ້ອງສະເໜີທະນາຄານໂລກ ເພື່ອຮັບຮອງເອົາການໃຫ້ເງິນທຶນ ທີ່ເຕັມສ່ວນ ແລະ ຮ່າງສັນຍາກັບອົງກອນແຫ່ງ ສປຊ.

ດຽວກັນນີ້. ຜູ້ກູ້ຢືມ ຕ້ອງບັນຈຸເອົາ ມາດຕະການໃນການສ້າງຄວາມເຂັ້ມແຂງພາຍໃນ ອົງກອນ ເຂົ້າໃນສັນຍາ ພາຍຫຼັງທີ່ໄດ້ຕົກລົງເຫັນດີກັບທະນາຄານໂລກ[68].

## 3.12 ການບໍລິການ ການກວດກາສິນຄ້າ *(Inspection Services)*

ການກວດກາສິນຄ້າກ່ອນການຂົນສົ່ງ ແລະ ການຢັ້ງຢືນການນຳເຂົ້າ ກໍເປັນໜຶ່ງໃນບັນດາວຽກງານປົກປ້ອງໃຫ້ຜູ້ກູ້ຢືມ, ໂດຍສະເພາະ ຕໍ່ກັບປະເທດທີ່ມີແຜນງານນຳເຂົ້າຂະໜາດໃຫຍ່. ໂດຍປົກກະຕິ, ການກວດກາສິນຄ້າ ລວມທັງການຢັ້ງຢືນ ຈະກວມເອົາວຽກປະລິມານ, ຄຸນນະພາບ ແລະ ຄວາມສົມເຫດສົມຜົນດ້ານ ລາຄາ. ຕໍ່ກັບສິນຄ້ານຳເຂົ້າທີ່ຜ່ານຂະບວນການຈັດຊື້ ໃນຮູບການ ການປະມູນເປີດກ້ວາງສາກົນ *(ICB)* ຈະບໍ່ສາມາດກວດກາລາຄາໄດ້ ແຕ່ສາມາດກວດກາ ຄຸນນະພາບ ແລະ ປະລິມານໄດ້. ເຖິງຢ່າງໃດກໍຕາມ, ສິນຄ້ານຳເຂົ້າ ທີ່ບໍ່ໄດ້ຜ່ານຂະບວນການຈັດຊື້ ໃນຮູບການ ການປະມູນເປີດກ້ວາງ ສາກົນ *(ICB)* ອາດຈະ ຕ້ອງໄດ້ກວດກາດ້ານລາຄາຕື່ມອີກ. ການບໍລິການການກວດກາສິນຄ້າ ດ້ານກາຍະພາບ ກໍອາດຈະ ປະກອບເຂົ້ານຳ. ຕາມທຳມະດາ, ຜູ້ສະໜອງການບໍລິການ ການກວດກາ ສິນຄ້າ ຈະໄດ້ຮັບຄ່າຕົວ (ຄ່າແຮງງານ) ເຊິ່ງເປັນຄ່າທຳນຽມ ຄິດໄລ່ຕາມມູນຄ່າຂອງສິນຄ້ານັ້ນໆເປັນພື້ນຖານ. ມູນຄ່າຂອງ ການຢັ້ງຢືນ ການນຳເຂົ້າ ຈະບໍ່ຖືກນຳມາພິຈາລະນາເຂົ້າໃນການປະເມີນຜົນການປະມູນຜ່ານຮູບການ ການປະມູນເປີດກ້ວາງສາກົນ *(ICB).*

## 3.13 ການຈັດຊື້-ຈັດຈ້າງ ສຳລັບທຶນກູ້ຢືມ ຜ່ານສະຖາບັນການເງິນພົວພັນ ຫຼື ນິຕິບຸກຄົນ

ເມື່ອການກູ້ຢືມ ຫາກໄດ້ສະໜອງທຶນຜ່ານ ສະຖາບັນການເງິນພົວພັນ (ລະຫວ່າງກາງ) *(Financial Intermediary Institutions)* ຫຼື ນິຕິບຸກຄົນ (ຫຼື ອົງກອນຮັບມອບໝາຍ) ເຊັ່ນວ່າ: ສະຖາບັນສິນເຊື່ອ ກະສິກຳ, ບໍລິສັດການເງິນເພື່ອການພັດທະນາ, ຫຼື ກອງທຶນພັດທະນາໂຄງລ່າງ ເພື່ອໃຫ້ຜູ້ໄດ້ຮັບ ຜົນປະ ໂຫຍດກູ້ຢືມ ເຊັ່ນວ່າ: ບຸກຄົນ, ວິສາຫະກິດເອກະຊົນ, ວິສາຫະກິດຂະໜາດກາງ ແລະ ຂະໜາດນ້ອຍ, ຫຼື ວິສາຫະກິດຂອງອົງກອນລັດ ທີ່ມີເອກະ ລາດດ້ານການຄ້າ ໄດ້ຮັບທຶນສ່ວນໃດໜຶ່ງຂອງໂຄງການຍ່ອຍ ຮັບໃຊ້ແກ່ການຈັດຊື້ສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ໂດຍປົກກະຕິແລ້ວ, ຜູ້ທີ່ໄດ້ຮັບຜົນປະໂຫຍດ ກ່ຽວຂ້ອງກັບແຕ່ລະ ໂຄງການຍ່ອຍ ເປັນຜູ້ດຳເນີນການ ໂດຍໃຫ້ສອດຄ່ອງກັບຮູບການ ການຈັດຊື້-ຈັດຈ້າງ ຂອງພາກເອກະຊົນທີ່ໄດ້ສ້າງຂຶ້ນ ເປັນລະບົບທີ່ດີແລ້ວ ຫຼື ຕາມການປະຕິບັດ ທົ່ວໄປດ້ານການຄ້າ ເປັນທີ່ຮັບຮອງຂອງທະນາຄານໂລກ. ເຖິງຢ່າງໃດກໍຕາມ, ຕໍ່ກັບສະຖານະການເຫຼົ່ານີ້, ການປະມູນເປີດກ້ວາງສາກົນ *(ICB)* ຫຼື ການປະມູນວົງແຄບສາກົນ *(LIB),* ຫຼື ການການປະມູນເປີດກ້ວາງພາຍໃນ *(NCB)* ກໍຍັງອາດຈະເປັນຮູບການຈັດຊື້- ຈັດຈ້າງ ທີ່ເໝາະສົມທີ່ສຸດ ສຳລັບ ສິນຄ້າປະເພດດ່ຽວເປັນຈຳນວນຫຼາຍ, ຫຼື ໃນກໍລະນີ ຈັດກຸ່ມຂອງສິນຄ້າທີ່ຕ້ອງການຈຳນວນຫຼາຍ ແລະ ຄ້າຍຄືກັນ ມາລວມກັນເພື່ອຈັດຊື້ຄັ້ງດຽວ[69] ອີກດ້ວຍ. ໃນກໍລະນີທີ່ ທຶນກູ້ຢືມ ຫາກປ່ອຍໃຫ້ຜູ້ທີ່ໄດ້ຮັບຜົນປະໂຫຍດ ທີ່ເປັນອົງກອນລັດ ຫຼື

68 ຄູ່ມືແນະນຳສຳລັບທີ່ປຶກສາ ຕ້ອງນຳໃຊ້ ຕົວແທນອົງກອນຈັດຊື້-ຈັດຈ້າງ ແລະ ຜູ້ຈັດການ ການກໍ່ສ້າງ ຕະຫຼອດຮອດ ຜູ້ສະໜອງການບໍລິການການກວດກາ. ມູນຄ່າ ຫຼື ຄ່າຕົວ (ຄ່າແຮງານ) ຂອງຕົວແທນອົງກອນຈັດຊື້-ຈັດຈ້າງ ແລະ ຜູ້ຈັດການການກໍ່ສ້າງ ຫຼື ຜູ້ສະໜອງການບໍລິການກວດກາ (ໃຫ້ເບິ່ງ ເນື້ອໃນ ວັກ 3.12) ທີ່ມີຄຸນລັກສະນະເໝາະສົມ ນອນໃນທຶນກູ້ຢືມຈາກທະນາຄານໂລກ ສະໜອງທຶນໃຫ້. ສະນັ້ນ ຈິ່ງຕ້ອງປະກອບສັນຍາ ກູ້ຢືມ ແລະ ແຜນຈັດຊື້-ຈັດຈ້າງ ດ້ວຍເງື່ອນໄຂ ທີ່ນຳໃຊ້ ຂໍ້ກຳນົດ ແລະ ເງື່ອນໄຂ ຂອງການຄັດເລືອກ ແລະ ວ່າຈ້າງ ທີ່ທະນາຄານໂລກຮັບຮອງເອົາໄດ້.

69 ທະນາຄານໂລກ ຈະທົບທວນ ຮູບການ ແລະ ຂະບວນການຈັດຊື້-ຈັດຈ້າງ ແລະ ການຄັດເລືອກທີ່ປຶກສາຂອງພາກເອກະຊົນ ແລະ ຕາມການປະຕິບັດທົ່ວໄປດ້ານການຄ້າ ພາຍໃນປະເທດຂອງຜູ້ກູ້ຢືມ ເພື່ອຮັບຮອງເອົາ. ເມື່ອນຳໃຊ້ທຶນຂອງລັດ, ຂະບວນການຂອງພາກເອກະຊົນ ແລະ ການປະຕິບັດທົ່ວໄປດ້ານການຄ້າ ຈະບໍ່ຖືກເບິ່ງເປັນແບບດຽວກັນ. ສະນັ້ນ ຈິ່ງເບິ່ງການຕັດສິນໃຈຈຸດດຽວແບບກະທັດລັດຂອງພາກເອກະຊົນ ແລະ ເອກະສານກໍໜ້ອຍລົງ. ໂດຍປົກກະຕິ, ທະນາຄານໂລກ ຈະຮັບຮອງເອົາຂະບວນການ ທີ່ສະໜອງໄດ້ເງື່ອນໄຂລະດັບຊາດເປັນຢ່າງໜ້ອຍເທົ່ານັ້ນ ເຊິ່ງແມ່ນສະພາການຄ້າ, ວິສາຫະກິດພາກເອກຊົນທີ່ໄດ້ຕັ້ງຂຶ້ນ, ທະນາຄານກາງ, ຫຼື ອົງກອນພາສີ ແລະ ອະນຸຍາດນຳເຂົ້າ ເປັນຜູ້ວາງອອກ. ຢູ່ໃນສັນຍາກູ້ຢືມ ຫຼື ແຜນຈັດຊື້-ຈັດຈ້າງ ກໍບໍ່ຈຳເປັນກຳນົດວົງເງິນ ຕາມມູນຄ່າຂອງສັນຍາ ເພື່ອນຳໃຊ້ ໂດຍບໍ່ຂຶ້ນກັບຮູບການຈັດຊື້-ຈັດຈ້າງ ສະເພາະ ແລະ ການປະຕິບັດທົ່ວໄປດ້ານການຄ້າທີ່ຮັບຮອງເອົາ. ເຖິງແມ່ນວ່າ ໂຄງການຈະມີລັກສະນະຂັບເຄື່ອນຕາມຄວາມຕ້ອງການກໍຕາມ, ໃນພາກປະຕິບັດ ກໍບໍ່ອາດຈະກະກຽມແຜນຈັດຊື້-ຈັດຈ້າງ ຕາມເນື້ອໃນວັກ 1.18 ເປັນປະຈຳໄດ້ ໂດຍສະເພາະ ແມ່ນການຄັດເລືອກທີ່ປຶກສາ ເຊິ່ງແມ່ນ ຜູ້ໄດ້ຮັບຜົນປະໂຫຍດ ເປັນຜູ້ດຳເນີນການ. ອີງຕາມ

ສັນຍາທີ່ມີມູນຄ່າສູງ ແລະ ຄົບຊຸດ ກໍຕ້ອງພິຈາລະນາເຖິງການນຳໃຊ້ຮູບການຈັດຊື້-ຈັດຈ້າງ ທີ່ມີລັກສະນະແຂ່ງຂັນ ເຊິ່ງໄດ້ກຳນົດໃນຄູ່ມືແນະນຳສະບັບນີ້. ແຕ່ໃນກໍລະນີທຶນກູ້ຢືມ ຫາກປ່ອຍໃຫ້ອົງກອນ ທີ່ດຳ ເນີນງານ ພາຍໃຕ້ຮູບແບບຫຸ້ນສ່ວນລັດ ແລະ ເອກະຊົນ ກໍໃຫ້ປະຕິບັດຕາມ ເນື້ອໃນ ວັກ 3.14 ແລະ 3.15 ລຸ່ມນີ້.

ເອກະສານກ່ຽວກັບການຈັດຕັ້ງປະຕິບັດໂຄງການ (ຫຼື ຄູ່ມື) ຕ້ອງອະທິບາຍເຖິງ ຫຼັກການແນະນຳພື້ນຖານ ແລະ ຂະບວນການ ທີ່ຮັບຮອງ ແລະ ນຳໃຊ້ຢູ່ໃນສັນຍາກູ້ຢືມ. ບັນດາຫຼັກການເຫຼົ່ານີ້ ຕ້ອງປະກອບຂໍ້ກຳນົດ ທີ່ເປັນພັນທະຂອງຜູ້ທີ່ໄດ້ຮັບຜົນປະໂຫຍດຈາກທຶນກູ້ຢືມນີ້ ຈະບໍ່ມອບສັນຍາໃຫ້ຜູ້ຊະນະການປະມູນ ທີ່ ເປັນບໍລິສັດແມ່ ຫຼື ບໍລິສັດໃນກຸ່ມ ຖ້າຫາກເຂົາເຈົ້າບໍ່ໄດ້ສ້າງຕັ້ງຂຶ້ນ ແລະ ກະກຽມຄວາມພ້ອມ ຢ່າງເຕັມ ສ່ວນ. ການສ້າງເອກະສານ ຕ້ອງກຳນົດຄວາມຮັບຜິດຊອບຕົ້ນຕໍ ຂອງສະຖາບັນການເງິນພົວພັນ ແລະ ນິຕິບູກຄົນ (ຫຼື ອົງກອນຮັບມອບໝາຍ) ເຊັ່ນວ່າ:

(1) ປະເມີນຄວາມສາມາດຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ ໃນການດຳເນີນການຈັດຊື້-ຈັດຈ້າງ ທີ່ມີປະ ສິດທິຜົນ.

(2) ອະນຸມັດ ແຜນຈັດຊື້-ຈັດຈ້າງສິນຄ້າ, ການຮັບເໝົາກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຮັບຮອງເອົາໄດ້ ແລະ ແຜນການຄັດເລືອກທີ່ປຶກສາ ທີ່ອາດຈະມີ.

(3) ຕົກລົງເຫັນດີ ກ່ຽວກັບການກະກຽມ ການຕິດຕາມກວດກາ ແລະ ຄາດຄະເນລ່ວງໜ້າ ກ່ຽວກັບ ທຶນກູ້ຢືມຍ່ອຍ (ໂດຍໃຫ້ສອດຄ່ອງກັບ ຂໍ້ກຳນົດຂອງທຶນກູ້ຢືມຈາກທະນາຄານໂລກ) ເຊິ່ງຜູ້ທີ່ໄດ້ຮັບຜົນປະໂຫຍດ ດຳເນີນການຈັດຊື້-ຈັດຈ້າງ ພາຍໃຕ້ທຶນກູ້ຢືມຍ່ອຍ ທັງຮັບປະກັນໃຫ້ສອດຄ່ອງກັບຮູບການ ການຈັດຊື້-ຈັດຈ້າງ ແລະ ການປະຕິບັດທົ່ວໄປດ້ານການຄ້າ ທີ່ໄດ້ຕົກລົງເຫັນດີນຳກັນ ກັບ ພາກເອກະຊົນ.

(4) ເກັບມ້ຽນບັນທຶກສຳນວນທີ່ກ່ຽວຂ້ອງທັງໝົດ ເພື່ອຮັບໃຊ້ໃຫ້ແກ່ການກວດກາຄືນຕາມຫຼັງ ແລະ ການກວດສອບ ຂອງທະນາຄານໂລກ. ສະຖາບັນການເງິນພົວພັນ ຫຼື ນິຕິບຸກຄົນ (ອົງກອນຮັບ ມອບໝາຍ) ຄວນເພິ່ງພໍໃຈຕໍ່ຕົນເອງ ກັບຄວາມສົມເຫດສົມຜົນຂອງມູນຄ່າສັນຍາ ທີ່ໄດ້ຮັບຈາກ ຜູ້ ໄດ້ຮັບຜົນປະໂຫຍດ ຕາມສະຖານະການຂອງຕະຫຼາດສະເພາະ ໂດຍຜ່ານການວ່າຈ້າງ ນິຕິບຸກ ຄົນ ຫຼື ຜູ້ກວດສອບ ອິດສະລະ ຖ້າເຫັນວ່າຈຳເປັນ.

## 3.14 ການຈັດຊື້-ຈັດຈ້າງ ພາຍໃຕ້ການກະກຽມຮູບແບບຫຸ້ນສ່ວນລັດ ແລະ ເອກະຊົນ

ເມື່ອທະນາຄານໂລກ ຫາກເຂົ້າຮ່ວມການສະໜອງທຶນໃຫ້ໂຄງການ ຫຼື ສັນຍາ ທີ່ຈັດຊື້-ຈັດຈ້າງ ພາຍໃຕ້ ການກະກຽມຮູບແບບຫຸ້ນສ່ວນລັດ ແລະ ເອກະຊົນ *(Public Private Partnership—PPP)* ເຊັ່ນວ່າ: ກໍ່ສ້າງ–ເປັນເຈົ້າຂອງ–ດຳເນີນງານ *(Build–Own–Operate—BOO)* / ກໍ່ສ້າງ – ເປັນເຈົ້າຂອງ– ໂອນມອບ *(Build–Own–Transfer—BOT)* / ກໍ່ສ້າງ–ເປັນເຈົ້າຂອງ–ດຳເນີນງານ–ໂອນມອບ *(Build–Own–Operate–Transfer—BOOT)* [70] , ການສຳປະທານ ຫຼື ການກະກຽມ ຮູບແບບກຳມະສິດເອກະຊົນທີ່ຄ້າຍຄື ໂດຍຕ້ອງນຳໃຊ້ຂະບວນການ ການຈັດຊື້-ຈັດຈ້າງທີ່ໄດ້ລະບຸໄວ້ໃນເອກະສານກູ້ຢືມ ແລະ ສະ ແດງລະອຽດໃນແຜນຈັດຊື້-ຈັດຈ້າງ ພາຍຫຼັງທີ່ທະນາຄານໂລກຮັບຮອງເອົາ ນຶ່ງໃນສອງກໍລະນີລຸ່ມນີ້:

(1) ຜູ້ກູ້ຢືມ ຕ້ອງເລືອກເອົາ ຜູ້ສຳປະທານ ຫຼື ຜູ້ປະກອບການ ພາຍໃຕ້ຮູບແບບ ກໍ່ສ້າງ-ເປັນເຈົ້າຂອງ- ດຳເນີນງານ *(BOO)* / ກໍ່ສ້າງ-ດຳເນີນງານ-ໂອນມອບ *(BOT)* / ກໍ່ສ້າງ-ເປັນເຈົ້າຂອງ-ດຳເນີນງານ -ໂອນມອບ *(BOOT)* ຫຼື ສັນຍາ ປະເພດທີ່ຄ້າຍຄື ໂດຍຜ່ານຂະບວນການປະມູນທີ່ມີລັກສະນະແຂ່ງຂັນແບບເປີດກ້ວາງ ທີ່ໄດ້ກຳນົດ

---

ບັນຊີລາຍການກິດຈະກຳ ທີ່ໄດ້ຄຸນລັກສະນະເໝາະສົມທີ່ຈະປະຕິບັດນັ້ນ ກໍຄວນເຮັດເປັນ ແຜນຈັດຊື້-ຈັດຈ້າງ ແບບກະທັດລັດ ທີ່ເຫັນວ່າເປັນໄປໄດ້ ແລະ ສາມາດປະຕິບັດໄດ້.

70 ກໍ່ສ້າງ-ເປັນເຈົ້າຂອງ-ດຳເນີນງານ ຫຍໍ້ມາຈາກ *(BOO: Build-Own-Operate)*, ກໍ່ສ້າງ-ດຳເນີນງານ-ໂອນມອບ *(BOT: Build-Own-Transfer)* ແລະ ກໍ່ສ້າງ-ເປັນເຈົ້າຂອງ-ດຳເນີນງານ-ໂອນມອບ *(BOOT: Build-Own-Operate-Transfer)*,

ໄວ້ ແລະ ທະນາຄານໂລກຮັບຮອງເອົາໄດ້ [71] ເຊິ່ງອາດຈະປະກອບມີຫຼາຍຂັ້ນຕອນ ເພື່ອຮັບປະກັນໃຫ້ໄດ້ຜົນປະໂຫຍດສູງສຸດ ຈາກການປະສົມປະສານຂອງບັນທັດຖານການປະເມີນຜົນຕ່າງໆ ເຊັ່ນວ່າ: ມູນຄ່າ ແລະ ລະດັບຄວາມສຳຄັນຂອງທຶນທີ່ສະເໜີ ຈະສະໜອງໃຫ້, ມາດຕະຖານ ການດຳເນີນງານຂອງສິ່ງອຳນວຍຄວາມສະດວກ ທີ່ສະເໜີ ປະກອບໃຫ້, ລາຄາຄິດໄລ່ກັບຜູ້ນຳໃຊ້ສຸດທ້າຍ, ລາຍຮັບອື່ນໆ ທີ່ເປັນຜົນພອຍໄດ້ຈາກການນຳໃຊ້ ສິ່ງອຳນວຍຄວາມສະດວກ ຂອງຜູ້ສຳປະທານ ຫຼື ຜູ້ປະກອບການ ແລະ ໄລຍະເວລາ ຂອງການຫັກຄ່າຫຼຸຍຫ້ຽນຂອງສິ່ງອຳນວຍຄວາມສະດວກ. ໂດຍຜ່ານວິທີການນີ້, ຜູ້ສຳປະທານ ຫຼື ຜູ້ປະກອບການທີ່ຖືກຄັດເລືອກ ເຊິ່ງໄດ້ກ່າວມານັ້ນ ມີອິດສະລະ ໃນການນຳໃຊ້ຂະບວນການ ການຈັດຊື້-ຈັດຈ້າງຂອງຕົນເອງ ເຂົ້າໃນການຈັດຊື້ສິນຄ້າ, ການຮັບເໝົາກໍ່ສ້າງ, ການບໍລິການທີ່ປຶກສາ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຈາກແຫຼ່ງທີ່ມີຄຸນລັກສະນະເໝາະສົມ. ໃນກໍລະນີນີ້, ທະນາຄານໂລກ ຕ້ອງລະບຸປະເພດຂອງລາຍຈ່າຍ ທີ່ເກີດຂຶ້ນ ຂອງຜູ້ສຳປະທານ ຫຼື ຜູ້ປະກອບການ ທີ່ກ່າວມານັ້ນ ເຂົ້າໃນເອກະສານສະເໜີໂຄງການ *(Project Appraisal Document—PAD)* ແລະ ສັນຍາກູ້ຢືມທີ່ທະນາຄານໂລກສະໜອງທຶນໃຫ້. ຫຼື

(2) ຖ້າຜູ້ສຳປະທານ ຫຼື ຜູ້ປະກອບການ ທີ່ກ່າວມານັ້ນ ຫາກຍັງບໍ່ທັນໄດ້ຖືກຄັດເລືອກ ຕາມວິທີການ ທີ່ກຳນົດໄວ້ຕາມເນື້ອໃນ ວັກ 3.14(1) ຂ້າງເທິງ, ການຈັດຊື້ສິນຄ້າ, ການກໍ່ສ້າງ ຫຼື ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຕ້ອງການປະກອບເຂົ້າໃນສິ່ງອຳນວຍຄວາມສະດວກ ເຊິ່ງທະນາຄານໂລກສະໜອງທຶນໃຫ້ນັ້ນ ຕ້ອງໃຫ້ສອດຄ່ອງກັບຂະບວນການປະມູນ ຜ່ານຮູບການ ການປະມູນ ເປີດກ້ວາງສາກົນ *(ICB)* ຫຼື ການປະມູນວົງແຄບສາກົນ *(LIB)* ສຳລັບການຈັດຊື້ ທີ່ມີມູນຄ່າສູງ ຕາມທີ່ໄດ້ກຳນົດ ຢູ່ໃນໝວດ (2). ສຳລັບສັນຍາ ທີ່ມີມູນຄ່າຕ່ຳກວ່າ ກໍນຳໃຊ້ຮູບການ ການປະມູນຈັດຊື້-ຈັດຈ້າງ ທີ່ເໝາະສົມອື່ນໆ ທີ່ໄດ້ກຳນົດໄວ້ ແລະ ທະນາຄານໂລກຮັບຮອງເອົາ. ສ່ວນການບໍລິການທີ່ປຶກສາ *(Consulting Services)* ກໍໃຫ້ສອດຄ່ອງກັບ ຄູ່ມືແນະນຳ ສຳລັບທີ່ປຶກສາ.

3.15 ເຖິງແມ່ນວ່າ ຈະມີຂໍ້ກຳນົດ ຕາມເນື້ອໃນ ວັກ 3.14(2) ແລ້ວກໍຕາມ, ທະນາຄານໂລກ ອາດຈະຮັບຮອງ ເອົາກໍລະນີພິເສດໄດ້ ເຊັ່ນວ່າ: ການຂະຫຍາຍກິດຈະການ ຂອງລະບົບເດີມທີ່ມີຢູ່ແລ້ວແບບຂະໜາດນ້ອຍ ເຊິ່ງເປັນໜ້າທີ່ຂອງຜູ້ສຳປະທານ ຫຼື ຜູ້ປະກອບການ ທີ່ເປັນວິສາຫະກິດເອກະຊົນ ຫຼື ລັດວິສາຫະກິດ. ເມື່ອນຳໃຊ້ຮູບການ ການປະມູນທີ່ມີລັກສະນະແຂ່ງຂັນແບບເປີດກ້ວາງ. ອາດຈະບໍ່ຮັບປະກັນໄດ້, ສະນັ້ນ, ການນຳໃຊ້ ວິສາຫະກິດດັ່ງກ່າວ ເຂົ້າໃນຂະບວນການຈັດຊື້-ຈັດຈ້າງ ໄດ້ດ້ວຍເງື່ອນໄຂລຸ່ມນີ້:

(1) ເປັນນິຕິບຸກຄົນ ທີ່ສະໜອງໄດ້ ຕາມບັນທັດຖານ ຕາມເນື້ອໃນ ວັກ 1.10 (2) ຂອງຄູ່ມືແນະນຳ ສະບັບນີ້.

(2) ທະນາຄານໄດ້ຕັດສິນຮັບຮອງເອົາ ຄວາມສາມາດ, ພາກປະຕິບັດ ແລະ ຂະບວນການຈັດຊື້-ຈັດ ຈ້າງ ຂອງວິສາຫະກິດ ທີ່ ໝັ້ນໃຈຕໍ່ຕົນເອງ ເຊິ່ງເປັນສ່ວນໜຶ່ງຂອງການດຳເນີນທຸລະກິດປົກກະຕິ.

(3) ນອກຈາກຂໍ້ກຳນົດ ຕາມເນື້ອໃນ ວັກ 1.7 (1), ວິສາຫະກິດ ຈະບໍ່ໄດ້ຮັບສິດທິພິເສດພາຍໃນປະເທດ ຫຼື ມອບສັນຍາໃຫ້ບໍລິສັດແມ່ ຫຼື ບໍລິສັດໃນກຸ່ມ ຫຼື ຂາຫຸ້ນທີ່ຄຸ້ມຄອງ.

(4) ຂະບວນການຈັດຊື້-ຈັດຈ້າງ ຮັບປະກັນໃຫ້ມີການແຂ່ງຂັນ ທີ່ຍຸຕິທຳ, ປະຢັດ (ເສດຖະກິດ), ມີປະສິດທິຜົນ, ມີຄຸນນະພາບ ແລະ ຄວາມໂປ່ງໃສ. ໃນເວລາຈັດຕັ້ງປະຕິບັດ, ທະນາຄານໂລກ ຈະດຳເນີນ ການກວດກາຄືນຕາມຫຼັງ ເປັນແຕ່ລະໄລຍະ ເພື່ອຮັບປະກັນວ່າ ຄວາມສາມາດໃນ ການຈັດຊື້-ຈັດຈ້າງ ແລະ ພາກປະຕິບັດ ກໍຍັງເປັນທີ່ເພິ່ງພໍໃຈ ແລະ ຮັບຮອງເອົາໄດ້ ລວມທັງ ຂະບວນການ ຈັດຊື້-ຈັດຈ້າງ ທີ່ໄດ້ຕົກລົງເຫັນດີນຳກັນ ຢູ່ໃນສັນຍາກູ້ຢືມ ຍັງໄດ້ຮັບການປະຕິບັດ.

---

71 ສຳລັບປະເພດໂຄງການ ເຊັ່ນວ່າ: ເກັບຄ່າຜ່ານຂົວທາງ, ອຸບມຸງ, ທ່າເຮືອ, ຂົວ, ສະຖານີໄຟຟ້າ, ສະຖານທີ່ກຳຈັດຂີ້ເຫຍື້ອ ແລະ ລະບົບແຈກຢາຍນ້ຳ ນ້ຳສະອາດ). ການປະມູນທີ່ມີລັກສະນະແຂ່ງຂັນແບບເປີດກ◌້ວາງ ໝາຍເຖິງ: (1) ການປະມູນເປີດກ້ວາງສາກົນ *(ICB)* ຫຼື (2) ການປະມູນເປີດກ້ວາງພາຍໃນ *(NCB)* ສຳລັບສັນຍາທີ່ມີມູນຄ່າຄາດຄະເນ ຕ່ຳກວ່າວົງເງິນ ເຊິ່ງແມ່ນຜູ້ຈັດການການຈັດຊື້-ຈັດຈ້າງພາກພື້ນ ເປັນຜູ້ກຳນົດ. ນອກຈາກນັ້ນ, ການເຊີນເຂົ້າຮ່ວມປະມູນໂດຍກົງ ເຊັ່ນ: ຫຼັກການການປະມູນ ຜ່ານຮູບການປະມູນວົງແຄບສາກົນ *(LIB)* ອາດຈະນຳມາພິຈາລະນາ. ຫຼັກການປະມູນທຸກໆຮູບການ ຕ້ອງໄດ້ຮັບການທົບທວນ ກ່ອນການຮັບຮອງເອົາຂອງທະນາຄານໂລກ.

## 3.16 ການຈັດຊື້-ຈັດຈ້າງ ຕາມຫຼັກການຜົນງານ

ການຈັດຊື້-ຈັດຈ້າງບົນພື້ນຖານຂອງຜົນງານ *(Performance Based Procurement)* [72] ຫຼື ຮຽກອີກຊື່ໜຶ່ງວ່າ ການຈັດຊື້-ຈັດຈ້າງ ບົນພື້ນຖານຜົນໄດ້ຮັບ *(Output Based Procurement)* ແມ່ນອ້າງອີງເຖິງ ຂັ້ນຕອນການຈັດຊື້-ຈັດຈ້າງ ທີ່ມີລັກສະນະແຂ່ງຂັນ (ການປະມູນເປີດກ້ວາງສາກົນ-*ICB*,, ການປະມູນວົງແຄບສາກົນ-*LIB*, ຫຼື ການປະມູນເປີດກວ້າງພາຍໃນ-*NCB*,) ເຊິ່ງຂໍ້ຜູກພັນໃນສັນຍາແມ່ນຊຳລະ ບົນ ພື້ນຖານຂອງຜົນໄດ້ຮັບ*(Outputs)* ແທນທີ່ຈະຖືເອົາ ສິ່ງນຳເຂົ້າ *(Inputs)* ທີ່ເປັນແບບເດີມໆ. ຜົນໄດ້ ຮັບທີ່ຕ້ອງການ ໄດ້ຖືເອົາຕາມມາດຕະຖານເຕັກນິກເປັນຕົວກຳນົດ ແລະ ຈະໄດ້ປະເມີນຜົນຕາມວິທີ ການປະເມີນນຳອີກ. ຜົນໄດ້ຮັບເຫຼົ່ານັ້ນ ຕ້ອງແນໃສ່ສ້າງຄວາມເພິ່ງພໍໃຈ ຕາມຄວາມຕ້ອງການ ດ້ານຄຸນນະພາບ, ປະລິມານ ແລະ ຄວາມເຊື່ອໝັ້ນ. ການຊຳລະ ກໍໃຫ້ສອດຄ່ອງກັບປະລິມານຜົນຜະລິດທີ່ໄດ້ສົ່ງມອບ ຕາມລະດັບຂອງຄຸນນະພາບທີ່ຕ້ອງການ. ຈຳນວນເງິນຊຳລະອາດຈະຫຼຸດລົງ (ຫຼື ເງິນຫັກໄວ້ເພື່ອຄ້ຳປະກັນການເປ່ເພ) ເມື່ອລະດັບຄຸນນະພາບຂອງຜົນໄດ້ຮັບຫາກຕ່ຳ, ແລະ ໃນບາງກໍລະນີສະເພາະ ກໍອາດຈະຈ່າຍເປັນເງິນເພີ່ມ ເມື່ອລະດັບຄຸນນະພາບຜົນຜະລິດຫາກໄດ້ສູງກວ່າ. ຕາມທຳມະດາ, ເອກະ ສານເຊີນປະມູນ ບໍ່ໄດ້ແນະນຳ ສິ່ງນຳເຂົ້າ ຫຼື ວິທີການເຮັດວຽກໃຫ້ຜູ້ຮັບເໝົາ. ຜູ້ຮັບເໝົາ ສະເໜີວິທີທາງ ທີ່ເໝາະສົມທີ່ສຸດໄດ້ຕາມໃຈ ບົນພື້ນຖານປະສົບການທີ່ສະສົມ ແລະ ເປັນຫຼັກຖານທີ່ຢັ້ງຢືນໄດ້ ແລະ ຕ້ອງພິສູດໃຫ້ເຫັນເພື່ອຈະໄດ້ລະດັບຄຸນນະພາບມາ ຕາມທີ່ກຳນົດໄວ້ໃນ ເອກະສານເຊີນປະມູນ.

3.17 ການຈັດຊື້-ຈັດຈ້າງ ບົນພື້ນຖານຜົນງານ (ຫຼື ການຈັດຊື້-ຈັດຈ້າງ ບົນພື້ນຖານຜົນໄດ້ຮັບ) ປະກອບດ້ວຍ:

(1) ຂໍ້ກຳນົດຂອງການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຈະຊຳລະ ບົນພື້ນຖານຂອງຜົນໄດ້ຮັບ.

(2) ການອອກແບບ, ການສະໜອງ, ການກໍ່ສ້າງ (ຫຼື ການຟື້ນຟູຄືນໃໝ່) ແລະ ການມອບສິ່ງອຳນວຍຄວາມສະດວກ ທີ່ຜ່ານການດຳເນີນງານທົດລອງ ໃຫ້ຜູ້ກູ້ຢືມນຳໃຊ້.

(3) ການອອກແບບ, ການສະໜອງ, ການກໍ່ສ້າງ (ຫຼື ການຟື້ນຟູຄືນໃໝ່) ຂອງສິ່ງອຳນວຍ ຄວາມສະດວກ ແລະ ການຈັດຫາ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ເພື່ອດຳເນີນງານ ແລະ ບຳລຸງຮັກສາ ຕາມໄລຍະເວລາຄິດເປັນປີ ທີ່ກຳນົດໄວ້ ພາຍຫຼັງໄດ້ສົ່ງມອບ[73]. ສຳລັບກໍລະນີ ທີ່ຕ້ອງການການອອກແບບ, ການສະໜອງ ແລະ/ຫຼື ການກໍ່ສ້າງ, ຕາມທຳມະດາ ກໍຕ້ອງຜ່ານການຄັດເລືອກ ຄຸນວຸດທິກ່ອນການປະມູນ ແລະ ກໍອາດນຳໃຊ້ ການປະມູນແບບສອງຂັ້ນຕອນ ດັ່ງທີ່ລະບຸໄວ້

## 3.18 ການຈັດຊື້-ຈັດຈ້າງ ພາຍໃຕ້ທຶນກູ້ຢືມຄ້ຳປະກັນ ຈາກທະນາຄານໂລກ

ຖ້າທະນາຄານໂລກ ຫາກຄ້ຳປະກັນ ການຊຳລະຄືນ ຂອງທຶນກູ້ຢືມ ຈາກຜູ້ໃຫ້ກູ້ຢືມອື່ນ, ຫລືຄ້ຳປະກັນການຊຳລະຄືນທຶນບໍ່ແມ່ນເງິນກູ້ ທີ່ພົວພັນເຖິງເງື່ອນໄຂຂໍ້ຜູກມັດໃນການຊຳລະສະສາງຂອງລັດຖະບານ, ການຈັດຊື້- ຈັດຈ້າງສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ນຳໃຊ້ທຶນກູ້ຢືມ ຫລືເງື່ອນໄຂຂໍ້ຜູກມັດໃນການຊຳລະສະສາງເຊິ່ງກ່າວມາຂ້າງເທິງນັ້ນ ຕ້ອງໃສ່ໃຈເຖິງຫຼັກການ ແລະ ຂະບວນການ ແລະ ໃຫ້ສອດຄ່ອງກັບ ຫຼັກການ ພື້ນຖານ ຕາມ

---

72 ການດຳເນີນການຈັດຊື້-ຈັດຈ້າງຕາມຫຼັກການຜົນງານ ຂອງໂຄງການທີ່ທະນາຄານໂລກ ສະໜອງທຶນໃຫ້ນັ້ນ ຕ້ອງໄດ້ຮັບການຕົກລົງເຫັນດີຈາກທະນາຄານໂລກ ໂດຍອີງໃສ່ຜົນການວິໃຈດ້ານວິຊາການ ທີ່ໜ້າເພິ່ງພໍໃຈ ຈາກຫຼາຍໆທາງເລືອກທີ່ແຕກຕ່າງກັນ ແລະ ມີຢູ່ ແລະ ຕ້ອງໄດ້ກຳນົດ ຢູ່ໃນເອກະສານສະເໜີໂຄງການ ແລະ ປະກອບເຂົ້າໃນແຜນຈັດຊື້-ຈັດຈ້າງ.

73 ຕົວຢ່າງປະເພດການຈັດຊື້-ຈັດຈ້າງຄື: (1) ກໍລະນີການຈັດຈ້າງການບໍລິການທີ່ປຶກສາ ເຊັ່ນ: ການວ່າຈ້າງບໍລິການການແພດ ຄື ການຊຳລະຄ່າບໍລິການສະເພາະຄື ການຢັ້ງຢາມຫ້ອງການ, ຫຼື ການທົດລອງຢູ່ຫ້ອງທົດລອງທີ່ໄດ້ກຳນົດ ແລະ ອື່ນໆ. (2) ກໍລະນີການຈັດຊື້ ສິ່ງອຳນວຍຄວາມສະດວກ ເຊັ່ນ: ການອອກແບບ, ການຈັດຊື້-ຈັດຈ້າງ, ການກໍ່ສ້າງ, ການປະກອບໂຮງງານພະລັງງານຄວາມຮ້ອນ ທີ່ຜູ້ກູ້ຢືມ ຈະດຳເນີນງານ. (3) ກໍລະນີການຈັດຊື້ສິ່ງອຳນວຍຄວາມສະດວກ ແລະ ແລະ ການຈັດຈ້າງການບໍລິການເຊັ່ນ: ການອອກແບບ, ການຈັດຊື້-ຈັດຈ້າງ, ການກໍ່ສ້າງທາງ (ຫຼື ການຟື້ນຟູຄືນໃໝ່), ແລະ ການດຳເນີນງານ ແລະ ບູລະນະຮັກສາທາງ ພາຍໃນ ຫ້າ ປີ (5 ປີ) ຫຼັງສຳເລັດການກໍ່ສ້າງ.

ເນື້ອໃນວັກ 1.5. ທະນາຄານໂລກ ອາດຈະດຳເນີນການທົບທວນ ຂະບວນການ ຈັດຊື້-ຈັດຈ້າງ ໂດຍນຳໃຊ້ທຶນກູ້ຢືມ ບົນພື້ນຖານຫລັກການນີ້.

## 3.19 ການມີສ່ວນຮ່ວມຂອງຊຸມຊົນ ເຂົ້າໃນການຈັດຊື້-ຈັດຈ້າງ

ໃນກໍລະນີ ທີ່ຮັບໃຊ້ຜົນປະໂຫຍດຍາວນານເຊິ່ງເປັນຄວາມຍືນຍົງຂອງໂຄງການ, ຫຼື ເພື່ອບັນລຸ ເປົ້າໝາຍສະເພາະດ້ານສັງຄົມຂອງໂຄງການ, ຕໍ່ກັບອົງປະກອບທີ່ໄດ້ຄັດເລືອກຂອງໂຄງການ ເຫັນສົມຄວນທີ່ຈະ ດຳເນີນການດັ່ງນີ້:

(1) ຮຽກໂຮມເອົາຊຸມຊົນທ້ອງຖິ່ນ ແລະ/ຫຼື ອົງການບໍ່ສັງກັດລັດຖະບານ *(Nongoverrnental Organization—NGO)* ມີສ່ວນຮ່ວມເຂົ້າໃນການຮັບເໝົາກໍ່ສ້າງ ແລະ ການສະໜອງການ ບໍລິ ການ (ທີ່ບໍ່ແມ່ນທີ່ປຶກສາ), ຫຼື

(2) ເພີ່ມທະວີການນຳໃຊ້ຄວາມຮູ້ເຮັດຮູ້ທຳ *(Know-how),* ສິນຄ້າ ແລະ ວັດສະດຸ ຂອງທ້ອງຖິ່ນ, ຫຼື

(3) ວ່າຈ້າງແຮງງານຄົນ ເຂົ້າໃນວຽກທີ່ໃຊ້ແຮງງານເປັນຕົ້ນຕໍ ແລະ ເຕັກໂນໂລຊີ ທີ່ເໝາະສົມ.

ຂະບວນການຈັດຊື້-ຈັດຈ້າງ, ມາດຕະຖານເຕັກນິກ ແລະ ການຈັດກຸ່ມສັນຍາ ຕ້ອງດັດປັບໃຫ້ເໝາະສົມ ເພື່ອສະທ້ອນໃຫ້ເຫັນເຖິງປັດໃຈເຫຼົ່ານັ້ນ ໄດ້ນຳມາພິຈາລະນາ ດ້ວຍເງື່ອນໄຂທີ່ທະນາຄານໂລກຮັບຮອງເອົາໄດ້. ຂະບວນການຈັດຊື້-ຈັດຈ້າງທີ່ສະເໜີ ແລະ ກິດຈະກຳຕ່າງໆຂອງໂຄງການ ທີ່ຊຸມຊົນມີສ່ວນຮ່ວມ ຕ້ອງໄດ້ກ່າວໄວ້ ຢູ່ໃນສັນຍາກູ້ຢືມ ແລະ ຂະຫຍາຍລະອຽດ ຢູ່ໃນແຜນຈັດຊື້-ຈັດຈ້າງ ຫຼື ເອກະສານຈັດຕັ້ງປະຕິບັດໂຄງການທີ່ກ່ຽວຂ້ອງ (ຫຼື ຄູ່ມື) ໂດຍໄດ້ຮັບການຕົກລົງເຫັນດີ ຈາກທະນາຄານໂລກ ແລະ ຜູ້ກູ້ຢືມ ພ້ອມທີ່ ຈະປະກາດສູ່ສາທາລະນະ. ເຖິງແມ່ນວ່າຈະມີໂຄງການ ເຊິ່ງມີລັກສະນະຕ້ອງການ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ *(Community Driven Development—CDD)* ກໍຕາມ, ແຕ່ອາດຈະບໍ່ສາມາດປະຕິບັດໄດ້ສະເໝີໄປ ເພື່ອກະກຽມແຜນຈັດຊື້-ຈັດຈ້າງລະອຽດ ໃນເວລາເຈລະຈາເຊິ່ງໄດ້ລະບຸໄວ້ ຕາມເນື້ອໃນວັກ 1.18 ຕໍ່ກັບອົງປະກອບຂອງໂຄງການ ທີ່ຕິດພັນກັບ ການພັດທະນາການຂັບເຄື່ອນຂອງຊຸມຊົນ*(CDD)*, ໂດຍສະເພາະ ເມື່ອຊຸມຊົນດຳເນີນ ກິດຈະກຳຈັດຊື້- ຈັດຈ້າງຫຼື ກິດຈະກຳທີ່ເຂົາເຈົ້າດຳເນີນການເອງໂດຍກົງ. ທາງພາກປະຕິບັດ ກໍອາດຈະສ້າງແຜນຈັດຊື້- ຈັດຈ້າງ ແບບກະທັດລັດ ບົນພື້ນຖານບັນຊີລາຍຊື່ ຄວາມຕ້ອງການຂອງກິດຈະກຳທີ່ມີຄຸນລັກສະນະເໝາະສົມ ທີ່ຈະຈັດຕັ້ງປະ ຕິບັດ[74].

## 3.20 ການນຳໃຊ້ລະບົບລວມທົ່ວປະເທດ

"ການນຳໃຊ້ລະບົບລວມທົ່ວປະເທດ" *(Use of Country Systems—UCS)* ອ້າງອີງເຖິງ ການນຳໃຊ້ຂະບວນການ ແລະ ຮູບການ ການຈັດຊື້-ຈັດຈ້າງ ທີ່ສະເໜີຢູ່ໃນລະບົບການຈັດຊື້-ຈັດຈ້າງຂອງລັດ ທີ່ມີຢູ່ພາຍໃນປະເທດຂອງຜູ້ກູ້ຢືມ ເຊິ່ງຖືກຖືວ່າສອດຄ່ອງກັບຄູ່ມືແນະນຳສະບັບນີ້ ແລະ ທະນາຄານໂລກ ຮັບຮອງເອົາໄດ້ ພາຍໃຕ້ແຜນງານ

---

74 ໂດຍທົ່ວໄປ, ໃນບັນດາໂຄງການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ຈະພົບເຫັນ ສັນຍາກ່ຽວກັບການຈັດຊື້ສິນຄ້າ ແລະ ການຈັດຈ້າງທັງການບໍລິການທີ່ປຶກສາ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ມີມູນຄ່າໜ້ອຍ ແຕ່ພັດມີຫຼາຍໆສັນຍາ, ແລະ ການກໍ່ສ້າງຂະໜາດນ້ອຍ ທີ່ກະແຈກກະຈາຍ ຢູ່ເຂດຫ່າງໄກສອກຫຼີກ ຂະບວນການຈັດຊື້-ຈັດຈ້າງ ທີ່ນຳໃຊ້ທົ່ວໄປ ແມ່ນຮູບການ ການສົມທຽບລາຄາ, ການປະມູນເປີດກ້ວາງ ຢູ່ທ້ອງຖິ່ນ ໂດຍເຊີນຜູ້ເຂົ້າແຂ່ງຂັນປະມູນ ໃນການຈັດຊື້ສິນຄ້າ ແລະ ການກໍ່ສ້າງ ຢູ່ພາຍໃນເຂດຊຸມຊົນນັ້ນ ແລະ ເຂດອ້ອມແອ້ມ, ການເຮັດສັນຍາ ໂດຍກົງ ສຳລັບການກໍ່ສ້າງການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ມີມູນຄ່າໜ້ອຍ, ແລະ ການນຳໃຊ້ແຮງງານແລະ ຊັບພະຍາກອນຂອງທ້ອງຖິ່ນເອງ. ໂດຍອ້າງອີງເຖິງສັນຍາກູ້ຢືມ, ເອກະສານຈັດຕັ້ງປະຕິບັດໂຄງການ (ຫຼື ຄູ່ມື) ຕ້ອງໄດ້ອະທິບາຍ ວຽກງານກະກຽມການຈັດຊື້-ຈັດຈ້າງທັງໝົດຢ່າງລະອຽດພຽງພໍ, ຮູບການ ແລະ ຂະບວນການທັງໝົດ ລວມທັງບົດບາດ ແລະ ໜ້າທີ່ຮັບຜິດຊອບ ໂດຍທົ່ວໄປ ຂອງຊຸມຊົນທີ່ມີສ່ວນຮ່ວມ (ລວມທັງ ຄະນະ ກຳມະການ ການປະມູນຂອງຊຸມຊົນ ທີ່ອາດຈະຈຳເປັນ ໃນບາງສະຖານະການ), ຂັ້ນຕອນແບບກະທັດລັດ ສຳລັບທຸກໆຮູບການການຈັດຊື້-ຈັດຈ້າງ ທີ່ນຳໃຊ້, ການວ່າຈ້າງ ເພື່ອຊ່ວຍເຫຼືອດ້ານວິຊາການ ຫຼື ດ້ານອື່ນ ທີ່ຊຸມຊົນຕ້ອງການ, ລະບຽບການຊຳລະ, ແລະ ລະບຽບການເກັບມ້ຽນສຳນວນ ເອກະສານ, ແບບຟອມ ສັນຍາທີ່ກະທັດລັດເພື່ອນຳໃຊ້ ບົດບາດ ແລະ ໜ້າທີ່ວຽກງານໃນຕໍ່ໜ້າ ຂອງອົງກອນຈັດຕັ້ງປະຕິບັດໂຄງການ, ອື່ນໆ. ການກະກຽມວຽກງານຕິດຕາມກວດກາການຈັດຊື້-ຈັດຈ້າງຂອງທະນາຄານໂລກ ລວມທັງ ການກວດສອບດ້ານເຕັກນິກ ແລະ ການເງິນ,ການກວດສອບບັນຊີ ເຊິ່ງໄດ້ລະບຸໄວ້ ຢູ່ໃນເອກະສານສະເໜີໂຄງການ, ສັນຍາກູ້ຢືມ, ແຜນຈັດຊື້-ຈັດຈ້າງແບບກະທັດລັດ ແລະ ເອກະສານຈັດຕັ້ງປະຕິບັດໂຄງການ (ຫຼື ຄູ່ມື). ຂອບເຂດການກວດສອບບັນຊີຄວນຈະກວມເອົາ ການກວດກາທັງຄຸນນະພາບ ແລະ ປະລິມານ/ຈຳນວນ ສິນຄ້າ ທີ່ຈັດຊື້ມາ, ຂອງວຽກກໍ່ສ້າງ ທີ່ຮັບເໝົາມາ ແລະ ການບໍລິການທີ່ໄດ້ສະໜອງ ລວມທັງການນຳໃຊ້ທຶນທີ່ຖືກຕ້ອງ.

ທົດລອງນຳໃຊ້ "ການນຳໃຊ້ລະບົບລວມຂອງປະເທດ" ຂອງທະນາຄານ ໂລກ[75]. ຜູ້ກູ້ຢືມອາດຈະນຳໃຊ້ ລະບົບນີ້ ຜ່ານຮູບການເປັນໂຄງການທົດລອງ ໂດຍໄດ້ຮັບການຕົກລົງເຫັນດີ ຈາກທະນາຄານໂລກ ຕໍ່ແຜນງານທົດລອງດັ່ງກ່າວນັ້ນ.

75 ໃຫ້ເບິ່ງຄຳອະທິບາຍ ແຜນງານທົດລອງ ຢູ່ໃນໜັງສືພິມຂອງສະພາບໍລິຫານທະນາຄານໂລກ *(Board paper)* ອອກວັນທີ 3 ແລະ 25 ມີນາ 2008 ໄດ້ລົງຂ່າວໃນຫົວຂໍ້ "ການນຳໃຊ້ລະບົບລວມຂອງປະເທດ ສຳລັບການດຳເນີນງານ ທີ່ທະນາຄານໂລກໃຫ້ການສະໜັບສະໜູນ: ແຜນງານທົດລອງທີ່ ສະເໜີນຳໃຊ້" *(R2008-0036 and 0036 and 0036/1) (Use of Country Systems in Bank-Supported Operations: Proposed Piloting Program)* ເຊິ່ງແມ່ນ ສະພາບໍລິຫານທະນາຄານໂລກ ໄດ້ຮັບຮອງເອົາໃນວັນທີ 24 ເມສາ 2008.

# ເອກະສານຊ້ອນທ້າຍ 1: ການທົບທວນກ່ອນ ແລະ ການກວດກາຕາມຫຼັງຂອງທະນາຄານໂລກ ຕໍ່ກັບການຕັດສິນໃຈ ໃນການຈັດຊື້-ຈັດຈ້າງ ແລະ ການປະກາດມອບສັນຍາ

## 1. ການສ້າງແຜນເວລາຂອງການຈັດຊື້-ຈັດຈ້າງ

ທະນາຄານໂລກ ຈະທົບທວນກ່ອນ ແລະ ກວດກາຄືນຕາມຫຼັງ[76] ແຜນຈັດຊື້-ຈັດຈ້າງ ແລະ ສະບັບ ທີ່ຜ່ານການປັບປຸງ (ຄວາມຄືບໜ້າ) ເຊິ່ງຜູ້ກູ້ຢືມສ້າງຂຶ້ນມາ ໂດຍສອດຄ່ອງກັບຂໍ້ກຳນົດ ຕາມເນື້ອໃນ ວັກ 1.18. ແຜນດັ່ງກ່າວຕ້ອງ ສອດຄ່ອງ ກັບແຜນການການຈັດຕັ້ງປະຕິບັດໂຄງການ, ສັນຍາກູ້ຢືມ ແລະ ຄູ່ມື ແນະນຳສະບັບນີ້.

## 2. ການທົບທວນກ່ອນ

ສຳລັບບັນດາສັນຍາ[77] ທີ່ຕ້ອງໄດ້ຮັບການທົບທວນກ່ອນ *(Prior review)* ປະກອບມີ:

(1) ໃນກໍລະນີທີ່ໄດ້ນຳໃຊ້ ຮູບການ ການຄັດເລືອກຄຸນວຸດທິກ່ອນການປະມູນ, ກ່ອນເຊີນຜູ້ສະໝັກ ເຂົ້າຮ່ວມ ການຄັດເລືອກຄຸນວຸດທິກ່ອນການປະມູນ, ຜູ້ກູ້ຢືມ ຕ້ອງປະກອບຮ່າງເອກະສານຕ່າງໆ ທີ່ຈະນຳໃຊ້ ໃຫ້ທະນາຄານໂລກ ລວມທັງເນື້ອໃນໜັງສືເຊີນເຂົ້າຮ່ວມ ການຄັດເລືອກຄຸນວຸດທິ ກ່ອນການປະມູນ, ແບບສອບຖາມການຄັດເລືອກຄຸນວຸດທິກ່ອນການປະມູນ, ວິທີການປະເມີນຜົນ ລວມທັງ ເນື້ອໃນ ແລະ ວິທີການລົງຂ່າວໂຄສະນາທີ່ຈະນຳໃຊ້ ແລະ ການແນະນຳ ເພື່ອປັບປຸງ ວິທີການແລະເອກະສານຕາມຄວາມສົມເຫດສົມຜົນຂອງທະນາຄານໂລກສະເໜີມາ. ບົດລາຍງານ ການປະເມີນຜົນຂອງຜູ້ສະໝັກທີ່ຜູ້ກູ້ຢືມໄດ້ຮັບ, ບັນຊີລາຍຊື່ຂອງບໍລິສັດ ທີ່ຜ່ານເງື່ອນໄຂຄຸນວຸດທິ ກ່ອນການປະມູນ ທີ່ນຳສະເໜີ ລວມທັງ ບົດລາຍງານກ່ຽວກັບຄຸນວຸດທິກ່ອນການປະມູນຂອງເຂົາເຈົ້າ ແລະ ເຫດຜົນ ທີ່ຄັດບໍລິສັດທີ່ຂາດເງື່ອນໄຂຄຸນວຸດທິກ່ອນການປະມູນອອກ ເຊິ່ງທັງໝົດນີ້ ຜູ້ກູ້ຢືມ ຕ້ອງຂໍຄຳເຫັນຈາກທະນາຄານໂລກ ກ່ອນຈິ່ງແຈ້ງໃຫ້ຜູ້ສະໝັກຊາບເຖິງການຕັດສິນໃຈ ຂອງຜູ້ກູ້ຢືມ. ຜູ້ກູ້ຢືມເອງ ຕ້ອງເພີ່ມໃສ່ ຫຼື ຕັດອອກ ຫຼື ປັບປຸງ ບັນຊີລາຍຊື່ດັ່ງກ່າວ ຕາມຄວາມສົມເຫດສົມຜົນຂອງທະນາຄານໂລກ ໄດ້ສະເໜີມາ.

(2) ກ່ອນການເຊີນເຂົ້າຮ່ວມປະມູນ, ຜູ້ກູ້ຢືມ ຕ້ອງປະກອບ ຮ່າງເອກະສານເຊີນປະມູນ ຫາທະນາຄານໂລກ ເພື່ອຂໍຄຳເຫັນ ເຊັ່ນວ່າ: ໜັງສືເຊີນເຂົ້າຮ່ວມປະມູນ, ຄຳແນະນຳສະລັບຜູ້ປະມູນ ລວມທັງ ພື້ນຖານຂອງການປະເມີນຜົນ ແລະ ການມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ, ເງື່ອນໄຂຂອງສັນຍາ ແລະ ມາດຕະຖານເຕັກນິກ ຂອງການກໍ່ສ້າງ, ການສະໜອງສິນຄ້າ, ຫຼື ການຕິດຕັ້ງ ອຸປະກອນ ແລະ ອື່ນໆອີກ. ເພື່ອໃນກໍລະນີທີ່ອາດຈະເກີດຂຶ້ນ, ລວມທັງ ເນື້ອໃນ ແລະ ວິທີການລົງຂ່າວໂຄສະນາ ທີ່ຈະນຳໃຊ້ ສຳລັບການປະມູນນັ້ນ (ຖ້າຫາກການຄັດເລືອກຄຸນວຸດທິກ່ອນການປະມູນ ບໍ່ໄດ້ຖືກນຳໃຊ້) ແລະ ຕ້ອງປັບປຸງເອກະສານດັ່ງກ່າວຕາມຄວາມສົມເຫດສົມຜົນຂອງທະນາຄານໂລກ ໄດ້ສະເໜີມາ. ເນື້ອໃນທີ່ໄດ້ປັບປຸງນັ້ນ, ບໍ່ວ່າກໍລະນີໃດໆກໍຕາມ, ຕ້ອງສະເໜີ ຂໍການຮັບຮອງຈາກທະນາຄານໂລກ ກ່ອນຈະອອກເອກະສານໃຫ້ຜູ້ແຂ່ງຂັນປະມູນ.

(3) ກ່ອນການຕັດສິນໃຈຄັ້ງສຸດທ້າຍ ເພື່ອມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ພາຍຫຼັງທີ່ສຳເລັດປະເມີນຜົນ

---

76 ເນື້ອໃນ ວັກ 11 ຮອດ 15 ຂອງເອກະສານຊ້ອນທ້າຍ (3) ໄດ້ຊີ້ແຈ້ງ ເຖິງການດຳເນີນການຂອງທະນາຄານໂລກ ຕໍ່ເນື້ອໃນແລກປ່ຽນ ຈາກຜູ້ປະມູນ ລວມທັງ ການຮ້ອງທຸກ ຂອງຜູ້ປະມູນ ແລະ ການສະເໜີເພື່ອຕອບຂໍ້ຊັກຖາມຕ່າງໆ.

77 ວົງເງິນ ສຳລັບການກວດກາ ກ່ອນມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ຕ້ອງຕີມູນຄ່າເປັນເງິນ ເຊິ່ງໄດ້ພິຈາລະນາ ບົນພື້ນຖານຄວາມສ່ຽງທີ່ໄດ້ປະເມີນ ແລະ ລະບຸໄວ້ ຢູ່ໃນແຜນຈັດຊື້-ຈັດຈ້າງ ສຳລັບທຸກໆຮູບການຈັດຊື້-ຈັດຈ້າງທີ່ນຳໃຊ້ ໃນທຶນທີ່ກູ້ຢືມ ເຊິ່ງສະແດງໃຫ້ເຫັນ ມູນຄ່າສັນຍາລວມທັງຄ່າອາກອນ ແລະ ຄ່າພາສີທັງໝົດ ທີ່ຈ່າຍຢູ່ໃນສັນຍາ (ຖ້າມີ). ສຳລັບສັນຍາ ທີ່ໄດ້ຈັດຊື້-ຈັດຈ້າງ ບົນພື້ນຖານ ການເຮັດສັນຍາໂດຍກົງ ຕາມເນື້ອໃນ ວັກ 3.7, ຜູ້ກູ້ຢືມ ຕ້ອງປະກອບ ມາດຕະຖານເຕັກນິກ ແລະ ຮ່າງສັນຍາ ເພື່ອຂໍການຮັບຮອງ ຈາກທະນາຄານໂລກ ກ່ອນການປະຕິບັດສັນຍາ. ສັນຍາຈະຖືກປະຕິບັດໄດ້ ກໍຕໍ່ເມື່ອທະນາຄານໂລກ ໄດ້ໃຫ້ການຮັບຮອງເອົາ ແລະ ຕ້ອງນຳໃຊ້ ຂໍ້ກຳນົດ ຕາມເນື້ອໃນ ວັກ 2 (8) ຂອງເອກະສານຊ້ອນທ້າຍສະບັບນີ້ ເພື່ອປະຕິບັດສັນຍາ.

ຕາມເອກະສານຍື່ນປະມູນ ທີ່ໄດ້ຮັບນັ້ນ, ຜູ້ກູ້ຢືມ ຕ້ອງປະກອບ ບົດລາຍງານລະອຽດ (ຊຶ່ງວຊານ ທີ່ໄດ້ຮັບການຮັບຮອງຈາກທະນາຄານໂລກ ເປັນຜູ້ກະກຽມ, ຖ້າຫາກມີການສະເໜີຈາກທະນາຄານໂລກ) ກ່ຽວກັບ ການປະເມີນຜົນ ແລະ ການສົມທຽບລາຄາຍື່ນປະມູນ (ລວມທັງແຕ່ລະຂັ້ນຕອນ ໃນກໍລະນີການປະມູນແບບ ສອງຂັ້ນຕອນ ແລະ ຮູບແບບສັນຍາກຳນົດຂອບຂ່າຍ) ຄູ່ກັນກັບ ການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ແລະ ຂໍ້ມູນອື່ນໆ ຕາມຄວາມສົມເຫດສົມຜົນຂອງທະນາຄານໂລກ ໂດຍໃຫ້ໄລຍະເວລາແກ່ທະນາຄານໂລກ ພຽງພໍເພື່ອຈະດຳເນີນການທົບທວນ. ຖ້າພິຈາລະນາເຫັນວ່າ ການສະເໜີມອບສັນຍາໃຫ້ຜູ້ຊະນະການປະມູນເປົ້າໝາຍ ຫາກບໍ່ສອດຄ່ອງກັບ ສັນຍາກູ້ຢືມ ແລະ/ຫຼື ແຜນຈັດຊື້-ຈັດຈ້າງ, ທະນາຄານໂລກ ຕ້ອງແຈ້ງໃຫ້ຜູ້ກູ້ຢືມ ຊາບທັນທີ ແລະ ໃຫ້ເຫດຜົນຂອງການຕັດສິນດັ່ງກ່າວ. ຖ້າບໍ່ດັ່ງນັ້ນ, ທະນາຄານໂລກ ຕ້ອງອອກໜັງສືໃຫ້ການ ຕາມການສະເໜີຂອງຜູ້ກູ້ຢືມ ເພື່ອມອບສັນຍາແກ່ຜູ້ຊະນະການປະມູນດັ່ງກ່າວ. ຜູ້ກູ້ຢືມຕ້ອງມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ພາຍຫຼັງທີ່ໄດ້ຮັບ ການຮັບຮອງ ຈາກທະນາ ຄານໂລກເທົ່ານັ້ນ.

(4) ຖ້າຜູ້ກູ້ຢືມ ຕ້ອງການຕໍ່ອາຍຸຜົນໃຊ້ໄດ້ຂອງເອກະສານຍື່ນປະມູນເພື່ອດຳເນີນຂັ້ນຕອນ ການປະເມີນຜົນ, ການຂໍອະນຸມັດພາຍໃນທີ່ຈຳເປັນ ແລະ ການຮັບຮອງຈາກທະນາຄານໂລກ ໃຫ້ສຳເລັດ ແລະ ການມອບສັນຍາແກ່ຜູ້ຊະນະການປະມູນ, ຜູ້ກູ້ຢືມ ຕ້ອງສະເໜີຂໍການຮັບຮອງຈາກທະນາ ຄານໂລກ ເພື່ອສະເໜີຂໍຕໍ່ອາຍຸ ຄັ້ງທີໜຶ່ງ ໃນກໍລະນີ ທີ່ຕ້ອງການໄລຍະເວລາຂໍຕໍ່ອາຍຸ ເກີນກ່ວາ 4 (ສີ່) ສັບປະດາ ແລະ ການຂໍຕໍ່ອາຍຸຄັ້ງຕໍ່ໆມາທັງໝົດ ໂດຍບໍ່ຂຶ້ນກັບໄລຍະເວລາຂໍຕໍ່ອາຍຸທີ່ຕ້ອງ ການອີກ.

(5) ພາຍຫຼັງດຳເນີນການປະກາດມອບສັນຍາແກ່ຜູ້ຊະນະການປະມູນແລ້ວ, ຖ້າຜູ້ກູ້ຢືມ ຫາກໄດ້ຮັບການຄັດຄ້ານ ຫຼື ການຮ້ອງທຸກ ຈາກຜູ້ປະມູນ, ສຳເນົາການຮ້ອງທຸກ, ຄຳເຫັນຂອງຜູ້ກູ້ຢືມ ຕໍ່ແຕ່ລະປະເດັນທີ່ໄດ້ຍົກຂຶ້ນ ຢູ່ໃນການຮ້ອງທຸກ ແລະ ສຳເນົາຄຳຕອບຂອງຜູ້ກູ້ຢືມ ຕ້ອງໄດ້ສົ່ງໄປໃຫ້ທະນາຄານໂລກ ເພື່ອທົບທວນຄືນ ແລະ ມີຄຳເຫັນ.

(6) ຖ້າຜົນການວິໃຈຄຳຄັດຄ້ານ ຫາການນຳໄປສູ່ການປ່ຽນແປງ ການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນຂອງຜູ້ກູ້ຢືມ, ຜູ້ກູ້ຢືມ ຕ້ອງໄດ້ສົ່ງເຫດຜົນໃນການຕັດສິນໃຈເຫຼົ່ານັ້ນ ແລະ ບົດລາຍງານ ຜົນການປະມູນ ສະບັບປັບປຸງ ໃຫ້ທະນາຄານໂລກ ເພື່ອຂໍການຮັບຮອງຄືນໃໝ່. ຜູ້ກູ້ຢືມ ຕ້ອງອອກປະກາດການມອບສັນຍາແກ່ຜູ້ຊະນະການປະມູນຄືນໃໝ່ ຕາມຮູບແບບເນື້ອໃນ ວັກ 7 ຂອງເອ ກະສານຊ້ອນທ້າຍ (1) ຂອງຄູ່ມືສະບັບນີ້.

(7) ນອກຈາກກໍລະນີທີ່ໄດ້ຮັບຮອງຈາກທະນາຄານໂລກ, ຂໍ້ກຳນົດ ແລະ ເງື່ອນໄຂສັນຍາ ບໍ່ອະນຸຍາດ ໃຫ້ມີຄວາມແຕກຕ່າງດ້ານທາດແທ້ພື້ນຖານ ຈາກເອກະສານເຊີນປະມູນ ຫຼື ເອກະສານເຊີນເຂົ້າຮ່ວມການຄັດເລືອກຄຸນວຸດທິກ່ອນການປະມູນ ສຳລັບການກໍ່ສ້າງ (ຖ້າມີ),

(8) ສຳເນົາສັນຍາຫນຶ່ງສະບັບ ລວມທັງສຳເນົາໜັງສືຄ້ຳປະກັນການຈ່າຍເງິນລ່ວງໜ້າ ແລະ ໜັງສື ຄ້ຳປະກັນການປະຕິບັດສັນຍາ (ຖ້າຕ້ອງການໃຫ້ມີ) ທີ່ຖືກຕ້ອງຕາມສະບັບເດີມ ຕ້ອງສົ່ງໃຫ້ ທະນາຄານໂລກ ໂດຍທັນທີ ພາຍຫຼັງການເຊັນສັນຍາ ແລະ ກ່ອນການສະເໜີທະນາຄານໂລກ ເພື່ອຖອນເງິນຈາກບັນຊີເງິນກູ້ຄັ້ງທຳອິດ ຂອງສັນຍານັ້ນ. ເມື່ອການຊຳລະຕາມສັນຍາ ຫາກຜ່ານບັນຊີພິເສດ *(Special Account—SA)* ຕ້ອງສົ່ງ ສຳເນົາສັນຍາລວມທັງສຳເນົາໜັງສືຄ້ຳປະກັນ ການຈ່າຍເງິນລ່ວງໜ້າ ແລະ ໜັງສືຄ້ຳປະກັນການປະຕິບັດສັນຍາ (ຖ້າຕ້ອງການໃຫ້ມີ) ໃຫ້ທະນາຄານໂລກ ກ່ອນການຊຳລະເງິນ ຜ່ານບັນຊີພິເສດ ຄັ້ງທຳອິດຂອງສັນຍານັ້ນ.

(9) ບົດລາຍງານຜົນການປະມູນທັງໝົດ ຕ້ອງໄດ້ຄັດຕິດ ບົດສະຫຼຸບການຈັດຊື້-ຈັດຈ້າງ ຕາມແບບຟອມ ທີ່ທະນາຄານໂລກສະໜອງໃຫ້. ທະນາຄານໂລກ ຈະເປີດເຜີຍ ເນື້ອໃນ ແລະ ມູນຄ່າຂອງສັນຍາ ຄູ່ກັນກັບ ຊື່ ແລະ ທີ່ຢູ່ຂອງຜູ້ຊະນະການປະມູນ ສູ່ສາທາລະນະ ໂດຍສອດຄ່ອງ ກັບເນື້ອໃນ ວັກ 2 (8) ຂ້າງເທິງ ພາຍຫຼັງທີ່ໄດ້ຮັບສຳເນົາສັນຍາ ທີ່ໄດ້ເຊັນກັນແລ້ວ ຈາກຜູ້ກູ້ຢືມ.

(10) ຜູ້ກູ້ຢືມ ຕ້ອງເກັບມ້ຽນເອກະສານກ່ຽວຂ້ອງທັງໝົດ ຂອງແຕ່ລະສັນຍາ ຕະຫຼອດໄລຍະເວລາຈັດຕັ້ງ ປະຕິບັດໂຄງການ ຈົນກ່ວາຈະໄດ້ຮອດສອງປີ ນັບຈາກມື້ປິດສັນຍາກູ້ຢືມ. ເອກະສານທີ່ເກັບມ້ຽນ ຈະປະກອບມີ (ແຕ່ບໍ່

ຈຳກັດສະເພາະແຕ່ລາຍການລຸ່ມນີ້) ຄື:

1. ສັນຍາສະບັບຕົ້ນ ທີ່ໄດ້ເຊັນກັນ ແຕ່ລະສັນຍາ ແລະ ເອກະສານດັດແກ້ ຫຼື ເພີ່ມເຕີມ ຄັ້ງຕໍ່ໆມາ ທັງໝົດ.
2. ເອກະສານຍື່ນປະມູນສະບັບຕົ້ນ, ເອກະສານ ແລະ ເນື້ອໃນແລກປ່ຽນ ທີ່ພົວພັນເຖິງ ການຈັດຊື້- ຈັດຈ້າງ ແລະ ການຈັດຕັ້ງປະຕິບັດສັນຍາທັງໝົດ ລວມທັງເອກະສານຄັດຕິດ ປະກອບ ການປະເມີນຜົນການປະມູນ ແລະ ການສະເໜີມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ທີ່ໄດ້ສົ່ງໃຫ້ທະນາຄານໂລກ.
3. ໃບຮຽກເກັບເງິນ ຫຼື ໃບຢັ້ງຢືນການຈ່າຍ ຕະຫຼອດຮອດໜັງສືຢັ້ງຢືນຕ່າງໆ ເຊັ່ນວ່າ: ໜັງສືຢັ້ງຢືນການກວດກາ, ການສົ່ງມອບ, ການປະຕິບັດວຽກສຳເລັດ ແລະ ການຮັບຮອງເອົາສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ໄດ້ສະໜອງໃຫ້.

ສຳລັບສັນຍາ ທີ່ໄດ້ມອບໃຫ້ແກ່ຜູ້ຊະນະການປະມູນ ບົນພື້ນຖານຂອງການເຮັດສັນຍາໂດຍກົງນັ້ນ, ເອກະສານທີ່ປະກອບສົ່ງໃຫ້ທະນາຄານໂລກ ຕ້ອງລວມເອົາ ເອກະສານຊີ້ແຈ່ງເຫດຜົນ ຮູບການ ການຈັດຊື້-ຈັດຈ້າງທີ່ນຳໃຊ້, ຄວາມສາມາດດ້ານວິຊາການ ແລະ ການເງິນ ຂອງບໍລິສັດ ແລະ ສັນຍາສະບັບຕົ້ນ ທີ່ໄດ້ເຊັນກັນ. ຜູ້ກູ້ຢືມ ຕ້ອງປະກອບເອກະສານເຫຼົ່ານີ້ ໃຫ້ທະນາຄານໂລກ ຕາມການສະເໜີ ເພື່ອການກວດກາ ຂອງທະນາຄານໂລກ ຫຼື ຂອງທີ່ປຶກສາ/ຜູ້ກວດສອບ ທີ່ຂຶ້ນກັບ.

(11) ທະນາຄານໂລກ ອາດຈະປະກາດວ່າ ເປັນການຈັດຊື້-ຈັດຈ້າງ ບໍ່ຖືກລະບຽບການ ບໍ່ວ່າ ດ້ວຍເຫດຜົນໃດໆທີ່ນອນໃນເນື້ອໃນວັກ 1.14 ຂອງຄູ່ມືແນະນຳສະບັບນີ້ ກໍຕາມ ລວມທັງກໍລະນີທີ່ຖ້າຫາກມີການຈັດຊື້ສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຖືກພິຈາ ລະນາວ່າ ບໍ່ສອດຄ່ອງກັບ ຂະບວນການ ແລະຮູບການ ການຈັດຊື້-ຈັດຈ້າງ ທີ່ໄດ້ຕົກລົງເຫັນດີ ນຳກັນຢູ່ໃນສັນຍາກູ້ຢືມ ແລະ ສະແດງຢ່າງລະອຽດ ຢູ່ໃນແຜນຈັດຊື້-ຈັດຈ້າງ ທີ່ທະນາຄານໂລກໄດ້ຮັບຮອງເອົາແລ້ວ, ຫຼື ສັນຍານັ້ນເອງ ຫາກບໍ່ສອດຄ່ອງກັບຫຼັກການຂ້າງເທິງນັ້ນ. ທະນາຄານໂລກ ຕ້ອງແຈ້ງໃຫ້ ຜູ້ກູ້ຢືມຊາບ ເຖິງເຫດຜົນ ແລະ ຜົນການພິຈາລະນາດັ່ງກ່າວ ໂດຍທັນທີ.

3. **ການປັບປຸງ ສັນຍາທີ່ໄດ້ເຊັນກັນ:** ໃນກໍລະນີຂອງສັນຍາ ທີ່ຕ້ອງໄດ້ຮັບການທົບທວນກ່ອນນັ້ນ, ກ່ອນການຕົກລົງເຫັນດີນັ້ນ ຕ້ອງກວດກາເບິ່ງຫນຶ່ງ ໃນບັນດາກໍລະນີລຸ່ມນີ້:

(1) ໄລຍະເວລາຂອງການຕໍ່ອາຍຸຂອງສັນຍາ ເພື່ອປະຕິບັດສັນຍານັ້ນ ຍາວພໍສົມຄວນ, ຫຼື

(2) ການປັບປຸງຂອບເຂດຕົ້ນຕໍຂອງການບໍລິການ ຫຼື ການປ່ຽນແປງ ທີ່ສຳຄັນອື່ນໆ ທີ່ສົ່ງຜົນກະທົບເຖິງຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາເດີມ, ຫຼື

(3) ໃບສັ່ງວຽກເພີ່ມ *(Variation order)* ຫຼື ວຽກດັດແກ້ *(Amendment)* (ຍົກເວັ້ນກໍລະນີສຸກເສີນ ທີ່ສຸດ) ເຊິ່ງໃບສັ່ງວຽກເພີ່ມແບບດ່ຽວ ຫຼື ລວມກັບໃບອື່ນໆທັງໝົດ ຫຼື ວຽກດັດແກ້ ທີ່ໄດ້ອອກກ່ອນ ໜ້ານີ້ແລ້ວ ເຊິ່ງມີມູນຄ່າເພີ່ມຂຶ້ນຈາກສັນຍາເດີມ ເກີນກວ່າ 15 (ສິບຫ້າ) ສ່ວນຮ້ອຍ, ຫຼື

(4) ການສະເໜີຂໍຍົກເລີກສັນຍາ.

ຖ້າຕົກໃນກໍລະນີໃດນຶ່ງຂ້າງເທິງ, ຜູ້ກູ້ຢືມ ຕ້ອງສະເໜີຂໍການຮັບຮອງຈາກທະນາຄານໂລກເສັຍກ່ອນ. ຖ້າທະນາຄານໂລກ ຫາກໄດ້ພິຈາລະນາວ່າ ຂໍ້ສະເໜີດັ່ງກ່າວ ບໍ່ສອດຄ່ອງກັບຂໍ້ກຳນົດ ໃນສັນຍາກູ້ຢືມ ແລະ/ຫຼື ແຜນຈັດຊື້-ຈັດຈ້າງ, ທະນາຄານໂລກ ຕ້ອງແຈ້ງໃຫ້ ຜູ້ກູ້ຢືມຊາບເຖິງ ເຫດຜົນຂອງຜົນການພິຈາລະນາດັ່ງກ່າວ ໂດຍທັນທີ. ສຳເນົາ ຂອງວຽກດັດແກ້ທັງໝົດ ຕ້ອງສົ່ງໃຫ້ ທະນາຄານໂລກ ເພື່ອເກັບ ມ້ຽນສຳເນົາ.

4. **ການແປເອກະສານສັນຍາ:** ໃນກໍລະນີຂອງສັນຍາທີ່ໄດ້ມອບໃຫ້ແກ່ຜູ້ຊະນະການປະມູນ ພາຍໃຕ້ຮູບການ ການປະມູນເປີດກ້ວາງສາກົນ *(ICB)* ເຊິ່ງຕ້ອງຜ່ານການທົບທວນກ່ອນ ແລະ ຂຽນເປັນພາສາປະຈຳ ຊາດ[78] ນັ້ນ, ຜູ້ກູ້ຢືມມີຄວາມຮັບຜິດຊອບສົ່ງບົດລາຍງານຜົນການປະມູນ ແລະ ຮ່າງສັນຍາເບື້ອງຕົ້ນ ສະບັບພາສາແປທີ່ຖືກຕ້ອງຊັດເຈນ ເປັນສະບັບພາສາທີ່ນິຍົມໃຊ້ລະດັບສາກົນ ເຊິ່ງໄດ້ລະບຸໄວ້ ຢູ່ໃນເອກະ ສານເຊີນປະມູນ (ພາສາອັງກິດ, ຝຣັ່ງ ຫຼື

[78] ໃຫ້ອ້າງອີງ ຕາມເນື້ອໃນ ວັກ 2.15.

ແອັສປາຍ). ສະບັບພາສາແປທີ່ຖືກຕ້ອງຊັດເຈນ ບໍ່ວ່າ ສະບັບປັບປຸງໃດໆໃນໄລຍະຕໍ່ມາຂອງສັນຍາດັ່ງກ່າວ ກໍຕ້ອງສົ່ງໃຫ້ທະນາຄານໂລກ ເຊັ່ນດຽວກັນ.

## 5. ການກວດກາຕາມຫຼັງ *(Post review)*

ຕາມທຳມະດາ, ທະນາຄານໂລກ ເປັນຜູ້ດຳເນີນການ ການກວດກາ ການຈັດຊື້-ຈັດຈ້າງຕາມຫຼັງ *(Procurement Post Review—PPR)*. ຜູ້ກູ້ຢືມ ຕ້ອງເກັບມ້ຽນເອກະສານກ່ຽວຂ້ອງທັງໝົດ ຂອງແຕ່ ລະສັນຍາ ທີ່ບໍ່ໄດ້ຄຸ້ມຄອງຕາມເນື້ອໃນ ວັກ 2 ຂອງເອກະສານຊ້ອນທ້າຍສະບັບນີ້ ຈົນຮອດສອງປີ ນັບຈາກມື້ປິດສັນຍາກູ້ຢືມ. ການເກັບມ້ຽນເອກະສານ ຈະປະກອບມີ (ແຕ່ບໍ່ຈຳກັດສະເພາະແຕ່ລາຍການ ລຸ່ມນີ້): ສັນຍາສະບັບຕົ້ນ ທີ່ໄດ້ເຊັນກັນ ແຕ່ລະສັນຍາ ແລະ ເອກະສານດັດແກ້ ຫຼື ເພີ່ມເຕີມ ຄັ້ງຕໍ່ໆ ມາທັງໝົດ; ເອກະສານຍື່ນປະມູນ; ບົດລາຍງານຜົນການປະມູນ ແລະ ສະເໜີມອບສັນຍາໃຫ້ແກ່ ຜູ້ຊະນະການປະມູນ; ໃບຮຽກເກັບເງິນ ຫຼື ໃບຢັ້ງຢືນການຈ່າຍ ຕະຫຼອດຮອດໜັງສືຢັ້ງຢືນຕ່າງໆ ເຊັ່ນວ່າ: ໜັງສືຢັ້ງຢືນການກວດກາ, ການສົ່ງມອບ, ການປະຕິບັດວຽກສຳເລັດ ແລະ ການຮັບຮອງເອົາສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ໄດ້ສະໜອງໃຫ້ ເພື່ອການກວດກາຂອງທະນາຄານໂລກ ຫຼື ຂອງທີ່ປຶກສາ/ຜູ້ກວດສອບ ທີ່ຂຶ້ນກັບ. ຜູ້ກູ້ຢືມ ຕ້ອງປະກອບເອກະສານເຫຼົ່ານີ້ໃຫ້ ທະນາຄານໂລກ ຕາມການສະເໜີ. ທະນາຄານໂລກ ອາດຈະປະກາດວ່າ ເປັນການຈັດຊື້-ຈັດຈ້າງ ບໍ່ຖືກ ລະບຽບການ ບໍ່ວ່າດ້ວຍເຫດຜົນໃດທີ່ນອນໃນເນື້ອໃນວັກ 1.14 ຂອງຄູ່ມືແນະນຳສະບັບນີ້ ກໍຕາມ ລວມທັງ ກໍລະນີທີ່ຖ້າຫາກມີການຈັດຊື້ສິນຄ້າ, ການກໍ່ສ້າງ ແລະ ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ທີ່ຖືກພິຈາ ລະນາວ່າ ບໍ່ສອດຄ່ອງກັບ ຂະບວນການ ແລະ ຮູບການການຈັດຊື້-ຈັດຈ້າງ ທີ່ໄດ້ຕົກລົງເຫັນດີນຳກັນຢູ່ໃນສັນຍາກູ້ຢືມ ແລະ ຂະຫຍາຍເປັນອັນລະອຽດ ຢູ່ໃນແຜນຈັດຊື້-ຈັດຈ້າງ ທີ່ທະນາຄານໂລກໄດ້ຮັບຮອງເອົາແລ້ວ, ຫຼື ສັນຍານັ້ນເອງຫາກບໍ່ສອດຄ່ອງກັບຫຼັກການ ແລະ ຮູບການ ເຫຼົ່ານັ້ນ. ທະນາຄານໂລກ ຕ້ອງແຈ້ງ ໃຫ້ ຜູ້ກູ້ຢືມຊາບ ເຖິງເຫດຜົນ ແລະ ຜົນການພິຈາລະນາດັ່ງກ່າວ ໂດຍທັນທີ. ໂດຍຂຶ້ນກັບຄວາມສ່ຽງ ແລະ ຂອບເຂດຂອງໂຄງການ (ເຊັ່ນວ່າ ສັນຍາແບບກະທັດລັດ ແລະ ມີມູນຄ່າໜ້ອຍ ຫຼາຍໆສັນຍາ), ທະນາຄານໂລກ ອາດຈະຕົກລົງເຫັນດີໃຫ້ຜູ້ກູ້ຢືມ ແຕ່ງຕັ້ງນິຕິບຸກຄົນເອກະລາດ ດຳເນີນການ ການກວດກາ ການຈັດຊື້-ຈັດຈ້າງຄືນຕາມຫຼັງຕ່າງໆ *(PPR)* ໂດຍສອດຄ່ອງກັບ ຂໍ້ກຳນົດ, ເງື່ອນໄຂ ແລະ ຂະບວນການລາຍງານ ທີ່ທະນາຄານໂລກຮັບຮອງເອົາໄດ້. ໃນກໍລະນີນີ້, ທະນາຄານໂລກ ຈະທົບທວນ ບົດລາຍງານ ທີ່ຜູ້ກູ້ຢືມ ໄດ້ສົ່ງໃຫ້ ແລະ ສະຫງວນສິດ ໃນການດຳເນີນການ ການກວດກາຄືນຕາມຫຼັງ ໂດຍກົງ ທີ່ອາດຈະເຫັນວ່າຈຳເປັນ ໃນໄລຍະເວລາຈັດຕັ້ງປະຕິບັດໂຄງການ.

## 6. ການປ່ຽນຈາກ ການກວດກາຕາມຫຼັງ *(Post review)* ເປັນການທົບທວນກ່ອນ *(Prior review)*

ສຳລັບສັນຍາ ທີ່ມີມູນຄ່າຄາດຄະເນ ຫາກຕໍ່າກວ່າວົງເງິນ ນອນໃນການທົບທວນກ່ອນ ຂອງທະນາຄານ ໂລກ ເຊິ່ງລະບຸໄວ້ໃນແຜນຈັດຊື້-ຈັດຈ້າງ ແຕ່ຖ້າຫາກລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາປະເມີນ ຕໍ່າສຸດນັ້ນ ຫາກເກີນວົງເງິນດັ່ງກ່າວ ຕ້ອງຖືວ່າເປັນການທົບທວນກ່ອນ. ເອກະສານກ່ຽວຂ້ອງກັບການ ຈັດ ຊື້-ຈັດຈ້າງ ເຊິ່ງໄດ້ດຳເນີນການມາແລ້ວທັງໝົດນັ້ນ ລວມທັງ ບົດລາຍງານຜົນການປະມູນ ແລະ ສະເໜີມອບສັນຍາແກ່ຜູ້ຊະນະການປະມູນ ຕ້ອງສົ່ງໃຫ້ທະນາຄານໂລກ ເພື່ອດຳເນີນການທົບທວນ ແລະ ໃຫ້ການຮັບຮອງ ກ່ອນມອບສັນຍາແກ່ຜູ້ຊະນະການ ປະມູນຕົວຈິງ. ໃນທາງກົງກັນຂ້າມ, ຖ້າລາຄາຂອງ ຜູ້ປະມູນທີ່ໄດ້ຄັດເລືອກເອົາ ຫາກຕໍ່າກວ່າວົງເງິນ ນອນໃນການທົບທວນກ່ອນ ກໍຍັງຕ້ອງສືບຕໍ່ດຳເນີນຂັ້ນຕອນການທົບທວນກ່ອນເຊັ່ນດຽວກັນ. ໃນບາງກໍລະນີສະເພາະ, ທະນາຄານໂລກອາດຈະຕ້ອງການໃຫ້ຜູ້ກູ້ຢືມ ປະຕິບັດຂັ້ນຕອນການທົບທວນກ່ອນ ສຳລັບສັນຍາທີ່ມີວົງເງິນຕໍ່າກວ່າ ເງື່ອນໄຂທົບທວນກ່ອນໃນເມື່ອຫາກພົບວ່າ ມີການຮ້ອງທຸກ ແລະ ຖືກພິຈາລະນາວ່າ ມີລັກສະນະຮ້າຍແຮງ. ເຊັ່ນດຽວກັນນີ້, ເມື່ອມີຄວາມຈຳເປັນ ທີ່ຕ້ອງປ່ຽນແປງຮູບການ ການຈັດຊື້-ຈັດຈ້າງ ເຊິ່ງສົ່ງຜົນໃຫ້ມູນຄ່າຄາດຄະເນ ທີ່ປ່ຽນແປງນັ້ນອາດຈະສູງກວ່າ ຫຼື ຕໍ່າກວ່າ ມູນຄ່າຄາດຄະເນ ທີ່ໄດ້ປະເມີນໄວ້ກ່ອນໜ້ານີ້ແລ້ວ; ຕົວຢ່າງ: ການປ່ຽນຈາກ ການ

ປະມູນເປີດກ້ວາງພາຍໃນ *(NCB)* ເປັນການປະມູນເປີດກ້ວາງສາກົນ *(ICB)* ຫຼື ປີ້ນກັບ, ຜູ້ກູ້ຢືມ ຕ້ອງໄດ້ປັບປຸງ ແຜນຈັດຊື້-ຈັດຈ້າງຄືນໃໝ່ ແລະ ສົ່ງໃຫ້ທະນາຄານຄານໂລກ ເພື່ອທົບ ທວນ ແລະ ໃຫ້ການຮັບຮອງເສັຍກ່ອນ.

## 7. ການປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ

ຜູ້ກູ້ຢືມ ຕ້ອງລົງຂ່າວປະກາດຜົນການປະມູນຜ່ານ ເວັບໄຊ ທຸລະກິດພັດທະນາຂອງອົງການ ສປຊ *(UNDB online)* ສຳລັບທຸກໆສັນຍາ ທີ່ຜ່ານຮູບການ ການປະມູນເປີດກ້ວາງສາກົນ *(ICB)* ແລະ ການປະມູນວົງແຄບສາກົນ *(LIB)*, ສັນຍາສຳປະທານ ພາຍໃຕ້ການກະກຽມຮູບແບບຫຸ້ນສ່ວນລັດແລະ ເອກະຊົນ *(PPP)* ແລະ ໂຄງການຍ່ອຍ ພາຍໃຕ້ ທຶນກູ້ຢືມ ຜ່ານສະຖາບັນການເງິນ ພົວພັນ ຫຼື ນິຕິບຸກຄົນ ແລະ ທຸກໆສັນຍາ ທີ່ຜ່ານຮູບການ ການເຮັດສັນຍາໂດຍກົງ, ຍົກເວັ້ນຮູບການຂອງ ສັນຍາທີ່ຈະກ່າວຕໍ່ໄປນີ້. ສຳລັບທຸກໆສັນຍາທີ່ຜ່ານຮູບການ ການປະມູນເປີດກ້ວາງພາຍໃນ *(NCB)* ລວມທັງ ສັນຍາກຳນົດ ຂອບຂ່າຍ, ສັນຍາສະໜອງວັດຖຸພັນ ແລະ ຮູບການ ການເຮັດສັນຍາໂດຍກົງ ທີ່ມີມູນ ຄ່າຕ່ຳ. (ໃຫ້ເບິ່ງ ຂໍ້ຄວາມໝາຍເຫດດ້ານລຸ່ມ ເລກທີ 64) ຕ້ອງໄດ້ລົງຂ່າວປະກາດຜົນການປະມູນຜ່ານ ໜັງສືພິມ[79]. ການລົງຂ່າວປະກາດນີ້ ຕ້ອງດຳເນີນການພາຍໃນ 2 (ສອງ) ສັບປະດາ ພາຍຫຼັງທະນາຄານໂລກຮັບຮອງເອົາ ການ ສະ ເໜີມອບສັນຍາແກ່ຜູ້ຊະນະການປະມູນ ເມື່ອຕົກຢູ່ໃນກໍລະນີ ການທົບທວນກ່ອນ. ສ່ວນໃນກໍລະນີ ການກວດກາ ຕາມຫຼັງ ກໍພາຍໃນ 2 (ສອງ) ສັບປະດາ ພາຍຫຼັງທີ່ຜູ້ກູ້ຢືມ ໄດ້ພິຈາລະນາຕົກລົງຕັດສິນມອບ ສັນຍາ ແກ່ຜູ້ຊະ ນະການປະມູນ. ເນື້ອໃນການລົງຂ່າວປະກາດນີ້ ຕ້ອງປະກອບດ້ວຍ: ເນື້ອໃນການປະມູນ, ເລກທີພູດຂອງສັນຍາ ແລະ ຂໍ້ມູນກ່ຽວຂ້ອງຕ່າງໆດັ່ງລຸ່ມນີ້ ໂດຍຂຶ້ນກັບແຕ່ລະຮູບການ ການຈັດຊື້-ຈັດຈ້າງ ທີ່ນຳໃຊ້ເຊັ່ນ:

(1) ຊື່ຂອງຜູ້ປະມູນແຕ່ລະບໍລິສັດ ທີ່ໄດ້ຍື່ນຊອງປະມູນ.

(2) ລາຄາຍື່ນປະມູນ ທີ່ອ່ານອອກສຽງ ໃນເວລາເປີດຊອງປະມູນ.

(3) ລາຄາປະມູນ ຫຼັງການປະເມີນ ຂອງຜູ້ປະມູນ ແຕ່ລະບໍລິສັດ.

(4) ຊື່ຂອງຜູ້ປະມູນ ທີ່ເອກະສານຍື່ນປະມູນຖືກປະຕິເສດ ໂດຍຖືວ່າ ບໍ່ຕອບສະໜອງໄດ້ເງື່ອນໄຂ ຫຼືບໍ່ ໄດ້ຕາມບັນທັດຖານຄຸນວຸດທິ ຫຼື ບໍ່ໄດ້ປະເມີນ ພ້ອມເຫດຜົນອ້າງອີງ.

(5) ຊື່ຂອງຜູ້ຊະນະການປະມູນ, ມູນຄ່າສັນຍາລວມສຸດທ້າຍ ຕະຫຼອດຮອດ ໄລຍະເວລາ ແລະການສັງລວມຂອບ ເຂດຂອງສັນຍາ.

ສ່ວນທະນາຄານໂລກ ຈະກະກຽມປະກາດລົງຂ່າວຜ່ານ ເວັບໄຊ ຂອງຕົນ ກ່ຽວກັບ ການມອບສັນຍາແກ່ຜູ້ຊະນະການ ປະມູນ ເມື່ອຕົກຢູ່ໃນກໍລະນີການທົບທວນກ່ອນ ພາຍຫຼັງທີ່ໄດ້ຮັບ ສຳເນົາສັນຍາ ທີ່ໄດ້ເຊັນກັນ ແລະ ໜັງສື ຄ້ຳປະກັນການປະຕິບັດສັນຍາ (ຖ້າຕ້ອງການໃຫ້ມີ) ທີ່ຖືກຕ້ອງຕາມສະບັບເດີມໂດຍສອດ ຄ່ອງກັບ ເນື້ອໃນ ວັກ 2 (8) ທີ່ກ່າວມາຂ້າງເທິງ.

## 8. ຄວາມພະຍາຍາມ ຕໍ່ຫຼັກການພື້ນຖານ ແລະ ນະໂຍບາຍການໃສ່ໂທດຂອງທະນາຄານໂລກ

ໃນເວລາດຳເນີນການປະເມີນຜົນການປະມູນ, ຜູ້ກູ້ຢືມ ຕ້ອງກວດກາ ຄຸນລັກສະນະເໝາະສົມຂອງຜູ້ປະມູນ ທີ່ໄດ້ຈາກ ບັນຊີລາຍຊື່ບໍລິສັດ ແລະ ບຸກຄົນ ທີ່ຖືກຫ້າມ ແລະ ຖືກຢຸດວຽກຊົ່ວຄາວ ຕາມເນື້ອໃນ ວັກ 1.16 (4) ຂອງຄູ່ມືແນະນຳສະບັບນີ້ ແລະ/ຫຼື ຕາມເນື້ອໃນ ວັກ 1.23 (4) ຂອງຄູ່ມືແນະນຳ ສຳລັບ ທີ່ປຶກສາ ຂອງ ທະນາຄານໂລກ ເຊິ່ງໄດ້ລົງປະກາດຜ່ານ ເວັບໄຊ ຂອງຕົນ. ຜູ້ກູ້ຢືມ ຕ້ອງເພີ່ມ ຄວາມພະຍາຍາມຂອງຕົນ ເພື່ອ ຕິດຕາມ ແລະ ກວດກາ ສັນຍາທີ່ກຳລັງປະຕິບັດຢູ່ ຢ່າງໃກ້ຊິດ (ບໍ່ວ່າຈະເປັນ ການທົບທວນກ່ອນ ຫຼື ການກວດກາຕາມ ຫຼັງ) ໂດຍບໍລິສັດ ຫຼື ບຸກຄົນ ທີ່ຖືກທະນາຄານໂລກ ໃສ່ໂທດ ພາຍຫຼັງທີ່ສັນຍາດັ່ງກ່າວໄດ້ລົງລາຍເຊັນແລ້ວ. ຜູ້ກູ້ຢືມ ຈະບໍ່ເຊັນສັນຍາຄືນໃໝ່ ຫຼື ເຊັນ ວຽກດັດແກ້ ລວມທັງການຕໍ່ເວລາໃຫ້ສຳເລັດວຽກ ຫຼື ການປັ່ງນແປງ ຫຼື ການສັ່ງວຽກ ເພີ່ມ ຕໍ່ກັບສັນຍາທີ່ ກຳລັງປະຕິບັດຢູ່ກັບບໍລິສັດ ຫຼື ບຸກຄົນ ທີ່ຖືກຢຸດວຽກຊົ່ວຄາວ ຫຼື ຖືກຫ້າມ ພາຍຫຼັງມື້ມີຜົນ

---

[79] ລົງໜັງສືພິມ ທີ່ແຈກຢາຍກ້ວາງຂວາງ ແລະ/ຫຼື ຈົດໝາຍເຫດທາງລັດຖະການ ທີ່ແຈກຢາຍກ້ວາງຂວາງ, ຫຼື ຜ່ານທາງເວັບໄຊ ຫຼື ເອເລັກໂຕຣນິກ ທີ່ນຳ ໃຊ້ຢ່າງກ້ວາງຂວາງ ເຊິ່ງທັງພາຍໃນ ແລະ ຕ່າງປະເທດສາມາດເຂົ້າຫາໄດ້ ໂດຍບໍ່ເສັຍຄ່າ ທີ່ເປັນພາສາປະຈຳຊາດ ທີ່ກຳນົດໄວ້ ຕາມເນື້ອໃນ ວັກ 2.15.

ບັງຄັບໃຊ້ໄດ້ ຂອງການສັ່ງຢຸດວຽກຊົ່ວຄາວ ແລະ ການສັ່ງຫ້າມ ໂດຍບໍ່ໄດ້ຮັບທົບທວນ ແລະ ຮັບຮອງເອົາຈາກທະນາຄານໂລກກ່ອນ. ທະນາຄານໂລກ ຈະສະໜອງທຶນເພີ່ມເຕີມ ເມື່ອເຫດການ ຫາກເກີດຂຶ້ນກ່ອນກໍານົດມື້ສໍາເລັດວຽກ ຕາມສັນຍາສະບັບເດີມ ຫຼື ກໍານົດມື້ສໍາເລັດວຽກທີ່ໄດ້ດັດແກ້ເທົ່ານັ້ນ ເຊັ່ນວ່າ:

1. ກໍລະນີຂອງສັນຍາ ນອນໃນການທົບທວນກ່ອນ ໃຫ້ຖືເອົາຕາມໃບດັດແກ້ ທີ່ທະນາຄານໂລກໄດ້ ໃຫ້ການຮັບຮອງ.
2. ກໍລະນີຂອງສັນຍາ ນອນໃນການກວດກາຕາມຫຼັງ ໃຫ້ຖືເອົາຕາມໃບດັດແກ້ ທີ່ໄດ້ເຊັນກັນ ກ່ອນມື້ມີ ຜົນບັງຄັບໃຊ້ໄດ້ ຂອງການສັ່ງຢຸດວຽກຊົ່ວຄາວ ຫຼື ການສັ່ງຫ້າມ.

ທະນາຄານໂລກ ຈະບໍ່ສະໜອງທຶນໃຫ້ ບໍ່ວ່າສັນຍາໃໝ່ ຫຼື ວຽກດັດແກ້ ຫຼື ວຽກເພີ່ມໃດໆໂດຍ ປັບປຸງຈາກ ສັນຍາເດີມທີ່ມີຢູ່ນັ້ນໆ ເຊິ່ງໄດ້ເຊັນກັບບໍລິສັດ ຫຼື ບຸກຄົນ ທີ່ຖືກຢຸດວຽກຊົ່ວຄາວ ຫຼື ຖືກຫ້າມ ໃນມື້ ຫຼື ຫຼັງມື້ມີຜົນບັງຄັບໃຊ້ໄດ້ຂອງການສັ່ງຢຸດວຽກຊົ່ວຄາວ ແລະ ການສັ່ງຫ້າມ.

# ເອກະສານຊ້ອນທ້າຍ 2: ການໃຫ້ສິດທິພິເສດພາຍໃນປະເທດ

## 1. ສິດທິພິເສດ ສຳລັບສິນຄ້າຜະລິດພາຍໃນປະເທດ

ຜູ້ກູ້ຢືມ ອາດຈະໄດ້ຮັບການຕົກລົງເຫັນດີຈາກທະນາຄານໂລກ ເພື່ອວາງຂອບເຂດການໃຫ້ສິດທິພິເສດ ໃນເວລາປະເມີນຜົນການປະມູນ ພາຍໃຕ້ຮູບການ ການປະມູນເປີດກ້ວາງສາກົນ *(ICB)* ເພື່ອສະໜອງສິນຄ້າ ປະເພດສະເພາະໃດນຶ່ງ ທີ່ຜະລິດຢູ່ພາຍໃນປະເທດຂອງຜູ້ກູ້ຢືມ ເມື່ອສົມທຽບກັບລາຄາສິນຄ້າສະເໜີປະມູນ ປະເພດດຽວກັນນັ້ນໆ ທີ່ຜະລິດຢູ່ບ່ອນອື່ນ. ໃນກໍລະນີນີ້, ເອກະສານເຊີນປະມູນ ຕ້ອງກຳນົດໃຫ້ຈະແຈ້ງ ກ່ຽວກັບການໃຫ້ສິດທິພິເສດ ສຳລັບສິນຄ້າຜະລິດພາຍໃນ ແລະ ຂໍ້ມູນທີ່ຈຳເປັນ ເພື່ອພິຈາລະນາເຖິງຄຸນລັກສະນະເໝາະສົມ ຂອງເອກະສານຍື່ນປະມູນທີ່ຈະໄດ້ຮັບສິດທິພິເສດດັ່ງກ່າວນີ້. ສັນຊາດຂອງຜູ້ຜະລິດ ຫຼື ຜູ້ສະໜອງ ບໍ່ໄດ້ຖືເປັນເງື່ອນໄຂ ເພື່ອກຳນົດວ່າມີຄຸນລັກສະນະເໝາະສົມ. ວິທີການ ແລະ ຂັ້ນຕອນ ທີ່ຕ້ອງນຳໃຊ້ ໃນການປະເມີນຜົນ ແລະ ສົມທຽບລາຄາ ບັນດາເອກະສານຍື່ນປະມູນ ໄດ້ຊີ້ແຈ່ງ ຂ້າງລຸ່ມນີ້:

2. ເພື່ອເປັນພື້ນຖານແກ່ການສົມທຽບລາຄາ, ເອກະສານຍື່ນປະມູນ ທີ່ຕອບສະໜອງ ຕ້ອງຈັດເຂົ້າກຸ່ມ ເຊິ່ງ ນອນໜຶ່ງໃນສາມກຸ່ມດັ່ງນີ້:

(1) ກຸ່ມ 1: ເອກະສານຍື່ນປະມູນ ທີ່ສະເໜີຈະສະໜອງສິນຄ້າ ທີ່ຜະລິດຢູ່ພາຍໃນປະເທດຂອງ ຜູ້ກູ້ຢືມ ໂດຍຜູ້ປະມູນເອງ ສາມາດຢັ້ງຢືນ ໃຫ້ແກ່ຜູ້ກູ້ຢືມ ແລະ ທະນາຄານໂລກໄດ້ ຕາມເງື່ອນໄຂລຸ່ມນີ້:

1. ນຳໃຊ້ແຮງງານ, ວັດຖຸດິບ ແລະ ສິ້ນສ່ວນປະກອບ ຜະລິດຢູ່ພາຍໃນປະເທດຂອງ ຜູ້ກູ້ຢືມກວມເຖິງ 30 (ສາມສິບ) ສ່ວນຮ້ອຍ ຫຼື ຫຼາຍກວ່າ ຕາມລາຄາໂຮງງານ *(EXW)* ຂອງສິນຄ້າ ທີ່ໄດ້ສະເໜີ.
2. ສະຖານທີ່ຜະລິດ ເພື່ອຜະລິດ ຫຼື ປະກອບ ສິນຄ້າດັ່ງກ່າວ ຕ້ອງໄດ້ນຳໃຊ້ ເພື່ອຜະລິດ ຫຼື ປະກອບ ສິນຄ້ານັ້ນໆ ນັບຕັ້ງແຕ່ເວລາຍື່ນຊອງປະມູນເປັນຕົ້ນໄປ ເປັນຢ່າງໜ້ອຍ.

(2) ກຸ່ມ 2: ເອກະສານຍື່ນປະມູນອື່ນໆທັງໝົດ ທີ່ສະເໜີຈະສະໜອງສິນຄ້າ ທີ່ຜະລິດຢູ່ພາຍໃນປະເທດຂອງຜູ້ກູ້ຢືມ.

(3) ກຸ່ມ 3: ເອກະສານຍື່ນປະມູນ ທີ່ສະເໜີຈະສະໜອງສິນຄ້າ ທີ່ຜະລິດຢູ່ຕ່າງປະເທດ ແລະ ໄດ້ນຳເຂົ້າເປັນທີ່ຮຽບຮ້ອຍແລ້ວ ຫຼື ຈະຖືກນຳເຂົ້າໂດຍກົງຈາກຕ່າງປະເທດ.

3. ລາຄາສະເໜີປະມູນຂອງສິນຄ້າ ທີ່ນອນໃນເອກະສານຍື່ນປະມູນ ສຳລັບກຸ່ມ (1) ແລະ (2) ຕ້ອງລວມ ຄ່າພາສີ ແລະ ຄ່າອາກອນທັງໝົດ, ຫຼື ໄດ້ຄິດໄລ່ຄ່າເຫຼົ່ານີ້ ຕາມວັດຖຸພື້ນຖານ ຫຼື ສິ້ນສ່ວນປະກອບ ທີ່ໄດ້ຊື້ຢູ່ຕະຫຼາດພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ, ແຕ່ບໍ່ລວມ ຄ່າອາກອນການຂາຍ ຫຼື ຄ່າອາກອນ ທີ່ຄ້າຍຄື ເຊິ່ງຈັດເກັບກັບສິນຄ້າສຳເລັດຮູບ. ສ່ວນລາຄາສະເໜີປະມູນຂອງສິນຄ້າ ທີ່ນອນໃນເອກະສານຍື່ນປະມູນ ສຳລັບກຸ່ມ (3) ຕ້ອງເປັນລາຄາ *(CIP)* ເຊິ່ງກວມເອົາ "ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ" (ລະບຸຊື່ປາຍທາງ) ເຊິ່ງບໍ່ໄດ້ລວມຄ່າພາສີ ແລະ ຄ່າອາກອນນຳເຂົ້າອື່ນໆ ທີ່ໄດ້ເສຍແລ້ວ ຫຼື ຈະຖືກເສຍ.

4. ໃນຂັ້ນຕອນທຳອິດ, ໃຫ້ນຳເອົາລາຄາສະເໜີປະມູນ ຈາກເອກະສານຍື່ນປະມູນທັງໝົດ ທີ່ຜ່ານການກວດ ກາຄວາມຖືກຕ້ອງແລ້ວ ມາສົມທຽບກັນ ແລະ ກຳນົດໃຫ້ໄດ້ ລາຄາປະເມີນຕ່ຳສຸດ ໃນແຕ່ລະກຸ່ມ. ຈາກນັ້ນ ກໍນຳເອົາລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາປະເມີນຕ່ຳສຸດ ໃນແຕ່ລະກຸ່ມນັ້ນ ມາສົມທຽບກັນ. ຖ້າຜົນຂອງການສົມທຽບຫາກຕົກເປັນລາຄາຂອງກຸ່ມ (1) ຫຼື ກຸ່ມ (2) ເປັນລາຄາສະເໜີປະມູນ ທີ່ຖືວ່າ ເປັນລາຄາປະເມີນຕ່ຳສຸດນັ້ນ ກໍຈະຖືກເລືອກເອົາ ເພື່ອມອບສັນຍາໃຫ້ແກ່ຜູ້ຊະນະການປະມູນນັ້ນ.

5. ຖ້າຜົນຂອງການສົມທຽບລາຄາ ຕາມເນື້ອໃນ ວັກ 4 ຂ້າງເທິງ ຫາກໄດ້ມາເປັນ ລາຄາສະເໜີປະມູນທີ່ຖືວ່າເປັນລາຄາປະເມີນຕ່ຳສຸດ ເຊິ່ງມາຈາກກຸ່ມ (3), ລາຄາສະເໜີປະມູນທັງໝົດໃນກຸ່ມ (3) ຕ້ອງຖືກນຳມາ ສົມທຽບກັບ

ລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາປະເມີນຕໍ່າສຸດ ຈາກກຸ່ມ (1). ເພື່ອຮັບໃຊ້ເປົ້າໝາຍ ໃນການສົມທຽບຂັ້ນຕໍ່ໄປເທົ່ານັ້ນ, ລາຄາສະເໜີປະມູນຂອງເອກະສານຍື່ນປະມູນທັງໝົດຈາກກຸ່ມ (3) ຕ້ອງບວກຕົວເລກ ທຽບເທົ່າກັບ 15 (ສິບຫ້າ) ສ່ວນຮ້ອຍ ຂອງລາຄາ *(CIP)* ເຊິ່ງກວມເອົາ “ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ” (ລະບຸຊື່ປາຍທາງ) ສຳລັບສິນຄ້າ ທີ່ຈະຖືກນຳເຂົ້າ ຫຼື ໄດ້ນຳເຂົ້າຈາກຕ່າງປະເທດ ເປັນທີ່ຮຽບຮ້ອຍແລ້ວ. ທັງສອງລາຄາຈາກກຸ່ມ (1) ແລະ ກຸ່ມ (3) ທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ ຕ້ອງເປັນ ລາຄາສະເໜີປະມູນ ເຊິ່ງໄດ້ຫຼຸດລາຄາທີ່ບໍ່ມີເງື່ອນໄຂ ແລະ ກວດແກ້ຄວາມຜິດພາດໃນການຄິດໄລ່ ຄືນແລ້ວ. ຖ້າລາຄາສະເໜີປະມູນ ໄດ້ຈາກກຸ່ມ (1) ເປັນລາຄາຕໍ່າສຸດ ກໍຈະຖືກເລືອກເອົາ ເພື່ອມອບ ສັນຍາແກ່ຜູ້ຊະນະການປະມູນນັ້ນ. ແຕ່ຖ້າໃນກໍລະນີກົງກັນຂ້າມ, ລາຄາສະເໜີປະ ມູນທີ່ຖືວ່າເປັນລາຄາ ປະເມີນຕໍ່າສຸດ ໄດ້ຈາກກຸ່ມ (3) ກໍຈະຖືກເລືອກເອົາ ເພື່ອມອບສັນຍາແກ່ຜູ້ຊະນະການປະມູນນັ້ນຕາມ ເນື້ອໃນ ວັກ 4 ຂ້າງເທິງ.

6. ໃນກໍລະນີຂອງສັນຍາແບບມອບຂໍກຸນແຈ ສຳລັບການສະໜອງອຸປະກອນ ທີ່ປະກອບມີຫຼາຍໆ ລາຍການ ຍ່ອຍ ຕະຫຼອດຮອດ ການປະກອບ, ການຕິດຕັ້ງ, ແລະ/ຫຼື ການກໍ່ສ້າງ ທີ່ໄດ້ກຳນົດ ຕາມເນື້ອໃນ ວັກ 2.4 ຂອງໝວດ (2) [80] ຈະບໍ່ໄດ້ຮັບສິດທິພິເສດນີ້. ເຖິງຢ່າງໃດກໍຕາມ, ໃນກໍລະນີສິນຄ້າ ທີ່ຜະລິດ ຢູ່ຕ່າງປະ ເທດ, ການເຊີນເຂົ້າຮ່ວມປະມູນ ແລະ ການປະເມີນຜົນ ເອກະສານຍື່ນປະມູນ ສຳລັບສັນຍາ ແບບມອບ ຂໍກຸນແຈ ອາດຈະກຳນົດເອົາພື້ນຖານລາຄາ *(DDP) (Delivery Duty Paid—DDP)*[81] *(named place of destination)* ເຊິ່ງກວມເອົາ “ສົ່ງຮອດສະຖານທີ່, ຈ່າຍຄ່າພາສີ ແລະ ອາກອນ” (ລະບຸຊື່ປາຍທາງ).

7. ໃນກໍລະນີ ຂອງສັນຍາແບບເບດເສດ (ຍົກເວັ້ນສັນຍາຮູບແບບມອບຂໍກຸນແຈ) ສຳລັບ ໂຮງຊ່າງອຸດສາ ຫະກຳຂະໜາດໃຫຍ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ທີ່ກຳນົດ ຕາມເນື້ອໃນ 2.4 ຂອງໝວດ (2), ຂອບເຂດການໃຫ້ສິດທິພິເສດ ຈະບໍ່ໄດ້ກວມເອົາໝົດທຸກອົງປະກອບ ຂອງສັນຍາ ແຕ່ກວມສະເພາະແຕ່ ອຸປະກອນທີ່ຜະລິດຢູ່ພາຍໃນປະເທດຂອງຜູ້ກູ້ຢືມເທົ່ານັ້ນ. ອຸປະກອນທີ່ສະເໜີເຂົ້າໃນເອກະສານຍື່ນປະ ມູນທີ່ນຳເຂົ້າຈາກຕ່າງປະເທດ ຕ້ອງສະເໜີເປັນລາຄາ *(CIP)* ທີ່ກວມເອົາ “ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ” (ລະບຸຊື່ປາຍທາງ) ແລະ ອຸປະກອນທີ່ຜະລິດຢູ່ພາຍໃນປະເທດຂອງ ຜູ້ກູ້ຢືມ ຕ້ອງສະເໜີເປັນລາຄາໂຮງງານ *(EXW)*. ສ່ວນອົງປະກອບອື່ນໆທັງໝົດເຊັ່ນວ່າ: ການອອກແບບ, ການກໍ່ສ້າງ, ການຂົນສົ່ງພາຍໃນປະເທດ ແລະ ການປະກັນໄພຮອດປາຍທາງ, ການປະກອບ, ການຕິດຕັ້ງ ແລະ ການຕິດຕາມ ການກໍ່ສ້າງ (ຖ້າມີ) ຕ້ອງສະເໜີເປັນລາຄາ ທີ່ແຍກເປັນແຕ່ລະລາຍການ. ເອກະສານຍື່ນປະມູນ ບໍ່ໄດ້ຈັດແຍກເປັນກຸ່ມ (1), (2) ຫຼື (3). ສ່ວນການສົມທຽບລາຄາສະເໜີປະມູນ ແມ່ນຖືເອົາ ລາຄາ *(CIP)* ທີ່ກວມເອົາ “ມູນຄ່າ, ປະກັນໄພ, ຄ່າຂົນສົ່ງ” (ລະບຸຊື່ປາຍທາງ) ຂອງອຸປະກອນທີ່ນຳເຂົ້າຈາກນອກປະ ເທດຂອງປະເທດຜູ້ກູ້ຢືມ ເພື່ອສະເໜີທີ່ຈະສະໜອງ ໂດຍເພີ່ມຂຶ້ນ ຈຳນວນ 15 (ສິບຫ້າ) ສ່ວນຮ້ອຍຂອງລາຄາສະເໜີດັ່ງກ່າວຈາກເອກະສານຍື່ນປະມູນຂອງແຕ່ລະບໍລິສັດ. ບໍ່ວ່າ ການບໍລິການ ທີ່ຕິດພັນ ຫຼື ການບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ຫຼື ວຽກຮັບເໝົາໃດໆ ທີ່ນອນຢູ່ໃນອົງປະກອບ ຂອງສັນຍາ ນັ້ນໆ ຈະບໍ່ໄດ້ຮັບສິດທິ

---

80 ນະທີ່ນີ້ ບໍ່ໄດ້ອ້າງອີງເຖິງ ການສະໜອງສິນຄ້າ ທີ່ມີການຕິດຕາມວຽກງານການຕິດຕັ້ງ ນອນຢູ່ໃນສັນຍາດຽວກັນ ເຊິ່ງພິຈາລະນາວ່າເປັນສັນຍາສະໜອງສິນຄ້າ ແລະ ມີຄຸນລັກສະນະເໝາະສົມ ໃນການນຳໃຊ້ສິດທິພິເສດສິນຄ້າຜະລິດພາຍໃນປະເທດ ຕໍ່ກັບອົງປະກອບສິນຄ້າເທົ່ານັ້ນ.

81 ໂດຍອ້າງອີງເຖິງຄຳນິຍາມຂອງຄຳສັບເງື່ອນໄຂການຄ້າສາກົນ (Incoterms 2010), ຄຳສັບ *(DDP)* ທີ່ກວມເອົາ “ສົ່ງຮອດສະຖານທີ່, ຈ່າຍພາສີ ແລະ ອາກອນ” (ລະບຸຊື່ປາຍທາງ) ມີຄວາມໝາຍວ່າ ຜູ້ຂາຍໄດ້ສົ່ງມອບສິນຄ້າໃຫ້ຜູ້ຊື້,ຮັບຜິດຊອບການຊຳລະນຳເຂົ້າ, ແລະ ບໍ່ໄດ້ຄ່ຽນຖ່າຍ ຈາກພາຫະນະທີ່ຂົນສົ່ງມານັ້ນ ຈົນໄປເຖິງຈຸດໝາຍປາຍທາງຂອງຜູ້ຊື້. ຜູ້ຂາຍ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ແລະຄວາມສ່ຽງຕ່າງໆ ທີ່ເກີດຂຶ້ນກ່ຽວກັບການນຳເຂົ້າສິນຄ້ານັ້ນ, ຊຶ່ງລວມເອົາຄ່າພາສີນຳເຂົ້າ ຂອງປະເທດປາຍທາງ, ແລະ ຄ່ຽນຖ່າຍ ຢູ່ປາຍທາງສຸດທ້າຍ ເຊິ່ງເປັນສ່ວນໜຶ່ງ ຂອງສັນຍາແບບມອບຂໍກຸນແຈ. ຢູ່ບາງປະເທດ ທີ່ຜູ້ປະມູນບໍ່ໄດ້ຮັບການຍົກເວັ້ນ ສຳລັບສັນຍາທີ່ທະນາຄານໂລກສະໜອງທຶນ, ການປະເມີນຜົນເພື່ອສົມທຽບລາຄານັ້ນຕ້ອງດຳເນີນໃນຮູບການບໍ່ໄດ້ຍົກເວັ້ນຄ່າພາສີ ແລະ ອາກອນ ນຳເຂົ້າ ສິນຄ້າຜະລິດຢູ່ຕ່າງປະເທດ ແລະເອກະສານເຊີນປະມູນ ຕ້ອງໄດ້ກຳນົດເຊັ່ນນັ້ນ. ກ່ອນການເຊັນສັນຍາ, ຜູ້ຊື້ ແລະ ຜູ້ຊະນະການປະມູນ ຈະກຳນົດຄ່າອາກອນນຳເຂົ້າສິນຄ້າ ທີ່ຕ້ອງຊຳລະ ອັນເນື່ອງມາຈາກ ການຍົກເວັ້ນ. ເຖິງຢ່າງນີ້ກໍຕາມ, ມູນຄ່າສັນຍາ ທີ່ຈະເຊັນ ຈະບໍ່ລວມເອົາຈຳນວນລວມຂອງການຍົກເວັ້ນພາສີ ແລະ ອາກອນ ທີ່ກຳນົດໄວ້ນັ້ນ.

ພິເສດນີ້. ລາຄາສະເໜີປະມູນ ທີ່ຖືວ່າ ເປັນລາຄາປະເມີນຕໍ່າສຸດ ໂດຍສອດຄ່ອງ ກັບບັນທັດຖານການປະເມີນຜົນ ລວມທັງການໃຫ້ສິດທິພິເສດພາຍໃນ (ຖ້າມີ) ນັ້ນ ກໍຈະຖືກເລືອກເອົາ ເພື່ອມອບສັນຍາໃຫ້ແກ່ຜູ້ຊະນະການປະມູນນັ້ນ.

## 8. ສິດທິພິເສດ ສຳລັບຜູ້ຮັບເໝົາພາຍໃນປະເທດ

ຕໍ່ກັບສັນຍາວຽກຮັບເໝົາ ທີ່ໄດ້ມອບໃຫ້ຜູ້ຊະນະການປະມູນ ບົນພື້ນຖານ ການປະມູນເປີດກ້ວາງສາກົນ *(ICB)*, ຜູ້ກູ້ຢືມ ທີ່ໄດ້ຄຸນລັກສະນະເໝາະສົມ ອາດຈະໄດ້ຮັບການຕົກລົງເຫັນດີຈາກທະນາຄານໂລກ ເພື່ອໃຫ້ສິດທິພິເສດພາຍໃນອັດຕາ 7.5 (ເຈັດຈຸດຫ້າ) ສ່ວນຮ້ອຍ ໃຫ້ແກ່ຜູ້ຮັບເໝົາພາຍໃນປະເທດ[82] ໂດຍສອດຄ່ອງກັບຂໍ້ກຳນົດຕ່າງໆລຸ່ມນີ້:

(1) ຜູ້ຮັບເໝົາ ທີ່ຂໍນຳໃຊ້ ສິດທິພິເສດດັ່ງກ່າວ ຕ້ອງສະໜອງຂໍ້ມູນ ເຊິ່ງເປັນສ່ວນໜຶ່ງຂອງຂໍ້ມູນ ດ້ານຄຸນວຸດທິ[83], ຂໍ້ມູນດັ່ງກ່າວປະກອບມີ ລາຍລະອຽດຂອງຄວາມເປັນເຈົ້າຂອງເພື່ອຕັດສິນໄດ້ວ່າ ຜູ້ຮັບເໝົາ ຫຼື ກຸ່ມຜູ້ຮັບເໝົາດັ່ງກ່າວ ມີເງື່ອນໄຂຄົບຖ້ວນ ຫຼືບໍ່ ເພື່ອຈະໄດ້ຮັບສິດທິພິເສດນັ້ນ ໂດຍສອດຄ່ອງກັບ ມາດຕະຖານການຈັດກຸ່ມ ທີ່ຜູ້ກູ້ຢືມ ໄດ້ວາງໄວ້ ແລະ ທະນາຄານໂລກ ຮັບຮອງເອົາ. ຢູ່ໃນເອກະສານເຊີນປະມູນ ຕ້ອງກຳນົດໃຫ້ຈະແຈ້ງ ກ່ຽວກັບລະດັບການໃຫ້ ສິດທິພິເສດ ລວມທັງ ວິທີການ ການປະເມີນຜົນ ແລະ ສົມທຽບລາຄາປະມູນ ທີ່ສະທ້ອນໃຫ້ເຫັນເຖິງສິດທິພິເສດດັ່ງກ່າວນັ້ນ.

(2) ອີງຕາມເອກະສານຍື່ນປະມູນທີ່ໄດ້ຮັບ, ຜູ້ກູ້ຢືມ ຕ້ອງໄດ້ທົບທວນ ແລະ ຈັດເອກະສານຍື່ນປະມູນ ທີ່ຕອບສະໜອງໄດ້ເງື່ອນໄຂ ເຂົ້າກຸ່ມຕ່າງໆດັ່ງນີ້:

1. ກຸ່ມ 1: ເອກະສານຍື່ນປະມູນ ຂອງຜູ້ຮັບເໝົາພາຍໃນປະເທດ ທີ່ມີຄຸນລັກສະນະເໝາະສົມ ເພື່ອໄດ້ຮັບສິດທິພິເສດ.
2. ກຸ່ມ 2: ເອກະສານຍື່ນປະມູນ ຂອງຜູ້ຮັບເໝົາອື່ນໆ.

9. ຂັ້ນຕອນທຳອິດຂອງການປະເມີນຜົນ ແມ່ນໃຫ້ນຳເອົາລາຄາສະເໜີປະມູນ ຂອງເອກະສານຍື່ນປະມູນ ທັງໝົດ ທີ່ຜ່ານການກວດກາຄວາມຖືກຕ້ອງ ໃນແຕ່ລະກຸ່ມ ມາສົມທຽບກັນ ແລະ ກຳນົດໃຫ້ໄດ້ ລາຄາ ປະເມີນຕໍ່າສຸດ. ຈາກນັ້ນກໍນຳເອົາ ລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາປະເມີນຕໍ່າສຸດ ໃນແຕ່ລະ ກຸ່ມນັ້ນ ມາສົມທຽບກັນ. ຖ້າຜົນຂອງການສົມທຽບ ຫາກຕົກເປັນລາຄາຂອງກຸ່ມ (1) ເປັນລາຄາສະເໜີ ປະມູນ ທີ່ຖືວ່າເປັນລາຄາປະເມີນຕໍ່າສຸດນັ້ນ ກໍຈະຖືກເລືອກເອົາ ເພື່ອມອບສັນຍາໃຫ້ແກ່ຜູ້ຊະນະ ການປະມູນນັ້ນ. ແຕ່ຖ້າຫາກຕົກເປັນລາຄາຂອງກຸ່ມ (2) ເປັນລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາ ປະເມີນຕໍ່າສຸດນັ້ນ ກໍຕ້ອງດຳເນີນ ຂັ້ນຕອນທີສອງຂອງການປະເມີນຜົນ ໂດຍນຳເອົາລາຄາສະເໜີປະມູນ ຂອງເອກະສານຍື່ນປະມູນທັງໝົດຈາກກຸ່ມ (2) ມາສົບຕໍ່ສົມທຽບກັບ ລາຄາສະເໜີປະມູນ ທີ່ຖືວ່າ ເປັນລາຄາປະເມີນຕໍ່າສຸດ ຈາກກຸ່ມ (1). ເພື່ອເປົ້າໝາຍໃນການສົມທຽບຂັ້ນຕໍ່ໄປ, ລາຄາສະເໜີປະມູນ ທີ່ຜ່ານການກວດກາຄວາມຖືກຕ້ອງ ຂອງເອກະສານຍື່ນປະມູນແຕ່ລະຄົນ ຈາກກຸ່ມ (2) ຕ້ອງບວກຕົວ ເລກທຽບເທົ່າກັບ 7.5 (ເຈັດຈຸດຫ້າ) ສ່ວນຮ້ອຍ ຂອງລາຄາສະເໜີປະມູນແຕ່ລະອັນ ໂດຍໄດ້ກວດແກ້ ຄວາມຜິດພາດໃນການຄິດໄລ່ຄືນ ລວມທັງ ການຫຼຸດລາຄາທີ່ບໍ່ມີເງື່ອນໄຂ ແຕ່ບໍ່ກວມເອົາ ມູນຄ່າ ຄາດຄະເນລວມ *(Provisional sum)* ແລະ ເງິນວັນ (ຄ່າແຮງງານປະຈຳວັນ) *(Day work)*. (ຖ້າມີ). ຖ້າລາຄາສະ ເໜີປະມູນ ໄດ້ຈາກກຸ່ມ (1) ເປັນລາຄາຕໍ່າສຸດ ກໍຈະຖືກເລືອກເອົາ ເພື່ອມອບສັນຍາແກ່ຜູ້ຊະນະ ການປະມູນນັ້ນ. ແຕ່ຖ້າໃນ ກໍລະນີກົງກັນຂ້າມ, ລາຄາສະເໜີປະມູນ ທີ່ຖືວ່າເປັນລາຄາປະເມີນ ຕໍ່າສຸດ ໄດ້ຈາກກຸ່ມ (2) ທີ່ໄດ້ຜ່ານຂັ້ນຕອນທຳອິດຂອງການປະເມີນຜົນນັ້ນ ກໍຈະຖືກເລືອກເອົາ ເພື່ອມອບ ສັນຍາໃຫ້ແກ່ຜູ້ຊະນະການປະມູນນັ້ນ.

---

82 ສິດທິພິເສດພາຍໃນປະເທດ ສຳລັບຜູ້ຮັບເໝົາພາຍໃນປະເທດແມ່ນ ນຳໃຊ້ສະເພາະແຕ່ບັນດາປະເທດ ທີ່ໄດ້ເງື່ອນໄຂຄຸນວຸດທິເທົ່ານັ້ນ.

83 ໃນການຄັດເລືອກຄຸນວຸດທິກ່ອນການປະມູນ ແລະ/ຫຼື ໃນຂະບວນການປະມູນ.

# ເອກະສານຊ້ອນທ້າຍ 3: ການແນະນຳທິດທາງ ໃຫ້ຜູ້ປະມູນ

## 1. ຈຸດປະສົງ

ເປົ້າໝາຍຂອງເອກະສານຊ້ອນທ້າຍສະບັບນີ້ ແມ່ນເພື່ອແນະນຳທິດທາງໃຫ້ ຜູ້ປະມູນທີ່ມີເງື່ອນໄຂ ທີ່ຕ້ອງ ການເຂົ້າ ຮ່ວມ ວຽກງານການຈັດຊື້-ຈັດຈ້າງ ທີ່ທະນາຄານໂລກສະໜອງທຶນໃຫ້.

## 2. ຄວາມຮັບຜິດຊອບ ຕໍ່ການຈັດຊື້-ຈັດຈ້າງ

ຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດໂຄງການ ກໍຄື ການຊຳລະຄ່າສິນຄ້າ, ວຽກຮັບເໝົາກໍ່ສ້າງ ແລະ ການ ບໍລິການ (ທີ່ບໍ່ແມ່ນທີ່ປຶກສາ) ພາຍໃຕ້ໂຄງການ ຕົກເປັນພາລະຂອງຜູ້ກູ້ຢືມເອງ. ສ່ວນທະນາຄານໂລກພັດມີຄວາມ ຮັບຜິດຊອບຂອງຕົນ ຕາມທີ່ໄດ້ລະບຸໄວ້ໃນມາດຕາຕ່າງໆ ນອນໃນສັນຍາເພື່ອຮັບປະກັນ ໃຫ້ການຊຳລະເງິນກູ້ຈາກ ທະນາຄານໂລກ ເປັນໄປຕາມລາຍຈ່າຍຕົວຈິງທີ່ເກີດຂຶ້ນເທົ່ານັ້ນ. ຂັ້ນຕອນການເບີກຈ່າຍເງິນກູ້ ແມ່ນອີງຕາມ ການ ສະເໜີຂອງຜູ້ກູ້ຢືມເທົ່ານັ້ນ. ຜູ້ກູ້ຢືມ ຕ້ອງປະກອບເອກະສານ ຫາທະນາຄານໂລກ ເພື່ອຂໍຖອນເງິນກູ້ອອກ ໂດຍຄັດ ຕິດເອກະສານສະໜັບສະໜູນຕ່າງໆ ເພື່ອຢັ້ງຢືນໃຫ້ເຫັນວ່າ ເງິນໄດ້ໃຊ້ໄປແລ້ວ ຫຼື ກຳລັງຈະໃຊ້ ຕ້ອງໃຫ້ສອດຄ່ອງ ກັບ ສັນຍາກູ້ຢືມເງິນ ແລະ ແຜນຈັດຊື້- ຈັດຈ້າງ[84]. ຄືດັ່ງທີ່ໄດ້ເນັ້ນໜັກ ຕາມເນື້ອໃນວັກ 1.2 ຂອງຄູ່ມືແນະນຳສະບັບ ນີ້, ຜູ້ກູ້ຢືມ ມີຄວາມ ຮັບຜິດຊອບທາງດ້ານກົດໝາຍ ຕໍ່ການຈັດຊື້-ຈັດຈ້າງ ເຊັ່ນວ່າ: ການເຊີນເຂົ້າຮ່ວມປະມູນ, ການ ຮັບ ເອ ກະສານຍື່ນປະມູນ, ການປະເມີນຜົນການປະມູນ ແລະ ການມອບສັນຍາແກ່ຜູ້ຊະນະການປະມູນ. ສັນຍາ ແມ່ນຂໍ້ຜູກພັນ ລະຫວ່າງ ຜູ້ກູ້ຢືມ ແລະ ຜູ້ສະໜອງສິນຄ້າ ຫຼື ຜູ້ຮັບເໝົາ. ສ່ວນທະນາຄານໂລກ ບໍ່ໄດ້ເປັນພາກສ່ວນ ໜຶ່ງຂອງສັນຍາ.

## 3. ບົດບາດຂອງທະນາຄານໂລກ

ຄືດັ່ງທີ່ໄດ້ກ່າວໄວ້ ຕາມເນື້ອໃນ ວັກ 1.13 ຂອງຄູ່ມືແນະນຳສະບັບນີ້, ທະນາຄານໂລກ ຈະທົບທວນຄືນ ຂະບວນ ການ ຂອງການຈັດຊື້-ຈັດຈ້າງຕ່າງໆ, ເອກະສານ, ການປະເມີນຜົນການປະມູນ, ການສະເໜີມອບສັນຍາແກ່ຜູ້ຊະນະການ ປະມູນ ແລະ ສັນຍາ ເພື່ອຮັບປະກັນໃຫ້ ຂັ້ນຕອນດຳເນີນການຕ່າງໆ ສອດຄ່ອງກັບຂະບວນການທີ່ໄດ້ຕົກລົງເຫັນດີນຳ ກັນ ເຊິ່ງໄດ້ລະບຸໄວ້ໃນສັນຍາກູ້ຢືມ. ໃນກໍລະນີຂອງສັນຍາທີ່ສຳຄັນ ຕ່າງໆ, ທະນາຄານໂລກ ຕ້ອງໄດ້ທົບທວນ ເອກະສານຄືນ ກ່ອນການອອກເອກະສານນັ້ນໆ ເຊິ່ງໄດ້ ອະທິບາຍໄວ້ໃນ ເອກະສານຊ້ອນທ້າຍ (1)[85]. ບໍ່ວ່າຈະຢູ່ ໃນໄລຍະເວລາໃດຂອງຂັ້ນຕອນດຳເນີນການຈັດຊື້-ຈັດຈ້າງ (ລວມທັງ ຫຼັງການມອບສັນຍາໃຫ້ແກ່ຜູ້ຊະນະການ ປະມູນ) ກໍຕາມ, ຖ້າທະນາຄານໂລກ ຫາກສະຫຼຸບຄວາມໄດ້ວ່າ ຂັ້ນຕອນຂອງວຽກງານຈັດຊື້-ຈັດຈ້າງດັ່ງກ່າວ ບໍ່ໄດ້ຮັບ ການປະຕິບັດ ຕາມຂະບວນການທີ່ໄດ້ຕົກລົງເຫັນດີນຳກັນນັ້ນ, ທະນາຄານໂລກ ອາດຈະປະກາດວ່າ ເປັນການຈັດ ຊື້-ຈັດຈ້າງ ບໍ່ຖືກລະບຽບການ ເຊິ່ງໄດ້ອະທິບາຍໄວ້ ຕາມເນື້ອໃນ ວັກ 1.14. ເຖິງຢ່າງໃດກໍຕາມ, ຖ້າຜູ້ກູ້ຢືມ ຫາກໄດ້ ມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ ພາຍຫຼັງທີ່ໄດ້ການຮັບຮອງຈາກທະນາຄານໂລກແລ້ວ, ແຕ່ ທະ ນາຄານໂລກ ກໍຍັງຈະປະກາດວ່າ ເປັນການຈັດຊື້-ຈັດຈ້າງ ບໍ່ຖືກລະບຽບການ ເມື່ອການຮັບຮອງ ທີ່ໄດ້ອອກໃຫ້ນັ້ນ ໄດ້ອີງໃສ່ບົນ ພື້ນຖານ ຂໍ້ມູນບໍ່ຄົບຖ້ວນ, ບໍ່ຊັດເຈນ ຫຼື ບິດເບືອນ (ເຮັດໃຫ້ເຂົ້າໃຈຜິດ) ທີ່ຜູ້ກູ້ຢືມ ໄດ້ປະກອບໃຫ້. ຍິ່ງໄປກວ່ານັ້ນ,

---

84 ສຳລັບຂໍ້ມູນເພີ່ມເຕີມ ກ່ຽວກັບນະໂຍບາຍ ແລະ ຫຼັກການພື້ນຖານ ຂອງການເບີກຈ່າຍ, ໃຫ້ເບິ່ງປຶ້ມຄູ່ມືແນະນຳ ການເບີກຈ່າຍ ສຳລັບໂຄງການຂອງ ທະນາຄານໂລກ ແລະ ຄູ່ມືການເບີກຈ່າຍ ສຳລັບລູກຄ້າຂອງທະນາຄານໂລກໄດ້ທີ່ ເວັບໄຊ ຂອງທະນາຄານໂລກ: www.worldbank.org/projects

85 ຍົກເວັ້ນເນື້ອໃນການຈັດຊື້-ຈັດຈ້າງ ທີ່ດຳເນີນການ ຕາມຮູບການ "ແຜນງານທົດລອງ ການນຳໃຊ້ລະບົບລວມທົ່ວປະເທດ " *(The Use of Country Systems-UCS Piloting ProrProgram)* ເຊິ່ງໄດ້ອະທິບາຍໄວ້ ຕາມເນື້ອໃນ ວັກ 3.20 ສຳລັບສັນຍານອນໃນການທົບທວນກ່ອນຂອງທະນາຄານ ໂລກ.

ຖ້າທະນາຄານໂລກ ຫາກໄດ້ພິຈາລະນາວ່າ ຜູ້ຕາງໜ້າຂອງ ຜູ້ກູ້ຢືມ ຫຼື ຂອງຜູ້ປະມູນ ຫາກມີ ສ່ວນກ່ຽວຂ້ອງກັບການສໍ້ລາດບັງຫຼວງ ຫຼື ການສໍ້ໂກງ, ທະນາຄານໂລກ ອາດຈະວາງມາດຕະການໃສ່ໂທດ ເຊິ່ງໄດ້ຊີ້ ແຈງ ຕາມເນື້ອໃນ ວັກ 1.16 ຂອງຄູ່ມືແນະນຳສະບັບນີ້.

4. ທະນາຄານໂລກ ໄດ້ຈັດພິມ ຕົວແບບມາດຕະຖານເອກະສານເຊີນປະມູນ *(SBDs)* ສຳລັບການຈັດຊື້- ຈັດຈ້າງ ຜ່ານຮູບການ ການປະມູນຕ່າງໆ. ຄືດັ່ງທີ່ໄດ້ກ່າວໄວ້ ຕາມເນື້ອໃນ ວັກ 2.10 ແລະ 2.12 ຂອງຄູ່ມື ແນະນຳສະບັບນີ້. ຜູ້ກູ້ຢືມ ຕ້ອງໄດ້ນຳໃຊ້ ຕົວແບບມາດຕະຖານເອກະສານເຫຼົ່ານີ້ ໂດຍອະນຸຍາດໃຫ້ ປ່ຽນແປງໜ້ອຍທີ່ສຸດ ເພື່ອບົ່ງບອກເຖິງປະເພດ ແລະ ປະເດັນສະເພາະ ຂອງໂຄງການ. ຜູ້ກູ້ຢືມ ເປັນຜູ້ປະ ກອບເອກະສານການຄັດ ເລືອກຄຸນວຸດທິກ່ອນການປະມູນ ແລະ ເອກະສານເຊີນປະມູນ ສະບັບສຸດທ້າຍ ແລະ ອອກແຈ້ງການປະມູນ.

## 5. ຂໍ້ມູນ ສຳລັບການປະມູນ

ຢູ່ໃນແຈ້ງການປະມູນຈັດຊື້-ຈັດຈ້າງທົ່ວໄປ ແລະ ແຈ້ງການປະມູນຈັດຊື້-ຈັດຈ້າງສະເພາະ ໄດ້ສະໜອງ ຂໍ້ມູນ ສຳລັບກາລະໂອກາດ ເພື່ອເຂົ້າຮ່ວມປະມູນ ຜ່ານຮູບການ ການປະມູນເປີດກວ້າງສາກົນ *(ICB)* ເຊິ່ງໄດ້ອະທິບາຍໄວ້ ຕາມເນື້ອໃນ ວັກ 2.7 ແລະ 2.8 ຂອງຄູ່ມືແນະນຳສະບັບນີ້. ການແນະນຳທົ່ວໄປ ສຳລັບການເຂົ້າຮ່ວມປະມູນ ຕະຫຼອດຮອດ ຂໍ້ມູນລ່ວງໜ້າ ສຳລັບໂຄງການທີ່ຈະມາເຖິງ ກໍໄດ້ສະໜອງໃຫ້ ໂດຍຜ່ານ ເວັບໄຊ ຂອງທະນາຄານໂລກ[86] ແລະ "*InfoShop*"[87]. ເອກະສານສະເໜີໂຄງການກໍໄດ້ສະ ໜອງໃຫ້ຕາມ "*InfoShop* " ແລະ ຜ່ານ ເວັບໄຊ ຂອງທະນາຄານໂລກ ພາຍຫຼັງໄດ້ຮັບອະນຸມັດ ເງິນກູ້ຈາກທະນາຄານໂລກແລ້ວ.

## 6. ບົດບາດຂອງຜູ້ປະມູນ

ພາຍຫຼັງທີ່ຜູ້ປະມູນໄດ້ຮັບເອກະສານການຄັດເລືອກຄຸນວຸດທິກ່ອນການປະມູນ ຫຼື ເອກະສານເຊີນປະມູນ, ຜູ້ປະມູນຄວນສຶກສາເອກະສານ ດ້ວຍຄວາມລະມັດລະວັງວ່າ ຕົນເອງ ຈະສາມາດສະໜອງໄດ້ເງື່ອນໄຂ ດ້ານວິຊາການ, ການຄ້າ ແລະ ເງື່ອນໄຂຂອງສັນຍາ ໄດ້ບໍ່, ຖ້າຫາກເຫັນວ່າໄດ້ ກໍດຳເນີນການກະກຽມ ເອກະສານຍື່ນປະມູນ. ຈາກນັ້ນ, ຜູ້ປະມູນ ຄວນກວດກາເອກະສານຄືນຢ່າງລະອຽດຖີ່ຖ້ວນວ່າ ມີຈຸດໃດ ຍັງມີຄວາມສົງໃສ (ບໍ່ຈະແຈ້ງ), ຂາດຫາຍ ຫຼື ຂັດແຍ່ງກັນເອງ, ຫຼື ມາດຕະຖານເຕັກນິກ ຫຼື ເງື່ອນໄຂ ທີ່ຍັງບໍ່ທັນຈະແຈ້ງ ຫຼື ມີການຈຳແນກ ຫຼື ມີຂໍ້ຈຳກັດ. ຖ້າຫາກເຫັນວ່າມີ ກໍຄວນຂໍຄວາມກະຈ່າງແຈ້ງ ເປັນລາຍລະອັກສອນ ພາຍໃນໄລຍະເວລາທີ່ກຳນົດຢູ່ໃນເອກະສານເຊີນປະມູນ ກ່ຽວກັບການຂໍ ຄວາມກະ ຈ່າງແຈ້ງດັ່ງກ່າວ.

7. ບັນທັດຖານ ແລະ ວິທີການຄັດເລືອກ ຜູ້ຊະນະການປະມູນ ກໍໄດ້ກ່າວໄວ້ ຢູ່ໃນເອກະສານເຊີນປະມູນ. ໂດຍທົ່ວໄປ, ກໍນອນຢູ່ໃນໝວດກ່ຽວກັບ ຄຳແນະນຳສຳລັບຜູ້ປະມູນ ແລະ ມາດຕະຖານເຕັກນິກ. ຖ້າຫາກເຫັນວ່າ ບໍ່ຈະແຈ້ງພໍ ກໍສາມາດຂໍຄວາມກະຈ່າງແຈ້ງ ຈາກຜູ້ກູ້ຢືມ ໄດ້ໃນທຳນອງດຽວກັນກໍລະນີວັກເທິງ.

8. ຄືດັ່ງທີ່ໄດ້ເນັ້ນໜັກແລ້ວວ່າ ເອກະສານເຊີນປະມູນສະເພາະ ແມ່ນຜູ້ກູ້ຢືມ ເປັນຜູ້ແຈ້ງການປະມູນ ແລະ ໃຫ້ການຄຸ້ມຄອງແຕ່ຂັ້ນຕອນການຈັດຊື້-ຈັດຈ້າງແຕ່ລະຄັ້ງ ເຊິ່ງໄດ້ກ່າວໄວ້ ຕາມເນື້ອໃນ ວັກ 1.1 ຂອງຄູ່ມືແນະນຳສະບັບນີ້. ສະນັ້ນ, ຖ້າຜູ້ປະມູນ ຫາກຮູ້ສຶກເຫັນວ່າ ມີຂໍ້ກຳນົດໃດ ທີ່ນອນໃນເອກະສານເຊີນປະມູນ ຫາກບໍ່ສອດຄ່ອງກັບຄູ່ມືແນະນຳສະບັບນີ້ ກໍຄວນຍົກຂຶ້ນມາ ເພື່ອໃຫ້ຜູ້ກູ້ຢືມຊາບ.

9. ຜູ້ປະມູນ ມີຄວາມຮັບຜິດຊອບ ທີ່ຈະຍົກຂຶ້ນ ບໍ່ວ່າປະເດັນໃດ ທີ່ຍັງມີຄວາມສົງໃສ (ບໍ່ຈະແຈ້ງ), ຂັດແຍ່ງກັນເອງ, ຂາດ

---

86 ໃຫ້ອ້າງອີງເຖິງ ເວັບໄຊ ຂອງທະນາຄານໂລກ: www.worldbank.org

87 ທີ່ຢູ່ຂອງ "*InfoShop*" ແມ່ນທີ່ຢູ່ດຽວກັນກັບທີ່ຢູ່ຂອງທະນາຄານໂລກ: *1818 H Street, N.W., Washington, D.C. 20433, U.S.A.* ແລະ ສາມາດເຂົ້າຄົ້ນຫາ ຖານຂໍ້ມູນຂອງໂຄງການໄດ້ທີ່ ເວັບໄຊ ຂອງທະນາຄານໂລກ: www.worldbank.org/projects

ທາຍ ແລະອື່ນໆ ໃຫ້ຜູ້ກູ້ຢືມຊາບ ກ່ອນການຍື່ນຊອງປະມູນ ເພື່ອຮັບປະກັນໃຫ້ເປັນ ເອກະສານຍື່ນປະມູນ ທີ່ຕອບສະໜອງໄດ້ເງື່ອນໄຂ ແລະ ຄົບຖ້ວນສົມບູນຢ່າງເຕັມສ່ວນ ລວມທັງ ເອກະສານສະໜັບສະໜູນທີ່ຕ້ອງການທັງໝົດ ເຊິ່ງລະບຸຢູ່ໃນເອກະສານເຊີນປະມູນ. ເອກະສານຍື່ນປະ ມູນ ທີ່ຂາດເງື່ອນໄຂຕົ້ນຕໍ່ (ດ້ານວິຊາການ ແລະ ການຄ້າ) ທີ່ຕ້ອງການ ຈະຖືກປະຕິເສດ. ຖ້າ ຜູ້ປະມູນ ຫາກຕ້ອງການສະເໜີ ການປ່ຽນແປງ ບາງຈຸດທີ່ບໍ່ເປັນຕົ້ນຕໍ ຫຼື ສະເໜີທາງເລືອກ ກໍຕ້ອງປະຕິບັດ ຕາມຄໍາແນະນໍາສະເພາະປະເດັນນີ້ ເຊິ່ງນອນໃນເອກະສານເຊີນປະມູນ ຂອງຜູ້ກູ້ຢືມ ທີ່ໄດ້ ປະກອບໃຫ້ ຢ່າງເຄັ່ງຄັດ, ໂດຍສະເພາະ ຂໍ້ກໍານົດ ທີ່ກ່ຽວຂ້ອງກັບການປ່ຽນແປງດັ່ງກ່າວ. ການສະເໜີທາງເລືອກ ສາມາດເຮັດໄດ້ ກໍຕໍ່ເມື່ອເອກະສານເຊີນປະມູນ ໄດ້ອະນຸຍາດໃຫ້. ເມື່ອເອກະສານ ເຊີນປະມູນ ຫາກ ບໍ່ໄດ້ກໍານົດຈະແຈ້ງ ກ່ຽວກັບເງື່ອນໄຂທີ່ຕ້ອງການດ້ານວິຊາການ ແລະ ດ້ານການຄ້າ ທີ່ເປັນແບບບັງຄັບ ຫຼື ບໍ່ບັງຄັບແລ້ວ, ກໍໃຫ້ຖືເປັນການສົມມຸດຖານວ່າ ຜູ້ປະມູນ ມີຄວາມຮັບຜິດຊອບ ຢ່າງເຕັມສ່ວນ ວ່າ ບໍ່ວ່າການປ່ຽນແປງ ຫຼື ເງື່ອນໄຂໃດໆ ຢູ່ໃນເອກະສານຍື່ນປະມູນຂອງຕົນກໍຕາມ ທີ່ອາດຈະຖືວ່າ ເປັນການປ່ຽນແປງ ເນື້ອໃນ ແລະ ນໍາໄປສູ່ການປະຕິເສດເອກະສານຍື່ນປະມູນໄດ້. ພາຍຫຼັງທີ່ ຜູ້ກູ້ຢືມ ໄດ້ຮັບເອກະສານ ຍື່ນປະມູນ ແລະ ໄດ້ເປີດຊອງປະມູນ ສູ່ສາທາລະນະແລ້ວ, ຜູ້ປະມູນ ຈະບໍ່ຖືກຂໍຮ້ອງ ຫຼື ໄດ້ຮັບອະນຸຍາດ ໃຫ້ປ່ຽນແປງລາຄາ ຫຼື ທາດແທ້ຂອງເອກະສານຍື່ນປະມູນ.

## 10. ການຮັກສາເປັນຄວາມລັບ

ຄືດັ່ງທີ່ໄດ້ກ່າວໄວ້ ຕາມເນື້ອໃນວັກ 2.47 ຂອງຄູ່ມືແນະນໍາສະບັບນີ້, ຂັ້ນຕອນການປະເມີນຜົນ ການປະມູນ ຕ້ອງຮັກສາເປັນຄວາມລັບ ຈົນກວ່າຈະປະກາດມອບສັນຍາແກ່ຜູ້ຊະນະການປະມູນ. ມັນມີຄວາມສໍາຄັນ ເພື່ອຊ່ວຍໃຫ້ ຜູ້ກູ້ຢືມ ແລະ ຜູ້ທົບທວນເອກະສານຂອງທະນາຄານໂລກ ສາມາດຫຼີກລ້ຽງ ຄວາມເປັນໄປໄດ້ ໃນຄວາມເປັນຈິງທີ່ອາດຈະເກີດຂຶ້ນ ຫຼື ຄວາມສົງໃສ ຕໍ່ການແຊກແຊງທີ່ບໍ່ຖືກຕ້ອງ. ໃນໄລຍະເວລາທີ່ດໍາເນີນການນີ້, ຖ້າຜູ້ປະມູນ ຫາກມີຄວາມຕ້ອງການແຈ້ງຂໍ້ມູນເພີ່ມເຕີມ ໃຫ້ຜູ້ກູ້ຢືມ, ທະນາຄານໂລກ ຫຼື ທັງສອງພາກສ່ວນຊາບ ກໍຄວນແຈ້ງເປັນລາຍລະອັກສອນ.

## 11. ການດໍາເນີນການຂອງທະນາຄານໂລກ

ຜູ້ປະມູນ ໄດ້ຮັບສິດ ເພື່ອສົ່ງສໍາເນົາເອກະສານ ເນື້ອໃນແລກປ່ຽນ (ການພົວພັນຖາມຕອບ) ກ່ຽວກັບ ປະເດັນ ແລະ ຄໍາຖາມຕ່າງໆ ກັບຜູ້ກູ້ຢືມ ໃຫ້ທະນາຄານໂລກ ຫຼື ຊຽນທາທະນາຄານໂລກ ໂດຍກົງ, ເມື່ອຜູ້ກູ້ຢືມ ບໍ່ໄດ້ຕອບ ທັນເວລາ, ຫຼື ເນື້ອໃນການແລກປ່ຽນດັ່ງກ່າວ ເປັນການຮຽກຮ້ອງຕໍ່ຜູ້ກູ້ຢືມ. ເນື້ອໃນແລກປ່ຽນທັງໝົດເຫຼົ່ານີ້ ຄວນຈະສົ່ງຫາ ຫົວໜ້າທີມໂຄງການ *(Task Team Leader)* ຂອງທະນາຄານໂລກ ແລະ ສໍາເນົາຫາ ຫົວໜ້າຫ້ອງການ ທະນາຄານໂລກ (Country Director) ປະຈໍາ ປະເທດຜູ້ກູ້ຢືມ ແລະ ຫົວໜ້າທີມງານ ຝ່າຍຈັດຊື້-ຈັດຈ້າງ ປະຈໍາພາກພື້ນ *(Regional Procurement Manager)* ຊາບ. ສະເພາະບັນຊີລາຍຊື່ ຂອງຫົວໜ້າທີມໂຄງການ ຂອງທະນາຄານໂລກ ສາມາດຊອກໄດ້ ຢູ່ເອກະສານສະເໜີໂຄງການ *(PAD)*.

12. ຖ້າເຫັນວ່າເໝາະສົມ, ເນື້ອໃນແລກປ່ຽນ ທີ່ທະນາຄານໂລກ ໄດ້ຮັບຈາກຜູ້ປະມູນ ກ່ອນມື້ປິດຮັບຊອງປະ ມູນນັ້ນ ຈະສົ່ງໃຫ້ຜູ້ກູ້ຢືມຊາບ ໂດຍປະກອບຄໍາເຫັນຂອງທະນາຄານໂລກ ແລະ ຄໍາແນະນໍາ ເພື່ອປະຕິ ບັດ ຫຼື ເພື່ອໃຫ້ຕອບ.

13. ເນື້ອໃນແລກປ່ຽນ ລວມທັງຄໍາຮ້ອງທຸກ ທີ່ທະນາຄານໂລກ ໄດ້ຮັບຈາກຜູ້ປະມູນ ຫຼັງມື້ເປີດຊອງປະມູນນັ້ນ ຈະດໍາເນີນການດັ່ງນີ້: ໃນກໍລະນີຂອງສັນຍາ ທີ່ບໍ່ນອນໃນການທົບທວນກ່ອນ ຂອງທະນາຄານໂລກ, ຖ້າເຫັນວ່າເໝາະສົມ, ເນື້ອໃນແລກປ່ຽນ ຫຼື ສ່ວນຄັດຈ້ອນກ່ຽວຂ້ອງຂອງມັນ ຈະຖືກສົ່ງໄປໃຫ້ຜູ້ກູ້ຢືມ ເພື່ອພິຈາລະນາ ແລະ ດໍາເນີນການ ຢ່າງເໝາະສົມ. ຜູ້ກູ້ຢືມ ຕ້ອງສະໜອງເອກະສານກ່ຽວຂ້ອງທັງໝົດ ໃຫ້ທະນາຄານໂລກ ເພື່ອທົບທວນ ແລະ ມີຄໍາເຫັນ. ສ່ວນໃນກໍລະນີຂອງສັນຍາ ທີ່ນອນໃນການທົບທວນ ກ່ອນ, ທະນາຄານໂລກ ຈະກວດກາເນື້ອໃນແລກປ່ຽນນັ້ນຄືນໂດຍສົມທົບກັບຜູ້ກູ້ຢືມ. ຖ້າຕ້ອງການຂໍ້ມູນເພີ່ມເຕີມ ເພື່ອດໍາເນີນວຽກງານງານນີ້ສໍາເລັດ ກໍຕ້ອງເອົາຂໍ້ມູນເພີ່ມເຕີມເຫຼົ່ານັ້ນຈາກ ຜູ້ກູ້ຢືມ. ແຕ່ຖ້າຕ້ອງການຂໍ້ມູນເພີ່ມເຕີມ ຫຼື ຄວາມກະຈ່າງແຈ້ງ ຈາກຜູ້ປະມູນ, ທະນາຄານໂລກ ຈະພົວ

ພັນນຳຜູ້ກູ້ຢືມ ເພື່ອຂໍຂໍ້ມູນ ແລະ ມີຄຳເຫັນ ຫຼື ປະກອບຄຳເຫັນໃສ່ ແລະ ລົງໃນບົດລາຍງານຜົນ ການປະມູນ ຕາມຄວາມເໝາະສົມ. ການທົບທວນຂອງທະນາຄານໂລກ ຈະສຳເລັດລົງ ກໍຕໍ່ເມື່ອ ເນື້ອໃນແລກປ່ຽນໄດ້ຮັບການກວດ ກາ ແລະ ພິຈາລະນາຄືນ ຢ່າງເຕັມສ່ວນ. ສ່ວນເນື້ອໃນແລກປ່ຽນ ທີ່ໄດ້ຮັບຈາກຜູ້ປະມູນ ທີ່ກ່ຽວຂ້ອງກັບການກ່າວຫາວ່າແມ່ນການສໍ້ໂກງ ແລະ ການສໍ້ລາດບັງຫຼວງ[88] ອາດຈະຮັບປະກັນການປະຕິ ບັດມາດຕະການທີ່ແຕກຕ່າງກັນ ອັນເນື່ອງມາຈາກເຫດຜົນຂອງການຮັກສາເປັນຄວາມລັບ. ໃນກໍລະນີນີ້, ທະນາຄານໂລກ ຕ້ອງນຳໃຊ້ ຄວາມພະຍາຍາມຢ່າງລະມັດລະວັງ ແລະ ພິຈາລະນາລະອຽດຖີ່ຖ້ວນ ໂດຍສົມທົບກັບຂໍ້ມູນຂອງຜູ້ກູ້ຢືມ ຕາມຄວາມເໝາະສົມ.

14. ນອກຈາກການຕອບຮັບການສະໜອງເນື້ອໃນແລກປ່ຽນແລ້ວ, ທະນາຄານໂລກ ຈະບໍ່ເຂົ້າຮ່ວມປຶກສາຫາລື ຫຼື ຕິດຕໍ່ພົວພັນກັບຜູ້ປະມູນອື່ນໃດ ໃນໄລຍະດຳເນີນການປະເມີນຜົນ ແລະ ທົບທວນການຈັດຊື້-ຈັດຈ້າງ ຈົນກວ່າຈະປະກາດມອບສັນຍາໃຫ້ແກ່ຜູ້ຊະນະການປະມູນ.

## 15. ການຕອບຂໍ້ຊັກຖາມຂອງທະນາຄານໂລກໃຫ້ແກ່ຜູ້ປະມູນ

ຄືດັ່ງທີ່ໄດ້ກ່າວໄວ້ ຕາມເນື້ອໃນວັກ 2.65, ພາຍຫຼັງການແຈ້ງມອບສັນຍາແກ່ຜູ້ຊະນະການປະມູນແລ້ວ, ຖ້າຜູ້ປະມູນ ຫາກຕ້ອງການສອບຖາມເພື່ອຊາບເຖິງເຫດຜົນ ທີ່ເອກະສານຍື່ນປະມູນຂອງຕົນ ບໍ່ໄດ້ຖືກ ເລືອກເອົາ ກໍຄວນຈະສະເໜີ ຂໍຄຳອະທິບາຍຈາກຜູ້ກູ້ຢືມໄດ້. ແຕ່ຖ້າຜູ້ປະມູນ ຫາກຍັງບໍ່ທັນພໍໃຈ ຕໍ່ຄຳ ອະທິບາຍ ເປັນລາຍລະອັກສອນ ທີ່ໄດ້ຮັບ ແລະ ຕ້ອງການຈັດປະຊຸມກັບທະນາຄານໂລກ ກໍສາມາດ ເຮັດໄດ້ ໂດຍຊຽນຫາ ຫົວໜ້າທີມງານ ຝ່າຍຈັດຊື້-ຈັດຈ້າງ ປະຈຳພາກພື້ນ *(Regional Procurement Manager)* ຮັບຜິດຊອບປະເທດຂອງຜູ້ກູ້ຢືມ, ເຊິ່ງຈະເປັນຜູ້ກະກຽມຈັດກອງປະຊຸມກັບພະນັກງານ ທີ່ກ່ຽວຂ້ອງ ໃນລະດັບທີ່ເໝາະສົມ. ເປົ້າໝາຍຂອງການຈັດກອງປະຊຸມນີ້ແມ່ນເພື່ອປຶກສາຫາລືກ່ຽວກັບ ເອກະສານຍື່ນປະມູນ ຂອງຜູ້ປະມູນເທົ່ານັ້ນ ແຕ່ບໍ່ແມ່ນ ເພື່ອສະຫງວນຈຸດຢືນ ຂອງທະນາຄານໂລກ ທີ່ມີ ຕໍ່ຜູ້ກູ້ຢືມ ຫຼື ເພື່ອປຶກສາຫາລືກ່ຽວກັບເອກະສານຍື່ນປະມູນຂອງຜູ້ປະມູນຄູ່ແຂ່ງຕ່າງໆ.

---

88 ການລາຍງານ ກໍລະນີສົງໃສ ກ່ຽວກັບການກະທຳຜິດ ແລະ ການສໍ້ລາດບັງຫຼວງ ສາມາດສົ່ງໂດຍກົງເຖິງ ຮອງປະທານທະນາຄານໂລກ ເພື່ອຄວາມໝັ້ນຄົງ *(Bank Integrity Vice Presidency-INT)* ຕາມທີ່ຢູ່ email: investigations_hotline@worldbank.org; ໂດຍຜ່ານ ເວັບໄຊ ຂອງທະນາຄານໂລກ; ຫຼື ຜ່ານ ໂທລະສັບສາຍດ່ວນ ບໍລິການ 24 ຊົ່ວໂມງ ດຳເນີນການໂດຍພາກສ່ວນທີສາມ ໝາຍເລກ +1-800-831-0463 (ບໍ່ເສັຍຄ່າ) ຫຼື ໝາຍເລກ +1-704-556-7046 (ເກັບເງິນປາຍທາງ) (ມີນາຍພາສາແປປະກອບໃຫ້; ຮັບໂທລະສັບ ບໍ່ປະສົງອອກຊື່ໄດ້); ຫຼື ພົວພັນ *INT* ທີ່ຫ້ອງການສຳນັກງານໃຫຍ່ທະນາຄານໂລກ ທີ່ນະຄອນຫຼວງ ວໍຊິງຕັນ ດີ.ຊີ;ໂທລະສັບ: +1-202-458-7677